ປະຫວັດຫຍໍ້ຂອງບ້ານໄຮ່



ຕູ້ປູ່ຈານພິມ ຜູ້ສ້າງຕັ້ງບ້ານໄຮ່

ຮຽບຮຽງໂດຍ: ອາຈານ ຄຳພັນ ພິມສີປະສິມ

2007

ພິມທີ່ນະຄອນຫຼວງວຽງຈັນ

ບ້ານໄຮ່ຂອງຂ້ອຍ

ບ້ານໄຮ່ຕັ້ງ ແຄມງື່ມທາລາ
ນາທີໄຫລ ອ່ອນໂອນເອົາໄວ້
ເໜືອເກິງໃຕ້ ໃສເຢັນຫລີ້ນມ່ວນ
ມວນພີ່ນ້ອງ ລົງຫລີ້ນຮ່ວມກັນ
ແຄມທ່ານັ້ນ ມີຫາດຊາຍຂາວ
ຫນານພັກຍາວ ຢຽດຕາມລຳນ້ຳ
ງາມເຫລືອລ້ຳ ຍາມແລງຄ້ອຍຄ່ຳ
ບ່າວສາວລອຍລ່ອງນ້ຳ ເຫັນແລ້ວຊື່ນໃຈ ແທ້ເດ
ຂື້ນທ່ານ້ຳ ເຮົາຍ່າງຕາມທາງ
ມີພູພາງ ມ່ວງລຳໃຍທັນຕ້ອງ
ສອງຂອກຂ້າງ ເຮືອນຢ່າຍຢັງທີ່
ມີ້ຮຸ່ງພ້ອມ ມີໄວ້ຄູ່ເຮືອນ
ໃຕ້ຫມູ່ບ້ານ ມີຫາດຫນອງຫລວງ
ຝູງງົວຄວາຍ ແລ່ນລົງກິນນ້ຳ
ສວຍງາມລ້ຳ ຫາໃສ່ທຽມເທົ່າ
ບ້ານໄຮ່ຂ້ອຍ ແດນນີ້ບໍ່ມີ ແທ້ແລ້ວ.

ທ່ານ ບຸນທຽມ (ເສື້ອສີດຳ)   ພາທະນະເກັບຂໍ້ມູນ

ຄຳນຳ

ປື້ມຫົວນີ້ໄດ້ກຶກຂຽນຂຶ້ນ ເພື່ອອຸທິດແດ່ປູ່ຈານພິມ ແລະ ຍ່າສິມ ພິມສີປະສິນ ຜູ້ທີ່ນຳພາລູກຫລານອ້າຍນ້ອງມາຕັ້ງບ້ານໄຮ່ ແຕ່ງນີ້ໃຫ້ເປັນບ້ານຈີນເຖິງປະຈຸບັນ. ມັນໄດ້ຮັບແຮງບັນດານໃຈຈາກພີ່ນ້ອງຊາວບ້ານໄຮ່ທີ່ຕ້ອງການໃຫ້ຂຽນປະຫວັດບ້ານໄວ້ໃຫ້ ລູກຫລານຜູ້ເກີດໃໝ່ໃຫຍ່ລຸນໄດ້ຮັບຊາບເຖິງການເປັນມາຂອງບ້ານ. ຂ້າພະເຈົ້າ ຄຳພັນ ພິມສີປະສິນ ຜູ້ເປັນຫລານຂອງປູ່ຈານ ພິມ ແລະ ຍ່າສິມ ຈຶ່ງໄດ້ຍາດເວລາເກັບກຳຂໍ້ມູນ ຖ່າຍພາບ ແລະ ແຕ້ມພາບຂອງບ້ານໄຮ່ທີ່ມີໃນເມື່ອກ່ອນມາບັນຈຸເຂົ້າໃນປື້ມຫົວນີ້ ເພື່ອໃຫ້ລູກຫລານໄດ້ເຫັນພາບເກົ່າໆເຫລົ່ານັ້ນ ແລະ ເຫັນເຖິງ ຄວາມສວຍງາມອຸດົມສົມບູນຂອງທຳມະຊາດທີ່ມີໃນເມື່ອກ່ອນ. ປະຈຸບັນສິ່ງສວຍງາມເລົ່ານັ້ນໄດ້ເສັຍໄປຊຶ່ງກໍລ້ວນແຕ່ເກີດຈາກ ນ້ຳມືຂອງມະນຸດເອງ. ລູກຫລານຊາວບ້ານໄຮ່ ແລະ ທ່ານຜູ້ອ່ານ ເມື່ອອ່ານແລ້ວຫວັງວ່າຈະສາມາດວາດພາບບ້ານໄຮ່ໃນສມັຍກ່ອນໄດ້. ຈະຮູ້ສຶກເສັຍດາຍສິ່ງເລົ່ານັ້ນສິ່ງທີ່ບໍ່ສາມາດຮຽກຮ້ອງເອົາມາໄດ້ອີກແລ້ວ. ມັນຈະເປັນບົດຮຽນສອນໃຫ້ເຮົາຄຳນຶງເຖິງຄວາມຍືນຍົງ. ມະນຸດເຮົາຮູ້ແຕ່ເອົາຈາກທຳມະຊາດ, ແຕ່ບໍ່ໃຫ້ສິ່ງໃດກັບທຳມະຊາດມັນຈຶ່ງກາຍເປັນການສູນເສັຍທຳມະຊາດ. ໃນເມື່ອທຳມະຊາດມີແຕ່ໃຫ້ຢ່າງດຽວມະນຸດກໍ່ຍິ່ງກອບໂກຍ ໂດຍບໍ່ມີສິ້ນສຸດ. ໄພທຳມະຊາດຈຶ່ງເກີດມີຂຶ້ນໂດຍບໍ່ມີເຕັກນິກວິທະຍາສາດອັນໃດຊ່ວຍໄດ້. ມະນຸດກຳລັງຈະປະເຊີນກັບພົນກຳຂອງຕົນເອງ. ຫາກທ່ານຜູ້ອ່ານໄດ້ຮັບຊາບໃນເລື່ອງນີ້ແລ້ວ ຂໍຈົ່ງ ໄດ້ສາມັກຄີຮ່ວມແຮງຮ່ວມໃຈກັນປົກປັກຮັກສາຊັບພະຍາກອນບ້ານໄຮ່ໃຫ້ຍືນຍົງຕໍ່ໄປ. ຂ້າພະເຈົ້າຂໍສະແດງຄວາມຂອບໃຈໄປຍັງ ລຸງບົວເກດ ພິມສີປະສິນທີ່ອົດທົນຈື່ຈຳເອົາປະຫວັດຄວາມຫລັງຕ່າງໆ ທີ່ສາມາດເກັບກຳໄດ້ມາໃຫ້ຂໍ້ມູນ. ຂໍສົ່ງຄວາມຂອບໃຈຂ້າມມະຫາສະມຸດປາຊີຟິກໄປຍັງ ອາວ ບຸນທຽມ

ພິມສີປະສົມ ສຳຫລັບຂໍ້ມູນທີ່ສົ່ງຂ້າມມະຫາສະມຸດມາໃຫ້ ແລະ ເງິນສຳຫລັບການຈັດພິມປື້ມນີ້ດ້ວຍ, ຂໍຂອບໃຈຕູ້ທອງມີ ຫລື ຕູ້ເພືອງຊຶ່ງເປັນຫລານຂອງຍ່າສົມສຳຫລັບຂໍ້ມູນທີ່ຕູ້ໄດ້ອົດສາບອກພິ່ນໆພ່າງໆ ຫລັງຫນ້າຫລັງຫລັງ, ຕູ້ ທອນ ຫລື ອາແມ່ດອນ ທີ່ໄດ້ເລົ່າເລື່ອງ ໃຫ້ຟັງທັ້ງໆທີ່ຕາຂອງຕູ້ກໍບໍ່ເຫັນຮຸ່ງ. ສົ່ງຄວາມຂອບໃຈຢ່າງຈິງໃຈໄປຍັງ ທ. ທຽນໄຊ, ທ. ຊ່ວງ, ນ. ບຸນທະວີ, ທ. ເຕີນ, ຕູ້ ພຽນ (ນວນສີ), ທີ່ຢູ່ບ້ານໄຮ່ສຳຫລັບການແນະນຳແລະເກັບກຳຂໍ້ມູນ ຊ່ວຍໃນການສ້າງປື້ມຫົວນີ້. ຂໍຂອບໃຈສຸດໆໄປຍັງ ທ. ຄູນສີ ພິມສີປະສົມ ທີ່ອົດທົນແຕ້ມພາບເກົ່າໆອອກມາ ເພື່ອປະກອບເຂົ້າໃນປື້ມຫົວນີ້ ແລະ ໃຫ້ທຶນສະຫນັບສະຫນູນໃນການຈັດພິມປື້ມຫົວນີ້ໄວ້ເພື່ອລູກຫລານ. ຂໍຂອບໃຈ ທ. ນວນຈັນ ພິມສີປະສົມ ທີ່ໄດ້ສົ່ງເງິນມາສະຫນັບສະຫນູນໃນການຈັດພິມ. ກ້າບໍ່ມີພວກທ່ານທີ່ກ່າວມາຂ້າງເທິງນັ້ນແລ້ວປື້ມຫົວນີ້ກໍບໍ່ສາມາດສຳເລັດລົງໄດ້. ດ້ວຍຄວາມນັບກືອີກເທື່ອນຶ່ງຂ້າພະເຈົ້າຂໍອວຍພອນໄຊໃຫ້ບັນດາ ທ່ານຈົ່ງມີສຸຂະພາບເຂັ້ມແຂງ ແລະ ມີຄວາມກ້າວຫນ້າໃນວຽກງານຕໍ່ໄປດ້ວຍເກີ້ນ. ຂ້າພະເຈົ້າຍອມຮັບວ່າປື້ມຫົວນີ້ອາດໃສ່ຂໍ້ມູນຜິດພາດເປັນບາງຈຸດເພາະວ່າບໍ່ສາມາດຈະຊອກຫາແຫຼ່ງຂໍ້ມູນທີ່ສາມາດຢືນຢັນໄດ້ ເນື່ອງຈາກຜູ້ທີ່ພໍກາມໄດ້ນັ້ນໄດ້ເສັຍຊີວິດໄປກ່ອນແລ້ວ. ເຖິງຢ່າງໃດກໍຕາມຜູ້ຂຽນເອງກໍໄດ້ນຳເອົາຂໍ້ມູນທີ່ເຫັນວ່າດີທີ່ສຸດມາບັນຈຸເຂົ້າໃນ ປື້ມເຫລັ້ມນີ້ໃຫ້ທ່ານຜູ້ອ່ານໄດ້ຮັບຮູ້. ຫາກວ່າມີສິ່ງໃດຍັງຜິດພາດກໍຂໍໃຫ້ ທ່ານອະພັຍໃຫ້ດ້ວຍ.

ດ້ວຍຄວາມນັບກື

ຄຳພັນ ພິມສີປະສົມ

ສາລະບານ

ໜ້າ

ຄຳນຳ .... I-II

ສາລະບານ .... III-IV

ພາກທີ I: ພາກສັງລວມ 1

- ກອນນ້ອຍກ່ຽວກັບທີ່ມາຂອງຊື່ບ້ານໄຮ່ 4

- ການກຳເນີດຂອງບານສະກຸນພິມສີປະສົມ 5

ພາກທີ II: ທີ່ຕັ້ງແລະຈຸດພິເສດຂອງບ້ານໄຮ່ 6

ພາກທີ III: ການເປັນນາຍບ້ານໆໄຮ່ແລະຄວາມສຳພັນຂອງ ປູ່ຈານພິມແລະເຈົ້າເພຊຣາດ 11

ພາກທີ IV ທີ່ມາຂອງປູ່ຍ່າຕາທວດຂອງປູ່ຈານພິມແລະຍ່າສົມ....... 13

ພາກທີ V: ຕະກຸນຕົ້ນໆ ທີ່ມາຕັ້ງກົບການຢູ່ບ້ານໄຮ່ 14

- ການເຕີບໂຕຂອງຄອບຄົວປູ່ຜອງ 16
- ການເຕີບໂຕຂອງຄອບຄົວຍ່າບຸດ 17
- ການເຕີບໂຕຂອງຄອບຄົວປູ່ຈານພິມ 19
- ການເຕີບໂຕຂອງຄອບຄົວປູ່ທິບ 30
- ການເຕີບໂຕຂອງຄອບຄົວປູ່ບົວທລີຄຳຟອງ 31
- ການເຕີບໂຕອຂອງຄອບຄົວຕູ້ທຸມມີ 33
- ການເຕີບໂຕຂອງຄອບຄົວຍາດພີ່ນ້ອງຍ່າສົມ 33
- ຕະກຸນປູ່ທິດສີງ ແລະ ຍ່າແບນ 35
- ການເຕີບໂຕຄອບຄົວຕູ້ການ 38
- ການເຕີບໂຕຄອບຄົວຕູ້ປັງ 39
- ການເຕີບໂຕຂອງຄອບຄົວຕູ້ຈັນດີ.. 40

- ການເຕີບໂຕຂອງຄອບຄົວແມ່ເຖິນ 40
- ການເຕີບໂຕຄອບຄົວຕູ້ຂາບ 40
- ການເຕີບໂຕຂອງຄອບຄົວຕູ້ແຮແລະຕູ້ບຸ່ນ 41
- ຕະກຸນຕູ້ເຫລືອຂເມບ 41
- ຕະກຸນຄອບຄົວອື່ນໆ 42

ພາກທີ VI: ຊີວິດການເປັນຢູ່ຂອງຊາວບ້ານໄຮ່ໃນສະໄໝດົ້ນ 44
- ການຫາກິນທາງນໍ້າ 48
- ການລ່າເນື້ອ 59
- ການຜະລິດສິນຄ້າທີ່ຂາຍນຳບ້ານ ແລະ ແຂກ 66
- ເຄື່ອງຫັດຖະກຳ 67
- ການຢູ່ຮ່ວມກັນຂອງຊຸມຊົນບ້ານໄຮ່ 70
- ກອນຂັບກ້ຽວສາວຂອງຕູ້ພຽນ 73
- ການລະຫລິ້ນຕ່າງໆຂອງຊາວບ້ານໄຮ່ 74

ພາກທີ VII: ຊີວິດຂອງຊາວບ້ານໄຮ່ກ່ອນສົງຄາມໂລກຄັ້ງທີ II........83

ພາກທີ VIII: ສັງຄົມຂອງຊາວບ້ານໄຮ່ຫລັງສົງຄາມໂລກຄັ້ງ ທີສອງ.90

ພາກທີ IX: ຊ່ວງເວລາສົງຄາມກາງເມືອງ 102

ພາກທີ X: ຊຸມຊົນບ້ານໄຮ່ຫລັງຈາກການປົດປ່ອຍປີ 1975........107

ພາກທີ XI: ເສດຖະກິດຂອງຊາວບ້ານໄຮ່ປະຈຸບັນ 110

ພາກທີ XII: ການພັດທະນາແບບຍືນຍົງຂອງບ້ານໄຮ່ 114

ພາກທີ XIII: ບົດຮຽນທີ່ຄວນສືບທອດຈາກຄົນລຸ້ນເກົ່າ ....:120

ພາກທີ XIV: ບຸກຄົນແບບຢ່າງໃນການພັທນາຕົນເອງ 124

ປະຫວັດຂອງບ້ານໄຮ່

ພາກທີ 1: ພາກສັງລວມ:

ການພັດທະນາແລະວິວັທນາການຂອງວັດຖຸ ແລະ ສັງຄົມລ້ວນແຕ່ມີປະຫວັດເບື້ອງຫລັງຂອງມັນ ***ມີວັນນັ້ນຈຶ່ງມີວັນນີ້***. ບ້ານໄຮ່ກໍເຊັ່ນດຽວກັນກ່ອນຈະມາເປັນບ້ານຢູ່ຮ່ວມກັນ ແລະ ເອີ້ນຊື່ວ່າບ້ານໄຮ່ນັ້ນກໍມີທີ່ມາຂອງມັນຊຶ່ງຄົນສ່ວນຫລາຍກໍຍັງສົນໃຈ ແລະ ຢາກຈະຮູ້ເຖິງປະຫວັດຂອງບ້ານນີ້ວ່າເປັນມາຢ່າງໃດ. ບ້ານໄຮ່ທີ່ເປັນບ້ານນ້ອຍໆ ໃນເມື່ອກ່ອນ, ບ້ານທີ່ຍາດຕິພີ່ນ້ອງຕະກຸນດຽວກັນຊັກຊວນກັນມາຢູ່ຮ່ວມກັນ ເປັນບ້ານຂຶ້ນ. ມັນເປັນຫນ້າສົນໃຈວ່າໃຜ ເປັນຜູ້ມາຕັ້ງກິ່ນການຢູ່ນີ້ກ່ອນຫມູ່ເປັນບັນພະບຸຣຸດຂອງຊາວບ້ານໄຮ່ດັ້ງເດີມ. ດ້ວຍເຫດໃດເຂົາເຈົ້າຈຶ່ງມາຕັ້ງບ້ານເຮືອນຢູ່ທີ່ນີ້. ຢູ່ບ່ອນນີ້ມີສິ່ງໃດທີ່ດຶງດູດ ຫລື ສ້າງຄວາມສົນໃຈໃຫ້ແກ່ບັນພະບຸຣຸດຂອງຊາວບ້ານໄຮ່. ແນ່ນອນທີ່ຕັ້ງຂອງບ້ານໄຮ່ ເປັນປັດໃຈນຶ່ງທີ່ເຮັດໃຫ້ມີຄວາມສົນໃຈ, ນຶ່ງໃນປັດໃຈນັ້ນກໍແມ່ນຄວາມສົມບູນຂອງຊັພຍາກອນທຳມະຊາດ ທີ່ເປັນປັດໃຈສຳຄັນໃນການດຳລົງຊີວິດໃນສມັຍນັ້ນ. ຈາກນັ້ນແມ່ນເງື່ອນໄຂຄວາມສະດວກໃນການສ້າງຢູ່ທຳກິນ. ພ້ອມນີ້ເງື່ອນໄຂຂອງທຳມະຊາດ ແລະຄວາມສາມາດໃນການຫາລ້ຽງຊີບທີ່ສອດຄ່ອງ ແລະ ສະດວກສຳຫລັບປະຊາຊົນໃນສມັຍນັ້ນ ເປັນປັດໃຈຊຸກຍູ້ດຶງດູດ ເຂົາເຈົ້າມາທີ່ນີ້. ເຊັ່ນດຽວກັນວິຖີຊີວິດການທຳມາຫາກິນທີ່ກະຫນັດຂອງເຂົາເຈົ້າເຫມາະສົມກັບສິ່ງແວດລ້ອມຂອງດິນຕອນນີ້. ເມື່ອເຂົ້າມາຢູ່ແລ້ວ, ເຂົາເຈົ້າໄດ້ມີການພົວພັນກັບພາກສ່ວນອື່ນໆ ເພື່ອໃຫ້ເຂົາເຈົ້າສາມາດດຳລົງຄົງຕົວຢູ່ໄດ້. ໃນການຢູ່ຮ່ວມກັນເຂົາເຈົ້າໄດ້ມີ ຮີດຄອງປະເພນີທີ່ປະຕິບັດ ແລະ ນັບຖືມາ ຢ່າງຈົບງາມ ແລະ ຫນ້າສົນໃຈເຊັ່ນກັນ. ປະຈຸບັນນີ້ຍັງເຫລືອຢູ່ກັບປະຊາຊົນບ້ານໄຮ່ຈຳນວນນຶ່ງຊຶ່ງພໍສາມາດເຫັນໄດ້ທົ່ວໄປ.

ປຶ້ມຫົວນີ້ຈະນຳເອົາບັນຫາຕ່າງໆ ທີ່ກ່າວມາຂ້າງເທິງນັ້ນເຜີຍແຜ່ໃຫ້ຄົນລຸ້ນຫລັງຮູ້ເຖິງຄວາມເປັນມາ ຂອງບ້ານໄຮ່ວ່າມີຄວາມເປັນມາ ແນວໃດ. ການຮັບຮູ້ປະຫວັດສາດຄວາມຈິງຂອງສິ່ງໃດສິ່ງນຶ່ງແມ່ນຄວາມຮູ້ທີ່ຊ່ວຍໃຫ້ຄິດໄດ້ຫລາຍຢ່າງ ເພື່ອແກ້ໄຂບັນຫາໃນປະຈຸບັນ. ການຮູ້ພູມຫລັງຂອງຕົນເອງແມ່ນດີທີ່ສຸດ ເພື່ອຈະໄດ້ຮູ້ຈັກຮັກຫອມບ້ານເກີດເມືອງນອນຂອງຕົນເອງກໍຄືປະເທດຊາດຂອງຕົນເອງ ແລະ ມີ ຄວາມພູມໃຈໃນຄວາມເປັນຊາວບ້ານໄຮ່ແຫ່ງນີ້ຂອງຄົນລຸ້ນໃຫມ່. ຄົນລຸ້ນໃຫມ່ສົມຄວນຢ່າງຍິ່ງທີ່ຈະຮຽນຮູ້ກ່ຽວກັບ ທ້ອງຖິ່ນຕົນເອງແລ້ວ ຈຶ່ງຄິດຫາທາງພັທນາບ້ານເກີດເມືອງນອນຂອງຕົນໃຫ້ກ້າວຫນ້າ ແລະ ຍືນຍົງຄົງຕົວຕລອດໄປ.

ການກຳເນີດຂອງບ້ານໄຮ່

ການກຳເນີດຂອງບ້ານໄຮ່ໄດ້ເລີ່ມຕົ້ນຈາກປູ່ຈານພົມ ຜູ້ເປັນຕາແສງ ແລະ ຕັ້ງຖິ່ນການຢູ່ບ້ານທາດກ້ຽງຊຶ່ງເພິ່ນ ໄດ້ມີສ່ວນສ້າງກຸນົນສາຍວຽງຈັນບ້ານເກີນ ແລະ ຂື້ນພູເຂົາຄວາຍ. ເມື່ອເສັ້ນທາງຜ່ານບ້ານ ທ່າງ່ອນຂ້າມມາຍັງຝັ່ງຊ້າຍຂອງແມ່ນ້ຳງື່ມ ຊຶ່ງເປັນຫນ້າດິນຕ່ຳ ຮາບພຽງທີ່ປະກອບດ້ວຍດິນຊາຍແກມຕົມ ຊຶ່ງລໍ່ລ້ຽງພືດສາປ່າໄມ້ຢ່າງອຸດົມສົມບູນ. ປູ່ຈານພົມເປັນຜູ້ສະຫລາດ ໃນຊຸມຊົນບ້ານທາດກ້ຽງ ດັ່ງນັ້ນຈຶ່ງໄດ້ຖືກແຕ່ງຕັ້ງໃຫ້ເປັນຕາແສງທາດກ້ຽງ. ໃນນາມເປັນຕາແສງປູ່ຈານພົມເປັນຜູ້ທີ່ມີອຳນາດການປົກຄອງ ພໍສົມຄວນໃນສມັຍນັ້ນ. ບ້ານທ່າງ່ອນເປັນຈຸດສຳຄັນໃນສມັຍນັ້ນ ທາງດ້ານເສດຖະກິດພ້ອມທັງການຄົມນາຄົມທາງນ້ຳ ແລະທາງບົກ. ການຂົນສົ່ງທາງກວຽນກ່ອນຈະຂ້າມນ້ຳໄດ້ກໍຕ້ອງນອນຄ້າງຄືນ ຫລື ໃຊ້ເວລາກະຕຽມອັນດົນນານຢູ່ສອງຝັ່ງແມ່ນ້ຳ ກ່ອນຈະຂ້າມພົ້ນໄດ້. ການຂົນສົ່ງດ້ວຍເຮືອ ຫລື ແພຂອງປະຊາຊົນແຕ່ຍອດນ້ຳງື່ມລົງມາກໍຕ້ອງມາຂື້ນຢູ່ທ່າບ້ານທ່າງ່ອນນີ້ເອງ. ທ່າງ່ອນເປັນຈຸດຊື້ຂາຍລະຫວ່າງ ພໍ່ຄ້າແມ່ຄ້າຈາກວຽງຈັນ ແລະ ຊາວຊົນນະບົດຕາມລຳນ້ຳງື່ມ.

ປູ່ຈານພິມເຫັນຈຸດສຳຄັນອັນນີ້ ຈຶ່ງຊັກຊວນເອົາອ້າຍນ້ອງຂອງຕົນເອງ ແລະ ທາງເມັຽມາເລີ່ມຕົ້ນຈານການເຮັດໄຮ່ເຮັດສວນໃນຂົງເຂດບ້ານໄຮ່ໃນປະຈຸບັນ ຕໍ່ມາຫລາຍປີເພິ່ນໄດ້ເຫັນຄວາມສຳຄັນຫລາຍຂຶ້ນ ຈຶ່ງໄດ້ພາກັນຕັດສິນໃຈຍົກຍ້າຍຄອບຄົວເຮືອນຊານ ມາຕັ້ງບ້ານໃຫມ່ນຳໄຮ່ນຳສວນນີ້ຈຶ່ງໄດ້ຂນານນາມວ່າ "ບ້ານໄຮ່' ມາເຖິງປະຈຸບັນນີ້. ບ້ານໄຮ່ເປັນບ້ານທີ່ຖືກສ້າງຕັ້ງຂຶ້ນມາແຕ່ຕົ້ນສັດຕະວັດທີ 20 ຄື ຊຸມປີ 1923 - 1924 ການກຳເນີດຂອງບ້ານບໍ່ແມ່ນມີ ການຈັດຕັ້ງແບບເປັນທາງການ ໂດຍອຳນາດການປົກຄອງໃນສມັຍນັ້ນ, ແຕ່ຍ້ອນຕະກຸນປູ່ຈານພິມເຫັນວ່າເປັນສະຖານທີ່ໆມີທຳເລເຫມາະສົມ ໃນການດຳລົງຊີວິດ ຂອງຄົນລາວສມັຍນັ້ນ. ມັນເປັນທີ່ຫນ້າຢູ່ຍ້ອນມີ ບ້ານໃກ້ຄຽງຢູ່ອ້ອມຮອບເຊັ່ນ: ບ້ານທ່າງ່ອນ, ບ້ານນາ, ແລະ ບ້ານເວີນຄຳເປັນຕົ້ນ. ອີກປະການນຶ່ງສະຖານທີ່ນີ້ມີແມ່ນ້ຳໃຫຍ່, ມີຫນອງ, ມີປ່າໄມ້ດົກຫນາ, ມີດິນພຽງເພື່ອສັບສ່າວ ເຮັດນາ, ແລະ ສຳຄັນກ່ວາຫມູ່ ແມ່ນມີດິນທີ່ອຸດົມສົມບູນຊຶ່ງສາມາດເວົ້າກັນວ່າດິນແດນອູ່ເຂົ້າອູ່ປາ. ໃນສມັຍຂອງປູ່ຈານພິມອຳນາດການປົກຄອງຈະອະນຸຍາດໃຫ້ເປັນບ້ານໄດ້ກໍຕ້ອງມີຢ່າງຫນ້ອຍ 10 ຄອບຄົວ ຂຶ້ນໄປ ແລະ ຕ້ອງມີວັດເປັນສິ່ງຍຶດຫນ່ຽວຈິດໃຈຂອງຊາວບ້ານ ຈຶ່ງສາມາດຕັ້ງເປັນບ້ານໄດ້ (ຕາມການເລົ່າເລື່ອງຂອງລຸງບົວເກດ). ການດຳລົງຊີວິດຂອງຊາວບ້ານໄຮ່ໃນເມື່ອກ່ອນແມ່ນເຮັດໄຮ່ເປັນຕົ້ນຕໍ ເພື່ອຜລິດເຂົ້າ, ພືດຜັກອື່ນໆ, ແລະ ຫາປາຕາມລຳນ້ຳງື່ມ, ຫ້ວຍ, ແລະ ຫນອງຕ່າງໆ ທີ່ຢູ່ໃກ້ບ້ານ. ເຂົາເຈົ້າພາກັນເຮັດໄຮ່ຕາມແຄມນ້ຳງື່ມເປັນສ່ວນໃຫຍ່ເນື່ອງຈາກວ່າ ເຮັດນາໃສ່ທົ່ງພຽງນັ້ນນ້ຳຈະຖ້ວມເກືອບທຸກປີ. ດ້ວຍເຫດນັ້ນ, ຈຶ່ງສາມາດສັງເກດເຫັນໄດ້ວ່າຕົ້ນຕະກຸນຂອງຊາວບ້ານໄຮ່ ຈະມີບ້ານຢູ່ແຄມງື່ມເປັນສ່ວນໃຫຍ່ ການຫາກິນຂອງຊາວບ້ານ ອີງໃສ່ທຳມະຊາດທີ່ອຸດົມສົມບູນເປັນສ່ວນໃຫຍ່. ເຂົາເຈົ້າມີການລ່າສັດ, ຫາປາ, ແລະ ເກັບເຄື່ອງປ່າຂອງດົງເປັນວິຖີຊີວິດຂອງເຂົາເຈົ້າ.

ອຸປະກອນໃນການຈັບປາລ່າສັດ ກໍເປັນແບບເດີມໂບຮານ ບໍ່ມີເຄື່ອງທັນສະໄໝທຳລາຍສູງເໝືອນປະຈຸບັນ. ໃນປະຫວັດບ້ານໄຮ່ ສະບັບນີ້ຈະໄດ້ເວົ້າເຖິງທີ່ຕັ້ງ ແລະ ຈຸດພິເສດຂອງບ້ານໄຮ່, ທີ່ມາຂອງບ້ານໄຮ່, ຕະກຸນຕົ້ນໆ ທີ່ຍ້າຍມາຕັ້ງກຸ່ມການຢູ່ບ້ານແຫ່ງນີ້, ການດຳລົງຊີວິດຂອງຊາວບ້ານໃນຍຸກຕົ້ນໆ, ຊີວິດຂອງຊາວບ້ານກ່ອນສົງຄາມໂລກຄັ້ງທີ 2, ຊີວິດຂອງຊາວບ້ານ ຫລັງສົງຄາມໂລກຄັ້ງທີ 2 ແລະ ການຕໍ່ສູ້ກູ້ຊາດຂອງຝ່າຍປະເທດລາວ, ວາດດຳລົງຊີວິດຂອງຊາວບ້ານ ຫລັງການປົດປ່ອຍຊາດ (ຫລັງປີ1975), ການປະກອບສ້າງຂອງຊຸມຊົນບ້ານຫລັງການປົດປ່ອຍ, ເສດຖະກິດຂອງຊາວບ້ານໃນຍຸກປະຈຸບັນ ແລະ ການພັທນາແບບຍືນຍົງໃນສະໄໝປະຈຸບັນ, ແລະ ຕອນທ້າຍຈະກ່າວເຖິງສິ່ງທີ່ດີງາມ ຂອງຄົນລຸ້ນປູ່ທີ່ໄດ້ສ້າງເປັນພື້ນການ ໃຫ້ແກ່ຄົນຮຸ່ນຫລານ ພ້ອມທັງບຸກຄົນທີ່ເປັນຕົວຢ່າງທີ່ດີຂອງຕະກຸນພິມສີປະສົມ ທີ່ສົມຄວນສຶກສາຮູ້ໄວ້ ເພື່ອເປັນບົດຮຽນໃນການສ້າງຊີວິດຢູ່ໃນສັງຄົມທີ່ມີການ ແຂ່ງຂັນສູງ, ສັງຄົມຂອງເງິນເປັນພະເຈົ້າ ແລະ ສາມາດດຳລົງຄົງຕົວຢູ່ຕລອດໄປ.

ກອນນ້ອຍກ່ຽວກັບທີ່ມາຂອງຊື່ທີ່ເອີ້ນກັນວ່າ (ບ້ານໄຮ່)

ຈັກກ່າວຂໍ້ ເຖິງບ່ອນເປັນມາ
ແຄມທາລາ ຖິ່ນງາມຄົນຍ້ອງ
ມີພີ່ນ້ອງ ຫລາຍຄົນຮວມເຜົ່າ
ມາຢູ່ເຝົ້າ ຕາມຮົ້ວໄຮ່ສວນ
ເຂົ້າແກ່ລ້ວນ ຫອມຮື່ນສຸຂໃຈ
ແລທາງໃດ ຊື່ນໃຈເຫລືອລົ້ນ
ຕໍເພືອງພົ້ນ ລຽນກັນດູມ່ວນ
ສາວບ່າວລ້ວນ ແຮງເຮົາຮ່ວມກັນ

ໃຈມຸ່ງໝັ້ນ ຫວັງຢູ່ກຸງວອນ
ບໍ່ມີງບອນ ຮ່ວມກັນເປັນບ້ານ
ຫລາຍຄົນຕ້ານ ຈາກັນຮວມຢູ່
ຫວັງຊ່ວຍຍູ້ ເປັນບ້ານຮ່ວມເນົາ
ຕັ້ງແຕ່ເຄົ້າ ບ້ານຊື່ປາກໂຄນ
ຢູ່ມາດົນ ປ່ຽນເປັນປາກນ້ຳ
ຍາມບຸນຄ້ຳ ຕາມຜາມເລົາຢູ່
ສາວບ່າວຊູ້ ຈາຕ້ານຕໍ່ກັນ

ບ້ານປາກນ້ຳ ປາກລຸ່ມຊຸມສາວ
ຈັບມືຊາວ ງ່າຍດາຍເອົາແທ້
ຫາທາງແກ້ ຄຳຫຍາມບ້ານອື່ນ
ເລີຍປ່ຽນພື້ນ ເປັນບ້ານໄຮ່ນາ ນີ້ແລ້ວ

ການກຳເນີດຂອງນາມສະກຸນພິມສີປະສົມ

ໃນຊ່ວງກຳເນີດຂອງປູ່ຈານພິມ ແລະ ຍ່າສົມຊຶ່ງຈະຢູ່ໃນທ້າຍຂອງທົດສະຫວັດ 1890 ຫາຕົ້ນທົດສະຫວັດ 1900 ຊາວລາວໃນຊົນນະບົດ ບໍ່ເຫັນຄວາມຈຳເປັນ ແລະ ສຳຄັນຂອງນາມສະກຸນພວກເພິ່ນຈຶ່ງບໍ່ມີແລະບໍ່ໃຊ້ມີແຕ່ໃສ່ຊື່ຂອງບຸກຄົນແລ້ວກໍພໍ ປູ່ຈານພິມ ແລະ ຍ່າສົມກໍເຊັ່ນດຽວກັນ. ນາມສະກຸນພິມສີປະສົມໄດ້ກຳເນີດໃນປີ 1950 ຊຶ່ງແມ່ນອາວ ບຸນທຽມລູກຊາຍຫລ້າຂອງ ປູ່ຈານພິມ ແລະ ຍ່າສົມເປັນຜູ້ປະດິດຄິດສ້າງຂຶ້ນມາ. ອາວບຸນທຽມເປັນຜູ້ດຽວໃນຊຶ່ງເຂດນີ້ ໄດ້ມີໂອກາດເຂົ້າໄປຮຽນຕໍ່ຢູ່ໃນຕົວເມືອງວຽງຈັນຈົບຊັ້ນ ປໍ 6 ທີ່ໂຮງຮຽນປະກົມສົມບູນທາດຫລວງຊຶ່ງມີແຕ່2 ຫ້ອງຮຽນໃນເວລານັ້ນແຕ່ເຮັດດ້ວຍດິນກີ່ ແລະ ມຸງດິນຂໍຕັ້ງຢູ່ກົງກັນຂ້າມ

ກັບສິນວັດຫນອງບອນຣິມທາງຫນອງບອນ ຊຶ່ງປະຈຸບັນຍັງເຫລືອໃຫ້ເຫັນຢູ່ກໍຄືຕຶກນ້ອຍຢູ່ລະຫວ່າງກາງ ຂອງສອງຕຶກໃຫຍ່ຂອງ ໂຮງຮຽນມັທຍົມທາດຫລວງ. ພໍເຖິງຈະເສັງ ເອົາໃບປະກາດປະກົນ ແລະ ເສັງເຂົ້າມັທຍົມຫລືເອີ້ນວ່າວິທຍາລັຍ 'lycee''ລີເຊປາວີ" ນັກຮຽນທຸກຄົນຕ້ອງມີໃບຊາດຕາການເກີດປະກອບດ້ວຍຊື່ ແລະ ນາມສະກຸນ. ອາວບຸນທຽມ ເປັນເດັກນ້ອຍອາຍຸ 15 ປີບໍ່ຮູ້ວ່າຈະເຮັດແນວໃດເພາະພໍ່ແມ່ເຊື້ອ ສາຍຂອງຕົນເອງບໍ່ມີນາມສະກຸນ ຈະປຶກສາຫາລືກັບນ້ອງອ້າຍ ກໍຢູ່ໄກກັບຈຶ່ງໄດ້ຕັດສິນໃຈປະດິດຂື້ນດ້ວຍແນວຄິດຂອງຕົນເອງໂດຍອີງຕາມບຸນຄຸນບິດາມານດາຜູ້ບັງເກີດເກົ້າຈຶ່ງໄດ້ຕັດສິນໃຈເອົາຊື່ພໍ່ ແລະ ຊື່ແມ່ມາປະສົມກັນຈຶ່ງໄດ້ມີນາມສະກຸນວ່າ ***ພົມສີປະສົມ*** ໄວ້ໃຫ້ລູກຫລານສືບຕໍ່ກັນມາເຖິງປະຈຸບັນນີ້.

ພາກ ທີ 2: ທີ່ຕັ້ງແລະຈຸດພິເສດຂອງບ້ານໄຮ່

ໃນຊຸມປີ 1920 ຊຶ່ງແມ່ນຫລັງການເຂົ້າມາຄອບຄອງລາວ ຂອງຝຣັ່ງເສດ. ພວກຝຣັ່ງໄດ້ກະຈາຍກໍາລັງຂອງເຂົາໄປທົ່ວປະເທດລາວ. ຢູ່ຕາມສາຍທາງເລກ 10 ວຽງຈັນ-ບ້ານເກີນກໍແມ່ນສາຍ ທາງນຶ່ງທີ່ຝຣັ່ງເສດໄດ້ໃຫ້ຄວາມສົນໃຈໃນການຕັ້ງຄ້າຍ ເພື່ອປ້ອງກັນຕົນເອງ. ໂດຍສະເພາະ ແມ່ນຄ້າຍພູເຂົາຄວາຍຢູ່ໂພນສາວເອ້ ເປັນຈຸດສູງທີ່ສາມາດຄວບຄຸມການເຄື່ອນໄຫວທາງທະຫານໄດ້. ຊາວບ້ານຕາມສາຍທາງນີ້ ກໍໄດ້ມີການອອກແຮງງານ 15 ວັນ ເພື່ອເປັນການ ເສັຽພາສີໃຫ້ລັດເນື່ອງຈາກວ່າບໍ່ມີເງິນເສັຍ ຫລື ຢາຝິ່ນ ເສັຍໃຫ້ຝຣັ່ງ. ການອອກແຮງງານ 15 ວັນຂອງປະຊາຊົນໃນເສັ້ນທາງສາຍນີ້ແມ່ນ ຂຸດທີບກົມທາງ, ກາງແລວທາງ, ແລະ ຫາມນາຍຄົນຝຣັ່ງໄປຕາມທາງເພາະຝຣັ່ງຄ້ານຍ່າງແລ້ວໃຫ້ຄົນລາວເອົາໃສ່ຄານບັ່ງຫາມໄປຈະໄປທາງໃດກໍແມ່ນໃຫ້ກຸລີ (coulie) ຫາມໄປ.

ເສັ້ນທາງເລກ 10 ນີ້ເປັນເສັ້ນທາງ ທີ່ຜ່ານບ້ານໄຮ່ໄປ, ດ້ວຍເຫດນັ້ນ, ຊາວບ້ານໄຮ່ໃນສມັຍນັ້ນຈຶ່ງໄດ້ອອກແຮງງານ 15 ວັນ ເພື່ອສ້າງທາງສາຍນີ້. ມັນເປັນຈຸດນຶ່ງທີ່ສ້າງຄວາມສະດວກໃຫ້ແກ່ການຂົນສົ່ງ. ທາງຍ່າງ ແລະ ພາຫະນະເຊັ່ນ: ລໍ້, ກວຽນ, ຣົຖຖີບ, ສ່ວນຣົຖຈັກ ແລະ ຣົຖໃຫຍ່ເປັນຂອງຂ້າຣາຊການປົກຄອງ ຫົວເມືອງຂຶ້ນຝຣັ່ງເສດ. ໂດຍທີ່ຕັ້ງຂອງບ້ານໄຮ່ແລ້ວມັນກໍເປັນທີ່ຕ້ອງການຂອງວິຖີຊີວິດຂອງຄົນລາວ. ໂດຍທົ່ວໄປຊຸມຊົນລາວ ມີຈຸດພິເສດທີ່ບໍ່ແຕກຕ່າງກັນຄື: ຕັ້ງພູມລຳເນົາໂດຍປຸກເຮືອນສູງຢູ່ເລາະຕາມແຄມນ້ຳເປັນສ່ວນໃຫຍ່. ບັນພະບຸຣຸດຂອງຊາວບ້ານໄຮ່ກໍເຊັ່ນກັນເຂົາເຈົ້າ ໄດ້ເລືອກທີ່ຕັ້ງຂອງບ້ານໄຮ່ໂດຍມີລຳນ້ຳໃຫຍ່ຄືນ້ຳງື່ມອອ້ມກອດໄວ້ທັງສາມດ້ານຄື : ທິດຕາເວັນອອກ ບ້ານພູຄຳ ແລະ ໂຮງຮຽນທິດສະດີໃນປະຈຸບັນ, ທິດໃຕ້ ບ້ານແກ້ງໄຄ້, ທິດຕາເວັນຕົກບ້ານທ່າງ່ອນ ແລະ ທິດເຫນືອບ້ານເວີນຄຳ. ເມື່ອສັງເກດໃຫ້ດີແລ້ວແຜ່ນທີ່ຂອງບ້ານໄຮ່ຈະຄ້າຍຄືຮູບກະເພາະອາຫານ ຊຶ່ງບ່ອນປາກຂອງເພາະອາຫານຈະຢູ່ລະຫວ່າງ ໂນນກົກເປືອຍໄປຫາເວີນທ່ອນ ແລະ ຫນອງໃຕ້. ຍ້ອນບ້ານໄຮ່ ມີນ້ຳອ້ອມຮອບເກືອບທັງຫມົດ ຈຶ່ງເຮັດໃຫ້ມີເງື່ອນໄຂໃນການຂົນສົ່ງທາງເຮືອສະດວກ. ຊາວບ້ານໄຮ່ມີເຮືອໄວ້ໃຊ້ເກືອບທຸກຫລັງຄາເຮືອນຊຶ່ງເຮືອສ່ວນໃຫຍ່ ແມ່ນເຮັດຈາກໄມ້ຕົ້ນດຽວ ເຈາະເປັນພົ້ງເຄິ່ງກາງແລ້ວໃຊ້ຂີ້ຊີຢາເພື່ອບໍ່ໃຫ້ນ້ຳຮົ່ວເຂົ້າເຮືອ ເອີ້ນວ່າ ເຮືອຄໍ່ ຫລືເຮືອກູບ. ລວງຍາວຂອງບ້ານຕາມສາຍນ້ຳງື່ມຈະມີປະມານ 5 ກິໂລແມດ ຊຶ່ງມີຊາຍແດນທາງນ້ຳຕິດບ້ານຈຳປາໂນງທີ່ຕິດກັບ ບ້ານຫາດກ້ຽງ. ຟາກນ້ຳກົງກັນຂ້າມຈະຕິດກັບບ້ານຫນອງເຂັ້ງ, ບ້ານ ເວີນຄຳ, ບ້ານທ່າງ່ອນ, ແລະ ບ້ານແກ້ງໄຄ້. ເນື່ອງຈາກວ່າມັນເປັນບ້ານ ທີ່ນ້ຳງື່ມອ້ອມກອດໄວ້ກ້າເດີນທາງລັດ ແຕ່ບ້ານທ່າສົ້ມມໍແຄມນ້ຳງື່ມ ໄປຫາບ້ານຫາດກ້ຽງລັດຊອດໄປຫານ້ຳງື່ມອີກດ້ານນຶ່ງນັ້ນຈະໃກ້ທີ່ສຸດ. ຈາກທີ່ຕັ້ງນີ້, ຊາວບ້ານໄຮ່ສມັຍບັນພະບຸຣຸດມາຈຶ່ງມີຄວາມຊຳນານໃນການຫາກິນທາງນ້ຳ, ເດີນ

ທາງນ້ຳ, ເຮັດສວນແຄມນ້ຳ, ເຮັດໄຮ່ຕາມ ແຄມງື່ມ, ແລະ ລ່າສັດໃນປ່າ. ຕາມພື້ນທີ່ຂອງບ້ານໄຮ່ແລ້ວບໍ່ມີພູຜາສູງຊັນ ແຕ່ກໍ່ຢາກໄປຫາກິນເທິງພູ ກໍ່ສາມາດ ໄປໄດ້ທີ່ພູເຂົາຄວາຍຈະໄປຕາມ ທາງເລກ 10 ຫລື ຈະລ່ອງ ເຮືອລົງໄປທາງທ່າດິນແດງ ເວີນກະເບົາກໍໄດ້ທັງນັ້ນ. ບ້ານໄຮ່ເປັນບ່ອນ ທີ່ມີຄວາມສະດວກໃນການດຳລົງຊີບ ໃນສມັຍນັ້ນດິນປູກຝັງ ຂອງບ້ານໄຮ່ ອຸດົມສົມບູນເປັນດິນທີ່ງາມປູກພືດອັນໃດໃສ່ກໍ່ເກີດຂຶ້ນໂລດເນື່ອງຈາກ ວ່າມີນ້ຳຖ້ວມເກືອບທຸກປີ, ຈຶ່ງເຮັດໃຫ້ດິນມີຝຸ່ນຫລາຍ. ໃນຊຸມ ປີ 1950 ແລະ 1960 ບ້ານໄຮ່ຈະມີປ່າໄມ້ຕຸ້ມເປັນບ້ານທີ່ມີອາກາດຊຸ່ມຊື່ນເຢັນ ດີຫລຽວໄປທາງໃດກໍ່ມີປ່າໄມ້ຕຸ້ມຕໍ່. ຕາມແຄມນ້ຳຈະມີຕົ້ນກຸ່ມ ທີ່ສາມາດ ເອົາມາ ເຮັດສົ້ມຜັກກຸ່ມກິນໄດ້, ມີກົກກ້າງປາ, ກົກໄຄ້ທີ່ ເປັນບ່ອນ ຫລົ້ຊ່ອນຂອງປາ ແຄມງື່ມມີຫາດຍືດອອກໄປ ຊຶ່ງຈະມີຢູ່ແຕ່ທ່າວັດເກົ່າ ລົງໄປເກືອງທ່າວັດໃນປະຈຸບັນ. ເຮັດໃຫ້ຝຣັ່ງ ແລະ ເຈົ້ານາຍໃນວຽງຈັນ ຕ້ອງຂີ່ລົດຂອງເພິ່ນໄປອາບນ້ຳງື່ມ. ໃນຊຸມປີ1960, ກາງນ້ຳງື່ມຕໍ່ໜ້າ ວັດໃນປະຈຸບັນມີຫາດດອນກາງໃຫ່ຍໃນເວລາກຸດສົງການປີໃໝ່ລາວຈະ ມີຊາວໜຸ່ມຍິງຊາຍພາກັນໄປອາບນ້ຳ ແລະ ພາກັນມ່ວນຊື່ນຢູ່ເທິງຫາດ ດອນກາງ. ໃຕ້ໄຄ້ງລົງໄປທາງໜອງຫລວງຈະມີຫາດໃຫຍ່ ເອີ້ນວ່າຫາດ ໜອງຫລວງ. ຫາກຜູ້ໃດເກີດຊຸມປີ 1960 ຈະຍັງໄດ້ເຫັນຄວາມສວຍ ງາມຂອງບ້ານໄຮ່ໃນສມັຍນັ້ນ. ເທິງແຄມຕະຫລິ່ງ ຈະມີຕົ້ນສຳສາທີ່ເປັນ ຮົ່ມເຢັນດີຢາຍໄປຕາມລຳນ້ຳງື່ມເປັນທີ່ນັ່ງຕຶກເບັດຂອງເດັກນ້ອຍ ແລະ ຜູ້ໃຫຍ່ໃນຍາມນ້ຳຂຶ້ນ ແລະ ນ້ຳລົງ. ທັງຍັງເປັນບ່ອນເດັກນ້ອຍໂດດນ້ຳ ໃນຍາມນ້ຳຂຶ້ນ ແລະ ເປັນບ່ອນນັ່ງເບິ່ງຊ່ວງເຮືອຂອງຊາວບ້ານອີກດ້ວຍ. ຫາດຊາຍບ້ານໄຮ່ ເປັນຫາດຊາຍຂາວຄົນສາມາດນອນອາບແດດໄດ້. ໃນ ສມັຍນັ້ນພວກຝລັ່ງມັກມາອາບແດດ ໂດຍເອົາລົດໃຫຍ່ລົງເລາະ ແລະ ຈອດໄວ້ຫາດໄດ້. ຍິ່ງໄປກ່ວານັ້ນ, ຍັງມີພວກຝຣັ່ງເອົາຍົນເຮລິກອບແຕ ແລະ ຍົນປີກນ້ອຍແນວລົງນ້ຳໄດ້ ມາລົງຈອດທີ່ຫາດບ້ານ ໄຮ່ເຮັດໃຫ້

ຊາວບ້ານໄຮ່ ພາກັນແລ່ນໄປເບິ່ງບາງຄົນເກືອງກັບຕ່ຳເຂົ້າຂີ້ວບໍ່ແລ້ວ ແລະ ເອົາທັງຄົກທັງສາກໄປນັ່ງຕ່ຳເບິ່ງເຮືອບິນ

(ຄົນຜູ້ນັ້ນຕູ້ຫວັດຫລືທິດອຸ່ນ).



ນີ້ແມ່ນຕໍ່ຂອງຕົ້ນສຳສາໃຫຍ່ທາງລົງໄປຫາດໜອງຫລວງຢູ່ແຄມທ່າ ສວນບາຍພົບສູນທອບມັນກໍ່ກາທຳລາຍຍ້ອນທຸລະກິດແກະສະຫລັກຊ້າງ.

ຕາມຫນ້າບ້ານແຄມທາງ ຈະມີຕົ້ນໄມ້ໃຫຍ່ເຊັ່ນຕົ້ນຫມາກມ່ວງ, ຫມາກລຳໃຍ, ຫມາກກະທັບ, ຫມາກພ້າວ, ຫມາກຂາມ, ແລະອື່ນໆ ຢາຍໄປຕາມສາຍທາງເລກ 10. ຊາວບ້ານໄຮ່ບໍ່ໄດ້ຂາຍໃຫ້ຄົນໃນບ້ານຕົນເອງເນື່ອງຈາກວ່າມີແຕ່ລູກຫລານ ຕົນເອງທັງນັ້ນ. ເຂົາເຈົ້າມີແຕ່ເອົາໄປຂາຍໃຫ້ຄົນບ້ານອື່ນ. ເມື່ອເຂົ້າໄປໃນປ່າທາງໜອງຫລວງກໍມີປ່າໄມ້ດົກຫນາຈົນຫນ້ອຍຄົນຈະກ້າໄປຫນອງຫລວງ ຜູ້ດຽວໃນສມັຍນັ້ນ. ທັງຫມົດນີ້ສາມາດຢັ້ງຢືນວ່າທີ່ຕັ້ງຂອງບ້ານໄຮ່ ແມ່ນມີຄວາມສະດວກດີໃນການຂົນສົ່ງຕິດຕໍ່ຄ້າຂາຍ ແລະ ຫາຢູ່ຫາກິນເປັນພິເສດ ທີ່ສົມຄວນຊາວບ້ານໄຮ່ຈະຕ້ອງໄດ້ກຸ້ມກອມໄວ້ໃຫ້ດີ. ແຕ່ກ່ອນແຄມນ້ຳງື່ມ ກໍ່າບ້ານໄຮ່ມີຫາດຊາຍຂາວ, ມີປ່າກຸ່ມ, ປ່າຮຸ່ງແຮ້ວ, ຜັກແກງຂົມ, ມີຫນານຜັກຂອງຊາວບ້ານ,

ມີເຮືອກາບເຮືອຄໍຈອດເຕັມທ່ານໍ້າ, ມີພາບຂອງຝູງຄົນເຄື່ອນໄຫວຕັກນໍ້າອາບນໍ້າ, ເດັກນ້ອຍ ແລ່ນຢອກກັນ ໃນຍາມ ເຊົ້າ ສວຍ ແລະ ແລງ. ໂດຍສະເພາະຍາມແລງຈະມີບ່າວສາວອາບນໍ້າຫລັງຈາກກັບມາແຕ່ວຽກໄຮ່ການາ. ສອງຟາກຝັ່ງລະຫວ່າງ ບ້ານທ່າງ່ອນ ແລະ ບ້ານໄຮ່ຈະມີເຮືອບັກຂ້າມລົດໃຫຍ່ ແລະ ເຮືອຈັກນ້ອຍຂ້າມສົ່ງຄົນຜູ້ຕ້ອງການຂ້າມນໍ້າໄວ.ໃຕ້ທ່າບັກມີຫາດດອນກາງທີ່ມີກໍໄຄ້ເປັນປ່າໃຫຍ່ ແລະ ມີຫາດຊາຍຂາວເຊັ່ນກັນ. ຕາມແຄມຫາດດອນກາງຈະມີຄົນຫວ່ານແຫ, ໄຫລມອງ, ແກ່ຂາ, ຮື້ຊຸ້ມ, ດັງໄຟປີ້ງປາກິນ.ສອງຟາກນໍ້າຈະມີຄົນອາບນໍ້າ ແລະເອີ້ນຢອກກັນຢ່າງມ່ວນຊື່ນ. ຍາມບຸນປີໃໝ່ລາວກໍຈະມີແຂກ ທັງສອງບ້ານໄປຢ້ຽມຢາມບາງປີກໍຈັດບຸນຮ່ວມກັນຢູ່ຫາດດອນກາງທັງບ້ານໄຮ່ ແລະ ບ້ານທ່າງ່ອນເຮັດຂົວໄມ້ໄຜ່ຂ້າມໄປໃສ່ກັນເອົາຈັກໄຟຟ້າ ມາຕິດຕັ້ງ ແລະ ມີການບັນເລັງສຽງເພັງ ແລະ ຟ້ອນລໍາວົງຢ່າງມ່ວນຊື່ນເປັນໜ້າສະອອນແທ້ໆ. ຕາມແຄມທ່າບັກຈະມີຕູບນ້ອຍຢາຍກັນລົງມາຕາມທາງ ເພື່ອຂາຍເຄື່ອງເລັກໆນ້ອຍໆໃຫ້ແຂກທີ່ເດີນທາງໄດ້ພັກເຊົາກິນອາຫານ. ບ້ານໄຮ່ງາມເຫລືອພັນລະນາ ແທ້ໆ.

ແຜ່ນທີບ້ານໄຮ່

ພາກທີ 3: ການເປັນນາຍບ້ານໆໄຮ່ ແລະ ຄວາມສຳພັນລະຫວ່າງປູ່ຈານພິມ ແລະ ເຈົ້າເພັຊຣາດ

ຄືດັ່ງທີ່ໄດ້ເວົ້າເຖິງ ໃນພາກການກຳເນີດ ຂອງບ້ານໄຮ່ໃນພາກສັງລວມພາກທີ1 **ຕູ້ປູ່ຈານພິມ** ຜູ້ທີ່ຍັງເປັນຕາແສງບ້ານຫາດກ້ຽງຢູ່ເມື່ອໄດ້ຍ້າຍມາຕັ້ງບ້ານຢູ່ບ້ານໄຮ່ແລ້ວ ເຮັດໃຫ້ເພິ່ນຢູ່ຫ່າງໄກຈາກປະຊາຊົນ. ດັ່ງນັ້ນ, ຈຶ່ງບໍ່ມີຄວາມສະດວກ ໃນການປົກຄອງ, ເພິ່ນຈຶ່ງໄດ້ລາອອກຈາກການເປັນຕາແສງຫາດກ້ຽງແລ້ວເກົ້າແກ່ປະຊາຊົນບ້ານຫາດກ້ຽງຈຶ່ງໄດ້ແຕ່ງຕັ້ງຕາແສງ ພໍ່ຫມຸດຂຶ້ນມາແທນ ເນື່ອງຈາກປູ່ຈານພິມເປັນຜູ້ປົກຄອງໃນຂົງເຂດນີ້ເປັນເວລານານ. ເຈົ້າເພັຊຣາຊ ແລະ ຕູ້ປູ່ຈານພິມໄດ້ມີຄວາມນັບຖືກັນເປັນພິເສດ. ເວລາສ້າງທາງເລກ10 ເຈົ້າເພັຊຣາດຈຶ່ງສັ່ງໃຫ້ເຮັດຜ່ານດິນຂອງປູ່ຈານພິມ ຍ້ອນຕ້ອງການໃຫ້ປູ່ຈານພິມຢູ່ໃກ້ແຄມທາງເວລາທ່ານກາຍມາຈະໄດ້ແວ່ສະດວກດີ (*ອີງຕາມການເລົ່າເລື່ອງຂອງແມ່ຕູ້ດອນ*) ການເປັນຕາແສງຂອງປູ່ຈານພິມແມ່ນກົກບົ່ງຕົວຈາກເຈົ້າເພັຊຣາດ ຊຶ່ງມີນາມມະຍົດເຖິງເຈົ້າມະຫາອຸປຣາດ ເພັຊຣາດ. ເຈົ້າເພັຊຣາດເປັນບຸກຄົນ ທີ່ປະຊາຊົນລາວນັບຖືທີ່ສຸດ ຍ້ອນທ່ານມີຈິດໃຈຮັກເຊື້ອແພງຊາດສູງສົ່ງທີ່ສຸດ. ນອກນັ້ນຍັງມີຄຳກ່າວລືວ່າ ທ່ານມີເວດມົນກັບຄາຖາທີ່ສາມາດຫາຍຕົວ, ນອນຍອດຕອງ ແລະ ເຂົ້າຢູ່ໃນກວດແກ້ວໄດ້. ບ່ອນໃດມີຜີເຄັດທີ່ສຸດເຈົ້າເພັຊຣາດ ຈະໄປປາບໃຫ້ປະຊາຊົນເພື່ອໃຫ້ເຂົາເຈົ້າສາມາດທຳມາຫາກິນໄດ້ ສະດວກສະບາຍ. ຜີທີ່ຢູ່ໃນປະເທດລາວໄດ້ຍິນແຕ່ຊື່ເຈົ້າເພັຊຣາດ ແມ່ນພາກັນແຕກຜ່າຍໄປຫມົດ ເຊັ່ນຕົວຢ່າງ: ຫນອງງິ້ວຫນອງເມກຢູ່ບ້ານ ຫາດສວນຕາມປ່ຽວ. ເປັນຫນອງທີ່ມີຜີຮ້າຍກາດບໍ່ມີໃຜໄປໃກ້ໄດ້. ຫນອງນັ້ນມີຝູງແຂ້ຕັ້ງເປັນຮ້ອຍ ເປັນພັນຮັກສາບໍ່ໃຫ້ໃຜໄປກວນ. ຜີເລົ່ານັ້ນມີແຕ່ເຈົ້າເພັຊຣາດ ເທົ່ານັ້ນເປັນຜູ້ປາບໄດ້ແລ້ວນຳພາປະຊາຊົນໄປຜ່າຫນອງເອົາປາທຸກໆປີ. ໃນຂບວນນັ້ນ

ກໍມີເຈົ້ານາຍຫລາຍທ່ານ ໄປຮ່ວມຊຶ່ງກໍຮວມທັງປູ່ຈານພົມຂອງ ບ້ານໄຮ່ ດ້ວຍ. ເຈົ້າເພັດຊະລາດ ເປັນນັກລ້າເນື້ອຜູ້ກ້າຫານ ຈຶ່ງມີຄວາມກຶກອົກກຶກໃຈຕໍ່ກັນເປັນອັນ ມາກກັບຕາແສງຈານພົມເພາະ ຜູ້ນີ້ກໍເປັນນາຍພານໃຫຍ່ເຫມືອນກັນ. ທຸກຄັ້ງທີ່ໄປຜ່າ ປາຫນອງງົ້ວຫນອງເມກພວກ ເພິ່ນຕ້ອງຕຽມປືນພາຫນ້າໄມ້ ໄປຢ່າງຂນານໃຫຍ່. ພໍໄປຮອດແລ້ວເພິ່ນກໍໃຊ້ມົນຄາຖາປາບແຂ້. ພວກແຂ້ທັງປວງກໍພາກັນເຂົ້າກົ່ງ ເຂົ້າຮູຈົນຫມົດແລ້ວຈຶ່ງສັ່ງປະຊາຊົນລົງຜ່າປາໄດ້. ດ້ວຍມີແຂ້ເປັນຜູ້ຮັກສາ ບໍ່ມີຜູ້ໃດໄປໄກ້ໄດ້ຈຶ່ງມີປາຢູ່ຢ່າງມະຫາສານ. ດ້ວຍຄວາມຮັກແພງສຳພັນກັນລະຫວ່າງສອງຄົນເພິ່ນເຈົ້າເພັດຊະລາດ ຈຶ່ງໄດ້ສ້າງໂຮງຂອງເພິ່ນເປັນບ່ອນພັກຜ່ອນຢູ່ແຄມນ້ຳງື່ມ ຕໍ່ຫນ້າວັດທາດກ້ຽງເຫນືອ ເພື່ອຈະໄດ້ຢູ່ໃກ້ຊິດກັບຕາແສງຈານພົມ.ຕໍ່ມາຕອນແຕກເສິກຍີ່ປຸ່ນໄປຢູ່ນາພົງ *(ນາອ້ອຍຫນູ)* ເຈົ້າເພັດຊະລາດໄດ້ໂຕນໄປຢູ່ປະເທດໄທ. ສ່ວນໂຮງຂອງເຈົ້າເພັດຊະລາດຊາວບ້ານກໍພາກັນເອົາເຮັດໂຮງຮຽນເຫດການນີ້ເກີດຂຶ້ນໃນປີ 1946. ປະຈຸບັນຄວາມເຊື່ອວ່າພີຢ້ານເຈົ້າເພັດຊະລາດນັ້ນຍັງຢູ່ໃນຄວາມຊົງຈຳຂອງປະຊາຊົນລາວຈຳນວນຫນຶ່ງຢູ່. ຕາມປ້ານເຮືອນຈະສັງເກດ ເຫັນຮູບເຈົ້າເພັດຊະລາດຕິດຕາມຝາເຮືອນເພື່ອເປັນການປ້ອງກັນບໍ່ໃຫ້ພີມາກວນ.



ຮູບເຈົ້າເພັດຊະລາດ

ປູ່ຈານພິມເກືອງແມ່ນໄດ້ລາອອກຈາກການເປັນຕາແສງຫາດກ້ຽງແລ້ວ ແຕ່ປະຊາຊົນຍັງຮ້ອງເພິ່ນວ່າຕາແສງຈານພິມຢູ່ຄືເກົ່າ. ເພິ່ນເປັນບຸກຄົນທີ່ ຊື່ສັດ ແລະ ຮັກເຊື້ອແພງຊາດກໍຄືພີ່ນ້ອງຮ່ວມຊາດຕົນເອງ. ເປັນຄົນ ທີ່ປະຊາຊົນໃຫ້ຄວາມນັບຖື ຍ້ອນຄວາມຊື່ສັດຂອງເພິ່ນເອງ. **ພໍ່ຕູ້ຫມຸດ ເຈົ້າພຣະສີ ຢູ່ບ້ານນາໄຊ** ໃນສມັຍເພິ່ນຍັງມີຊີວິດຢູ່ກໍໄດ້ກ່າວຍ້ອງຄວາມ ເປັນທັມຂອງປູ່ຈານພິມໂດຍເພິ່ນໄດ້ທຽບໃສ່ຜູ້ທີ່ມີຄວາມຊື່ສັດ ແລະ ຮັກ ສາຄວາມຍຸຕິທັມທີ່ສຸດຄືທຽບໃສ່ເປົາບຸ້ນຈິ້ນຂອງຈີນ.

ພາກທີ່ 4: ທີ່ມາຂອງປູ່ຍ່າຕາທວດຂອງປູ່ຈານພິມແລະ ຍ່າສົມ

ປູ່ຍ່າຕາທວດຂອງຊາວບ້ານຫາດກ້ຽງ ກໍດັ່ງດຽວກັນກັບຊາວບ້ານ ອື່ນໆ ທີ່ມາຕັ້ງກິ່ນການພູນລຳເນົາຢູ່ຕາມລຳແມ່ນ້ຳງື່ມ ແລະ ຊົງເຂດ ອ້ອມແອ້ມແຕ່ເຫນືອຕລອດໃຕ້. ຈຳພວກຄົນເລົ່ານີ້ໄດ້ຍ້າຍລົງມາ ຈາກ ເມືອງພວນກໍຄືແຂວງຊຽງຂວາງໃນປະຈຸບັນນີ້ເອງ. ເພິ່ນອົພຍົບໂດຍອາ ໃສເຮືອແພເປັນພາຫະນະລ່ອງລົງມາ ຕາມລຳແມ່ນ້ຳງື່ມຫລັງຈາກເຈົ້າ ອານຸວົງໄດ້ເສັຽສົງຄາມໃຫ້ໄທສຍາມຄັ້ງສຸດທ້າຍ ທີ່ໄທໄດ້ມາຈູດເລົາເຜົາ ໃຫມ້ນະຄອນວຽງຈັນໃຫ້ຈຳດິນ. ຈາກນັ້ນກໍໄດ້ກວດເອົາໄພ່ຟ້າປະຊາກອນ ວຽງຈັນຂ້າມຟາກຂອງໄປຢູ່ຟາກນັ້ນ ແລະ ຢຶດເອົາເປັນປະເທດໄທ ແຕ່ນັ້ນ ມາ. ເມື່ອຊົງເຂດວຽງຈັນເປົ່າຫວ່າງບໍ່ມີປະຊາຊົນ ພ້ອມທັງພວກຫໍ້ (ຫລື ຈີນຫໍ້)ລົງມາຈາກພາກເຫນືອຂ້າຟັນປະຊາຊົນ ຊາວພວນສູ້ບໍ່ໄຫວຈຶ່ງແຕກ ຫນີລົງມາຕາມລຳນ້ຳງື່ມດັ່ງກ່າວ. ສ່ວນປູ່ຍ່າຕາທວດຂອງ ປູ່ຈານພິມ ແລະ ຍ່າສົມນີ້ກໍແມ່ນຊາວພວນທີ່ແຕກເສິກຫໍ້ລົງມາຄັ້ງນີ້ເຫມືອນກັນຈຶ່ງ ໄດ້ຊື່ວ່າຊາວລ່ອງງື່ມຊຶ່ງກໍແມ່ນຊາວພວນມາແຕ່ຊຽງຂວາງນັ້ນເອງ. ພວກ ປູ່ຍ່າຕາທວດຂອງປູ່ຈານພິມ ແລະ ຍ່າສົມຈຶ່ງໄດ້ມາຕັ້ງກິ່ນການຢູ່ທີ່ບ້ານ ຫາດກ້ຽງນີ້. ຈາກນັ້ນ, ຈຶ່ງໄດ້ມີລູກຫລານສືບຫນໍ່ແທນແນວຕໍ່ໆ ກັນມາ. ຕໍ່ມາໄດ້ພາກັນຍ້າຍມາຕັ້ງ ບ້ານເຮືອນຢູ່ບ້ານໄຮ່.

ປູ່ຈານພິມໄດ້ເກີດຢູ່ບ້ານທາດກ້ຽງໃນປີ 1889 ແລະ ໄດ້ເສັຽຊີວິດໃນວັນທີ 21 / 02 / 1952 ກົງກັບວັນສຸກ ເດືອນ 3 ແຮມ13 ຄ່ຳ ເວລາ 3.00 ໂມງແລງ ຍ້ອນພະຍາດເປັນບາດໃສ່ກົ້ນ ລວມອາຍຸໄດ້ 63 ປີ. ສ່ວນ ຍ່າສິມນັ້ນກໍເກີດທີ່ບ້ານທາດກ້ຽງດັ່ງ ດຽວກັນໃນປີ 1899 ແລະ ເສັຽ ຊີວິດຢູ່ທີ່ບ້ານໄຮ່ເໜືອນກັນໃນເດືອນເຈັດປີ 1946 ດ້ວຍ ພະຍາດຕັບ ທ້ອງໄຂ່ລວມອາຍຸໄດ້ 47 ປີ. ກະດູກຂອງເພິ່ນທັງສອງແຕ່ກ່ອນໄດ້ກຶກບັນ ຈຸໃສ່ທາດໄວ້ແຈວັດເກົ່າ ແຄມນ້ຳດ້ານເໜືອຊຶ່ງຕິດກັບ ດິນສວນເກົ່າ ຂອງອາວບຸນທຽມ. ຊຶ່ງປະຈຸບັນແມ່ນດິນຄອບຄົວຂອງ ທ້າວຄອນສະຫວັນ ຜູ້ເປັນຫລານຊາຍ. ເມື່ອວັດໄດ້ຍ້າຍລົງມາຢູ່ໃຕ້ບ້ານຕູ້ອາ ແມ່ດອນໄດ້ ຍ້າຍລົງມາໄວ້ວັດໃຫມ່ຕາມການແນະນຳແລະສນັບສນູນຂອງອາວບຸນທຽມ ທາດດູກຂອງເພິ່ນຈະຢູ່ດ້ານຕາເວັນອອກແຄມນ້ຳງື່ມ ຂອງວັດໃຫມ່ສ່ວນ ລູກຊາຍຂອງ ເພິ່ນທິດບວນ ແລະ ທິດພັນຢູ່ດ້ານຕິດນ້ຳງື່ມ.

ພາກທີ 5: ຕະກຸນຕົ້ນໆທີ່ມາຕັ້ງກຸ້ມກາບຢູ່ບ້ານໄຮ່:

ຕະກຸນທີ່ມາຕັ້ງບ້ານໄຮ່ ແມ່ນຕະກຸນຂອງປູ່ຈານພິມ. ໂດຍຕາມປະ ຫວັດຂອງປູ່ຈານພິມ ຕາມການບອກເລົ່າຂອງລຸງບົວເກດລູກຊາຍຂອງຕູ້ ທິດບວນ (ລຸງເກດ) ຊຶ່ງປະຈຸບັນຍ້າຍໄປຢູ່ບ້ານໂນນທ່າງ່ອນ ຕໍ່ຫນ້າ ໂຮງຮຽນມັທຍົມທ່າງ່ອນ. ປູ່ຈານພິມເປັນຄົນພື້ນກາບບ້ານທາດກ້ຽງຊຶ່ງ ບ້ານເດີມຂອງເພິ່ນ ແມ່ນຢູ່ຕໍ່ຫນ້າວັດໃຕ້ບ້ານທາດກ້ຽງ ຈົນໄປເຖິງໂຮງ ຮຽນປະຖົມບ້ານທາດກ້ຽງ. ຊຶ່ງປະຈຸບັນ, ແມ່ນເຮືອນຂອງປູ່ທິບທາດ ກ້ຽງ(ນ້ອງຊາຍຂອງປູ່ຈານພິມ). ຄົນທີ່ຢູ່ດິນຕອນນັ້ນໂດຍສືບທອດມູນມໍ ດົກນັ້ນ ລ້ວນແຕ່ແມ່ນເຊື້ອສາຍພີ່ນ້ອງໃກ້ຊິດຂອງຄົນບ້ານໄຮ່ດັ່ງເດີມ. ປູ່ ຈານພິມມີພີ່ນ້ອງນຳກັນ 6 ຄົນ:

1. ອ້າຍກົກຂອງເພິ່ນແມ່ນປູ່ພອງ(ເອີ້ນຕາມຊື່ລູກ)ປ້າພອງທ້ອງປຸ້ງ
2. ນາງ ທຸມມາ ຫລື ປ້າບຸດ (ເອີ້ນຕາມຊື່ລູກ)

3. ປູ່ ຈານພິມ
4. ທ. ທອງ ຫລື ປູ່ທິບ ນ້ອງຊາຍຢູ່ຫາດກ້ຽງເປັນຜູ້ແທນມູນ (ພໍ່ຂອງແມ່ກໍ່າຫລືນາງແຫງ) ສ່ວນທ້າວກໍ່າອໍາພອນນັ້ນປະຈຸບັນ ຕັ້ງກຸ້ມກຸານຢູ່ປະເທດ ອົດສະຕາລີ Canberra
5. ປູ່ຄໍາຟອງຫລື ປູ່ ບົວ(ເອີ້ນຕາມລູກ) ເປັນພໍ່ຂອງ(ຕູ້ເພັງຫລືທິດ ທີ ຕູ້ພຽນ ຫລື ທິດ ນວນສີ ພໍ່ພຽນ)
6. ຍ່າທຸມມີ ຫລື ຍ່າເອບ (ແມ່ຂອງຕູ້ມີ ຫລື ແມ່ຕູ້ສີງພໍ່ກາງ)



ຕົ້ນຂາມຫວານຂອງປູ່ບົວທີ່ເປັນມູນໃຫ້ແກ່ລູກຫລານ ອາຍຸປະມານ 80 ປີ
ຕົ້ນຂາມນີ້ຈະຢູ່ປາຍຊານຂອງ ເຮືອນທິດພັນ ແລະທິດນວນ ແຕ່ວ່າເຮືອນທິດພັນມ້າງ ແລ້ວ

ສິນຄ້າຂອງຊາວບ້ານໄຮ່ໃນປະຈຸບັນ

ກວຽນ ພາຫະນະເດີນທາງໃນເມື່ອກ່ອນ ປະຈຸບັນມັນກາຍເປັນເຄື່ອງເອ້

5.1. ຄອບຄົວປູ່ພອງ

1. ປ້າພອງ (ເປັນທີ່ຮູ້ກັນວ່າຊ່າງເຮັດເຂົ້າປຸ້ນສີມີດີ)
2. ທິດສາວບໍ່ມີລູກ
3. ທິດມ້າວ ແຕ່ງງານກັບ ປ້າດວງຕາ ຫລືປ້າຫອມ ຕາມຊື່ລູກ. ປ້າຫອມມີລູກຄື : ທ້າວ ຫອມ ມ້າວປະເສີດອອກໄປເຮັດການ ປະຕິວັດ 1960 ສ້າງຄອບຄົວກັບນາງອ້ອມຄົນຊຳເໜືອໄດ້ລູກ ມີທ້າວ ພະ ນອມໄພ, ນາງນາງ, ທ້າວ ສົມເພັດ(ຕຸ່ນ), ທ້າວ ໄພ ວອນ, ນາງ ໄພວັນ, ທ້າວ ງອນ. ທ້າວຂັນ (ຂັນຂີ້ເຫລົ້າເພາະ ກິນເຫລົ້າເກ່ງນັ້ນ ເອງ), ທ້າວ ຊ່ວງ ຕັ້ງບ້ານເຮືອນຢູ່ບ້ານໄຊ່, ທ້າວຄຳຫລ້າ.
4. ທ້າວ ຫລ້ານ້ອຍ ຊຶ່ງແມ່ນນ້ອງຂອງປ້າພອງ, ທິດສາວ ແລະ ທິດມ້າວມ້າວປະເສີດ

ທ້າວ ຊ່ວງ ມ້າວປະເສີດ (ລູກ ປ້າທອນ)

5.2. ຄອບຄົວຍ່າທຸມມີຫລືຍ່າບຸດ (ເອີ້ນຕາມຊື່ລູກຂອງລາວ)

ຍ່າບຸດນີ້ມີລູກຄື:

1. ທິດບຸດ ລູກຊາຍກົກ
2. ທິດ ຄຳແພງ ເອົາກັບ ສາວ ບຸດສະດີ ຫລື ແມ່ຕູ້ເກດໃນປະຈຸບັນ (ບໍ່ໄດ້ລູກນຳກັນຈຶ່ງຮ້າງກັນ)
3. ຈານຄູ ບົວແດງ ແຕ່ງງານກັບ ປ້າຫວັດ ໄດ້ລູກເປັນ *ອ້າຍຫວັດ ແລ້ວຮ້າງກັບ ແມ່ຫວັດ ຈຶ່ງມາ ເອົາທິດ ອຸ່ນຫລື ອາວພໍ່ຫວັດ ໄດ້ລູກນຳກັນມີ:*

    1. *ທ້າວ ສົມພັດ (ສ້າງຄອບຄົວຢູ່ບ້ານນາບົກຂຸ້ມ ບ້ານເກົ່າຂອງພໍ່)*
    2. *ນາງ ກິງພັດ (ສ້າງຄອບຄົວຢູ່ບ້ານບໍໂອ ແລະຍ້າຍໄປຢູ່ອາເມລິກາ)*

3. ນາງ ຈັນລັບ (ຕາຍຢູ່ບ້ານໄຮ່)

4. ທ້າວ ປິ່ນທອງ ເປັນນັກຂຽນທີ່ມີນາມປາກກາວ່າ ປ. ສາຍນ້ຳງື່ມ

5. ທ້າວ ດົງ ເອົາເມັຽ ຕັ້ງບ້ານເຮືອນຢູ່ບ້ານໄຮ່

4. ຈານ ໂງ່ນ ພໍ່ ນາງໄຄສີ ແລະ ທ້າວ ໃຈ

5. ຈານ ພວງ ພໍ່ ນາງ ເປື່ອງ ທ້າວ ບຸນ ແລະ ນາງ ໝູເມືອງ (ແຕ່ທຳຕົວເປັນຊາຍ)



ນ. ເປື່ອງ ລູກສາວ ທິດພວງ ບ້ານໄຮ່

ອ້າຍນ້ອງປູ່ຈານພິມຍ້າຍມາຕັ້ງບ້ານຢູ່ບ້ານໄຮ່ຫມົດຍົກເວັ້ນແຕ່ປູ່ທິບທາດກັ້ຽງເນື່ອງຈາກວ່າຕ້ອງໄດ້ສືບມູນນັ້ນເອງ.

ເວລາມາຢູ່ບ້ານໄຮ່ແລ້ວປູ່ຈານພິມກໍມີລູກຕົນເອງຢູ່ຫລາຍຄົນ ເຊັ່ນ:

5.3.ການເຕີບໃຫຍ່ຂອງຄອບຄົວປູ່ຈານພິມ



ຮູບປູ່ຈານພິມ

ຮູບລູກຊາຍຂອງປຸ່ຈານພິມນັບຊາຍໄປຫາຂວາ

1. ທິດ ເບົາ, 2. ທິດ ນວນ, 3. ທິດ ພັນ, 4. ທ່ານບົວລິນ, 5, ທິດ ປິ່ນ, ທ່ານ ບຸນທຽມ



ນາງ ທອນ (ແມ່ຕູ້ດອນ) ລູກສາວດຽວຂອງ ປູ່ຈານພິມ

1. ທິດ ນວນ ຫລື ລຸງເກດເອີ້ນຕາມຊື່ລູກຊາຍກົກຂອງເພິ່ນ.
2. ທິດ ພັນ ຫລື ລຸງກອງສີ ເອີ້ນຕາມຊື່ລູກຊາຍກົກຂອງເພິ່ນ.
3. ທ່ານ ບົວລິນ ຫລື ອາວພໍ່ຫູເອີ້ນຕາມຊື່ລູກຊາຍກົກ (ໄປເອົາ ເມັຽດົງບັງ/ຕັ້ງບ້ານເຮືອນຢູ່ດົງບັງ)
4. ທິດ ປິ່ນ ຫລື ອາວພໍ່ແນວດີ ເອີ້ນຕາມຊື່ລູກສາວກົກ (ໄປເອົາ

ເມັຽຢູ່ພະທາວ/ຕັ້ງບ້ານເຮືອນຢູ່ບ້ານພະທາວ)

5. ນາງ ທອນ ຫລື ຕູ້ດອນເອີ້ນຕາມຊື່ລູກຊາຍກົກ. ຕັ້ງບ້ານເຮືອນ ຢູ່ ບ້ານໄຮ່
6. ທ້າວ ບຸນທຽມ ເປັນຂ້າຣາຊການພາສີອາກອນໃນສມັຍນັ້ນເປັນ ເວລາ 20 ປີ ປະຈຸບັນຕັ້ງກຸ່ມການຢູ່ປະເທດອົດສະຕາລີ ຢູ່ລັດ Sydney ເມືອງ Liverpool.

5.3.1. ຊີວິດໄວໜຸ່ມ ແລະ ແຕ່ງງານຂອງປູ່ຈານພິມ

ປູ່ຈານພິມກໍເປັນລູກຊາວນາທຳມະດາຄົນນຶ່ງ ທີ່ຕ້ອງອາໃສເຫື່ອແຮງ ແລະ ຄວາມຊຳນານໃນການຫາກິນແບບຊາວນາ ຕາມຊົນນະບົດຄືກັນກັບ ຊາວນາຄົນອື່ນໆ ໃນປະເທດລາວ. ຫາກແຕ່ວ່າປູ່ຈານພິມເປັນຄົນທີ່ຊ່າງ ຄິດແລະມີຄວາມຊື່ສັດ, ຈິດໃຈກ້ວາງຂວາງ, ຮັກຄວາມສາມັກຄີ, ສຳຄັນ ກ່ວາໝູ່ ແມ່ນມີລັກຊະນະເປັນຜູ້ນຳຊຸມຊົນໄດ້ດີ. ໃນໄວໜຸ່ມປູ່ຕ້ອງໄດ້ ບວດເປັນພຣະ ແລະ ສຶກສາຮ່ຳຮຽນໃນວັດຈົນເກີງເປັນອ້າຍຈານ ຊຶ່ງກໍ ແມ່ນລະດັບສູງສົມຄວນໃນສມັຍນັ້ນ. ສາວໆໃນສມັຍນັ້ນ ກໍມີຄວາມໃຝ່ຝັນ ຢາກໄດ້ຜົວ ຜູ້ທີ່ເປັນອ້າຍທິດອ້າຍຈານກັນທັງນັ້ນ. ປູ່ຈານພິມເມື່ອສິກ ຂາອອກມາຈາກວັດ ກໍໄດ້ໃຊ້ຊີວິດຕາມແບບຊາວບ້ານທຳມະດາ ແບບໄວ ໜຸ່ມທົ່ວໄປ. ປູ່ໄດ້ຊອກຫາຄູ່ຄອງໄປຕາມຂົງເຂດ ທີ່ສາມາດໄປມາຫາ ສູ່ໄດ້ພໍໄປເກີງບ້ານບຸ່ງພ້າວຊຶ່ງປະຈຸບັນກໍແມ່ນບ້ານບຸ່ງພ້າວຕາມເດີມໄດ້ຕິດ ອົກຕິດໃຈກັບສາວບຸ່ງພ້າວທີ່ໃຜໆ ກໍຍ້ອງວ່າງາມແທ້ໆໃນ 40 - 50 ປີ ຍ້ອນຫລັງໄດ້ມີນັກແຕ່ງເພັງຄົນນຶ່ງໄດ້ແຕ່ງເພັງ ***'ບຸ່ງພ້າວສາວງາມ'*** ປະຈຸ ບັນກໍຍັງມີນັກຮ້ອງ ນຳມາຮ້ອງໃຫມ່ຢູ່. ປູ່ຈານພິມໄດ້ຕັດສິນໃຈແຕ່ງງານ ຢູ່ທີ່ນັ້ນ. ເມື່ອແຕ່ງງານຢູ່ຮ່ວມກັນໄດ້ລູກຫນຶ່ງຄົນທີ່ມີຊື່ວ່າ ທ.ສຸກ ປູ່ຈານ ພິມກໍໄດ້ມີພະຍາດບຽດບຽນ ຄືມີອາການເຈັບປ່ວຍຊຶ່ງບໍ່ມີເວລາທີ່ປິ່ນປົວ ໃຫ້ຫາຍຂາດໄດ້ ເນື່ອງຈາກດິນຟ້າອາກາດໃນເຂດນັ້ນ ບໍ່ຖືກກັບສຸຂພາບ

ຂອງຕົນເອງ. ປູ່ກໍໄດ້ຊັກຊວນອວນເອົາເມັຽຕົນເອງກັບຄືນມາບ້ານເກີດຂອງຕົນເອງແຕ່ຜູ້ເປັນເມັຽບໍ່ສາມາດໜີຈາກພໍ່ແມ່ໄດ້ ຈຶ່ງເປັນເຫດໃຫ້ປູ່ຕ້ອງໄດ້ກັບຄືນມາບ້ານເກີດຂອງຕົນເອງໂດຍລຳພັງ. ວັນເວລາຜ່ານໄປສຸຂພາບຂອງປູ່ຈານພິມກໍດີຂື້ນຄິດຢາກກັບຄືນໄປຫາ ລູກເມັຽກໍກົວວ່າອາດຈະເຈັບໄຂຄືນອີກຈຶ່ງຕັດສິນໃຈບໍ່ກັບຄືນຫາລູກເມັຽ ແລະ ຢູ່ເປັນໂສດໃນບ້ານຂອງຕົນຕໍ່ໄປ. ວັນເວລາຜ່ານໄປຈິດໃຈທັງສອງຝ່າຍ ກໍໄດ້ປ່ຽນໄປເໝືອນດັ່ງສຸພາສິດກ່າວໄວ້ວ່າ *'ໄກຕາແລ້ວກໍໄກໃຈ'* ນີ້ຈະກືວ່າເພິ່ນປະຮ້າງກັນກໍບໍ່ແມ່ນ ເພິ່ນແຍກທາງຊີວິດກັນ ໂດຍບໍ່ມີຄວາມຜິດກ້ອງຕ້ອງກຽງກັນແຕ່ປະການໃດ. ເມື່ອເປັນດັ່ງນີ້ແລ້ວແຕ່ລະຝ່າຍ ກໍໄດ້ເລືອກທາງເດີນໃຫມ່ໂດຍຊອກຄູ່ຄອງ ໃຫມ່ແລ້ວແຕ່ງງານເປັນຄັ້ງທີສອງ ໃນຊີວິດ. ດ້ານປູ່ຈານພິມກໍໄດ້ພົບພໍ້ ແລະ ມັກຮັກກັບຍ່າສົມຊຶ່ງເປັນສາວນ້ອຍຢູ່ບ້ານຫາດກ້ຽງແລ້ວຕັດສິນໃຈແຕ່ງງານຮ່ວມຊີວິດດ້ວຍກັນ. ກ່ອນຈະຍ້າຍຈາກບ້ານຫາດກ້ຽງມາຕັ້ງບ້ານເຮືອນຢູ່ບ້ານໄຮ່ປູ່ຈານພິມ ແລະ ຍ່າສົມໄດ້ລູກແລ້ວ 2 ຄົນ ຄື ທິດບວນ ແລະ ທິດພັນທັງສອງຄົນ ແມ່ນເກີດຢູ່ບ້ານຫາດກ້ຽງ. ພໍຍ້າຍມາຢູ່ບ້ານໄຮ່ເພິ່ນກໍໄດ້ລູກຜູ້ທີ 3 ເປັນຜູ້ຍິງແຕ່ໄດ້ເສັຽຊີວິດແຕ່ຍັງນ້ອຍ. ຕໍ່ມາຜູ້ທີ 4 ແມ່ນທ່ານບົວລີນ ຜູ້ທີ 5 ທິດປິ່ນ, ທີ່ 6 ນາງ ສູນທອນ, ທີ 7 ທ່ານ ບຸນທຽມ, ແລະ ຜູ້ທີ 8 ທ່ານ ອິນໂອ່ ແຕ່ໄດ້ເສັຽຊີວິດແຕ່ອາຍຸຂອງເພິ່ນໄດ້ພຽງ 4 ຂວບ. ສະຫລຸບ ແລ້ວປູ່ຈານພິມ ມີລູກ 9 ຄົນ ແຕ່ມີກັບຍ່າສົມ 8 ຄົນ. ລູກປູ່ຈານ ພິມ ທີ່ມີກັບເມັຽບຸ່ງພ້າວທີ່ຊື່ທິດສຸກໄດ້ແຕ່ງງານກັບສາວບຸ່ງ ພ້າວເອງໄດ້ລູກ ຊາຍໂທນຄົນດຽວຊື່ທ້າວເບົາເວລາທີ່ກຳລັງຂຽນປື້ມ ແລະ ເກັບກຳຂໍ້ມູນຢູ່ນີ້ທິດສຸກຍັງມີຊີວິດ ຢູ່ຊຶ່ງອາຍຸຂອງເພິ່ນໄດ້ປະມານ 90 ປາຍປີ ແຕ່ການຂຽນປື້ມເຫລັ້ມນີ້ຍັງ ບໍ່ທັນໄດ້ພິມເຜີຍແຜ່ ເພິ່ນກໍໄດ້ເສັຽຊີວິດລົງ 2 ອາທິດກ່ອນບຸນປີໃຫມ່ລາວ ປີ ຄ. ສ. 2007. ລຸງທິດສຸກ ຍາມໃດ ກໍຢາກໃຫ້ລູກຫລານທັງ ບ້ານໄຮ່ໄປ ຢ້ຽມຢາມສເມີ. ເວລາເປັນນັກຮຽນມັທຍົມ

ລູກຫລານບ້ານໄຮ່ ກໍຫມັ່ນໄປຍາມເພິ່ນ ໃນຍາມມີບຸນສິນກິນທານໃກ້ກັບບ້ານຂອງເພິ່ນເມື່ອເພິ່ນຮູ້ວ່າຫລານມາຈາກບ້ານໄຮ່ລຸງຕ້ອງໃຫ້ກິນເຂົ້າເຊົາເຮືອນບໍາເສັຽກ່ອນ. ລຸງເປັນຜູ້ມີຊື່ສຽງ ແລະ ຊາວບ້ານນັບຫນ້າຖືຕາເປັນພິເສດກືໄດ້ວ່າເປັນຄົນມີປະໂຫຍດຕໍ່ສັງຄົມ ແລະ ສ້າງສິ່ງດີໃຫ້ແກ່ສັງຄົມສເມີ. ສ່ວນລູກກັບຍ່າສົມທີ່ມີຊີວິດຢູ່ຈໍານວນ 6 ຄົນກໍໄດ້ສ້າງຄອບຄົວກັນໄປຫມົດແລ້ວຊຶ່ງຈະໄດ້ເວົ້າເຖິງລະອຽດ ໃນບົດທີ 8.

5.3.2. ການເຕີບໃຫຍ່ຂອງຄອບຄົວລູກຫລານປູ່ຈານພົມ

1. **ຄອບຄົວທິດບວນ** ລູກຊາຍກົກຂອງປູ່ຈານພົມໄດ້ໄປແຕ່ງງານກັບສາວບ້ານ ນາຄູນນ້ອຍ ຊື່ສີດາໄດ້ລູກນໍາກັນ 4 ຄົນ ຄື :

    1. ທ້າວ ເກດ(ຕູ້ເກດບ້ານໂນນທ່າງ່ອນ)
    2. ນາງ ເມກ (ຕັ້ງບ້ານຢູ່ໃກ້ທາງໂຄ້ງຕູ້ດອກ)
    3. ທ້າວລົບ (ໄປຕັ້ງກິ່ນການຢູ່ອາເມລິກາ)
    4. ນາງ ອົບ (ເສັຍຊີວິດແລ້ວ)




ລຸງບົວເກດລູກຊາຍກົກຂອງທິດບວນ ປ້າເມກລູກທິດບວນນ້ອງສາວລຸງບົວເກດ

ທ. ລົບ, ເມັຍຂອງເພິ່ນເສື້ອຂຽວ, ແລະລູກສາວນຸ່ງຊຸດດຳ

24 / VII

ຕົ້ນພ້າວ ສວນຍາພໍ່ພົນເກົ່າ ມີອາຍຸຫລາຍກວ່າ 60 ປີ
ທີ່ເຫັນເປັນທາງແດງນັ້ນແມ່ນທາງເຂົ້າຫນອງຫລວງ



ແຄມງື່ມຝັ່ງບ້ານໄຮ່ໃນປະຈຸບັນ ບັນທຶກພາບລອດກ້ອງຂົວ

ຕອນທຳອິດທິດນວນໄດ້ຢູ່ບາງຄູນນ້ອຍໃນປີ 1943 ຈຶ່ງຍ້າຍມາຢູ່ບ້ານໄຮ່ ນຳພໍ່. ມາຕັ້ງເຮືອນຢູ່ບ້ານໄຮ່ເຮືອນ ແມ່ພອນໄຊ ໃນປະຈຸບັນ. ຫລັງ ຈາກ ເມັຽຕາຍ ຈຶ່ງໄດ້ມາແຕ່ງງານກັບ ນາງ ບຸດສະດີ ຫລື ຕູ້ເກດຊຶ່ງ ເປັນແມ່ຮ້າງ ຈາກທິດຄຳແພງລູກປູ່ພອງອ້າຍກົກຂອງປູ່ ຈານພິມ. ເມື່ອ ສ້າງ ຄອບຄົວນຳກັນກໍໄດ້ລູກຕື່ມ 2 ຄົນຄື:

1. ທ້າວ ຄູນສີ (ໄປຕັ້ງກິ່ນການຢູ່ປະເທດການາດາໄລຍະນຶ່ງ ແລ້ວກັບຄືນມາຕັ້ງບໍລິສັດນ້ຳດື່ມ ພ້າວຫອມປະຈຸບັນ).
2. ນາງ ບຸນທະວີ (ແມ່ພອນໄຊ ນາຍບ້ານໆໄຮ່ໃນປະຈຸບັນ)

ທ້າວ ຄູນສີ ແລະ ນາງ ບຸນທະວີ ພິມປະສົມ

2. ຄອບຄົວທິດພັນ ຫລື ລຸງກອງສີ ທີ່ຮູ້ກັນທົ່ວໄປຂອງຊາວ ບ້ານໄຮ່.

ທິດພັນ ໄດ້ສົມຣົດກັບ ນາງ ທອງດີ ໄດ້ລູກນຳກັນ 5 ຄົນຄື :

1. ທ້າວກອງສີ ເປັນຂ້າຣາຊການປ່າໄມ້ (ຂຶ້ນໄປປະຈຳການຢູ່ເມືອງຕົ້ນເຜີ້ງແຂວງບໍ່ແກ້ວ ແລະ ໄດ້ສ້າງຄອບຄົວກັບນາງບຸນນຽມຢູ່ພຸ້ນເລີຍເຖິງປະຈຸບັນ)
2. ນາງ ຈູມມະລີ (ຕັ້ງກິ່ນການຢູ່ບ້ານໂພນຄໍ້ຫາດກ້ຽງ)
3. ນາງ ມະນີວັນ (ຕາຍແຕ່ຍັງນ້ອຍໆຕອດ)
4. ທ້າວ ຄຳພັນ ເປັນພະນັກງານ ຫົວໜ້າສູນສົ່ງເສີມພາສາອັງກິດ ຈົບປະລິຍາໂທຈາກອົສຕາລີ (ຕັ້ງກິ່ນການຢູ່ບ້ານສະພັງໝໍ້ວຽງຈັນ)
5. ທ້າວນວນຈັນ (ຕັ້ງກິ່ນການຢູ່ປະເທດການາດາ)

ນ.ຈູມມະລີຕັ້ງບ້ານຢູ່ບ້ານຫາດກ້ຽງ

ທ.ຄຳພັນ ພົມສີປະສົມ ລູກຊາຍທິດພັນ



ນ.ບຸນກັບ, ທ. ນວນຈັນ, ນ.ແອນແຈນລາ, ນ.ລາ ເມັຍນວນຈັນ,
ແລະລູກ ນ. ບຸນກັບເສື້ອດໍາ ແລະ ເສື້ອສີບົວ

ໃນປີ 1962 ນາງທອງດີຜູ້ເປັນເມັຽໄດ້ເສັຽຊີວິດ. ທິດພັນຈຶ່ງມາ ແຕ່ງງານກັບ ນາງ ຫມັ້ນ ຫລືຕູ້ເຄືອວັນ ໄດ້ລູກນໍາກັນ 7 ຄົນຄື :

1. ນາງ ເຄືອວັນ (ຕັ້ງເຮືອນ ຢູ່ບ້ານໂນນທ່າງ່ອນ)
2. ນາງ ບຸນກັບ (ຕັ້ງກິ່ນການຢູ່ປະເທດການາດາ)
3. ທ້າວ ບຸນອູ້ມ (ຕາຍແຕ່ຍັງນ້ອຍ)
4. ທ້າວບຸນອ້ອມພະນັກງານຈົບປະລິຍາໂທຈາກປະເທດ ສະວີເດນ (ອາຈານສອນຢູ່ຄະນະວິສະວະກໍາສາດ/ຄອມພີວເຕີ)
5. ທ້າວບຸນລ້ອມ (ສ້າງຄອບຄົວຢູ່ບ້ານເວີນຄໍາ/ຫາກິນຢູ່ຕລາດທ່າງ່ອນ)
6. ນາງ ຄູນມະນີ ສ້າງຄອບຄົວຢູ່ບ້ານໄຮ່
7. ທ້າວ ບູນລໍ້ ຢູ່ບ້ານໄຮ່

ນາງ ຫມັ້ນ(ຕູ້ເຄືອວັນ)

3. ຄອບຄົວຂອງ ທ່ານ ບົວລິນ

ຫລັງສ້າງຄອບຄົວແລ້ວກໍ່ຕັ້ງບ້ານເຮືອນຢູ່ບ້ານດົງບັງຈົນເຖິງປີ 1968 ຫລັງອາວທຽມນ້ອງຊາຍຂອງ ເພິ່ນສ້າງຄອບຄົວແລ້ວຈຶ່ງໄດ້ ໄປນຳເອົາອ້າຍຍ້າຍມາຢູ່ສວນ ແລະ ນາຂອງເພິ່ນຢູ່ທີ່ບ້ານຫລັກ6 ບ້ານສີວິໄລ ເພື່ອຄວາມປອດໄພທາງດ້ານການເມືອງ. ໃນປະຈຸບັນມີລູກດັ່ງນີ້:

1. ທ້າວ ທູ (ສ້າງຄອບຄົວຢູ່ບ້ານດົງບັງສີບມູນ)
2. ນາງ ຄຳພູ (ສ້າງຄອບຄົວຢູ່ບ້ານສີວິໄລ)
3. ທ້າວ ຍູ້ ພິມສີປະສົມ ເຮັດວຽກກໍ່ສ້າງ ຢູ່ບ້ານສີວິໄລ
4. ທ້າວ ຄຳພົງ (ສ້າງຄອບຄົວຢູ່ບ້ານສີວິໄລ) ເຮັດວຽກຢູ່ກົມວິທະຍຸ
5. ທ້າວ ໃຈ ສ້າງຄອບຄົວຢູ່ດົງບັງ
6. ນາງ. ພອນ ຢູ່ບ້ານສີວິໄລ
7. ນາງ ສອນ ຢູ່ບ້ານສີວິໄລ
8. ທ້າວ ແອ ບ້ານສີວິໄລ
9. ທ້າວ ໂບ້ ພິມສີປະສົມ ບ້ານສີວິໄລ
10. ທ້າວ ວອນ ພິມສີປະສົມ ບ້ານສີວິໄລ
11. ນາງ ນ້ອຍ ບ້ານສີວິໄລ

ທ.ທູ ພິມສີປະສົມ

4. ຄອບຄົວ ທິດ ປິ່ນ

ຕັ້ງບ້ານເຮືອນຢູ່ພະທາວມີລູກດັ່ງນີ້ :

1. ນາງ ແນວດີ (ສ້າງຄອບຄົວຢູ່ບ້ານພະທາວ)
2. ນາງ ນາລີ ພະນັກງານຮຽນຈົບຈາກປະເທດກູບາ(ສ້າງຄອບຄົວຢູ່ບ້ານສີສັງວອນວຽງຈັນ).
3. ທ້າວສີສະຫວັນພະນັກງານຮຽນຈົບຈາກໂຊວຽດ (ຕັ້ງບ້ານເຮືອນຢູ່ໂນນສະຫວ່າງວຽງຈັນ)
4. ທ້າວສີສົມພັນພະນັກງານວິສະວະກອນຂົວທາງ (ຕັ້ງບ້ານເຮືອນຢູ່ສີສັງວອນ)
5. ທ້າວອັ້ງພະນັກງານບໍລິສັດນີວຈິບເຊງ(ຕັ້ງບ້ານເຮືອນຢູ່ສີສັງວອນ)

5. ຄອບຄົວ ນາງ ສູນທອນ ຫລື ຕູ້ດອນ:

ຫລັງແຕ່ງງານກັບທິດບຸນຍັງ (ຕັ້ງບ້ານເຮືອນຢູ່ບ້ານໄຮ່ສົ້ນຂົວ ເບື້ອງຊ້າຍໄປແຕ່ວຽງຈັນ) ມີລູກນຳກັນຄື :

1. ທ້າວແກ້ວອຸດອນ(ຕັ້ງບ້ານເຮືອນຢູ່ບ້ານຫ້ວຍຫົງວຽງຈັນ)
2. ທ້າວ ຄອນສະຫວັນ(ຕັ້ງບ້ານເຮືອນຢູ່ເຫນືອວັດເກົ່າ)
3. ນາງ ມະນີຈັນ (ຕັ້ງບ້ານເຮືອນຢູ່ບ້ານໄຮ່)
4. ນາງ ຄຳພັນ (ຕັ້ງບ້ານເຮືອນຢູ່ບ້ານໄຮ່)
5. ທ້າວ ບຸນປັນ (ຕັ້ງບ້ານເຮືອນຢູ່ບ້ານໄຮ່)
6. ນາງ ຄຳຫມັ້ນ(ຢູ່ບ້ານໄຮ່)
7. ນາງ ບຸນໂຮມ(ຢູ່ບ້ານໄຮ່)

ທ່ານ ແກ້ວອຸດອນ ພົມສີປະສົບ

6. ຄອບຄົວຂອງ ທ່ານ ບຸນທຽມ :

ແຕ່ງງານ ກັບ ນາງ ຄຳຄູນ ສຸວັນນະວົງ ລູກສາວຂອງ ທ່ານ ອຸພົນສຸວັນນະວົງ ນ້ອງຊາຍຂອງເຈົ້າພຣະຍາຫລວງ ເມືອງຈັນອຸທອງ ສຸວັນນະວົງ ຫນີໄປຕັ້ງກິ່ນການຢູ່ປະເທດອິສຕາລີຫລັງ ຈາກມີການປ່ຽນແປງລະບອບການເມືອງໃນລາວມີລູກນຳກັນດັ່ງນີ້:

1. ນາງ ບຸນປະເສີດ (ໃບບີ້) ແຕ່ງງານກັບຄົນຈີນອິສຕຣາລີໄດ້ລູກນຳກັນສອງຄົນຍິງຫນຶ່ງຊາຍຫນຶ່ງ.
2. ນາງ ຄູນມະນີ (ນີ້ງ) ແຕ່ງງານກັບຄົນລາວອິສຕຣາລີລູກຂອງທ່ານ ດຣ. ຣົມພູ ອຸດົມວິໄລ ອະດີດຣັຖມົນຕຣີກະຊວງສຶກສາທິການຂອງຣາຊອານາຈັກລາວໄດ້ລູກ4ຄົນຍິງສອງຊາຍສອງ.
3. ທ້າວ ທຽມມະໂນ (ໂນ)ແຕ່ງງານກັບສາວຈີນອິສຕຣາລີໄດ້ລູກນຳກັນສອງຄົນ ຍິງຫນຶ່ງຊາຍຫນຶ່ງ.
4. ທ້າວ ໂອເພັດ (ດູ)ແຕ່ງງານກັບ ສາວ ອິສຕຣາລີ ຫລື ອອດຊີ ຍັງ ບໍ່ທັນມີລູກເທື່ອ.

ຫລານຕູ້ຈານພົມ ຈາກຊ້າຍໄປຂວາ ທ. ຄຳພັນ, ທ. ດອນ, ທ. ທູ, ທ. ຄູນສີ ຢູ່ເຮືອນຂອງ ທ. ທູ ດົງບັງ

5.4 : ການເຕີບໂຕຂອງຄອບຄົວ ປູ່ທອງ.

1. ທິດ ທິບ ຫລື ອາວ ພໍ່ຕັ້ງ ຫນີໄປຕັ້ງກິ່ນການຢູ່ ອາເມຣິກາ.
2. ທິດ ຂັບ ຫລື ອາວພໍ່ ນັ່ງ ຫນີໄປຕັ້ງກິ່ນການຢູ່ອາເມຣິກາ.
3. ນາງ ນວນແດງ (ແມ່ຫວາດ) ເສັຽຊີວິດແລ້ວຕັ້ງບ້ານເຮືອນຢູ່ບ້ານທາດກ້ຽງ.
4. ທິດ ແສງ ບໍ່ໄດ້ສ້າງຄອບຄົວຢູ່ນໍາຫລານທີ່ເຮືອນເດີມຂອງປູ່ທິບໃນປະຈຸບັນ.
5. ນາງ ແຫງ ຫລື ແມ່ ກໍ່າ ຊຶ່ງ ທ້າວ ກໍ່າອໍາພອນ ລູກຊາຍກົກໄດ້ຫນີໄປຕັ້ງກິ່ນການຢູ່ປະເທດອົສຕຣາລີ ພ້ອມທັງນ້ອງຊາຍ ທ້າວຄໍາກໍຢູ່ອົສຕຣາລີເຊັ່ນດຽວກັນ.
6. ທ້າວ ຊຽງສົມແພງ ຕັ້ງບ້ານເຮືອນຢູ່ບ້ານທາດກ້ຽງ

ລູກເມັຽຜູ້ທີສອງຂອງປູ່ທອງ ຫລື ປູ່ ທິບມີ 2 ຄົນຂ້າງລຸ່ມນີ້:

7. ທ້າວ ກົມ ຕັ້ງກິ່ນການຢູ່ອາເມຣິກາ
8. ທ້າວ ອິ້ມ ຕັ້ງບ້ານເຮືອນຢູ່ບ້ານທາດກ້ຽງ

ລູກແມ່ດຽວກັນກັບສອງຄົນນີ້ແຕ່ແມ່ນພໍ່ຜູ້ໃຫມ່ແລ້ວ

9. ທ້າວ ຊົມ ຕັ້ງບ້ານເຮືອນຢູ່ບ້ານທາດກ້ຽງ

ເຮືອນຂອງປູ່ທິບທີ່ທາດກ້ຽງຊຶ່ງແມ່ນດິນເດີມຂອງຕະກຸນຈານພິມ



ທ. ກ່ຳອຳພອນ ລູກນາງ ແທງ ຫລານ ປູ່ທິບ ທາດກ້ຽງ

ປູ່ທິບ ມີລູກສາວນາງນວນແດງ ແລະ ນາງແທງ ຫລື ແມ່ກ່ຳ ຢູ່ບ້ານທາດກ້ຽງດ້ານຫນ້າວັດໃຕ້ທາດກ້ຽງມີລູກຊື່ ທ້າວກ່ຳ, ທ້າວຄຳ ແລະລູກພົວໃຫມ່ຈຳນວນນຶ່ງ.

5.5. ການເຕີບໂຕຄອບຄົວຂອງປູ່ຄຳຟອງ ຫລື ປູ່ບົວມີດັ່ງນີ້:

1. ທິດບົວ
2. ທິດ ທີ ຫລື ຕູ້ເພັງປະຈຸບັນ ຕູ້ເພັງມີລູກຄື: ທ້າວ ເພັງ ຕັ້ງບ້ານເຮືອນຢູ່ບ້ານໄຮ່ເອງ, ນາງ ຍັງ ຢູ່ບ້ານໄຮ່, ທ້າວຫວັງ ຢູ່ບ້ານໄຮ່, ທ້າວ ມັ່ງເອົາເມັຽຢູ່ບ້ານທາດກ້ຽງ.



ທິດທີ ຫລື ຕູ້ເພັງ ພໍ່ທ້າວເພັງ ລາວທູຫນວກ

3. ທິດ ນວນສີ ຫລື ຕູ້ພຽນບ້ານໄຣ່ໃນປະຈຸບັນມີລູກຄື: ນາງພຽນຕັ້ງບ້ານເຮືອນຢູ່ບ້ານໄຣ່, ນາງ ຫລຽນຄຳ ແຕ່ງງານກັບ ອ້າຍສະຫນອນ ແຕ່ກ່ອນຢູ່ບ້ານໄຣ່ອາຊີບແລ່ນລົດຕັກຊີ ຕໍ່ມາຫລັງ ການປ່ຽນແປງການປົກຄອງຈຶ່ງກາຍມາເປັນເກົ້າແກ່ໂຮງສີປະຈຸບັນ ຕັ້ງບ້ານເຮືອນຢູ່ບ້ານທ່າງ່ອນບ່ອນສາມແຍກໂຮງຫມໍເມືອງໄຊທານີ, ທ້າວ ບຸນຕັ້ງ ປະຈຸບັນຢູ່ອາເມລິກາ, ທ້າວ ບຸນຍືນ, ທ້າວ ຄຳຫລ້າ, ທ້າວ ທະລາ ແລະ ນາງ ແດງ.

ຮູບ ນາງພຽນລູກທິດນວນສີ

5.6. ຄອບຄົວຢ່າທຸມມີນ້ອງສາວຫລ້າຂອງປູ່ຈານພົມ ມີລູກຄື:

1. ທິດ ເອບ ຫລື ຕູ້ໝັ້ນພໍ່ຂອງຕູ້ເຄືອວັນ ລູກທິດເອບມີລູກ: ນາງ ໝັ້ນ, ທ້າວ ເສິກ, ນາງ ປານ, ນາງ ຫວີງ, ນາງ ແບ,ທ. ລົມ, ນາງ ພູວັນ ຢູ່ບ້ານໄຮ່.
2. ທິດ ຫລັກ ບໍ່ມີລູກ
3. ນາງ ບຸນມີ ແມ່ຕູ້ສິງ ມີລູກ: ທ. ສິງ, ນ. ມີ່ງ, ທ. ປິ່ນ ຕັ້ງບ້ານເຮືອນຢູ່ບ້ານໄຮ່
5. ທິດ ແພງສີ ແຕ່ງງານກັບ ນ. ສັງວານ ບໍ່ໄດ້ລູກຈຶ່ງຮ້າງກັນແລ້ວມາແຕ່ງງານກັບແມ່ທອງຊິ່ງມີລູກຕິດມາແຕ່ບ້ານນາຊັບນ້ຳກ້ຽງ

5.7.ຄອບຄົວອ້າຍນ້ອງຂອງຍ່າສົມ

ຫລັງຈາກທີ່ປູ່ຈານພົມເອົາເມັຽຢູ່ບ້ານພຸງພ້າວແລ້ວໄດ້ລູກ1 ຄົນ ຊື່ ທິດສຸກ ຫລື ລຸງພໍ່ເປົາ (ເອີ້ນຕາມຊື່ລູກ) ແຍກກັບເມັຽແລ້ວມາເອົາກັບຍ່າສົມຊຶ່ງເປັນຄົນບ້ານຫາດກ້ຽງ. ຍ່າສົມກໍໄດ້ຊວນເອົາອ້າຍນ້ອງຕົນເອງມາຕັ້ງບ້ານຢູ່ບ້ານໄຮ່ນຳກັນຊຶ່ງມີຊື່ດັ່ງນີ້:

1. **ຍ່າສົມ** ເມັຽຂອງ ປູ່ ຈານພົມ

2. **ທິດກອງມີ** ມີລູກນຳກັນຄື: ທ້າວເກດ (ອາແມ່ວົງ) ໄປເຮັດການປະຕິວັດປະຈຸບັນຕັ້ງ ບ້ານເຮືອນຢູ່ໂພນຕ້ອງວຽງຈັນ, ນາງແວ່ນຕັ້ງບ້ານຢູ່ສີສັງວອນວຽງຈັນ, ຈານສົມຕັ້ງບ້ານເຮືອນຢູ່ທ່າດິນແດງ. ທິດກອງມີ ແລະ ເມັຽໄດ້ເສັຽຊີວິດ ທັງສອງຜົວເມັຽແຕ່ລູກຍັງນ້ອຍ. ດ້ວຍເຫດນັ້ນພວກລູກເຕົ້າພີ່ນ້ອງຈຶ່ງໄດ້ເອົາໄປລ້ຽງ. ຍ່າສົມກໍເອົານາງແວ່ນ (ແມ່ວົງ) ມາລ້ຽງເປັນຄູ່ກັບຕູ້ອາແມ່ດອນປີ້ຈົນເປັນສາວ ແລະ ມີຄອບຄົວ.

3. **ທິດດວງ**ແຕ່ງງານກັບຕູ້ສຸກພິລາມີລູກ: 1.ນາງທອງມີຫລືຕູ້ເພືອງຕູ້ທອງມີ ມີລູກຊື່: ເອື້ອຍເພືອງຕັ້ງບ້ານເຮືອນຢູ່ຮົງກົງ, ເອື້ອຍຮອງປະຈຸບັນຕັ້ງບ້ານເຮືອນຢູ່ບ້ານໂນນທ່າງ່ອນ, ນາງ ໄລ ຕັ້ງກິ້ນການຢູ່ໄທ, ທ້າວສີ, ທ້າວຕຸ້ຍ, ທ້າວດອນ ຕັ້ງກິ້ນການຢູ່ບ້ານໂນນທ່າງ່ອນ. 2. ແມ່ຕູ້

ຫລຽນ ຫລື ນາງສາຕີ ມີລູກຄື: ນາງຫລ່ຽນຕັ້ງບ້ານຢູ່ທ່າງ່ອນ, ທ້າວ ທຽນໄຊ ຕັ້ງບ້ານເຮືອນຢູ່ບ້ານໄຮ່, ນາງລ່ຽນ ຕັ້ງກິ່ນການຢູ່ອາເມລິກາ, ນາງ ແດງ ຢູ່ບ້ານໄຮ່, ນາງ ດຳ ຕັ້ງບ້ານເຮືອນຢູ່ບ້ານໄຮ່. ນ້ອງສາວ ຂອງຕູ້ສຸກພີລາກໍໄດ້ມາຢູ່ບ້ານໄຮ່ນຳກັບຊື່ ບ. ທອງສີ ຫລື ແມ່ຄຳ ມີລູກຄື: ນາງຄຳ, ທ້າວເງິນ, ນາງ ວຽງໄຊ, ນາງແຕວ ແລະ ອື່ນໆ ຕັ້ງກິ່ນການຢູ່ ອາເມລິກາ.

ຕູ້ ເພືອງ

ເອື້ອຍ ຮອງ (ລູກຕູ້ເພືອງ)



ທ່ານ ທຽນໄຊ(ຫລື ທຽນ) ຢູ່ບ້ານໄຮ່

ຕູ້ ບັນ ຕູ້ ບິດລູກສາວດຽວຂອງຍ່າຫລ້າ

ຕູ້ທິດດວງໄດ້ຮ້າງກັບຕູ້ສຸກພີລາແລ້ວແຕ່ງງານເທື່ອທີສອງກັບຕູ້ພັນ ແຕ່ບໍ່ມີລູກນຳກັນແລ້ວເອົາອາວບຸນທຽມໄປລ້ຽງແຕ່ໃນທີ່ສຸດອາວກໍ ກັບມາຫາພໍ່ແມ່ຄືເກົ່າ.

4. **ທິດ ເພືອ** (ພໍ່ຂອງຕູ້ພອຍເອີ້ນຕາມຊື່ລູກຂອງເພິ່ນຊຶ່ງມີລູກຄື:

ປ້າພອຍ, ປ້າຜ່ອຍ, ນາງ ຮວດ, ນາງ ບຸນມາ, ນາງນາງ).



ປ້າບຸນມາ ລູກທິດເພືອ

ທ. ພຸດ (ເສື້ອດຳ) ລູກຕູ້ບັນ

5. **ສາວ ຫລ້າ** (ແມ່ຂອງສາວບົດ ຫລືຕູ້ບັນ) ຕູ້ບັນມີລູກຄື: ທ້າວບັນເອົາເມັຽຢູ່ສີຊຽງໃຫມ່ປະເທດໄທ, ທ້າວ ກໍລະກັນ ຢູ່ໄທເຊັ່ນກັນ, ທ້າວເພັດຕັ້ງບ້ານເຮືອນຢູ່ບ້ານໂນນທ່າງ່ອນ, ທ້າວ ພຸດ ຕັ້ງກິ່ນການຢູ່ອາເມຣິກາ, ທ້າວ ຫມຸດ, ທ້າວ ຫມືອງ...) ຕັ້ງກິ່ນການຢູ່ບ້ານໄຮ່. ທັງຫມົດທີ່ກ່າວມາຂ້າງເທິງນັ້ນ ແມ່ນຕົ້ນຕະກຸນທີ່ພາກັນມາສ້າງບ້ານໄຮ່ຊຶ່ງພວກເຮົາມີຢູ່ໃນປະຈຸບັນຫາກຜູ້ໃດສົນໃຈ ຢາກຮູ້ວ່າໃຜເປັນມາແນວໃດກໍສາມາດສືບສາວຫາກັນໄດ້ນຳຕະກຸນທີ່ກ່າວມາຂ້າງເທິງນີ້.

5.8.ຕະກຸນທີ່ຍ້າຍເຂົ້າມາສົມທົບຕາມພາຍຫລັງມີ:

5.8.1. ຕະກຸນຂອງ ປູ່ ທິດ ສີງ ແລະ ຍ່າ ແນມ

ປູ່ແລະຍ່າມາຈາກສາກົນນະຄອນຊຶ່ງແຕ່ກ່ອນເປັນປະເທດດຽວກັນຢູ່ໃຕ້ອຳນາດການປົກຄອງຂອງລາວ ໂດຍເຊື້ອຊາດ ແລ້ວຄົນຢູ່ພາກອີສານຂອງປະເທດໄທໃນປະຈຸບັນ ກໍແມ່ນຄົນລາວກົນເຂົ້າຫນຽວເປົ່າແຄນທັງນັ້ນ. ແຕ່ຍ້ອນການປ່ຽນແປງຂອງເຫດການປະຫວັດສາດ ເຂົາເຈົ້າ

ຈຶ່ງກາຍມາເປັນປະຊາຊົນໄທໃນປະຈຸບັນ ແຕ່ຄວາມເປັນຄົນລາວ ຂອງເຂົາເຈົ້າຍັງຍັ້ງຍືນໄດ້ຕາມນິຍາມ ຂອງນັກປາດລາວໂບຮານວ່າ (ຄົນລາວແມ່ນຊຸມຊົນທີ່ປຸກເຮືອນສູງ, ຢູ່ຕາມແຄມນໍ້າ, ກິນເຂົ້າໜຽວເປົ່າແຄນ) ແລະ ຄຳສອນຂອງເກົ້າແກ່ໂບຮານທີ່ວ່າ (ພາສາບອກເຊື້ອຊາດ, ມາລະຍາບອກຕະກຸນ). ດ້ວຍຄວາມທີ່ຍັງຢາກເປັນຄົນລາວ ຢູ່ໃນສາຍເລືອດປູ່ທິດສີງ ແລະ ຍ່າແນມຈຶ່ງຍ້າຍຄອບຄົວມາຢູ່ຝາກນໍ້າຂອງເບື້ອງລາວ. ໂດຍທຳອິດແມ່ນມາຢູ່ສີເມືອງ ແລ້ວຈຶ່ງຍ້າຍໄປຢູ່ບ້ານໄຮ່ທ່າງ່ອນໃນປະຈຸບັນ. ຄອບຄົວປູ່ທິດສີງ ແລະ ຍ່າແນມມີລູກດັ່ງນີ້:

1. ແມ່ຕູ້ ຈັນທາ ຫລື ແມ່ຕູ້ປານເອີ້ນຕາມຊື່ຂອງລູກສາວຕັ້ງບ້ານ ເຮືອນຢູ່ບ້ານນ້ອຍນາໄຊ. ມີລູກຊື່: ນ. ປານ, ນ. ສັງວານ, ນ. ທົ້ງ, ທ. ສາຄອນ, ທ. ພອນ ຕັ້ງກິ່ນການຢູ່ອາເມລິກາ.
2. ທິດ ຄຳພາ (ເສັຽຊີວິດແລ້ວ) ຕັ້ງບ້ານເຮືອນຢູ່ບ້ານນ້ອຍນາໄຊວຽງຈັນ.ມີລູກຊື່: ນາງ ກັນທາ ຢູ່ບ້ານນ້ອຍ ນາໄຊ, ນາງ ສາລີ ຕັ້ງກິ່ນການຢູ່ອາເມລິກາ ແລະ ລູກເມັຽທີ ສອງ ມີ ທ້າວພູມີ , ທ້າວຈັນສີ ຕັ້ງບ້ານເຮືອນຢູ່ ບ້ານ ນ້ອຍ ນາໄຊ ວຽງຈັນ ແລະ ທ້າວ ວັນຕັ້ງກິ່ນການຢູ່ອາເມລິກາ.
3. ແມ່ຕູ້ ດວງຕາ ຫລື ແມ່ຕູ້ຫອມເອີ້ນຕາມຊື່ລູກຕັ້ງບ້ານເຮືອນຢູ່ບ້ານ ໄຮ່. ມີລູກຄື:
   - ທ້າວຫອມ ມ້າວປະເສີດ ຕັ້ງບ້ານຢູ່ທ່າງ່ອນ. (ເສັຍຊີ ວິດແລ້ວ)
   - ທ້າວ ຂັນ ມ້າວປະເສີດ ຢູ່ບ້ານໄຮ່ (ເສັຍຊີວິດແລ້ວ)
   - ທ້າວ ຊ່ວງ ມ້າວປະເສີດ ຢູ່ບ້ານໄຮ່
   - ທ້າວ ຄຳຫລ້າ ມ້າວປະເສີດ ຢູ່ ບ້ານໄຮ່ (ເສັຍຊີວິດແລ້ວ).
4. ແມ່ຕູ້ ບຸບຜາ ຫລື ແມ່ຕູ້ຫມຸດນາໄຊ ຕັ້ງບ້ານເຮືອນຢູ່ບ້ານນາໄຊ ແຕ່ງງານກັບ ພໍ່ຕູ້ສີທັດ ເຈົ້າພຣະສີ ໄດ້ລູກນຳກັນດັ່ງນີ້:
   - ທ້າວ ຈັນສະຫມຸດ ເຈົ້າພຣະສີ ຕັ້ງກິ່ນການຢູ່ອາເມລິກາ(ເສັຍຊີ

ວິດແລ້ວ)

- ນາງ ພຸດທະ ເຈົ້າພຣະສີຕັ້ງກິ່ນການຢູ່ ປະເທດອົດສະຕາລີ
- ທ້າວ ບຸນມາ ເຈົ້າພຣະສີ ຕັ້ງກິ່ນການຢູ່ປະເທດອົດສະຕາລີ
- ທ້າວ ຄຳພາ ເຈົ້າພຣະສີ ຕັ້ງກິ່ນການຢູ່ປະເທດຝຣັ່ງເສດ
- ນາງ ບົວລາ ເຈົ້າພຣະສີ ຕັ້ງກິ່ນການຢູ່ປະເທດ ອາເມລິກາ
- ນາງ ປະທຸມມາ ເຈົ້າພຣະສີ ຕັ້ງກິ່ນການຢູ່ບ້ານນາໄຊວຽງຈັນ
- ນາງ ດວງຕາ ເຈົ້າພຣະສີ ຕັ້ງກິ່ນການຢູ່ປະເທດຝຣັ່ງເສດ
- ນາງ ວິລາ ເຈົ້າພຣະສີ ຕັ້ງກິ່ນການຢູ່ປະເທດອົດສະຕາລີ
- ນາງ ວີໄລ ເຈົ້າພຣະສີ ຕັ້ງກິ່ນການຢູ່ປະເທດອົດສະຕາລີ

5. ຕູ້ ທອງດາ ແກ້ວມຸງຄຸນ ຫລື ຕູ້ພຸຍ ທ່າງ່ອນ ແຕ່ງງານກັບຕູ້ ບົວຄຳ ມີລູກນຳກັນດັ່ງນີ້:

- ນາງ ພຸຍ ຕັ້ງກິ່ນການຢູ່ບ້ານທ່າງ່ອນ
- ທ້າວ ສົມພາຍ ຕັ້ງກິ່ນການຢູ່ ອາເມລິກາ
- ທ້າວ ສົມຫມາຍ ຕັ້ງກິ່ນການຢູ່ ອາເມລິກາ
- ທ້າວ ສາຍຄຳ ຕັ້ງກິ່ນການ ຢູ່ ບ້ານໂພນທັນ ວຽງຈັນ
- ທ້າວ ຈຳປາແດງ ແກ້ວມຸງຄຸນ ວິສະວະກອນຂົວທາງ ຕັ້ງກິ່ນການຢູ່ປະເທດ ອົດສະຕາລີ ເຮັດວຽກເປັນຫົວຫນ້າຂົວທາງຂອງເມືອງ Sydney Australia
- ທ້າວ ແສງລິເດດ ວິສະວະກອນຊົນລະປະທານ ຕັ້ງກິ່ນການຢູ່ບ້ານ ໂຄກນິນວຽງຈັນ.
- ນາງ ເພັດພະຈັນ ຕັ້ງກິ່ນການ ຢູ່ບ້ານທ່າງ່ອນ
- ນາງ ສະຫວັນນາລີ ຕັ້ງກິ່ນການຢູ່ປະເທດອົດສະຕາລີ.

6. ນາງ ທອງດີ ແຕ່ງງານກັບ ທິດພັນ ລູກ ປູ່ຈານພິມໄດ້ລູກນຳກັນ ດັ່ງທີ່ໄດ້ເວົ້າຢູ່ໃນຄອບຄົວຂອງປູ່ຈານພິມ.

5.8.2.ຕະກຸນຕູ້ກາບ:

ຕູ້ກາບເອີ້ນຕາມຊື່ລູກສາວຂອງລາວ. ຕູ້ກາບໄດ້ຍ້າຍກົ່ນກວນ ຈາກທາດຖຸພະນົມ ຊຶ່ງເປັນປະເທດໄທໃນປະຈຸບັນ ແຕ່ກ່ອນນັ້ນເປັນລາວອັນດຽວກັນຍ້ອນຄວາມຢາກຮັກສາຊາດຕະກຸນລາວ ຂອງຕົນເອງຕູ້ກາບພາລູກຍ້າຍມາຢູ່ບ້ານໄຮ່ ຕູ້ກາບມີລູກທັງໝົດ 7 ຄົນຊຶ່ງ:

1. ນ. ກາບ ບໍ່ມີລູກ
2. ນ. ດອນ ມີລູກ ທ. ພອນ ແລະ ນາງ ສູນທອນ
3. ນ. ຈວນ (ຕ)
4. ນ. ຣວນ ຫລື ແມ່ໄຄສີເອົາກັບທິດໂງ່ນ ມີ ລູກນຳກັນ ຄື: ນາງໄຄສີ ແລະ ທ້າວໃຈ ຕັ້ງບ້ານເຮືອນຢູ່ບ້ານໄຮ່.
5. ທິດ ກິດພໍ່ເຕີບມີລູກ ທ້າວ ເຕີບ, ນາງ ເວີນ, ນ. ຄຳພູ, ນ. ແສງ, ນ. ລອນ, ທ. ພູທອນ, ທ. ຂຽດ ຢູ່ບ້ານໄຮ່
6. ທ. ຫນິດ ພໍ່ລ້ຽງມີລູກຄື: ທ້າວລ້ຽງ, ນາງ ສວນ, ທ້າວ ສາຍທອງ, ນ. ແກ່ນ, ທ. ແຫວນ, ທ. ຄຳແສນ ຢູ່ອາເມລິກາ.
7. ທ. ໂຄມລິດ (ເສັຽຊີວິດ ແຕ່ນ້ອຍ)
8. ທ. ສີນວນ ຫລື ພໍດົມແຕ່ງງານກັບນາງ ສົມຈັນໄດ້ລູກ ທ. ດົມ, ທ. ເອັ້ງ, ທ. ສ່ວນ, ທ. ອວນ, ນ. ມ່ວນ, ນ. ວົງ, ທ.ພູວົງ



ທ້າວ ເຕີບ ແລະ ພັນລະຍາ

9. ຕູ້ແຈ່ມ ຫລື ແມ່ ແກຸນ ມີລູກ ທ. ແກຸນ, ບ. ຈັນເພັງ, ທ້າວ ຄຳຫລີງ, ບ. ແສງມະນີ ຢູ່ບ້ານໄຮ່.
10. ເອື້ອຍ ແບນ ແມ່ຂອງ ທ. ສົມເພັດ, ທ. ສຸທວັດ, ບ. ໜຸພັດ, ທ. ສັນທັດ, ບ. ກູດແກ້ວ, ບ. ໜູນາ

5.8.3.ຕະກຸນທີຄອບຄົວຕູ້ປັງແລະຕູ້ບາລີມີລູກຄື:

ແມ່ຕູ້ ບາລີ ຫລື ຕູ້ຈອດ ຜູ້ສາບຕັ່ງຫວາຍ

ຕູ້ບາລີຫລືຕູ້ຈອດມີລູກຄື:

1. ບາງ ບາລີ ຕັ້ງບ້ານເຮືອນຢູ່ຫນອງເຂັງ
2. ບາງ ອິ້ມ (ເສັຍຊີວິດແລ້ວ)
3. ທ້າວ ຊຽງ ຕັ້ງບ້ານເຮືອນຢູ່ບ້ານໄຮ່
4. ທ້າວ ດາວເຮືອງ ຕັ້ງບ້ານເຮືອນບ້ານໄຮ່
5. ທ້າວ ບຸນລ້ຽງ ຕັ້ງບ້ານເຮືອນຢູ່ບ້ານໄຮ່
6. ທ້າວ ດວງດີ ຕັ້ງກິ່ນກາບຢູ່ອາເມລິກາ.

ຕູ້ບາລີ ແຕ່ງງານກັບທິດປັງຊຶ່ງເປັນຄົນກິນຢາຜີ່ນໄດ້ລູກຄື : ບ. ບາລີ, ບ. ອິ້ມ, ທ. ຊຽງ ຫລັງທິດປັງຕາຍ ຈຶ່ງໄດ້ແຕ່ງງານ ກັບ ທ. ເພືອງປູດ ***(ເພາະລາວເປັນປູດຕາມຕົວຂອງລາວ)*** ຊຶ່ງເປັນບຳເຊື້ອສາຍຂອງລາວ ມີລູກ : ທ້າວ ດາວເຮືອງ, ທ. ບຸນລ້ຽງ, ທ. ດວງດີ. ຕູ້ບາລີມີເອື້ອຍຕູ້ ປ່ຽນຊຶ່ງແຕ່ງງານກັບຕູ້ທັນຂາລ້າຍເວລາ ຍ່າງເປັນເກົ່າເກະເກົ່າເກະ.

ສ່ວນຕູ້ເພືອງປູດມີນ້ອງສາວ ຊື່ ນາງ ໝອງ ເອົາຜົວຄົນຂເມນ ຊຶ່ງໄດ້ ລູກມີ ທ. ລັງ ແລະ ນ. ບັງ

5.8.4. ຕະກຸນຕູ້ຈັນດີ ຫລືຕູ້ຝັນເອີ້ນຕາມຊື່ລູກຂອງເພິ່ນ ມີລູກຄື:

1. ທ້າວ ຝັນ ໄປເປັນທະຫານທີມແລ້ວຕັ້ງກຸ່ນການຢູ່ ຊຽງຂວາງ.
2. ທ້າວ ແກ້ວ ຕັ້ງກຸ່ນການຢູ່ບ້ານໄຮ່
3. ນາງ ຫມີ່ນ ຕັ້ງກຸ່ນການຢູ່ບ້ານເວີນຄໍາ

ຕູ້ຈັນດີກໍແມ່ນຜູ້ນຶ່ງທີ່ມີຊື່ສຽງທາງດ້ານໄຫລເຕົ່າຕາມລໍານ້ຳງື່ມລາວຈະໃຊ້ຊີວິດຂອງລາວ ຕາມລໍານ້ຳທັງວັນ ແລະ ຄືນຕູ້ຈັນດີເປັນຄົນເຕັ້ຽໆ ຕ່ຳໆດໍາໆ ແຕ່ເປັນຄົນໃຈດີມີຫມາກໄມ້ອັນໃດກໍໃຫ້ລູກຫລານໃນບ້ານກິນ. ລູກຫລານຢາກໄດ້ເຄື່ອງຫລີ້ນລາວກໍເຮັດໃຫ້.

5.8.5.ຕະກຸນຄອບຄົວແມ່ເຕີນຕາມຊື່ລູກມີລູກຄື:

1. ທ້າວ ເຕີນ ຕັ້ງບ້ານ ເຮືອນຢູ່ບ້ານ ເກົ້າລ້ຽວວຽງຈັນ
2. ທ້າວ ຊ້າງ ຕັ້ງບ້ານເຮືອນຢູ່ບ້ານໄຮ່

5.8.6.ຕະກຸນຕູ້ຂານຕາມຊື່ລູກ ມີລູກຄື:

1. ທ້າວຂານ ອອກໄປເຮັດການປະຕິວັດແລະເສັຽຊີວິດ(ໄປໃນປີ 1960)
2. ທ້າວ ມາຍ ຕັ້ງກຸ່ນການ ຢູ່ບ້ານໄຮ່
3. ທ້າວ ບີນ ຕັ້ງກຸ່ນການຢູ່ບ້ານໄຮ່

ອ້າຍ ນາຍ ແລະ ພັນລະຍາ

5.8.7.ຕະກຸນຕູ້ແຣແລະຕູ້ບຸ່ນ

ຄອບຄົວຂອງລາວ ແມ່ນຕັ້ງຢູ່ຕໍ່ຫນ້າຫໍບ້ານໄຣ່ໃນປະຈຸບັນ, ແຕ່ວ່າປະຈຸບັນ ລາວໄດ້ເສັຍຊີວິດແລ້ວ ເມັຽຂອງລາວຍ້າຍໄປຢູ່ນຳລູກ ທີ່ບ້ານນາຊາຍ ເມືອງນາຊາຍທອງ. ສ່ວນດິນທີ່ລາວຢູ່ນັ້ນກໍໄດ້ຂາຍ ໃຫ້ພວກນາຍທຶນໄປ ແລ້ວ. ຕູ້ແຣລາວບໍ່ມີລູກຢູ່ນຳ ລາວລ້ຽງຫມາ ແລະ ແມວຕາງລູກຫລານ ຂອງລາວ. ລາວເປັນຫມໍແຄນສ່ວນເມັຍຂອງລາວຕູ້ບຸ່ນ ເປັນພີຟ້ອນ ຊຶ່ງແມ່ນການນັບຖືພີນັ້ນເອງ. ໃນແຕ່ລະປີຈະມີການຈັດງານ ຟ້ອນຮ່ວມ ກັນກັບຜູ້ທີ່ນັບຖືພີຟ້ອນ ຈາກບ້ານໃກ້ຄຽງເປັນປະຈຳ. ຕູ້ແຣ ແລະ ຕູ້ບູ່ນ ມີຫລານຫາງໆ ຄື ນາງ ລົມ ແລະ ນາງ ສົມ ຊຶ່ງຢູ່ບ້ານນາຊາຍນຳກັນ.

5.8.8.ຕະກຸນຕູ້ເຫລືອຂເມນ

ຄອບຄົວນີ້ແມ່ນ ມີຕົ້ນກຳເນີດມາແຕ່ຝັ່ງນ້ຳຂອງ ເບື້ອງໄທຍ້າຍມາຢູ່ວຽງ ຈັນຄຸ້ມໂສກປ່າຫລວງ ແລ້ວຕູ້ເຫລືອແຕ່ງງານກັບຄົນຂເມນທີ່ມາຫາກິນຢູ່ ລາວ. ຕູ້ເຫລືອມີລູກ ທ. ບຸນເຫລືອ ທ. ຄຳພອງ, ນ. ທອງບໍ່, ນ. ຈັນທີ ທັງຫມົດຢູ່ບ້ານໄຣ່.

5.8.9.ຕະກຸນຄອບຄົວອື່ນໆ

ນອກຈາກຕະກຸນທີ່ໄດ້ເລົ່າມາແລ້ວ ຍັງມີອີກຫລາຍຕະກຸນ ແລະ ຄອບຄົວທີ່ໄດ້ເຂົ້າມາຮ່ວມສ້າງສາພັທນາບ້ານໄຮ່ນີ້ຮ່ວມກັບຕະກຸນພົມສີປະສົມ

ເຊັ່ນ:**ຕະກຸນຄອບຄົວຕູ້ພັນ** : ຕູ້ພັນຜູ້ເປັນເມັຽຜູ້ສຸດທ້າຍຂອງ ພໍ່ຕູ້ ທິດ ດວງ (ພໍ່ຕູ້ທອງມີ) ແມ່ຕູ້ພັນນີ້ເພິ່ນເປັນຫມັນບໍ່ມີລູກ. ເພິ່ນໄດ້ຂໍເອົາ ອາວບຸນທຽມນ້າຍ່າສົມໄປລ້ຽງ ເປັນເວລາສອງສາມປີ ພໍອາວບຸນທຽມໃຫຍ່ຮູ້ດຽງສາແລ້ວ ອາຍຸປະມານສີ່ປີດ້ວຍຄວາມຮັກ ແລະ ຄິດເຖິງ ພໍ່ແມ່ຈຶ່ງໄດ້ກັບຄືນມາຫາພໍ່ແມ່ ເຮືອນຂອງຕູ້ທິດດວງຕັ້ງຢູ່ຄົນລະຟາກທາງກັບເຮືອນຕູ້ແມ່ດອນໃນປະຈຸບັນ.

ຕະກຸນຄອບຄົວຕູ້ດົກ : ຕູ້ດົກເປັນເມັຽຕູ້ຊຽງແກ້ວລູກລ້ຽງ ຂອງປູ່ຈານພົມລາວເປັນຄົນບໍ່ມີລູກເຮືອນ ຂອງລາວຕັ້ງຢູ່ແຄມກຸບິນເບື້ອງຊ້າຍຈາກທ່າເຮືອບັກ ຫລືຂົວຂ້າມນ້ຳງື່ມໃນປະຈຸບັນປະມານ 1 ກິໂລແມດ. ລາວມີຕົ້ນຫມາກກ້ຽງຄັ່ງກິນຫວານດີ ໃນເວລານັ້ນຫມົດບ້ານໄຮ່ ໃຜກໍຮູ້ວ່າຫມາກກ້ຽງຄັ່ງຕູ້ແກ້ວແຊບດີຍາມບຸນທ່ໍເຂົ້າ ໃຜກໍຂໍຫມາກກ້ຽງຂອງລາວມາໃສ່ທ່ໍເຂົ້າ.

ຕະກຸນຄອບຄົວພໍ່ຫນູແມ່ຫນູ : ຮ້ອງຕາມຊື່ລູກຂອງເພິ່ນ. ຊື່ລູກຂອງເພິ່ນມີ ນາງ ຫນູ ແລະ ນາງ ສີເວ ເຮືອນຂອງເພິ່ນໃນເວລານັ້ນຢູ່ໃກ້ເຮືອນຕູ້ຫອມ ແລະ ຕູ້ພອງ ຄືເຮືອນ ທ. ຄ່ວງໃນປະຈຸບັນ.

ຕະກຸນຄອບຄົວແມ່ຍືນ : ເອີ້ນຕາມຊື່ລູກຂອງເພິ່ນເຮືອນຂອງ ເພິ່ນຕັ້ງຢູ່ທາງໃຕ້ປະມານ ເຄິ່ງຫລັກກິໂລແມດຈາກຂົວປະຈຸບັນ. ເພິ່ນຍ້າຍໄປຢູ່ບ້ານໄຮ່ເພື່ອຕຽມຈະເຂົ້າຍຶດເອົາວຽງຈັນເມື່ອຍຶດ ແລ້ວເພິ່ນກໍບໍ່ກັບຄືນມາເລີຍ.

ຕະກຸນຄອບຄົວນ້າຈະລຸນ : ນ້າຈະລຸນ ເປັນຄົນມາຈາກໄທກຸງເທບປາກເປັນສຽງໄທກຸງເທບລາວມີສວນກ້ວຍ ສວນພ້າວໃຫຍ່ທີ່ສຸດ ຕັ້ງຢູ່ແຄມທາງຫລວງປະຈຸບັນແມ່ນສວນຕູ້ສອນ.

ຕະກຸນຄອບຄົວຕູ້ດ້ວງ : ຫລື ຕູ້ຫວັດເມັຽຈານບົວແດງບ້ານຂອງລາວຕັ້ງຢູ່ບ່ອນເຮືອນຂອງທ. ດົງໃນປະຈຸບັນ.

ຕະກຸນຄອບຄົວພໍ່ດອກແກ້ວ : ອ້ອງຕາມຊື່ລູກຂອງເພິ່ນຕູ້ດອກ ມີນ້ອງຊາຍຕູ້ຍັງ ແລະ ຕູ້ຟັງ ຕູ້ຍັງກໍ່ແມ່ນຕູ້ດອນນັ້ນເອງພວກ ເພິ່ນຍ້າຍມານຳນ້ອງຊາຍ ຕູ້ບຸນຍັງຜູ້ເປັນເຂີຍຂອງປູ່ຈານພິມນີ້ເອງ.ບ້ານເດີມຂອງເພິ່ນຢູ່ບ້ານ ນາກາງ ທາງບ້ານເກີນ.

ເຈົ້ານາຍວຽງຈັນຮ່ວມສ້າງບ້ານໄຮ່: ນອກຈາກຕະກຸນປູ່ຈານພິມ ແລະ ຕະກຸນອື່ນໆ ມາຮ່ວມສ້າງບ້ານໄຮ່ແລ້ວຍັງມີພວກເຈົ້ານາຍ ວຽງຈັນມາຮ່ວມສ້າງນຳອີກ ດັ່ງພວກເຮົາໄດ້ເຫັນວ່າມີສວນຍາພໍ່ ເຈົ້າເມືອງບົນພໍ່ລ້ຽງທິດພັນຢູ່ຕິດທາງຫຼວງທາງເຂົ້າໄປປ່າຊ້າ ແລະ ຕອນເປັນດິນວັດປະຈຸບັນເຈົ້າເມືອງບົນໄດ້ເອົາໃຫ້ທິດພັນແລ້ວທິດ ພັນໄດ້ໂມທະນາໃຫ້ສ້າງວັດ ເຈົ້າເມືອງບົນໄດ້ມາສ້າງທາງວຽງຈັນ ບ້ານເກີນຊຶ່ງຕາແສງຈານພິມກໍໄດ້ຮ່ວມສ້າງດ້ວຍ, ຄວາມຮັກແພງເຈົ້າເມືອງບົນກັບຕາແສງຈານພິມໃກ້ຊິດໝຽວແໜ້ນທີ່ສຸດພ້ອມທັງ ເຫັນວ່າຈຸດຍຸທສາດທາງເສກກິດ ພ້ອມດິນດຳນ້ຳຊຸ່ມຂອງບ້ານໄຮ່ ເຈົ້າເມືອງບົນຈຶ່ງໄດ້ມາສ້າງສວນປຸກເຮືອນຢູ່ບ້ານໄຮ່ກັບຕາແສງຈານພິມ. ເພິ່ນມີຄວາມຮູ້ທາງດ້ານຮັດສວນ ດັ່ງນັ້ນສວນຂອງເພິ່ນຈຶ່ງ ເປັນລະບຽບດີກວ້າງຂວາງ ມີພືດພັນຕົ້ນໄມ້ກິນໝາກຢ່າງຫຼວງຫຼາຍເປັນກຸ້ມແກວສຸດສາຍຕານີ້, ພ້າວ, ມ່ວງ, ກ້ວຍ ອອ້ຍ,ຕອງ, ນາວ, ເຜືອງ ສົ້ມຂົມຫວານ ແລະ ອີກຫຼາຍໆຢ່າງເປັນພັນດີໆ ທີ່ຊາວບ້ານໄຮ່ບໍ່ເຄີຍມີນອກນັ້ນຍັງມີ ງົວ, ຄວາຍ, ແບ້, ມ້າເຕັມກ້ອງລ່າງມີຄົນເຝົ້າສວນຊື່ລຸງທາຊຶ່ງ ແມ່ນປູ່ຈານພິມເປັນຜູ້ເບິ່ງແຍງນຳຫຼັງຈາກບ້ານເມືອງວຸ້ນວາຍ ເສິກຍີ່ປຸ່ນສົງຄາມໂລກຄັ້ງທີ່ສອງ ເຈົ້າເມືອງ ບົນບໍ່ສາມາດມາຄວບຄຸມ ປະຈຳໄດ້ຈຶ່ງປ່ອຍ ໃຫ້ລຸງທາຜູ້ດຽວເບິ່ງໂຊກບໍ່ເຂົ້າຂ້າງເຮືອນຫຼັງໃຫ່ຍງາມ ກໍຖືກໄຟໄໝ້, ລຸງທາໜີແລ້ວຈຶ່ງມອບສິດໃຫ້ທິດພັນ ແລະ ປູ່ຈານພິມທັງໝົດທຸກຢ່າງ. ນອກຈາກນັ້ນຍັງມີສວນທ່ານ

ອຸປຣາດຢູ່ກາງທາງໄລ້ງທີ່ສອງເຫນືອບ້ານແມ່ຍິນຂື້ນໄປ ແລະ ສວນເຈົ້າ ນາຍອີກຫຼາຍຄົນຊື້ງປະເວ້ໃຫ້ແຕ່ຄົນ ເພົ້າສ່ວນເບິ່ງ ແລະ ຂາຍກິນເພາະ ເຈົ້າຂອງບໍ່ໄດ້ມາໃກ້.ບໍ່ຕ່າງຫຍັງ ກັບສມັຍປີ 1960-1975 ເຈົ້ານາຍ ແລະ ຜູ້ມີເງີນໃນວຽງຈັນລົ່ງກັນ ອອກມາສ້າງໄຮ່ສ້າງສ່ວນ ແລະ ຜູກຄວາມ ຮັກແພງກັບຊາວບ້ານໄຮ່ເຊັ່ນ : ສວນອາຍາສຸວັດ, ສວນອຸ່ນໂຮງ, ສວນ ນາຍພິນສຸນທອນ, ສວນນາຍພິນສັງ, ສວນຍ່າພໍ່ບົງເປັນຕົ້ນ. ກ່ອນ ສົງຄາມຍີ່ປຸ່ນລະຫ່ວາງ 1940 - 1943 ເວລາເຈົ້າເມືອງນິນມາສ້າງ ສວນນັ້ນກໍມີຍາພໍ່ພາງ, ທ່ານວອງ ແລະ ອີກຫຼາຍຄົນ ອອກມາຊ່ວຍ ແລະ ເຮັດນາໝອງຫຼວງນຳປູ່ຈານພົມ ແລະ ພີ່ນ້ອງ. ເພິ່ນມີນາອັນກ້ວາງ ຂວາງຢູ່ທີ່ນັ້ນ. ແຕ່ກ່ອນຍັງໄດ້ເຫັນຮ່າງກຽງນາ ຂອງເພິ່ນເຫຼືອຢູ່ ແລະ ຊາວບ້ານໄຮ່ ຍັງໄດ້ໄປນອນຍາມເຮັດນາຊື່ງກຽງນາ ເພິ່ນຕັ້ງຢູ່ແຄມຈື່ມ ເຂື່ງກັບແກ້ງໄຄ້.

ພາກທີ 6: ຊີວິດດ້ານສັງຄົມຂອງຊາວບ້ານໄຮ່ໃນສມັຍຕົ້ນ:

ໂດຍການເຄື່ອນຍ້າຍ ແລະ ການປະກອບສ້າງຂອງຊາວບ້ານແລ້ວກໍ ຮູ້ວ່າຄົນບ້ານໄຮ່ ລ້ວນແຕ່ແມ່ນອ້າຍນ້ອງຄອບຄົວດຽວກັນ ທີ່ແຕກແມ່ ແພ່ລູກອອກມາເຕີບໃຫຍ່ຂື້ນ. ມັນບໍ່ເປັນການແປກທີ່ຊາວບ້ານໄຮ່ຢູ່ຮ່ວມ ກັນແບບຄົນໃນຄອບຄົວດຽວກັນ ມັກຊ່ວຍເຫລືອຊື່ງກັນ ແລະ ກັນໃນເວ ລາສະມາຊິກ ໃນບ້ານໄດ້ຮັບຄວາມຫຍຸ້ງຍາກ. ຕະກຸນຕົ້ນໆທີ່ມາຕັ້ງບ້ານ ໄຮ່ທັງຫມົດ ກໍແມ່ນສາຍພີ່ສາຍນ້ອງຕະກຸນດຽວກັນ ດັ່ງນັ້ນການຢູ່ຮ່ວມ ກັນຂອງເຂົາເຈົ້າຈື່ງເປັນລັກສະນະຄອບຄົວໃຫ້ຄວາມເຄົາລົບຜູ້ອາວຸໂສ, ຜູ້ເປັນປ້າເປັນລຸງ, ສາຍລຸງສາຍປ້າແມ່ນ ລ້ວນແຕ່ໄດ້ຮັບຄວາມເຄົາ ລົບຈາກຍາດພີ່ນ້ອງທັງຫມົດ. ການມາຢູ່ບ້ານໄຮ່ຂອງ ຕະກຸນປູ່ຈານພົມ ໃນເວລານັ້ນການຈັດຕັ້ງທາງສັງຄົມຍັງ ຂື້ນກັບບ້ານທາດກ້ຽງ. ການຢູ່ ຮ່ວມກັນ ຂອງຊາວບ້ານໄຮ່ແມ່ນແບບ ປະກົມບູຮານເຂົາເຈົ້າຈະຕ້ອງ

ນັບຖືຜູ້ອາວຸໂສ ໂດຍສະເພາະແມ່ນປູ່ຈານພົມ ແລະ ຍ່າສົມເປັນຕົ້ນ. ພີ່ນ້ອງລູກຫຼານຊາວບ້ານ ກໍນັບຖືເພິ່ນເປັນຜູ້ສູງສຸດ ເຖິງຈະມີນາຍບ້ານຕາມການປົກຄອງ ກໍຕາມທາງການມີການພົດຂ້ອງໝອງໃຈກັບພວກເຂົາເຈົ້າກໍເອົາກັນຂຶ້ນມາຫາເຮືອນພໍ່ລຸງແມ່ປ້າໃຫ່ຍນີ້ໂລດ ແທນທີ່ຈະໄປຫາການປົກຄອງກວນບ້ານຕາແສງ. ເຖິງຢ່າງໃດກໍດີຜູ້ທີ່ເປັນນາຍບ້ານສະໄໝນັ້ນກໍແມ່ນອ້າຍນ້ອງລູກຫຼານ ຂອງປູ່ຈານພົມຍ່າສົມນີ້ເອງ. ເທົ່າທີ່ຈື່ໄດ້ກໍຄືຕູ້ທິດດ້ວງນ້ອງຊາຍຍ່າສົມເປັນຢູ່ ໃນຊ່ວງປີ 1940, ທິດພັນພໍ່ຂອງຜູ້ຂຽນນີ້ເອງເປັນຢູ່ຫຼາຍໆປີໃນຊ່ວງປີ 1947. ສະພາບບັນຍາກາດຂອງສັງຄົມໃນສະໄໝນັ້ນກໍ ເປັນແບບບ້ານຊົນນະບົດຂອງລາວທົ່ວໆໄປ. ໃນຍາມກາງຄືນສາມາດໄດ້ຍິນສຽງແຄນສຽງຄຸ່ຍ ຂອງພວກຜູ້ບ່າວໄປລົມສາວ, ໄດ້ຍິນສຽງທ່ອງໜັງສືພູກຂອງສຳມະເນນ ແລະ ຄູບາ, ໄດ້ຍິນສຽງແກ່ງຫລາປັ່ນຫລອດ, ໄດ້ຍິນສຽງຝັດພົມຕໍ່າຫູກ, ໄດ້ຍິນສຽງເຫລົ່ານິທານຂອງຜູ້ເຖົ້າໃຫ້ເດັກນ້ອຍລູກຫລານຟັງ, ແລະ ໄດ້ຍິນສຽງກອນພຍາຂອງບ່າວສາວລົມກັນ ຊຶ່ງຟັງແລ້ວເປັນໜ້າອອນຊອນມ່ວນຫູຢ່າງແທ້ຈິງ. ນອກນີ້, ຍັງສາມາດໄດ້ຍິນສຽງສັດປ່ານາໆຊະນິດຮ້ອງກ່ອມລະງົມຊຶ່ງເຮັດ ໃຫ້ບັນຍາກາດໃນຕອນເດິກ ແລະ ຂ້ອນແຈ້ງນັ້ນເຢືອກເຢັນເປັນຕາຢ້ານ. ດົນໆກໍໄດ້ຍິນສຽງຜູ້ເຖົ້າທີ່ ນອນບໍ່ຫລັບຫມາດຄໍ່ ຫລື ໄອອຶຮືເທື່ອໜຶ່ງ. ເວລາຂ້ອນແຈ້ງຈະໄດ້ຍິນ ສຽງຊາວບ້ານລຸກຫນຶ້ງເຂົ້າ, ຄູບາໄຫວ້ພຣະ, ຈົວນ້ອຍກວດເດີນວັດ ແລະ ສຽງຍ່າງຂອງຊາວບ້ານ ທີ່ອອກໄປຫາກິນຢາມສ້ອນຢາມໄຊ, ຢາມແຮ້ວ ກະທິບກະຕໍ່າ, ຢາມເບັດ ຢາມມອງ ແລະ ອື່ນໆ. ອາກາດເວລາຕອນເຊົ້າ, ຕອນຄໍ່າ, ແລະ ກາງຄືນຈະເຢັນດີ ແລະ ສົດປັສຈາກມົນລະພິດ. ຍາມເຊົ້າຈະໄດ້ຍິນສຽງງົວຄວາຍກັດກິນຫຍ້າເລາະຕາມແຄມຮົ້ວ ແລະ ແຄມທາງມຸ້ງຫນ້າ ໄປສູ່ຫນອງຫລວງ. ບາງເທື່ອ ກໍໄດ້ຍິນສຽງ ເຄາະຄວາຍ ແລະ ສຽງຮ້ອງຂອງງົວຄວາຍປົນກັນໄປ. ບາງເທື່ອກໍໄດ້ຍິນສຽງ ເຈົ້າຂອງຄວາຍໄລ່

ຄວາຍອອກໄປທົ່ງພ້ອມກັບການໄປຢາມແຮ້ວຂອງເຂົາເຈົ້າ. ຕອນຈະ ຄໍ່າກໍໄດ້ຍິນສຽງ ໝູຮ້ອງກິນຮໍາ ແລະ ຄົນເອີ້ນກຸກກຸກເກືອໄກ່ເຂົ້າຫຼັກ. ພໍມືດຊຸ່ມກໍມີແສງກະບອງ ຢູ່ຕາມແຕ່ລະເຮືອນ. ພູມລໍາເນົາທໍາມະຊາດ ບ້ານໄຮ່ສມັຍນັ້ນເປັນບ້ານທີ່ນ້ອຍມີພຽງແຕ່ຊາວກ່ວາຫຼັງຄາເຮືອນ. ດ້ານໃຕ້ຕັ້ງແຕ່ວັດຂຶ້ນມາເຖິງສວນຍາພໍ່ນົບ ທາງແຄມນໍ້າກໍເຖິງວັດເກົ່າ ຕໍ່ໄປກໍແມ່ນຢາຍຫ່າງຂື້ນໄປເຖິງບ້ານນ້າລຸນເຄິ່ງຫລັກໃດຈະມີເຮືອນ ຫຼັງນຶ່ງ. ຊາວບ້ານໄຮ່ ກືສາສນາພຸດເປັນຫລັກ ແລະ ມີການເຊື່ອກືຜີ ເປັນບາງຄອບຄົວທີ່ຍ້າຍ ເຂົ້າຮ່ວມຄະນາຍາດບ້ານໄຮ່ໃຫມ່. ເຂົາເຈົ້າໄດ້ ພາກັນສ້າງວັດຂື້ນ ເພື່ອບໍາເພັນກຸສົນຕາມວິຖີທາງຂອງສາສນາພຸດ. ເຂົາ ເຈົ້າເປັນຄົນຊື່ສັດທ່ຽງທໍາ ຫາກຜູ້ໃດເປັນຄົນບໍ່ຊື່ສັດຫມັກຕົວະຜູ້ອື່ນຊາວ ບ້ານກໍຈະພາກັນກຽດຊັງ ບາງເທື່ອຕ້ອງກືກຂັບໄລ່ອອກຈາກບ້ານ ບໍ່ໃຫ້ຢູ່ ນໍາດັດຂາດ. ເພາະການຢູ່ຮ່ວມກັນໃນເວລານັ້ນ ແມ່ນຂື້ນກັບຄໍາເຫັນ ຂອງຊາວບ້ານສ່ວນໃຫຍ່ທັງໆ ທີ່ເຂົາເຈົ້າບໍ່ຮູ້ປະຊາທິປະໄຕ ສຽງສ່ວນ ໜ້ອຍຂື້ນກັບສຽງສ່ວນຫລາຍ, ແຕ່ຫາກເຮັດໄປໃນທິດທາງ ທີ່ກືກຕ້ອງ. ການເຮັດແນວນີ້ກໍ ຍ້ອນວ່າບໍ່ໃຫ້ມີຄົນບໍ່ດີຢູ່ໃນບ້ານຂອງເຂົາເຈົ້າ. ຫາກ ຜູ້ໃດຄັດຂືນ ເຂົາເຈົ້າຈະພາກັນຂັບໄລ່ ໂດຍມີການຈັບສົ່ງໄປບັງຄັບ ໄປ ໂດຍດີ. ຫາກຜູ້ໃດຍັງດື້ດ້ານບໍ່ປະຕິບັດ ຕາມຈະກືກຈູດເລົ້າເຜົາເຮືອນ ໃນທີ່ສຸດກໍຕ້ອງໄດ້ຫນີໄປຈົນໄດ້. ຊາວບ້ານມີຈິດໃຈສາມັກຄີກັນ. ເຖິງ ຍາມບຸນປະເພນີເຂົາເຈົ້າຈະເຕົ້າໂຮມກັນຢູ່ວັດ ເຮັດພິທີທາງສາສນາພາ ລູກພາຫລານເຂົ້າວັດຟັງທັມ ໃຫ້ຮູ້ຮີດສິບສອງຄອງສິບສີ່ຮີດຍີ່ຄອງຈຽງ. ຍາມບຸນສິບກິນທານເກົ້າແກ່ບ່າວສາວຈະປຸ້ມລຸມກັນຫ້າງຫາສິ່ງແຈກ ຂອງທານເອ້ວັດເອ້ວາເຮັດເຂົ້າປຸ້ນເຂົ້າຕົ້ມເຂົ້າປາດ ແລະ ຫ້າງຫາອາ ຫານການກິນໄວ້ຄໍ້າ (ຕ້ອນຮັບ) ແຂກບ້ານໃກ້ເຮືອນຄຽງຊື່ງ ຍາມມີບຸນ ສິບກິນທານຈັດຂື້ນເຂົາເຈົ້າ ຈະສົ່ງໃບດີກາບຸນໄປໃຫ້. ໃນຍາມບຸນຢູ່ອ້ອມ ຕ້າຍວັດຈະມີພາມຊົ່ວຄາວ ເພື່ອເຮັດໃຫ້ເປັນບ່ອນພັກ ຂອງແຂກບ້ານ

ອື່ນ. ຈະມີການແບ່ງໃຫ້ເປັນເຮືອນຮັບຜິດຊອບເປັນບ້ານ. ບ່າວສາວຈະພາກັນຊອກຫາອາຫານ ໄວ້ຕ້ອນຮັບຊູ້ແຟນ, ໝູ່ຄູ່, ພີ່ນ້ອງບ້ານໃກ. ເຂົາເຈົ້າຈະພາກັນທຳພິທີຟັງທັມເທສນາແຈກທານ ຕາມປະເພນີ ແລະ ໃນເວລາກາງຄືນເຂົາເຈົ້າຈະໄປລົມສາວບ້ານໃກ ຫລື ບ່າວບ້ານໄກລົມສາວກັບບ້ານ. ການໂອ້ລົມຂອງເຂົາເຈົ້າຈະລົມກັນ ເປັນກອນພຍາຊີ່ງເປັນຄຳໂຄງມ່ວນອອນຊອນ ໃຊ້ປຽບເປີຍບໍ່ເວົ້າ ໂດຍກົງເຊັ່ນວ່າຜູ້ບ່າວຢາກລົມສາວ ທີ່ບໍ່ທັນເຫັນໜ້າກັນຈັກເທື່ອ ກໍຈະມັກເລີ່ມດ້ວຍພຍາທີ່ວ່າ: *ອ້າຍນີ້ມາ ຈາກກົ້ວ ບ້ານກຶ້ນຄີນໄກ ໃຈປະສົງບ່ານາງ ຈຶ່ງດ່ວນມາທາງພີ້. . . ໃຈປະສົງຕໍ່ນ້ອງຈຶ່ງໄດ້.* ຄົນສ່ວນຫລາຍຈະມີຄວາມຊື່ສັດເພາະໄດ້ນັບຖືສາດສະໜາພຸດຄົນມັກເຂົ້າວັດຟັງທັມຍາມບຸນຍາມສິນ ກໍພາກັນໄປເຕົ້າໂຮມຢູ່ວັດໃຊ້ເຮືອແຮງວິຊາຊ່າງສີລປະ ທີ່ຮຽນມາຈາກວັດຫລືສືບທອດມາຈາກບັນພະບຸຣຸດຂອງໃຜມັນ. ການເລືອກຄົນດີເປັນຄູ່ຄອງຜູ້ຍິງ ຈະເລືອກຜູ້ຊາຍທີ່ຕື່ນເດິກລຸກເຊົ້າ, ເຮັດວຽກຂຫຍັນຂັນແຂງ, ຮູ້ເຮັດໄຮ່ ໄຖນາ, ຮູ້ສານແຫສານມອງ, ຮູ້ເຮັດຊ້ອນເຮັດໄຊ, ຮູ້ເທສຮູ້ສູດ, ຮູ້ເຂົາຮົບນັບຖືຜູ້ໃຫຍ່, ຮູ້ຕ່ຳຮູ້ສູງ, ຮີດສິບສອງຄອງສິບສີ່ ຮີດຍີ່ຄອງຈຽງ ແລະ ຮູ້ຫາປາລ່າເນື້ອ. ສ່ວນຜູ້ຊາຍຈະເລືອກຜູ້ຍິງ ທີ່ມີຄວາມດຸໝັ່ນຂຍັນພຽນ, ຕື່ນເດິກລຸກເຊົ້າຫນື້ງເຂົ້າເປົ່າໄຟ, ປັດກວາດເຮືອນຊານບ້ານຊ່ອງ, ຮູ້ແຕ່ງຢູ່ຄົວກິນ, ຮູ້ບູຊາເຮືອນຊານ, ຮູ້ຮ້ອຍດອກໄມ້, ພວງມະໄລ, ຫຍິບຫມາກເບັງ, ຮູ້ລ້ຽງມ້ອນ ຊາວໄຫມ, ຮູ້ເກັບປັກທັກ ແສ່ວ, ຮູ້ເກັບຂີດຕ່ຳສິ້ນຕ່ຳແພ ດັ່ງນີ້ເປັນຕົ້ນ. ຜູ້ຍິງຈະບໍ່ມີໂອກາດ ໄດ້ເຂົ້າຮຽນຢູ່ໃນວັດເຫມືອນຜູ້ຊາຍ, ຈະເປັນຄົນກືກຫນັງສືເກືອງ 100% ເຂົາເຈົ້າຈະເອົາດີທາງວຽກຜູ້ຍິງ ເຊັ່ນຍາມກາງຄືນຜູ້ສາວ ຈະມັກເຂັນຝ້າຍຊາວໄຫມຕ່ຳຫູກ ແລະ ຝ່າຍຜູ້ບ່າວກໍເອົາ ຕອກມາຈັກມາເຫລົາຊຸມກັນ ແລະ ໂອ້ລົມກັບຜູ້ໃດມັກໃຜກໍມາຊຸມກັນເຮັດວຽກຈົນເດິກຈົນດຶ່ນຈຶ່ງກັບໄປນອນ. ມັນແມ່ນປະເພນີທີ່ບໍ່ມີການແຂ່ງຂັນ ທາງດ້ານເສກ

ກິດນັ້ນແມ່ນປະເພນີທີ່ຊ່ວຍເຫລືອເກື້ອກູນຊຶ່ງກັນ ແລະ ກັນ. ການທຳການຜລິດກໍມີການເອົາແຮງງານກັນ ຫມາຍຄວາມວ່າຫລາຍຄົນໃນບ້ານມາຊ່ວຍກັນເຮັດຂອງຜູ້ນຶ່ງໃຫ້ແລ້ວຈຶ່ງຍ້າຍໄປເຮັດຂອງຜູ້ນຶ່ງອີກ ແລກປ່ຽນແຮງງານກັນໄປມາ. ວຽກຫນັກຫນາທີ່ເຂົາເຈົ້າມັກເອົາແຮງງານກັນ ມີ: ຕົກກ້າ ໄຖຫຸດນາ, ດຳນາ ກ່ຽວເຂົ້າ,ປ້ຳໄຮ່, ເສັຽຫຍ້າໄຮ່, ຟາດເຂົ້າ, ຂົນເຂົ້າຂຶ້ນເລົ້າ, ແລະ ປຸກເຮືອນ ປຸກຊານ. ຊາວບ້ານຈະປະຕິບັດຕາມຮີດຄອງປະເພນີຕາມຄຳສອນຂອງສາສະຫນາພຸດຕາມຮີດສິບສອງຄອງສິບສີ່. ຢູ່ບ້ານໄຮ່ຈະມີຜູ້ທີ່ມີພອນສະຫວັນຕ່າງໆກັນໄປເຊັ່ນ: ຈຸ້ມ ຕູ້ການແມ່ນເກັ່ງທາງດ້ານລ່າເນື້ອຊີ້ນ ລູກຫລານຂອງລາວກໍມີພໍ່ເຕີນພໍ່ ລ້ຽງກີ່ວ່າແມ່ນຜູ້ລ່າສັດເກັ່ງປະຈຳບ້ານ. ຈຸ້ມຕູ້ທິດດ້ວງ, ຈານຄູຄຳແດງ, ພໍ່ເປືອງ (ທິດພວງ), ພໍ່ໃຄ (ທິດໂງ່ນ) ຈະເກັ່ງທາງດ້ານສີລປະ ແກະສະຫລັກ, ແຕ້ມຮູບຕ່າງໆໄດ້ດີ. ຊ່າງເຮັດເຮືອແມ່ນຕູ້ຂານລູກຫລານຂອງລາວ ແມ່ນອ້າຍຂານ, ອ້າຍ ມາຍ ແລະ ອ້າຍປິນ.

ດ້ານການຫາຢູ່ຫາກິນ:

ໂດຍລວມເສຖກິດ ບ້ານໄຮ່ກໍຄືກັບທົ່ວປະເທດ ເປັນເສຖກິດນ້ອຍພໍກຸ້ມກິນຕົນເອງບໍ່ຄິດຈະທຳການຄ້າຂາຍ ເພື່ອສ້າງລາຍຮັບໃຫ້ໄດ້ຫລາຍໆຈາກການຂາຍສິນຄ້າກັບບ້ານອື່ນໆນັ້ນກໍເປັນແນວຄິດຂອງຄົນລາວໃນຍຸກນັ້ນ. ຊາວບ້ານໄຮ່ເກືອບເວົ້າໄດ້ວ່າສາມາດຫາກິນໄດ້ທຸກແບບ ແລະຄົບຕາມວິຊາຫາກິນໃນສມັຍນັ້ນ.

<u>ການຫາກິນທາງນ້ຳ</u>

ທຸກຄົນຈະມີວິຊາຫາກິນທາງນ້ຳ ທີ່ກຸບັດແຕກຕ່າງກັນໄປ ແຕ່ລະຄົນແຕ່ລະຄອບຄົວມີຄວາມສາມາດສານບານ(*ຄືກັບມອງແຕ່ຕາໃຫຍ່*), ສານໄຫງໃຫຍ່, ເຮັດເບັດນ້ຳເຕົ້າໄຫລ, ແພກະດຸງໃຫຍ່, ເບັດພຽກຂ້າມງື່ມ, ເບັດຈ່ອມຫລືເບັດກ້ອມເກາະ, ເບັດພຽກເລາະຝັ່ງ ຫລື ເບັດເຍືອລອຍ, ກະດຸ້ງນ້ອຍ, ແຫ, ຕຸ້ມລານ, ຕຸ້ມອ່ຽນ, ແຫລມແທງປາ, ແຫລມແທງ

ອ່ຽນ, ສານສ້ອນ, ສານໄຊ, ສານແຫ, ສານເຟືອກ, ເຣັດຕ້ອນ, ເຣັດຫລີ່. ໃນນີ້ຈະເວົ້າເຖິງຜູ້ທີ່ເດັ່ນໃນແຕ່ລະວິຊາຫາກິນທາງກຸບັດຂອງເຂົາເຈົ້າ, ພໍ່ຕູ້ເກດ (ທິດບວບ), ຕູ້ຈັນດີ, ຕູ້ເຟືອງ(ຕຸດ), ຕູ້ຂານ ໄດ້ຊື່ວ່າມີຫນຶ່ງໃນການໄຫລເຕົ້າຕາມລຳນ້ຳງື່ມ. ເວລາກ່ອນນ້ຳງື່ມ ຂຶ້ນໃຫມ່ເຕັມຝັ່ງລະດູເດືອນເກົ້າ-ເດືອນສິບ ລຸງເກດ ແລະ ພວກຄະນະນັກໄຫຼເຕົ້າບ້ານກັບທັງຫຼາຍຈະຕຽມເບັດໄຫລເຕົ້າ ຂອງໃຜລາວຄືເອົາເຮືອມາຈອດຂີ້ຊີ, ປ່ຽນເຊືອກຫວາຍ ແລະ ສາຍເບັດໃຫຍ່ບາງເທື່ອກໍເອົາຕະໃບຝົນເບັດໃຫ້ຄົມ. ຈາກນັ້ນລາວກໍຕຽມ ໄມ້ພາຍເຮືອໄຫລເຕົ້າ ແລະ ກໍຊອກຜູ້ພາຍເຮືອເກັ່ງ ແລະ ໄວເພື່ອຊ່ວຍລາວເວລາປາກິນເບັດ. ເວລານ້ຳຂຶ້ນ ແລະ ຂຸ້ນ ລຸງເກດຈະສັງເກດເອງວ່າມື້ນີ້ປາກິນເຕົ້າ ຫລື ປາຂຶ້ນນັ້ນເອງ, ຄົນອື່ນໂດຍ ທົ່ວໄປຈະເບິ່ງເປັນເລື່ອງທຳມະດາ. ເມື່ອໄດ້ເລີກງານຍາມດີລາວກໍເອົາຫມາກເດື່ອ ຊຶ່ງມີບໍ່ອີດຢູ່ບ້ານໄຮ່ ໂດຍສະເພາະແມ່ນ ບ່ອນທີ່ຊາວບ້ານໄຮ່ເອີ້ນວ່າບຸ່ງເດື່ອ *(ດ້ານ ຫລັງສວນຍາພໍ່ນິນ)* ແລະ ດອນປ່າຊ້າຫລືດ້ານຫລັງໂຮງສີບຸນທະວີປະຈຸບັນ. ແຕ່ກ່ອນຢູ່ບ່ອນນັ້ນຈະມີຕົ້ນຫມາກເດື່ອຫລາຍ. ຄົນບ້ານໄຮ່ມັກຈະເອົາຫນ່ວຍດິບ ມາກິນກັບປົ່ນ ແລະ ລາບ. ສ່ວນຫມາກສຸກຈະເອົາໄປເຮັດເຍື່ອເບັດໄຫຼເຕົ້າ. ນອກນີ້ເຫງັນອົ້ມກໍມັກໝາກເດືອສຸກຫຼາຍທີ່ສຸດແຕ່ກ່ອນຢາກກິນເຫງັນຍາມໃດໃຕ້ໂຄນກ້ານຈັບປືນແກບ ອອກໄປບ່ອນນີ້ແມ່ນໄດ້ກິນໂລດ. ລຸງເກດຈະເອົາຫມາກເດື່ອສຸກມາຄັ້ນໃຫ້ຫນຽວເປັນຈຳນວນຫລາຍ ແລ້ວປັ້ນໃສ່ເບັດນ້ຳເຕົ້າຂອງລາວຈຶ່ງເອົາລົງໃສ່ເຮືອພາຍຂຶ້ນໄປທາງເຫນືອເກືອບຮອດເວີນຄຳເວລາລາວປ່ອຽເຕົ້າລາວກໍຫາກມີເຄັດລັບຂອງລາວຊຶ່ງບໍ່ສາມາດຮູ້ໄດ້. ຈຳນວນເຕົ້າຂອງລາວຈະກຶກນັບຢ່າງດີ ເພື່ອໃຫ້ຮູ້ວ່າເວລາເກັບເຕົ້າຄືນບໍ່ມີຫນ່ວຍໃດເສັຽ. ເມື່ອຄົນໄທບ້ານເຫັນເຕົ້າ ລຸງເກດໄຫລມາກໍພາກັນມາຄອຍລຸ້ນເບິ່ງວ່າລຸງເກດຈະໂຊກດີບໍ່. ບໍ່ຈັກເດັກນ້ອຍຜູ້ເຖົ້າຜູ້ແກ່ກໍມາງອຍຢູ່ແຄມງື່ມແນມຊ່ວຍກັນ. ລຸງເກດລາວຈະມີສະຫວີງ

ຫລືແຫລມແຫງເອົາປາເພາະປາກິນເຕົ້າສ່ວນຫລາຍຈະເປັນໂຕໃຫຍ່ ຢ່າງນ້ອຍກໍຕ້ອງ 2 ກິໂລ ໄປຫາ 15 ກິໂລກໍມີ. ກ້າມື້ໃດປາກິນແຕ່ ປາກຫ້ວຍຫວາຍລູງກໍຍື້ມມາພ້ອມທັງລ່ອງເຮືອມາຫ່າງໆ ຈາກເຕົ້າຂອງ ລາວບາງເທື່ອລູງເກດກໍເສັຍຫລ່ຽມໃຫ້ປາ ເພາະເອົາບໍ່ທັນມັນກິນພ້ອມ ກັນ 2 ຫລື 3 ຕົວ. ເວລາກຳລັງເອົາຕົວນຶ່ງປາຕົວອື່ນກໍເອົາເຕົ້າລາວ ແຕກຫາຍໄປເລີຍກໍມີ. ເມື່ອໄທບ້ານເຫັນກໍເອີ້ນບອກລູງໃຫ້ພາຍມາເອົາ ໄວ. ເມື່ອໄດ້ປາແລ້ວລູງເກດ ຕ້ອງຕາມເຫຍື່ອໃຫມ່ໃຫລຕື່ມ. ລູງເກດ ຈະໄດ້ປາແຕ່ລະເທື່ອທີ່ໃຫລເຕົ້າ. ຫາກໄດ້ຫລາຍ ລາວກໍແບ່ງຂາຍຈຳ ນວນນຶ່ງແລະຈຳນວນນຶ່ງ ກໍເອົາມາເຮັດລາບກິນຊຸມກັນກັບຍາດຕິພີ່ນ້ອງ ທີ່ຢູ່ໃກ້ຄຽງກັນ. ປາທີ່ລູງເກດໄດ້ກໍແມ່ນປາຂວຍ,ປາທູໝາດ, ປາຢາງ, ເປັນຕົ້ນ. ນອກນີ້ລູງເກດຍັງ



ກະດຸ້ງໃຫ່ຍຂອງລຸງເກດ ແລະ ອາວພໍ່ດອນ

ກະດຸ້ງນ້ອຍຕຶກຕາມຫນອງ

ເຄື່ອງຈັກສານທີ່ຊາວບ້ານໄຮ່ ຜະລິດຂາຍຕາມຫ້ອງຕະຫລາດ

ເປັນນັກຕຶກກະດຸ້ງໃຫຍ່. ລາວຈະຕຶກກະດຸ້ງໃຫຍ່ຢູ່ປາກນ້ຳໂຄນນ້ຳເຄັມ ແລະ ກໍກີເອົາແພເປັນທີ່ນອນອີກບ່ອນ. ພວກຫຼານຊີລິດອອກໄປຍໍກະດຸ້ງຊ່ວຍແລ້ວກໍໄດ້ປາເມືອກິນກຸ້ມເປັນອາທິດ ນອກຈາກລຸງເກດແລ້ວຍັງມີອາວພໍ່ດອນ ຫລື ຕູ້ດອນກໍມີແພກະດຸ້ງໃຫຍ່ເຊັ່ນກັນລາວກໍຮັດຄືກັນກັບລຸງເກດ ເພາະເຮືອນເຂົາເຈົ້າກໍຢູ່ໃກ້ກັນ. ເວົ້າເຖິງການໃສ່ເບັດພຽກຂ້າມກຶ່ມ ຜູ້ທີ່ຢູ່ເຮືອນງອຍແຄມກຶ່ມຈະມີ ເບັດພຽກຂ້າມກຶ່ມເກືອບທຸກຄົນແຕ່ຜູ້ທີ່ເດັ່ນກ່ວາໝູ່ແມ່ນຕູ້ແຂ ເຮືອນຢູ່ຝາກທາງກັບຫໍບ້ານໃນປະຈຸບັນ, ຕູ້ປ່ຽນ ຫລື ທັນຂາເຄ, ຕູ້ກິດ, ຕູ້ໝິດ, ແລະ ຕູ້ໂຄມຄິດຄົນຈຳພວກນີ້ສ່ວນມາກກີເອົາອາຊີບຫາປາຂາຍຢູ່ລຳນ້ຳກຶ່ມນີ້ເປັນປະຈຳ. ສ່ວນການລົງເບັດພຽກນັ້ນ ແມ່ນລະດູຮ້ອນເດືອນຫົກເດືອນເຈັດ ນ້ຳຂື້ນໃໝ່ກຳລັງກວ້ມຫາດຊາຍປາຂື້ນມາຈາກນ້ຳຂອງ ແລະ ວັງເວີນຕ່າງໆເພື່ອກຽມຂື້ນມາໄຂ່ອອກແມ່ແຜ່ລູກຍາມນ້ຳແກ່ງທີ່ຈະມາໃນໄວໆນັ້ນປາທີ່ກິນເບັດພຽກທີ່ເອົາແມງປີ ຫຼື ຂີ້ກະເດືອນເປັນເຢື່ອນັ້ນກໍມີປາຍອນ, ປາໄລໄກ່, ປາກົດ, ປາແຂ້, ປາຂີ້ຮ້ຍ, ປາແຂ້ວໄກ້, ປາແປະ, ປາເສືອ, ປາຢາງ

ແລະ ອື່ນໆ ຕັ້ງຫຼາຍຊະນິດ. ເວລາກາງຄືນຈະເຫັນແສງຕະກຽງຫລືກະບອງຫລືໂຄມ ກ່ານຫີນຂອງຊາວບ້ານໄຮ່ຢາມພຽກກາງຄືນຢູ່ກາງນ້ຳງື່ມ, ຕາມແຄມຝັ່ງລະດູປາສ້ອຍຂຶ້ນເດືອນສິບເອັດເປັນຍາມເບັດຈ່ອມ, ພຽກເຫຍື່ອລອຍ, ແລະ ກ້ານປາດ້ວຍແຫລມແຫງເລາະຝັ່ງ. ເບິ່ງແລ້ວເປັນສັງຄົມທີ່ມີຄວາມສະຫງົບ ແລະ ອົບອຸ່ນແທ້ຈິງ. ເຖິງລະດູໃສ່ໄຫງຍາມເດືອນເຈັດເດືອນແປດ ແມ່ນອີກການຫາປາ ອັນນຶ່ງຂອງຊາວບ້ານໄຮ່. ໄຫງມີຮູບຊົງເໝືອນໝາກນ້ຳເຕົ້າໃຫ່ຍສູງປະມານສອງແມັດ ເສັ້ນຜ່າສູນກາງປະມານແມັດເຄິ່ງສານດ້ວຍໄມ້ໄຜ່ມີງາງາງເທິງ ແລະ ລຸ່ມ ເບື້ອງເທິງແມ່ນບ່ອນເອົາທໍ່ຂີ້ເຫຼົ້າສູບລົງໄປຈາກຄົນຢູ່ເທິງເຮືອ ຫລື ຜູ້ໂຈກໄຫງງາເບື້ອງລຸ່ມແມ່ນບ່ອນໃຫ້ປາເຂົ້າ. ການໃສ່ໄຫງແມ່ນຈະຕ້ອງໃສ່ຢູ່ຕາມເວີນໃຫ່ຍເຊັ່ນ ເວີນແກ້ງໄຄ້ຢູ່ບ່ອນນີ້ມີບາງເທື່ອປາເພາະເຂົ້າຈົນເຕັມໄຫງເອົາຂຶ້ນເຮືອບໍ່ໄດ້ຈົນໄດ້ເອົາຊູເຂົ້າຝັ່ງ. ວິທີໃສ່ໄຫງມີດັ່ງນີ້: ຕ້ອງມີເສົາໄຫງສາມເສົາຮັດດ້ວຍໄມ້ສ້າງໄຜລຳໃຫ່ຍຍາວ ສຸດຊົ່ວໄມ້ສ້າງໄຜ, ມີໄມ້ດອດໄຫງຮັດດ້ວຍໄມ້ສ້າງໄຜລຳນ້ອຍເປັນເຄື່ອງບັງຄັບໄຫງລົງພື້ນນ້ຳ. ພໍໄດ້ເຄື່ອງຄົບຊຸດໃສ່ເຮືອໄປແລ້ວ ເມື່ອຮອດເວີນທີ່ຈະໃສ່ໄຫງແລ້ວມີຜູ້ນຶ່ງຂັດທ້າຍເຮືອຜູ້ນຶ່ງຢູ່ຫົວເຮືອ ຜູ້ຢູ່ຫົວກໍຈະເອົາເສົາທັງສາມສັກລົງດິນເປັນສາມ ແຈກ້ວາງພໍດີທີ່ຈະໃຫ້ມັນໜີບ ໄຫງໄວ້ພໍດີແລ້ວກໍເອົາໄຫງລົງບັງຄັບດ້ວຍໄມ້ດອດໄຫງລົງເຖິງ ແປະດິນທ່າງດິນລະຫວ່າງສອກໜຶ່ງແລ້ວກໍເອົາປອກຮັດເສົາໄຫງເບື້ອງໜ້ານ້ຳໃຫ້ຢູ່ຕົວແລ້ວກໍເອົາທໍ່ໄຫງຮັດດ້ວຍໄມ້ເຮັ້ຍ ລຸຂໍ້ທັ່ງລົງໃສ່ປາກໄຫງເກືອບເຖິງທາງລຸ່ມ. ສ່ວນເຮືອພ້ອມພວງກັບຜົນ ກໍມັດຕິດກັບເສົາໄຫງໄວ້, ເຖິງນີ້ເປັນອັນວ່າຕຽມພ້ອມທຸກຢ່າງແລ້ວກໍພາກັນມາກິນເຂົ້າແລງ ຕຽມທີ່ຈະໂຈກໄຫງພໍ ເມື່ອເວລາຕາເວັນຕົກດິນມືດຊຸ່ມຊຶ່ມ ແລ້ວກໍເລີ້ມໂຈກໄຫງ ຄືເອົາຂີ້ເຫຼົ້າຮ້າຍລົງໄປໃນທໍ່ຕັກນ້ຳໃສ່ບັງຄັບໃຫ້ຂີ້ເຫຼົ້າໄຫຼອອກທາງກົ້ນໄຫງແລ້ວມັນກໍໄຫຼໄປຕາມສາຍນ້ຳຢ່າງບໍ່ຂາດສາຍ ພໍໝູ່ປາມາພົບມັນນຳສາຍເຍື່ອນັ້ນມາ

ພາກັນລຸເຂົ້າໂຫງໂລດເພື່ອຍາດກັນກິນເຍື່ອ. ຜູ້ໃຈກໂຫງຈະຮູ້ທັນທີວ່າປານາເຂົ້າ ຫຼື ບໍ່ເຂົ້າເພາະມັນໄດ້ຍິນສຽງຂຶ້ນໄປນໍາທໍ່ຂີ້ເຖົ່າ. ພໍຮູ້ວ່າປາເຂົ້າແລ້ວກໍ່ພາກັນດຶງໂຫງຂຶ້ນເຮືອແລ້ວເອົາປາໄປຂາຍດ້ວຍຄວາມດີໃຈ. ນັກໃສ່ໂຫງທີ່ມີ ຊື່ສຽງໃນເວລານັ້ນ ກໍມີລູງເກດ, ພໍ່ທິດພັນ,ຕູ້ບຸນຍັງ(ພໍ່ຕູ້ດອນ), ທິດ ແພງສີ ຫລື ຕູ້ ທອງໃນປະຈຸບັນ, ພໍ່ໄຄ, ພໍ່ເປື່ອງ, ຕູ້ຂານພວກເຂົາເຈົ້າຈະພາກັນໄປໃສ່ໂຫງພໍໃຜພໍລາວ. ເວລາໃດປາເຂົ້າໂຫງກໍກືວ່າໂຊກດີເພາະປາເຂົ້າໂຫງຈະເປັນຈໍານວນຫລາຍໝື່ນບາງເທື່ອ
ຕ້ອງໃຊ້ຫລາຍຄົນເພື່ອເອົາໂຫງຂຶ້ນຍ້ອນວ່າ ໜັກຈໍານວນປາທີ່ຢູ່ໃນໂຫງ. ປາເຂົ້າໂຫງແມ່ນຈະເຂົ້າເປັນໝູ່ ແລະ ມັກຈະແມ່ນປາຊະນິດດຽວກັນ. ເຫຍື່ອອ່ອຍໃສ່ໂຫງກໍມີຣໍາ ຫລື ຂີ້ເຫລົ້າຈາກໂຮງງານຕົ້ມເຫລົ້ານ້ອຍບ້ານເຈັກບ້ຽວນາງກີ (ເປັນຄົນຈີນຕົ້ມເຫລົ້າຢູ່ບ້ານທ່າງ່ອນບ່ອນຕໍ່ໜ້າຕລາດທ່າງ່ອນເກົ່າ). ນອກນັ້ນ, ຍາມປາກືກສະດຸ້ງເວລາວັນເສົາວັນທິດ, ລຸງເກດມັກຈະບອກລູກເຊັ່ນ ທ້າວລິບ ທ້າວຄູນສີ ຫລື ລູກຫລານຜູ້ອື່ນໆເຊັ່ນ ທ້າວຄໍາພັນ ທ້າວນວນຈັບໄປຊ່ວຍລາວຢໍກະດຸ້ງຕອນຫົວຄໍ່າເວລາເດິກແລ້ວລາວກໍລຸກມາປຸ່ຽນໃຫ້ເດັກນ້ອຍນອນລາວເປັນຜູ້ຢໍຕໍ່ຈົນ
ເກືອງແຈ້ງ. ເວລາແຈ້ງລາວກໍຈະເລືອກປາທີ່ສາມາດເອົາໄປຂາຍໄດ້, ປາເອົາໄປເຮັດກິນ, ປາເອົາເຮັດປາແດກ. ເວລາມາຮອດເຮືອນປ້າເກດເມັຽຂອງລາວກໍຈະເອົາໃຫ້ລູກໄປຂາຍທ່າງ່ອນ, ສ່ວນລາວເອງກໍຈະຈັດການເຮັດປາແດກ. ປາແດກຂອງປ້າເກດ ຈະໄດ້ຮັບຄວາມນິຍົມຈາກຊາວບ້ານຍ້ອນວ່າເປັນປາແດກປາສົດ ແລະ ເອົາໄວ້ຫລາຍປີ. ເວລາຈົກເອົາປາແດກ ຈະເປັນສີແດງໜ້າແຊບແທ້ໆ. ນອກເໜືອຈາກນີ້, ຍັງມີຈັ່ນທີ່ເປັນກັບດັກປາໃຫຍ່ ອີກອັນນຶ່ງທີ່ຊາວບ້ານໃຊ້ຈັບປາເວລານໍ້າຂຶ້ນ ແລະ ນໍ້າລົງຜູ້ທີ່ມີຊື່ສຽງໃນການໃສ່ຈັ່ນມີ: ທິດແພງສີ, ທິດພັນ, ທິດນວນ, ພໍ່ດອນ, ພໍ່ພຽນ, ພໍ່ເພັງ, ການໃສ່ຈັ່ນນີ້ ໝາຍເຖິງການເອົາແຕ່ປາໃຫຍ່ເທົ່ານັ້ນເພາະຕາຂອງຈັ່ນຈະຫ່າງ ແລະ ປາທີ່ຈະ

ຕິດຈັ່ນແມ່ນຢ່າງນ້ອຍ 2 ກິໂລ ຂຶ້ນເມືອທາງເປັນຫມື່ນ. ບາງເທື່ອກໍ່ກຶກຮອດແຂ້ນ້ອຍ. ຕາມແຄມນ້ຳງື່ມໃນເວລານ້ຳລົງເດືອນ 11 ແຕ່ປີ 1970 ຄືນຫລັງຈະມີຝຸງປາສ້ອຍຂຶ້ນຕາມແຄມຕາຝັ່ງນ້ຳງື່ມຊຶ່ງເປັນຫນ້າສະອອນແທ້ໆເວລາພົບເຫັນ. ມັນຈະຂຶ້ນແບບນັ້ນຕລອດເດືອນສິບເອັດບາງປີກໍ່ຫຼາຍບາງປີກໍ່ໜ້ອຍ. ເວລານັ້ນກໍ່ແມ່ນເວລາຂອງກະດຸ້ງນ້ອຍກຶກນຳມາໃຊ້ງານ. ຜູ້ເລັກເດັກນ້ອຍພາກັນຈຸ້ມໃສ່ຄັນກະດຸ້ງມີສຽງໂຮສຽງແຊວເປັນບາດເປັນບາດເວລາກຶກປາໂຕໃຫຍ່ເຂົ້າກະດຸ້ງ ຫລື ເວລາກຶກປາຫລາຍ. ບັ່ງໃກ້ກັບຜູ້ຕຶກກະດຸ້ງກໍ່ມີບາງຄົນຕຶກເບັດຊິດໄປນຳເພາະເບັດຊິດກໍ່ສາມາດຕຶກປາໄດ້ໂຕໃຫຍ່ໃນເວລານີ້ເຊັ່ນກັນ. ເວລານີ້ເອງທີ່ຊາວບ້ານໄຮ່ສາມາດຄຸຍໂມ້ວ່າເອົາມີກວດປາໂຕນ້ອຍອອກແລ້ວຕຶກເອົາປາໂຕໃຫຍ່ຢູ່ກ້ອງມາກິນ ຫລື ຄຳຄຸຍໂມ້ອີກຄຳນຶ່ງວ່າ ***ບ້ານໄຮ່ນີ້ດິນດຳນ້ຳຊຸ່ມຄ້າງຫມໍ້ໄວ້ປາເຕັ້ນໃສ່ເອງ ຫລື ບ້ານໄຮ່ຂ້ອຍ ຫາກິນເກີນງ່າຍຢາກກິນລາບ ແລະ ກອຍແຫນ້ອຍຄວ່າງລົງ.*** ທີ່ຈິງແລ້ວຄຳເວົ້າເລົ່ານີ້ກໍ່ບໍ່ເກີນຄວາມເປັນຈິງ ໃນເວລານັ້ນປານໃດ ເຫມາະສົມທີ່ຈະຄຸຍໂມ້ດ້ວຍຄຳເວົ້າເລົ່ານັ້ນ. ໃນເວລາກາງຄືນຫາກຜູ້ໃດບໍ່ເມື່ອຍກໍ່ສາມາດຕຶກກະດຸ້ງນ້ອຍໄດ້ແຕ່ສ່ວນມາກຜູ້ຍິງບ້ານໄຮ່ຈະບໍ່ມັກຕຶກ ເພາະເວລາກາງເວັນກໍ່ໄດ້ຫລາຍແລ້ວ. ຈະເຮັດປາແດກ ຫລື ປາຍ້າງກໍ່ຍັງບໍ່ທັນເລີຍ. ແຕ່ຊ້ຳຍັງມີກຸ່ມຜູ້ຊາຍ ທີ່ໃຊ້ແຫລມແທງປາໂດຍໃຊ້ ໂຄມກ່າງທີນເຍືອງແລ້ວໃຊ້ແຫລມແທງຜູ້ແທງ ຈະເລືອກເອົາແຕ່ໂຕໃຫຍ່. ການໄປແທງປາຫລືກ້ານປາຕ້ອງມີສອງຄົນຂຶ້ນໄປເພາະຜູ້ນຶ່ງເປັນຜູ້ແທງປາ ແລະ ຜູ້ນຶ່ງເປັນຜູ້ຄັດທ້າຍເຮືອ. ລາງເທື່ອໄດ້ປາເຕັມລຳເຮືອ ກ່ອນແຈ້ງຈຶ່ງໄດ້ກັບບ້ານໄວຫລືເອົາປາ ມາໄວ້ແລ້ວກັບໄປໃຫມ່. ຜູ້ທີ່ມີຊື່ສຽງໂດ່ງດັງກ່ວາເພິ່ນກໍ່ແມ່ນອ້າຍຂັນ (ຊາວບ້ານມັກເອີ້ນວ່າອ້າຍຂັນຂີ້ເຫລົ້າ) ຈຸດພິເສດຂອງລາວແມ່ນເກັ່ງທາງດ້ານນີ້ເວລາໄປກ້ານຈະແມ່ນລາວອອກກ່ອນຫມູ່ ຫລືນຳຫລັງຫມູ່ກໍ່ຈະໄດ້ປາຫລາຍກ່ວາຫມູ່ໃນທີ່ສຸດ ໂດຍບໍ່ມີໃພທຽບ

ໄດ້.ທາກແຕ່ວ່າລາວມີສາຍາຂີ້ເຫລົ້າ ເພາະເວລາຂາຍປາໄດ້ເງິນແລ້ວກໍຈະຊື້ເຫລົ້າກິນຈົນເມົາ ນອນຫົວຂ້ວນແລ້ວຈຶ່ງໄປຫາໃຫມ່ຫລືບາງເທື່ອລາວກໍກິນຈົນຫມົດເງິນລາວຫາໄດ້ຈຶ່ງຕັ້ງຫນ້າໄປຫາໃຫມ່. ອ້າຍຂັນເປັນຄົນສູງຂາວຫລໍ່ເຫລົາເອົາການຜູ້ສາວເຫັນ ໂດຍບໍ່ຮູ້ປະຫວັດຂອງລາວກໍຈະມີຄວາມສົນໃຈທັນທີ. ລາວມີຝີປາກທີ່ດີຈົນສາມາດຕົວະກິນເຫລົ້າໄດ້ນຳຜູ້ສາວຕາມບ້ານຕາມຊ່ອງທົ່ວໄປ. ຈຶ່ງເປັນທີ່ມາຂອງສາຍານາມຂອງລາວອີກອັນນຶ່ງອ້າຍຂັນຂີ້ຕົວະ. ນອກຈາກອ້າຍຂັນແລ້ວພວກທີ່ມີຄວາມສຳນານສູງໃນການກ້ານປາແຫງແຫຼມນີ້ກໍມີລູງເກດ, ພໍ່ທິດພັນ, ອາວບຸນຍັງ ພວກເພິ່ນນີ້ກໍຈະມີແຫຼມສາມງ່າມ ຂອງພວກເພິ່ນຊຸນໄວ້ຂ້າງເຮືອນຕລອດເວລາ ເມື່ອເຖິງລະດູກ້ານປາມາລະຫວ່າງເດືອນສິບເອັດສິບສອງ. ໃນຕອນທ້າຍຊຸມປີ 1960 ຫາ1970 ການກ້ານປານີ້ ຈະສູນຫາຍໄປຈາກລຳນ້ຳງື່ມ ຫຼັງຈາກການອັດເຂື່ອນນ້ຳງື່ມເປັນຕົ້ນມາ. ອີກອັນນຶ່ງ, ການນາບປາຫລືຫລອກປາກໍແມ່ນ ການຫາກິນແບບນຶ່ງຂອງຊາວບ້ານໄຮ່. ການນາບປາ ແມ່ນເອົາກາບກ້ວຍເຮັດເປັນແຜ່ນຫຍິບຕິດກັນ ໃຫ້ໄດ້ຄວາມຍາວ ຕາມຄວາມຍາວຂອງເຮືອລຳ ທີ່ຈະນຳໄປໃຊ້ງານແລ້ວໃຊ້ລຳໄມ້ໄຜ່ເປັນຄານມັດແຫນ້ນໆ ໃສ່ຕິດກັບຂັ້ນເຮືອຮັບປະກັນບໍ່ໃຫ້ຫັກເວລາກວັກເຮືອ ເຂົ້າຝັ່ງເວລາຫລອກປາ. ສົ້ນກາບກ້ວຍຈະໃຫ້ກາຍແຄມເຮືອເຂົ້າມານ້ອຍນຶ່ງພໍໃຫ້ປາດີ້ນຂຶ້ນມາແລ້ວ ຕົກລົງໃສ່ທ້ອງເຮືອພໍດີ. ເວລາຈະຫລອກເອົາປາແມ່ນມີສອງຄົນຢູ່ທ້າຍເຮືອ ແລະ ຫົວເຮືອ. ເມື່ອເລືອກວ່າບ່ອນໃດເປັນອ່າວທີ່ຈະມີປາຊຸມຢູ່ ຫລືເປັນບ່ອນທີ່ປາລອຍຂຶ້ນກໍຈະງ່ຽງແຄມເຮືອດ້ານມີກາບກ້ວຍ ແລ້ວທັງສອງຄົນ ໃຊ້ໄມ້ພາຍກວັກເຂົ້າຫາຝັ່ງເມື່ອເວລາປາເຫັນສີຂາວຂອງກາບກ້ວຍ ທີ່ມຸດເຂົ້າໄປຫາຝັ່ງມັນກໍຈະພາກັນໂດດດີ້ນຂຶ້ນຕາມກາບກ້ວຍແລ້ວຕົກເຂົ້າທ້ອງເຮືອຕາມທີ່ໄດ້ວາງແຜນໄວ້. ບາງເທື່ອໄດ້ປາຫລາຍເຮືອ ຈົນຈະຫລົ້ມຈຶ່ງໄດ້ມີການໂຕນນ້ຳອອກຈາກເຮືອເພື່ອບໍ່ໃຫ້ເຮືອຫລົ້ມ. ນອກຈາກເວົ້າມາແລ້ວ

ຍັງມີການຫາປາໂດຍໃສ່ຕຸ້ມລາບ. ການໃສ່ຕຸ້ມລາບນີ້ແມ່ນໃສ່ເອົາປານ້ອຍ ຕຸ້ມລາບຈະເປັນຕູ້ມນ້ອຍມີຮູບຮ່າງ ຄືກັບໂຫງໃຫຍ່ແຕ່ນ້ອຍສູງພຽງສອກ ດຽວເທົ່ານັ້ນ. ໃຊ້ຮໍາອ່ອນເປັນເຫຍື່ອອ່ອຍແລ້ວປິ່ນປາກາງຂອງມັນລົງ ທາງໃຕ້ເພື່ອໃຫ້ຮໍາອ່ອນໄຫລໄປຕາມນໍ້າແລ້ວປານໍາຂຶ້ນມາ ແລະ ເຂົ້າກິນ ຢູ່ໃນຕຸ້ມແບບນີ້ຈະໄດ້ປາເປັນຫມູ່ຄືກັນ, ຈະໃສ່ມື້ສວຍ ຫລື ກາງຄືນກໍໄດ້. ຜູ້ທີ່ເກັ່ງກ່ວາຫມູ່ ແມ່ນອ້າຍທິດແພງສີ ຫລື ຕູ້ທອງບ້ານໃຕ້. ເວລາຍາມ ເດືອນຫ້ານໍ້າແຫ້ງລົງຊາວບ້ານໄຮ່ມັກຈະໃສ່ເບັດລັ່ນ ໂດຍເອົາກ້ວຍຕາມ ເປັນຮວດຍາວເຄິ່ງສອກ ປັກຄັນເບັດໄວ້ໃຫ້ດີແລ້ວ ກໍມຸດນໍ້າລົງໄປເອົາ ເດືອມັນປັກໃສ່ພື້ນນໍ້າແລ້ວກໍປະໄວ້ໃຫ້ເບັດຫ້າງຢູ່ແບບນັ້ນຫາກມີປາມາ ດຶງກິນເຫຍື່ອ ກ້າຕົວນ້ອຍຈະບໍ່ມີແຮງພໍທີ່ຈະເຮັດໃຫ້ເບັດລັ່ນໄດ້ມີແຕ່ປາ ໃຫຍ່ເທົ່ານັ້ນທີ່ດຶງແຮງເຮັດໃຫ້ເດືອລຸດຈາກດິນແລ້ວເບັດກໍລັ່ນເບັດ ກໍເກາະເອົາປາກປາ, ແລ້ວຈະເຫັນຄັນເບັດລາງເງີຍຂຶ້ນຈາກນໍ້າ ແລະ ກໍມີສາຍເຄັ່ງເຈົ້າຂອງຈິ່ງໄປດຶງເອົາ. ມັນກໍແມ່ນວິທີນຶ່ງທີ່ໃຊ້ແບບຫລິ້ນໆ ທັງຫມົດທີ່ກ່າວມານັ້ນແມ່ນການຫາກິນທາງນໍ້າຂອງຊາວບ້ານໄຮ່ທີ່ມີ ມາແຕ່ບັນພະບຸຣຸດຂອງເຂົາເຈົ້າ.

ການຫາກິນຕາມຫ້ວຍຕາມຫນອງ

ການຫາປາບໍ່ພຽງແຕ່ ຈະຫາຕາມລໍານໍ້າງື່ມເທົ່ານັ້ນຊາວບ້ານໄຮ່ ຍັງມີບ່ອນຫາປາຫລາຍບ່ອນເຊັ່ນ: ຕາມຫ້ວຍຫນອງຫລວງ, ຫ້ວຍອ້າຍ ເວັ້ນ, ຕາມຫ້ວຍຫນອງຫວາຍ, ຫ້ວຍໂຄບ, ຫ້ວຍຄັນ, ຮ່ອງເມັກ, ຫນອງປາຄໍ່ຂາວ, ຫນອງສອງຫ້ອງ, ຫນອງຫລວງ, ຫນອງເບັນ, ຫນອງ ແຂ້, ຫນອງສະ, ຫນອງຫນອນ, ຫນອງຫົວລີງ, ຫນອງອ່ຽນ, ຫນອງທາງ ຄວາຍເປັນຕົ້ນ. ໃນການຫາກິນຕາມຫ້ວຍຫນອງເຫລົ່ານີ້ ຊາວບ້ານໄຮ່ ໃຊ້ອຸປະກອນຫລາຍຢ່າງເຊັ່ນ: ແຫ, ມອງ, ກະດຸ້ງນ້ອຍ, ເຊີງ, ຊຸ່ມ, ສະຫວີງ, ເບັດຈ່ອມ, ແຫລມແທງອ່ຽນ, ຕຸ້ມອ່ຽນ, ສ້ອນ,ໄຊ.

ການໄປຫາປາຢູ່ໜອງບາງເທື່ອກໍເປັນຂອງຫວງຫ້າມ ເພາະຖືວ່າເປັນໜອງຂອງການປົກຄອງຄືຈະຫາໄດ້ກໍຕ້ອງໄດ້ຜ່າໜອງເສັຽກ່ອນຈຶ່ງຈະສາມາດຫາກິນ ໄດ້ຕາມຄວາມຕ້ອງການ. ເວລາຜ່າໜອງຈະຕ້ອງແຈ້ງໃຫ້ປະຊາຊົນໃນທົ່ວເມືອງເອົາເຄື່ອງມືຫາປາຂອງໃຜມັນມາຫາໃນເວລາດຽວກັນໃນມື້ນັ້ນສະເພາະໝົດມື້ນັ້ນແລ້ວກໍຖືວ່າເປີດເສລີ, ໃຜຢາກມາຍາມໃດກໍໄດ້. ແຕ່ເວລາກ່ອນນ້ຳຈະກ້ອມ ຫລື ນ້ຳກຳລັງກ້ອມປະຊາຊົນບ້ານໄຮ່ ສາມາດມາຫາກິນໄດ້. ເວລານ້ຳແຫ້ງຂອດເປັນຂອບໜອງແລ້ວຫ້າມບໍ່ໃຫ້ມີການໄປຫາກິນ ຢູ່ໃນໜອງຈົນກ່ວາມີ ການຜ່າໜອງ. ຜູ້ຫາກິນຕາມໜອງທີ່ເດັ່ນກວ່າໝູ່ກໍແມ່ນອ້າຍທິດ ແພງສີ, ຕູ້ເຫລືອ ຫລື ຕູ້ຂະເໜນບດົງພໍ່ຂອງ ທ້າວ ເຫລືອ, ທ້າວ ຄຳພອງ, ນາງທອງບໍ່, ນາງ ຈັນທີ. ນອກນີ້ຍັງມີຕູ້ເກົ້າພົວແມ່ ຕູ້ເອບ, ພໍ່ເພັງ, ພໍ່ພຽນ, ພໍ່ເປືອງ ແລະອື່ນໆ. ເຂົາເຈົ້າຈະໃສ່ ມອງ, ໃສ່ເບັດຈ່ອມ, ໃສ່ຕຸ້ມອ່ຽນ, ໃສ່ສ້ອນ ແລະ ໄຊຊຶ່ງໃສ່ໄວ້ຂ້າມຄືນ. ນອກນັ້ນເວລາກາງເວັນ ໂດຍສະເພາະຜູ້ຍິງຈະໃຊ້ສະຫວິງ, ສຸ່ມ ແລະ ເຂົ້າສ້ອນປາຕາມໜອງນ້ອຍໆຕ່າງໆ. ຕາມບວກຄວາຍ, ຕາມໜອງນ້ອຍ, ພໍໄດ້ປາຊີວ ແລະ ແມງຕັບເຕົ່າແມງໄມ້ຕ່າງໆມາມົກກິນຕອນແລງ. ຜູ້ຫາກິນຕາມໜອງແບບນີ້ແມ່ນ ແມ່ຕູ້ຫລ່ຽນ, ແມ່ຕູ້ຂານ ແມ່ອ້າຍມາຍ, ອ້າຍປົນ. ເຂົາເຈົ້າເປັນຜູ້ທີ່ຫາປາໃນໜອງໜານຫລາຍຈະເຫັນໄດ້ຈາກເວລາຜ່າໜອງດ້ວຍເຄື່ອງມືດຽວກັນລາວຈະເປັນຜູ້ໄດ້ຫລາຍກ່ວາໝູ່.

ຮູບເຄື່ອງມືຫາປາ

ໄຊໃສ່ປາ

ສອບໄຊ້ຕັນປາເພື່ອໃສ່ຕ້ອນ

ຕຸ້ມລານໃສ່ປາຂາວນ້ອຍນ້ຳຖ້ວມ

ຕູ້ມອ່ຽນໃສ່ອ່ຽນຫນອງຫລວງ



ສຸ່ມ ແລະ ເຂີງ ສໍາລັບສ້ອນປາ



ສຸ່ມຫາປາ ແລະ ແຫ ຫາປາ

ດ້ານການລ້າເນື້ອ:

ໃນສມັຍກ່ອນພືນແຜ່ນດິນບ້ານໄຮ່ ກໍກປົກຄຸມໄປດ້ວຍປ່າໄມ້ດົກໜາ, ມີປ່າເຫລົ່າໄຮ່,ປ່າເຫລົ່ານີ້ລ້ວນແຕ່ຕຶບໜາລຸ່ອງບໍ່ຊອດທົ່ງນັ້ນ. ມັນຈຶ່ງເປັນບ່ອນຊ່ອນຕົວ ທີ່ດີຂອງສັດປ່ານາໆຊະນິດ. ກະຮອກກະແຕເຫງັບ ມາຫາກິນນຳບ້ານຄົນກໍມີຊຶ່ງ ເປັນສິ່ງທີ່ເຫັນໄດ້ໂດຍທົ່ວໄປ. ບາງເທື່ອກໍມີຟານ ຫລື ໝູປ່າແລ່ນຂ້າມທາງມາຫາບ້ານ ຫລື ແລ່ນແຕ່ບ້ານໄປຫາປ່າ. ບາງເທື່ອສັດປ່າກໍຫາກິນຕາມແຄມນ້ຳງື່ມ ເຊັ່ນໂຕຊາຍ. ສມັຍກ່ອນ, ການຍ່າງແຕ່ບ້ານໄປຫາໜອງຫລວງ ແມ່ນໄກຄືກັບວ່າເປັນ 8 ຫລັກ 10 ຫລັກ ແຕ່ຕົວຈິງມີ 2 ຫລັກປາຍ. ຍ້ອນວ່າມັນມີປ່າຕຶບດົງໜາເປັນຕາຢ້ານເສືອ ຫລື ສັດຮ້າຍຕ່າງໆ. ຕາມການບອກເລົ່າຂອງຜູ້ເກົ້າຫລາຍຄົນເວົ້າວ່າເວລາຍ່າງໄປຕາມປ່າຈະເຫັນຝຸງລີງ, ທະນີເຕັ້ນໄປຕາມງ່າໄມ້. ການເຫັນສັດປະເພດນົກ, ກະຮອກ, ກະແຕກິນໝາກໄມ້ຕາມປ່າ ເປັນເລື່ອງທຳມະດາເຊັ່ນກັນ. ບາງເທື່ອຍັງເຫັນຮອຍຟານຮອຍໝູ, ຮອຍເສືອໃນແຕ່ລະປີຈະໄດ້ເຫັນ ຮອຍຊ້າງມາກິນອ້ອຍມັນຕົ້ນຂອງໄທບ້ານທ່າສົມມໍບາງເທື່ອຍັງມາທຳລາຍ ຮອດບ້ານເຮືອນຂອງເຂົາເຈົ້າ. ເວົ້າເຖິງນົກກໍມີຫລາຍປະເພດເຊັ່ນ: ນົກກົກ, ນົກແກງ, ນົກມຸມ. ນົກແຂກ, ນົກເປົ້າ, ແລະ ນົກນ້ອຍໆ ອື່ນໆ ມີຈົນນັບບໍ່ຖ້ວນ. ໃນສມັຍນັ້ນຄົນມີປືນໜ້ອຍຄົນ ແລະ ເຂົາເຈົ້າມັກຈະໃຊ້ປືນລ່າສັດໃຫຍ່ເຊັ່ນ: ກວາງ, ຟານ, ໝູປ່າ, ຊ້າງ, ເນີຍ. ໝີ, ຊາຍ ສ່ວນສັດທີ່ນ້ອຍກ່ວານີ້ແມ່ນໃຊ້ເຄື່ອງມືອັນໃໝ່. ກ້ຳແມ່ນສັດນ້ອຍຊາວບ້ານ ຈະໃຊ້ໜ້າເກັກ, ພຸ, ແຮ້ວ, ກະທີບ, ກະຕ່ຳ, ກະກຸບ, ບ້ວງຄ້ອງ, ຫລາວ, ແຫລມເປັນຕົ້ນ. ການລ່າສັດໃຫຍ່ເຂົາເຈົ້າຈະມັກອອກໄປກ້ານ ໂດຍໃຊ້ໂຄມກ້ານກ່ານຫີນ. ຜູ້ທີ່ກ້ານເກ່ງ ແລະ ມີຊື່ສຽງ ແມ່ນພໍ່ລ້ຽງ, ພໍ່ເຕີນລູກຂອງແມ່ຕູ້ການ ແມ່ ຂອງນາງ ຮອນ ຫລື ຕູ້ການນັ້ນເອງ. ລືກັບວ່າສມັຍ ຜົວຂອງຕູ້ການແມ່ນ ມີພິພາບຊຶ່ງພິພາບນີ້ຈະເຮັດໃຫ້ນາຍ

ພານນັ້ນຫມານເວລາໄປລ່າສັດ. ນາຍພານຈະພົ້ສັດແລະກໍໄດ້ຍິງສັດເວລາຍິງສັດໃຫຍ່ປະເພດ ຫມູປ່າ, ກວາງ, ຫລື ຟານຈະເອົາເຊືອກມັດຮ້ອຍດີໆ ແລ້ວເອົາປາຍປືນສອດໃສ່ເຊືອກຮ້ອຍດີໆ ແລ້ວກໍຄອນໃສ່ບ່າມາເຮືອນ ໂດຍບໍ່ທັນໃຫ້ຄົນເຫັນ. ແລະ ບໍ່ມີການຫລຽວຄືນຫລັງຈົນກ່ວາຈະເກີ ງບ່ອນປີ້ງສັດຫາກມີຄົນເຫັນ ແລະ ທ້ອງກໍຈະເຮັດໃຫ້ຄອນຕໍ່ໄປບໍ່ໄດ້ຕ້ອງ ໄດ້ເອີ້ນຄົນມາຫາມຊ່ວຍກັນ. ເຂົາເຈົ້າຈະອອກກ້ານໃນເວລາຄົນນອນແລ້ວ ແລະ ຈະໄປໃຕ້ໂຄມກ້ານເມື່ອຮອດປ່າ. ເວລາກັບມາກໍຈະມອດໂຄມ ເວລາເຂົ້າເຂດບ້ານ. ການຫາຍິງສັດນ້ອຍດ້ວຍປືນຕອນກາງເວັນກໍມີເຊັ່ນກັນ ແຕ່ຄວາມໃຫຍ່ຂອງປືນຈະນ້ອຍກ່ວາພວກນັກລ່າກາງຄືນ. ຜູ້ທີ່ເກັ່ງກ່ວາຫມູ່ແມ່ນອ້າຍຂັນຂີ້ເຫລົ້າອີກ. ອ້າຍຂັນເປັນຄົນຍິງປືນແມ່ດີຫາຄົນປຽບທຽບໄດ້ຍາກ ເວລາລາວໄປຍິງນົກຍາມໃດຈະໄດ້ມາເຕັມກົງ, ກົງວ່າຍິງນົກເປົ້າແມ່ນເອົາເກືອບຫມົດຝູງເລີຍ. ບັນດາກະຮອກຄັນອ້າຍຂັນໄດ້ຍົກປືນໃສ່ ແມ່ນບໍ່ມີທາງລອດໄດ້. ຍາມເວລານ້ຳກ້ວມຊາວບ້ານໄຮ່ມັກໄປຍິງເອົາຫນູ, ກະຮອກຄ້າງຢູ່ຕາມກໍໄຜ່. ຜູ້ອື່ນໆ ກໍໄດ້ຢູ່ 8 ຫາ 10 ໂຕ, ແຕ່ອ້າຍ ຂັນເອົາເປັນລຳເຮືອການເລີຍ. ລາວ ແມ່ນນັກລ່າສັດທີ່ເກັ່ງຂອງບ້ານໄຮ່. ນອກຈາກອ້າຍຂັນແລ້ວຍັງມີທ່ານ ບຸນທຽມ ພິມສີປະສົມລູກຊາຍຫລ້າຂອງປູ່ຈານພິມເອງການທີ່ເອີ້ນຊື່ວ່າທ່ານກໍຍ້ອນວ່າເພິ່ນ ແມ່ນລູກຫລານບ້ານໄຮ່ຜູ້ທຳອິດ ແລະ ຜູ້ດຽວທີ່ໄດ້ເຂົ້າໄປຮັບຣາຊການໃນຕົວເມືອງວຽງຈັນໄດ້ ຫນ້າທີ່ຕຳແຫນ່ງສົມເອີ້ນທ່ານຄືທ່ານໄດ້ເປັນຫົວຫນ້າດ່ານພາສີຢູ່ສາງທ່ານາແລ້ງ ແລະ ຢູ່ກົມພາສີອາກອນໃນເວລາຕໍ່ມາ ກ່ອນຈະຍ້າຍໄປຕັ້ງກິ່ນການຢູ່ອົສຕຣາລີ. ທ່ານ ບຸນທຽມ ແມ່ນນັກລ່າເນື້ອທີ່ເກັ່ງເຊັ່ນກັນ. ທ່ານຈະອອກລ່າເນື້ອເກືອບທຸກວັນພັກເສົາອາທິດ. ທ່ານເປັນນັກລ້າສັດ ແຕ່ລະດັບນ້ອຍໄປຫາລະດັບໃຫຍ່ ຫມູປ່າ, ກວາງ, ຟານເປັນຕົ້ນ. ທ່ານມີປືນແຕ່ຂະຫນາດນ້ອຍປືນລົມ ຈົນເກີງແຝດລູກຊອງເບີ 16 ແລະ 12. ເວລາເສົາອາທິດ

ທ່ານ ຈະອອກໄປຍິງນົກ ແລະ ໄປກ້ານນຳຊາວບ້ານແກວບ້ານດົງບັງ. ການລ່າເນື້ອໃຫຍ່ ແລະ ນ້ອຍຂອງທ່ານບຸນທຽມເພິ່ນໄດ້ສືບຕໍ່ສາຍເລືອດມາຈາກພໍ່ເພິ່ນ ແລະ ອ້າຍເພິ່ນທັ້ງໝົດຊຶ່ງປູ່ຈານພົມເພິ່ນກໍເປັນນາຍ ພານໃຫ້ຍລຳດັບສອງຮອງຈາກເຈົ້າເພຊຣາຊລົງມາ ຜູ້ເພິ່ນຮັກແພງກັນທີ່ສຸດກໍຍ້ອນເລື່ອງນີ້. ດັ່ງບູຮານເວົ້າໄວ້ວ່າແນວໝາກໄມ້ບໍ່ຮ່ອນລົ່ນໄກກົກ. ທ່ານບຸນທຽມເພິ່ນເປັນນາຍພານສມັຍໃໝ່ມີ ເຄື່ອງມືພາຫະນະອັນທັນສມັຍຄືບກ້ວນ ເວົ້າເຖິງປືນກໍມີເຖິງເຈັດກະບອກອອກໄປຮຽນບອກປະເທດຄັ້ງໃດກໍຊື້ມາພ້ອມເພິ່ນມີປືນຍິງຊ້າງຍິງເນີຍໜຶ່ງກະບອກ, ປືນແຟດເບີສິບ12 ສອງກະບອກ, ແຟດເບີ16ໜຶ່ງກະບອກ,ປືນຈຸດສອງສອງ (*0.22LONGແວງເຄີລອງ*)ລະບົບຕ່າງໆກັນສອງກະບອກ ແລະ ປືນລົມອີກໜຶ່ງກະບອກໃສ່ຕູ້ກະຈົກໄວ້ລຽນລາບຊາບ. ເພິ່ນມີໝາລ່າເນື້ອພັນຈາກຕ່າງປະເທດ ສອງຕົວທີ່ເກັ່ງທີ່ສຸດໃນເມືອງລາວ ພໍແຕ່ເຫັນຮອຍສັດເອົາດັງຊຸກໃສ່ແລ້ວໄລ່ອອກມາໃຫ້ເຈົ້າຂອງໄດ້ຍິງຈົນໄດ້ ຜູ້ທີ່ນຳພາໝາເຂົ້າປ່າກໍແມ່ນ ທ້າວອຸດາໄລແລະທ້າວນວນຈັນ. ທ່ານບຸນທຽມມັກອອກໄປລ່າເນື້ອທາງບ້ານທ່າດິນແດງ, ລາດຄວາຍ, ບ້ານໄຮ່ປາກງື່ມ, ແລະ ບ້ານອື່ນໆ ຕາມຕີນພູເຂົາຄວາຍ. ກ້າໄປທາງທິດເຫນືອທ່ານຈະໄປແກວບ້ານຫນອງສະ, ນ້ຳທຸ່ມ, ນ້ຳຊວງ, ແລະ ອື່ນໆ ໃນແກວໃກ້ຄຽງ. ບັນດາຂ້າຣາຊການທີ່ມັກລ້າສັດ ສ່ວນຫລວງຫລາຍແລ້ວຈະຮູ້ຈັກກັບທ່ານບຸນທຽມເພາະເປັນຜູ້ສາມາດນຳພາຫມູ່ໄປລ່າສັດໂຮ່ເນື້ອ ແລະ ກໍເປັນຜູ້ທີ່ຍິງສັດໄດ້ດີກ່ວາຜູ້ອື່ນ. ໝູ່ເພິ່ນທີ່ມັກຄືກັນໄປດ້ວຍກັນກໍແມ່ນທ່ານຫຼ້າບູລົມນ້ອງເມຍທ່ານສຸວັດ ຢູ່ກະຊວງການຄັງ ທ່ານ ສີທອງມາ ພັນດາບຸວົງ ຢູ່ກະຊວງຕ່າງປະເທດ. ອອກໄປລ່າເນື້ອທິດໃດເສົາໃດແມ່ນບໍ່ພາດຈັກເທື່ອໄດ້ຟານ, ກວາງ, ໝູປ່າ ແລະ ອື່ນໆຫຼາຍຢ່າງ. ການໄປຍິງນົກເປັດນົກຊີ້ກະເດືອນ ໜອງທາມບ້ານນາທາມກໍເປັນອີກເລື່ອງໜຶ່ງເພິ່ນຍິງແຕ່ນົກບິນ ຕາມຫຼັກການຕ່າງປະເທດທີ່ຫ້າມຍິງນົກຢູ່ພື້ນດິນເຂົາຖືວ່າເປັນກິລາບໍ່ແມ່ນຍິງມາກິນແຕ່ເພື່ອເປັນອາຫານ.

ຈາກນັ້ນເພິ່ນກໍມັກຕໍ່ໄກ່ ເພິ່ນມີໄກ່ຕໍ່ເຊື້ອໄກ່ປ່າທີ່ດີແລະໝານທີ່ສຸດໃນຂົງເຂດວຽງຈັນ ຜູ້ທີ່ຕິດຕາມໄປຕໍ່ໄກ່ກໍແມ່ນທ້າວອຸດາໄລ ທ້າວນວນຈັນ ໄປເທື່ອໃດເອົາໄກ່ປ່າມາເປັນຫາບ ສ່ວນນາງສຸວັນນາລີນັ້ນກໍຢູ່ເຮືອນນໍາອາເບິ່ງນ້ອງລໍຖ້າແຕ່ເພິ່ນມາແລະຕົ້ມນໍ້າຫຼົກໄກ່ປ່າ, ຫຼົກກະຮອກແດງ, ຄົວທັງນ, ຄົວຟານ, ຄົວປາຕາກແຫ້ງ ແລະ ເຮັດປາແດກ ປອກໜໍ່ໄມ້ເຮັດໜໍ່ໄມ້ສົ້ມແລະອື່ນໆອີກຫຼາຍຢ່າງ. ການລ່າເນື້ອໃຫ່ຍສມັຍປູ່ຈານພົມຍ້າຍມາຢູ່ບ້ານ ໄຮ່ໃໝ່ໆ ກວາງ, ຟານ, ໝູປ່າ, ມັ່ງ, ເມີຍ ບໍ່ໄດ້ອຶດໄດ້ຢາກ ພໍແຕ່ຕ້ອງການຢາກກິນກໍປືນອອກໄປຂ້າງບ້ານກໍຍິງເອົາມາກິນໂລດ ນີ້ແມ່ນຕາມຄວາມບອກເລົ່າຂອງປູ່ຈານພົມໃຫ້ລູກຫຼານຟັງ. ສມັຍນັ້ນເພິ່ນມີປືນເພິງ ຊື່ອີ່ສອນເປັນປືນໝານທີ່ສຸດມັນສະແດງອອກຢູ່ກັບໄມ້ຟັກມີຕາໝານ ແລະ ເສົາເປັນສ້ຽນ ເວລາຍິງສັດໄດ້ຄັ້ງໃດເພິ່ນກໍເຮັດພິທີແຮກໝານ ຄືເອົາປາຍປືນໄປຈໍ້າໃສ່ສັດແລ້ວເຊີນຜີປືນກິນກ່ອນ ແລ້ວຈຶ່ງຄົວໄດ້ເກິ່ງຮອບປີກໍເຮັດພິທີລ້ຽງປືນ ນີ້ເປັນການເຊື່ອຖືຕາມຄົນບູຮານສມັຍພໍ່ທິດພັນເພິ່ນກໍມີປືນເພິງຊື່ງເຈົ້າເມືອງນົນ ຫລື ຍາພໍ່ນົນເອົາມອບໃຫ້ກໍເປັນປືນທີ່ໝານເໝືອນປືນພໍ່ເພິ່ນ ມັນຂ້າສັດໃຫ່ຍຢູ່ຂົງເຂດນີ້ຫຼາຍບໍ່ແມ່ນຂອງຄ່ອຍ ໂດຍສະເພາະຊາຍຢູ່ທົ່ງໜອງຫຼວງເອົາກິນເກືອບຈະໝົດ. ຍາພໍ່ນົນກໍຄືພໍ່ລ້ຽງຂອງພໍ່ທິດພັນ ເພິ່ນເອົາໄປຢູ່ນໍາທີ່ວຽງຈັນຕັ້ງຫຼາຍປີ. ຕອນເພິ່ນໄປເປັນເຈົ້າເມືອງ ຢູ່ສາລະວັນອັດຕະປືເພິ່ນກໍເອົາໄປນໍາ. ພໍເປັນບ່າວເຕັມຄີງແລ້ວຢາກໄດ້ເມັຍຈຶ່ງຄືນມາຫາພໍ່ແມ່. ຍາພໍ່ນົນມີສວນກ້ວາງເຮືອນຫຼັງໃຫ່ຍງາມ ມີຝູງງົວ, ຝູງແບ້, ຝູງມ້າ ເຕັມບ້ານເມື່ອເສິກຍີ່ປຸ່ນເຂົ້າວຽງຈັນ ບ້ານເມືອງວຸ້ນວາຍເພິ່ນບໍ່ສາມາດມາກໍາກັບໄດ້ຈຶ່ງໄດ້ມອບສົມບັດຂອງເພິ່ນທຸກຢ່າງ ໃຫ້ພໍ່ທິດພັນເປັນຜູ້ຄອບຄອງ. ການໃສ່ແຮ້ວແມ່ນອາຊີບຂອງຈຸ້ມຕູ້ ຂານ ພໍ່ອ້າຍ ນາຍ ອ້າຍ ບິນ. ພວກເຂົາເຈົ້າແມ່ນມັກເຮັດແຮ້ວໃສ່ນົກ. ພວກເດັກນ້ອຍ ແລະ ຜູ້ໃຫຍ່ຈໍາ

ນອນນີ້ງແມ່ນຊອກຫາບ່ອນນົກກິນຫມາກໄມ້ແລ້ວກໍໄປນັ່ງຍິງໂດຍໃຊ້ ກະກຸນ, ພຸ, ຫນ້າເກັກ, ວິທີນີ້ຊາວບ້ານທົ່ວໄປໃຊ້ກັນບໍ່ມີຜູ້ເດັ່ນກ່າວຫມູ່ ຄືປະເພດອື່ນ. ການໃສ່ກະທີບກະຕ່ຳກໍບໍ່ເດັ່ນປານໃດຊາວບ້ານ ຈະເຮັດ ຕາມຮົ້ວໄຮ່ຂອງຕົນເອງເປັນສ່ວນໃຫຍ່. ມີຫນ້ອຍຄົນທີ່ຈະຕັດແລວ ແລະ ຫ້າງກະທີບກະຕ່ຳ. ຈະມີກໍມີແຕ່ລຸງ ກອງສີ ທີ່ເຮັດຕາມຫົວໄຮ່, ຫົວ ກຽງນາ, ຫລືຕາມເຕົ່າກ່ານຂອງລາວ. ສັດທີ່ໄດ້ກໍຈະເປັນປະເພດ, ເຫງັນ, ຫນູຫາງຫວາຍ, ຫນູພຸກ, ກະຮອກ, ກະແຕ, ຫລິ່ນ, ແລນ, ໄກ້ ເປັນຕົ້ນ. ກໍ່ງແມ່ນແຮ້ວບ້ວງຈະໄດ້ສັດໃຫຍ່ປະເພດ ກວາງ ຟານ ເສືອກໍມີ. ນອກຈາກທີ່ເວົ້າມາແລ້ວນັ້ນຍັງມີການໄຫ່ເນື້ອອີກທີ່ເປັນການ ລ່າສັດຮ່ວມກັນຂອງຊາວບ້ານ. ການໄຫ່ເນື້ອນີ້ຈະມີຜູ້ເຫັນ ຮອຍສັດ ກ່ອນວ່າເປັນຮອຍສັດຫຍັງໂຕໃຫຍ່ ຫລື ນ້ອຍ ຊໍ່າໃດ, ຈາກນັ້ນຈຶ່ງມາ ອວນເອົາຫມູ່ຜູ້ທີ່ມີປືນດີໆ ແລະ ຍິງປືນແມ່ນດີ. ເວລາໄດ້ຫມູ່ເກີງ 9 ຄົນ 10 ຄົນ ກໍປະກາດເອົາລູກແຫລ້ງຫມາຍເກີງຜູ້ໄຫ່ໂດຍບໍ່ມີອາວຸດອັນ ໃດເພື່ອໄປໄຫ່ໄລ່ສັດໃຫ້ຕື່ນ ແລະ ແລ່ນອອກໄປແກວທີ່ນາຍພານໄດ້ດັກ ລັດທາງສັດໄວ້ແລ້ວ. ເມື່ອເວລາໄປເກີງຈະມີຜູ້ຊໍານານວາງແຜນວ່າຈະ ເອົານາຍພານລັດບ່ອນໃດແດ່ ແລະ ຜູ້ເປັນແຫລ້ງຈະໄປເລີ່ມຕົ້ນໄຫ່ແຕ່ ໃສມາ. ເມື່ອເຂົ້າໃຈກັນດີແລ້ວກໍພາກັນໄປຢາຍນາຍພານ ຢາຍແຫລ້ງ ເມື່ອເປັນທີ່ຮຽບຮ້ອຍແລ້ວຈະມີສັນຍານດ້ວຍການເປົ່າມີໃສ່ກັນ ແລ້ວ ຈຶ່ງເລີ່ມໄຫ່. ຜູ້ເປັນແຫລ້ງກໍຮ້ອງໂຮເຮັດສຽງດັງອຶກກະທຶກໄປຕາມທິດ ທາງທີ່ໄດ້ແນະນໍາແລ້ວ. ເວລາສັດໄດ້ຍິນສຽງກໍແລ່ນໄປເພື່ອ ຜ່າຍພວກ ລູກແຫລ້ງ ເມື່ອໄປຮອດນາຍພານເຫັນກໍຍິງທັນທີພວກແຫລ້ງ ເມື່ອໄດ້ ຍິນສຽງປືນກໍໂຮແຮງກວ່າເກົ່າ. ການໄປໄຫ່ເນື້ອບາງເທື່ອ ກໍໄປຫລາຍ ບ່ອນໃນມື້ດຽວກັນ. ເວລາໄດ້ສັດເຊັ່ນ ຫມູ ຟານ ສອງສາມໂຕກໍຈະຄົວ ປັນເປັນພູດໃຫ້ແຕ່ລະຄົນ ສ່ວນນາຍພານຜູ້ຍິງໄດ້ຈະມີແກມຫົວສັດ ເພື່ອ ເປັນສັນຍາລັກວ່າ ພານຜູ້ນັ້ນເປັນຜູ້ຍິງສັດນັ້ນ. ຫລັງຈາກປັນຊີ້ນກັນ

ແລ້ວກໍພາກັນກັບມາບ້ານເປັນໝູ່ ໃກ້ຈະຮອດບ້ານນາຍພານຜູ້ບໍ່ໄດ້ຍິງປືນກໍຍິງປືນຂຶ້ນຟ້າ, ບາງເທື່ອກໍສອງຄົນຫລືສາມຄົນ ເພື່ອເປັນສັນຍານໃຫ້ທາງບ້ານຂົ້ວເຂົ້າຂົ້ວໃສ່ລາບໄວ້ເລີຍ. ຊາວບ້ານຮູ້ກັນດີເມື່ອໄດ້ຍິນສຽງປືນພວກໄປໄຫ່ມາປັ້ນໝາຍເກືອງການໄດ້ສັດໃຫຍ່. ຕອນແລງມາກໍຈະຫອມກິ່ນເຂົ້າຂົ້ວທົ່ວບ້ານເລີຍພ້ອມກັນນັ້ນກໍໄດ້ຍິນສຽງຟັກລາບສະນັ່ນທົ່ວບ້ານ. ຜູ້ທີ່ບໍ່ໄດ້ໄປກໍຈະກຶກແບ່ງກ້ວຍລາບໃຫ້ພ້ອມທັງເອີ້ນມາຊຸມກັນຢູ່ເຮືອນຜູ້ເຮັດລາບ. ປະເພນີແບບນີ້ຊາວບ້ານໄຮ່ດົ່ງ ເຄີຍປະຕິບັດກັນມາຢ່າງສມ່ຳສເມີ. ການໄຫ່ເນື້ອທີ່ງ່າຍທີ່ສຸດກໍ ແມ່ນໄຫ່ຍາມນ້ຳແກ່ງກ້ວມປ່າດົງພົງໄພແລ້ວສັດປ່າກໍຈະໄປຂ້ອນກັນຢູ່ບ່ອນໂນນສູງນ້ຳບໍ່ທັບກ້ວມໂນນສູງນີ້ມີໜ້າດິນຈຳກັດ ຜູ້ວາງແຜນກໍຈະສັ່ງພວກມີເຮືອອ້ອມດອນໄວ້ພ້ອມທັງປືນ ແລະ ຫອກແຫຼມພ້າມີດບາງຄັ້ງກໍບໍ່ຕ້ອງໃຊ້ປືນຍິງກໍໄດ້ພຽງແຕ່ຟັນຫຼືແທງເອົາກໍໄດ້ແລ້ວ. ເມື່ອສັດຈະພຍາຍາມລອຍນ້ຳ ໜີໄປບ່ອນໃໝ່ພວກນາຍພານ ແລະ ແຫຼ້ງກໍພາກັນຂຶ້ນດອນ ແຈກຢາຍກັນຕາມທີ່ວາງແຜນໄວ້. ພໍໄດ້ຍິນພວກແຫຼ້ງໄລ່ຮ້ອງໂຮຂຶ້ນ ສັດກໍຈະແຕກຕື່ນແລ້ວແລ່ນໄປໃຫ້ພານຍິງເອົາ ຫຼື ບໍ່ກໍໂຕນນ້ຳໜີລອຍໄປຫາພວກເຮືອແທງຫຼືຟັນເອົາຢ່າງສະບາຍ. ຕົວຢ່າງ: ປີໜຶ່ງຕອນນ້ຳກ້ວມບ້ານ, ອາວທຽມໄດ້ເປັນພານຍິງໝູຫອກແຂ້ວຍາວແຫຼມ ຢູ່ເລົ່າເຄີ່ນເຮືອປືນກົງກັນຂ້າມກັບບ້ານນ້ຳລຸນສວນກ້ວຍໃຫ່ຍ. ສອງປີຕໍ່ມາເລົ່າບ່ອນດຽວກັນນີ້ອ້າຍລົບລູກລຸງເກດເຮັດການຢູ່ວຽງນີ້ພັກກໍກັບເມືອຫາພໍ່ຢູ່ບ້ານພໍດີໄປພົບຊາວບ້ານຈະຕຽມກັນໄປໄຫ່ໝູປ່າກໍເລີຍຟ້າວໄປຄົວເອົາປືນແຝດ ເບີ12 ຂອງພໍ່ເພິ່ນໄປໄຫ່ນຳເຂົາເຈົ້າ. ອ້າຍລົບໄປລັກເປັນພານ ແຕ່ດ້ວຍຄວາມບໍ່ສຳນານໃນການລ່າເນື້ອຂອງລາວພໍດີແຫຼ້ງໄລ່ມາບັງເອີນແມ່ນຄວາຍເກີກໜ່ຳໃຫ່ຍອ້າຍລົບຄຶດວ່າໝູເລີຍລັ່ນໄກປືນໃສ່ ເຮັດໃຫ້ຄວາຍນອນຕາຍອີ່ງລີ່ງຢູ່ພວກໝູ່ ກໍຮ້ອງໂຮດ້ວຍຄວາມດີໃຈ ພໍຫຍັບເຂົ້າໄປເບິ່ງໃກ້ໆເລີຍແມ່ນຄວາຍເກີກໜ່ຳໃຫຍ່ພາກັນໜ້າຮາດໄປໝົດທຸກຄົນ ແລ້ວ

ຕົກລົງກັນຄືວແບ່ງພູດກັນໄປກິນແລ້ວຈ່າຍເງິນໃຫ້ເຈົ້າຂອງຄວາຍເຂົາໄປ. ອັນຕະລາຍຂອງການໄຫ່ເນື້ອກໍແມ່ນຄວາມຕັ້ງໃຈເກີນໄປ ຕຽມປືນແນລັດປ່ອງໄວ້, ພໍເຫັນຫຍັງເຫນັງລວດລາດພິດພາດກໍວ່າແມ່ນສັດ ແລ້ວລັ່ນໄກປືນໄປທັນທີ ບາງຄັ້ງກໍແມ່ນບາງຄັ້ງກໍພິດໄປ ອາດຈະຍິງໃສ່ຟານຫລືແຫລ້ງກໍເປັນໄດ້. ນີ້ເປັນບົດຮຽນທີ່ດີຄວນຈະຈໍາໄວ້ກ້າບໍ່ຄັກແນ່ 100 % ບໍ່ຄວນລັ່ນໄກປືນເປັນເດັດຂາດ. ຕົວຢ່າງລຸງເກດກໍເຊັ່ນດຽວກັນເຫັນຫມູປ່າເຂົ້າມາຢູ່ແຄມເລົ່າຫນອງຫນອນ ສວນນາຍພົນສູບທອນໃນເວລານັ້ນກໍຟ້າວມາຊວນເອົາບ້າບ່າວທິດລົດ ຫລື ພໍ່ແກ້ວພົວຫນ້າສາວແມ່ບົດຊິ່ງນາຍພານມີປືນແຝດຄືກັນກັບລຸງເກດ. ທັງສອງກໍຟ້າວເລັ່ງຫນ້າໄປຫາທີ່ເຫັນຮອຍຫມູຢູ່ນັ້ນ. ໄດ້ຕົກລົງໃຫ້ພໍ່ແກ້ວຫລືທິດລົດເປັນຜູ້ນໍາຮອຍເປົ່າຫວອດໄປລຸງເກດເປັນຜູ້ໄປລັດ ດ້ວຍຄວາມຕັ້ງໃຈຈົດຈໍ່ວ່າແຕ່ຫມູປ່າຈະອອກມາທາງໂຕແຕ່ຢ່າງດຽວແນປືນລັດຫນ້າບ່ອນຫມູຈະອອກມາທາງໂຕ ຕອນນີ້ພໍ່ແກ້ວຂາດການສັນຍານເປົ່າຫວອດເພາະປ່າຫຍ້າຝຮັ່ງຣົກຫລາຍໄດ້ເລືອຄານໄປເຫມືອນສັດປ່າ ເມື່ອລຸງເກດຜູ້ຕັ້ງໃຈຈົດຈໍ່ຈະຍິງ ຫມູຢູ່ແລ້ວເຫັນຫຍ້າຝຮັ່ງເຫນັງວັບແວບ ແລະ ເຫັນເປັນ ເງົາດໍາຄືກມືກລຸງເກດກໍຟ້າວລັ່ນໄກປືນແຝດລູກເກົ້າເຂົ້າ ໄປທັນທີພໍສຽງປືນມິດລົງກໍໄດ້ຍິນແຕ່ສຽງຮ້ອງໂອຍໆ ສອງບາດແລ້ວກໍຂາດໃຈຕາຍ ລຸງເກດບໍ່ຮູ້ຈະເຮັດແນວໃດພໍຢາກກັ້ນໃຈຕາຍກັບບ່ອນ ແຕ່ເຖິງຢ່າງໃດມັນກໍພິດໄປແລ້ວເອົາຄືນບໍ່ໄດ້. ລຸງເກດກັບຄືນມາບ້ານລາຍງານພີ່ນ້ອງຄອບຄົວພໍ່ແກ້ວແລ້ວກໍພາກັນຮ້ອງໄຫ້ພິດສະຫນັ່ນພີ່ນ້ອງ ກໍໄດ້ກັບຄືນໄປຟັງສົບພໍ່ແກ້ວທັນທີທັນໃດຢູ່ກັບບ່ອນຕາຍຕາມການເຊື່ອຖືຂອງປະເພນີລາວ ເຫດການນີ້ເກີດຂື້ນເມື່ອເດືອນເຈັດປີ1954.

ການພະລິດສິນຄ້າອາຮ້ານທີ່ຂາຍກັນນຳບ້ານ ຫລື ໃຫ້ແຂກກາຍໄປມາ

ປະຊາຊົນບ້ານໄຮ່ ນອກຈາກຮູ້ຈັກສ້າງຢູ່ທຳກິນ ແລ້ວຍັງມີການຜລິດສິນຄ້າເພື່ອຂາຍໃຫ້ແກ່ຊາວບ້ານດຽວກັນ ແລະ ແຂກກາຍໄຫມາ. ເຂົາເຈົ້າຮູ້ເຮັດເຂົ້າຫນົມຈີນກ້ວຍ, ເຂົ້າປຸ້ນ, ເຂົ້າປາດ, ອາຫານແຫ້ງເຊັ່ນ: ຈີນປາ, ຈີນຊີ້ນ, ປີ້ງປາ, ປີ້ງຊີ້ນ, ເຂົ້າຫນົມຄົກ, ເຂົ້າຫນົມບົວ, ເຂົ້າຫນົມຕາຄວາຍ, ເຂົ້າຂຽບ, ເຂົ້າຂຽບແຜ່ນ. ຜູ້ທີ່ເຮັດເຂົ້າປຸ້ນດີກ່ວາຫມູ່ ຫລື ຂາຍອອກດີກ່ວາຫມູ່ແມ່ນແມ່ຕູ້ຫອມ. ການເຮັດເຂົ້າປຸ້ນຂອງປ້າຫອມຈະເຮັດດ້ວຍມື ເລີ່ມແຕ່ເອົາເຂົ້າສານຈ້າວມ່າ, ຕຳໃສ່ຄົກມອງ, ຕອງແຊ່ໄວ້ໃນໃຫ, ແລ້ວຈຶ່ງເອົາໄປຕົ້ມໃສ່ຫມໍ້ ນ້ຳຮ້ອນຈາກນັ້ນເອົາໄປຕຳໃສ່ຄົກມອງໃຫ້ປຽນໆ ແລ້ວຈຶ່ງເອົາໄປຄັ້ນໃສ່ບົນວີເຂົ້າເອົານ້ຳໃສ່ໃຫ້ແຫຼວແລ້ວຈຶ່ງເອົາແປ້ງແຫຼວ ບີ້ນໃສ່ເຜືອນບີບລົງໃສ່ໝໍ້ນ້ຳຮ້ອນກໍຈະກາຍເປັນເສັ້ນເຂົ້າປຸ້ນ. ຈາກນັ້ນກໍຈັບເປັນຫົວໃສ່ກາດລຽນເປັນແກວກັນຢ່າງສວຍງາມ, ສ່ວນນ້ຳເຂົ້າປຸ້ນແມ່ນນ້ຳປາ ໂດຍທີ່ເອົາປາມາຕົ້ມໃຫ້ສຸກດີແລ້ວຈຶ່ງໃຈ້ເອົາກ້າງປາອອກຈາກຊີ້ນປາ, ແລ້ວເອົາລົງໃສ່ຫມໍ້ນ້ຳເຂົ້າປຸ້ນໃນນັ້ນລາວຍັງຕື່ມນ້ຳກະທິຫມາກພ້າວ ແລະ ຕື່ມຫມາກເຜັດແຫ້ງໃຫຍ່ທີ່ເອົາແກ່ນມັນອອກຫມົດ ແລ້ວຟັກໃຫ້ລະອຽດແລ້ວເອົາລົງໃສ່ໃນນ້ຳເຂົ້າປຸ້ນຄົນໃຫ້ເຂົ້າກັນພ້ອມນັ້ນລາວກໍໃຊ້ປາແດກທີ່ດີໆ ໃສ່ເຂົ້າໄປອີກ ເພື່ອປຸງລົດຊາດຂອງນ້ຳເຂົ້າປຸ້ນ. ລາວມີການຂົ້ວນ້ຳຫນ້າເຂົ້າປຸ້ນອີກ ເພື່ອເຮັດໃຫ້ມັນເບິ່ງແລ້ວສວຍງາມ ແລະ ເປັນຫນ້າກິນ. ຈາກນັ້ນ, ປ້າຫອມກໍຈະເອົາຫມາກປີມາຊອຍຢ່າງສວຍງາມສົມກັບຜັກບົ້ງ. ຫມາກປີຂອງຕູ້ຫອມຈະເປັນຫມາກປີກ້ວຍທະນີຊຶ່ງຖືວ່າແມ່ນຫມາກປີທີ່ມີລົດຊາດດີຂອງຊາວບ້ານ ໄຮ່ກໍຄືຊາວບ້ານທົ່ວໄປ. ກ່ອນອອກໄປຂາຍໃນເຊົ້ານີ້ຕໍ່ໄປລາວຕ້ອງຕຽມກ້ວຍບ່ວງໃຫ້ມີປະມານ 10 ຄູ່ ເພື່ອໃຫ້ຂາຍໄດ້ໃນເວລາດຽວກັນ 10

ຄົນ. ນອກຈາກກ້ວຍແລ້ວລາວຍັງມີນ້ຳລ້າງ ກ້ວຍໃສ່ຊຸໄປພ້ອມ. ນ້ຳທີ່ໃຊ້ລ້າງກໍແມ່ນນ້ຳຈຶ່ມ. ລາວຈະຫາບກະຕ່າເຂົ້າປຸ້ນ ຂອງລາວອອກມາໂດຍກະຕ່າທາງໜ້າ ແມ່ນນ້ຳເຂົ້າປຸ້ນ ກະຕ່າທາງຫລັງຈະແມ່ນເຂົ້າປຸ້ນ ແລະ ຈານໃຫຍ່ອັດປາກກາດເຂົ້າປຸ້ນ ແລະ ເຫຍື່ອເຂົ້າປຸ້ນ ໂດຍມີຜ້າປົກໄວ້. ລາວຈະຫາບຂຶ້ນໄປທາງບ້ານເໜືອ ແລ້ວເລາະມາທາງໃຕ້ໃຫ້ພໍດີກັບທີ່ລົດບາແພງ ບ້ານເກີນມາຈອດລໍຖ້າຂ້າມບັກພໍດີ ປ້າຫອມຈະຂາຍເຂົ້າປຸ້ນຂອງລາວນີ້ລະຫມື່ນໝົດກ່ອນທີ່ລົດບາແພງບ້ານເກີນຈະຂ້າມບັກໝົດ. ດ້ວຍເຫດນັ້ນຈຶ່ງກືວ່າລາວເປັນຜູ້ຂາຍໄດ້ດີ ແລະ ຫລາຍໃນສມັຍນັ້ນ. ນອກຈາກປ້າຫອມກໍມີແມ່ຕູ້ຫວັດ, ເອື້ອຍແຈ່ມ, ແມ່ຕູ້ຫລ່ຽນ, ແມ່ຕູ້ບັນ ແລະ ຕູ້ເຜືອງ. ສ່ວນກະໜົມດອກບົວແມ່ນ ແມ່ຕູ້ເຫລືອເປັນຜູ້ທີ່ກືເອົາອາຊີບນີ້ລ້ຽງລູກຂອງລາວ. ສ່ວນຈືນກ້ວຍ, ມັນດ້າງ ແລະ ເຜືອກ ແມ່ນ ແມ່ ຕູ້ບັນ.

ດ້ານເຄື່ອງຫັດຖະກຳ

ຊາວບ້ານໄຮ່ໃນສມັຍກ່ອນ ກໍມີການຜລິດເຄື່ອງຫັດຖະກຳເຊັ່ນກັນເປັນຕົ້ນແມ່ນ: ຕໍ່າແຜ່ນແພ, ຕໍ່າສິ້ນ, ຜ້າສະໂຫລ້ງ ,ແພຂາວມ້າ, ແລະຕັ່ງຫວາຍບັ່ງ. ຕາມການບອກເລົ່າຂອງຜູ້ເຖົ້າບ້ານໄຮ່ຫລາຍທ່ານບອກວ່າໃນເມື່ອກ່ອນແຕ່ລະເຮືອນ ໂດຍສະເພາະຜູ້ຍິງ ແມ່ນຕ້ອງມີກີ່ຕໍ່າຫູກໄວ້ຕາມຈຳນວນຜູ້ຍິງຢູ່ໃນເຮືອນນັ້ນ. ຜູ້ຍິງບ້ານໄຮ່ໃຫຍ່ຂຶ້ນມາຕ້ອງຮຽນຮູ້ການຕໍ່າຫູກລ້ຽງມ້ອນ, ສາວໄຫມ, ເກັບຄິດ, ເກັບລາຍ, ມັດໝີ່, ປູກມອນ , ລ້ຽງມ້ອນ, ປູກ ຕົ້ນຄາມໜໍ້ນິນ, ແລະ ຮຽນຮູ້ວິທີປະສົມສີທຳມະຊາດ ໄວ້ຍ້ອມຜ້າຂອງເຂົາເຈົ້າ. ສວນມອນຂອງຊາວບ້ານໄຮ່ແມ່ນຕັ້ງແຕ່ດິນຫລັງບ້ານຫລັງເຮືອນຕູ້ບັນ, ຕູ້ຫອມຍາວໄປຈົນຮອດ ດອນແດງເຫລາະຕາມສວນທ່ານນາຍພົນ ສູນທອນເກົ່າຈົນເກືອງໜອງຫລວງ

ສວນມອນຂອງຊາວບ້ານ ຈະຢາຍໄປເປັນຕອນເປັນຕອນຂອງໃຜມັນ. ເຂົາເຈົ້າຫຍິບເຄື່ອງນຸ່ງໄວ້ໃຊ້ໃນຄອບຄົວຂອງຕົນເອງເປັນສ່ວນໃຫຍ່. ສ່ວນການເຮັດໄວ້ຂາຍນັ້ນມີຫນ້ອຍ ຍ້ອນວ່າໃນສມັຍນັ້ນແຕ່ລະບ້ານກໍຈະມີຄືກັນ. ຜູ້ເປັນແມ່ເຮືອນຈະຕໍ່າຜ້າຕໍ່າແພໃຫ້ຜູ້ເປັນພໍ່ ແລະ ລູກເຕົ້າ, ສ່ວນຜູ້ສາວຈະຕໍ່າໄວ້ໃຊ້ຕົນເອງ ແລະ ເຮັດເປັນຂອງຝາກໃຫ້ແກ່ຄົນຮັກ ແລະ ພໍ່ແມ່ຂອງຊູ້ຮັກຂອງຕົນເອງເພື່ອສະແດງໃຫ້ພໍ່ແມ່ ຂອງຊູ້ຕົນເອງວ່າຕົນເອງມີຄວາມສາມາດເຮັດສິ່ງທໍເລົ່ານັ້ນໄດ້ແລ້ວ ແລະ ພ້ອມທີ່ຈະສ້າງຄອບຄົວໄດ້. ມັນເປັນມາດການວັດແທກ ເຖິງຄວາມສາມາດໃນການສ້າງຄອບຄົວ ຂອງຜູ້ຍິງລາວໃນສມັຍນັ້ນ. ຜູ້ບ່າວຈະຊອກຫາແຟນຜູ້ທີ່ຮູ້ຫຍິບປັກທັກແສ່ວ, ຕໍ່າຫູກທໍໄຫມ, ລ້ຽງມ້ອນສາວໄຫມ, ເກັບຄິດເກັບລາຍ, ແລະ ເຮັດໄຮ່ນາສວນເປັນ. ນອກນີ້ຍັງຕ້ອງເປັນຄົນສະຫງ່ຽມຄ່ຽມຕົວ, ເວົ້າຈາອ່ອນຫວານ, ສຸພາບອ່ອນໂຍນ, ຮູ້ລົມເກົ້າແກ່ຜູ້ເລັກເດັກນ້ອຍ, ຮູ້ຮີດສິບສອງຄອງສິບສີ່, ຮີດຍີ່ຄອງຈຽງ, ແລະ ຮູ້ເຮັດຢູ່ຄົວກິນ. ສ່ວນຜູ້ເປັນສາວຈະຊອກຫາຜູ້ຊາຍ ທີ່ມີຄວາມຮູ້ຄວາມສາມາດທາງດ້ານເຮັດໄຮ່ໄຖນາ, ຮູ້ຈັກຕອກເຫລົາຫວາຍ, ຮູ້ສານກະບຸງກະຕ່າ, ຮູ້ເຮັດຄາດເຮັດໄຖ, ຮູ້ການໄຮ່ ຊາວນາ, ຮູ້ຫາປາລ່າເນື້ອ, ຮູ້ໄຫວ້ພຣະສວດມົນ, ຮູ້ຮີດຄອງປະເພນີວັທນະທໍາ, ຮູ້ອ່ານຫນັງສືພູກໃບລານ, ຮູ້ຂຽນຫນັງສືພູກ, ຮູ້ປຸກຍ້າວສ້າງເຮືອນ, ແລະ ຮູ້ເຮັດບຳວັດບຳວາ. ດັ່ງນັ້ນ, ຜູ້ບ່າວຈະຕ້ອງບວດກ່ອນຈຶ່ງຄ່ອຍແຕ່ງງານ ເພື່ອໃຫ້ສາມາດອ່ານຫນັງສືໃບລານໄດ້. ຜູ້ສາວຈະນິຍົມຊອກຫາແຟນຜູ້ເປັນ ອ້າຍທິດ, ອ້າຍຈານ, ອ້າຍຈານຄູ, ອ້າຍຈານຊາເປັນຕົ້ນ. ມາດການນີ້ແມ່ນວັທນະທໍາອັນນຶ່ງທີ່ໃຊ້ທົ່ວໄປໃນປະເທດລາວໃນສມັຍນັ້ນ. ນອກຈາກການລ້ຽງມ້ອນຍັງມີຊາວບ້ານໄຮ່ບາງຄົນເຮັດອາຊີບສານຕັ່ງຫວາຍຂາຍ ເຊັ່ນ: ຕູ້ຈອດ ຫລື ແມ່ ນາລີ ແລະ ພໍ່ວຂອງລາວຕູ້ ປັງ ແລະ ພໍ່ວຜູ້ທີ່ສອງຕູ້ເພືອງຕູດ. ຍ້ອນເງື່ອນໄຂໃນເວລານັ້ນມີເຄື່ອຫັນ ແລະ

ຫວາຍຕາມທົ່ງນະຊາດຫລາຍ ຄອບຄົວຕູ້ນາລີ ຈຶ່ງຍຶດອາຊີບສານຕັ່ງຫວາຍຂາຍເປັນສິນຄ້າ. ຕັ່ງຫວາຍມີຄຸນສົມບັດຄື: ນັ່ງບໍ່ເຈັບກົ້ນ, ເບົາ, ທົນທານຕໍ່ແດດຝົນ, ລາຄາກູກ, ແລະ ບໍ່ມີເຫລັກຕະປູ. ຜູ້ໃດຈະກໍາລູກ ແລະ ນັ່ງໄຟຢູ່ກໍາກໍສັ່ງຊື້ ຕັ່ງຫວາຍຈາກຕູ້ນາລີທັງນັ້ນ. ໃນສມັຍນັ້ນຜູ້ທີ່ເຜົາກ່ານໃນບ້ານໄຮ່ ກໍແມ່ນລຸງພໍ່ກອງສີ ຫລື ພໍ່ທິດພັນນັ້ນເອງລາວມີເຕົາເຜົາກ່ານໃຫ່ຍຢູ່ໃນນຮ່ອງເມກຊຶ່ງແຕ່ກ່ອນຮ່ອງເມກແມ່ນເຂດແດນລະຫວ່າງບ້ານຫາດກັ່ງ ແລະ ບ້ານໄຮ່. ລຸງທິດພັນລາວມີເຕົາ ກ່ານ 8 ເຕົາໃຫ່ຍເວລາເອົາກ່ານອອກ ແມ່ນ ເຕັມລົດຄັນນຶ່ງເລີຍ. ໃນເວລານັ້ນຟືນເຜົາກ່ານ ຂອງລາວບໍ່ອຶດ ເພາະວ່າໄມ້ບົກມີເປັນຈໍານວນຫລາຍນໍາດົງຈອງຊຶ່ງແມ່ນປ່າໄມ້ຂອງຊາວບ້ານໄຮ່ ແລະ ຢູ່ຕາມດອນຂັ້ນໜອງປາຄໍ່ຂາວ ແລະ ອື່ນໆ. ຄົນງານຂອງລາວຈໍານວນນຶ່ງແມ່ນເອົາມາແຕ່ຝັ່ງຂອງກົ້ານັ້ນ. ໃນຊຸມປີ 1960 ຄົນຢູ່ພາກອີສານຈະມາຫາຮັບຈ້າງ ຢູ່ຟາກນໍ້າຂອງເບື້ອງລາວ. ລຸງກອງສີເປັນເຖົ້າແກ່ກ່ານ ໃນສມັຍນັ້ນ ລາວໄປທາງໃດກໍມີຄົນນັບໜ້າຖືຕາ. ເວລາມີບຸນສິນກິນທານບ້ານໃກ້ເຮືອນຄຽງລາວກໍເອົາລົດປິດສັນ NISSAN ຂອງລາວພາຊາວບ້ານໄປຫລິ້ນບຸນ. ເວລາໄຟໃໝ້ລົດກ່ານຂອງລາວໆກໍຂັບລົດລົງໄປແຄມນໍ້າງື່ມແລ້ວຊາວບ້ານ ກໍພາກັນເອົາຂຸໃພຂຸມັນໄປສາດນໍ້າໃສ່ມອດໄຟຊ່ວຍລາວລົດ NISSAN ຄັນນີ້ແມ່ນອາວທຽມເພີ່ນເປັນນາຍພາສີໃຫ່ຍເປັນຜູ້ຕິດຕໍ່ຊື້ໃຫ້ໃໝ່ອຽມຈາກປະເທດຍີ່ປຸ່ນ ຈຶ່ງໄດ້ລາຄາຖືກເປັນພິເສດຄື 120.000 ກີບໃນສມັຍນັ້ນ 1958 ຊຶ່ງອາວທຽມ ແລະ ລູງພໍ່ ໝຸດໃຫ້ຢືມເງິນສ່ວນໜຶ່ງ ແລ້ວກໍໃຊ້ຄືນຫຼັງຈາກໄດ້ຂາຍກ່ານແລ້ວ. ເວລາລາວຂາຍກ່ານກັບເມື່ອລາວກໍຊື້ຊີ້ນ ຫລື ຫອຍແຄງໄປພັນກິນ ຫລື ເຮັດພັນແນມປາແລ້ວລາວກໍເອີ້ນ ພີ່ນ້ອງໄປກິນນໍາກັນຊຸມເຫລົ້າກັນ. ເວລາຊຸມເຫລົ້າສຽງລົມຂອງເຂົາເຈົ້າ ຈະໄດ້ຍິນຮອດຟາກນໍ້າງື່ມເບື້ອງທ່າງ່ອນ ຍ້ອນວ່າເວລານັ້ນ ຕາມບ້ານແກວນັ້ນແມ່ນນາງຽບສະຫງັດດີ. ຕູ້ວິໄລທ່າງ່ອນຊຶ່ງ

ແມ່ນສ່ຽວອັກສ່ຽວແພງ ຂອງລຸງເກດສາມາດຮູ້ໄດ້ວ່າລູກຫລານຕູ້ຈານ ພົມລົມເລື່ອງໃດກັນ. ເລື່ອງລົມກັນຂອງເຂົາເຈົ້າຈະ ແມ່ນເລົ່າປະສົບ ການໆຫາກິນເຊັ່ນການລ່າເນື້ອ, ການຫາປາ ແລະ ວິທີຈັບສັດຕ່າງໆ.

ການຢູ່ຮ່ວມກັນຂອງຊຸມຊົນບ້ານໄຮ່:

ເນື່ອງຈາກຊາວບ້ານໄຮ່ ແມ່ນແຕ່ພີ່ນ້ອງກັນທັງນັ້ນມັນຈຶ່ງມີຄວາມ ສາມັກຄີສູງ ໃນຊຸມຊົນເຂົາເຈົ້າຢູ່ກັນແບບຄອບຄົວໃຫຍ່ນຶ່ງ. ມີວຽກໜັກ ຫນາຈະເອົາໃຈໃສ່ຊ່ວຍກັນເຊັ່ນການປຸກເຮືອນ, ຖາງປ່າເຮັດໄຮ່, ກ່ຽວ ເຂົ້າ, ຟາດເຂົ້າທີ່ກືວ່າເປັນວຽກໃຫຍ່. ເຂົາເຈົ້າຈະໃຊ້ວິທີໄປເລົ່າກັນ ຫລື ເຮົາແຮງກັນເປັນລະບົບແບບຂ້ອຍໄປຊ່ວຍເຈົ້າແລ້ວເຈົ້າມາຊ່ວຍຂ້ອຍ ໂດຍມີຈຸດປະສົງ ໃຫ້ວຽກງານການຜລິດສໍາເລັດ ໄປທັນກັບລະດູການ. ຫາກມີການປຸກເຮືອນປຸກຊານຈະມີການວານກັນໄປຊ່ວຍຫມົດບ້ານຜູ້ ຊາຍຈະຊ່ວຍງານຫນັກເຊັ່ນ: ສິວຫົວເສົາ, ເຈາະຮູ, ຕອກສີຫນ້າ, ແຕ່ ກ່ອນຈະບໍ່ມີການໃຊ້ຫລັກຕະປູມີແຕ່ການເຈາະຮູແລ້ວກໍຫລົາໄມ້ ເຮັດໄລ ອັດໃຫ້ແຫນ້ນ. ເຂົາເຈົ້າຈະເຮັດເສົາເປັນສີຫນ້າຂື້ນໄປແຕ່ລຸ່ມເລີຍ.ຫລັງ ຈາກຂັດເສົາ ແລະ ສີຫນ້າໃສ່ກັນແຫນ້ນດີແລ້ວເຂົາເຈົ້າຈະແທກ ແລະ ຂຸດ ຂຸມເສົາເຮືອນ, ຫລັງຂຸດແລ້ວກໍພາກັນຫາມໄປລໍໄວ້ປາກຂຸມ ເມື່ອກະຕຽມ ແບບນີ້ແລ້ວຈຶ່ງຕຽມໄມ້ຄໍ້າ ແລະ ເຊືອກດຶງເສົາຕັ້ງຂຶ້ນ ວຽກນີ້ກືວ່າວຽກ ທີ່ຕ້ອງໃຊ້ແຮງງານຫລາຍມາດຶງຊ່ວຍກັນ ເມື່ອເສົາລົງຂຸມແລ້ວຜູ້ກົມດິນ ກໍກົມດິນໃຫ້ແຫນ້ນພ້ອມທັງໃຫ້ທ່ຽງດ້ວຍ ຈະເຮັດແບບນີ້ຈົນຕັ້ງເສົາເຮືອນ ແລ້ວ. ຈາກນັ້ນຈຶ່ງຊ່ວຍກັນວາງຂາງ, ໂດຍໃຊ້ຫວາຍມັດໃຫ້ແຫນ້ນ, ວາງ ຂື່, ວາງສີຍົວ, ວາງກອນ ເພື່ອມຸງຫຍ້າ. ຈາກນັ້ນຈຶ່ງວາງເຊັນຝາ ແລະ ວົງກົບ. ກ່ອນການຕັ້ງເຮືອນຜູ້ເປັນເຈົ້າຂອງ ຈະຕ້ອງຕຽມເຄື່ອງເຮືອນ ໃຫ້ຄົບດີເສັຽກ່ອນຈຶ່ງວານພີ່ນ້ອງມາຊ່ວຍໃນການຕັ້ງເຮືອນ. ການປຸກ ເຮືອນແບບນີ້ຈະໃຊ້ເວລາບໍ່ດົນກ້າເຮັດເຮືອນລາວແບບເດີມ.

ແຕ່ກ້ຳມີການຂັ້ນທ້ອງດີ ກໍຈະໃຊ້ເວລາເປັນເກີງອາທິດ. ກ້ຳແມ່ນແບບເຮືອນຊ້ານທຳມະດາກໍຈະແລ້ວພາຍໃນສອງສາມວັນ. ປະຈຸບັນ, ເຮືອນແບບເດີມ ນັ້ນບໍ່ມີໃຫ້ໄດ້ເຫັນແລ້ວ. ໃນຍາມມີບຸນສິນກິນທານຊາວບ້ານໄຮ່ຈະຊ່ວຍກັນໝົດບ້ານແບບແຕ່ລະເຮືອນ ຕ້ອງມີຜູ້ໄປຊ່ວຍວຽກເຮືອນບຸນເປັນຕົ້ນງານກິນດອງ, ງານກອງບວດ, ງານກອງອັດກະ, ງານຜ້າປ່າ, ງານກອງກະກິນ. ກ້ຳແມ່ນງານວັດທຸກຄອບຄົວແມ່ນເປັນເຈົ້າພາບຮ່ວມກັນໂດຍຜູ້ເປັນສາລະວັດ *(ຜູ້ເວົ້າບໍາວຽກວັດ)* ຈະແຈ້ງຈຸດປະສົງຂອງງານໃຫ້ຜູ້ເປັນນາຍບ້ານ ຈຶ່ງມີການປະຊຸມກັນໝົດບ້ານແຕ່ລະເຮືອນໄປຟັງນຳກັນຢູ່ເຮືອນນາຍບ້ານ ຫລື ຢູ່ວັດເພື່ອມີການປຶກສາຫາລືນຳຄູບາໃຫຍ່ຢູ່ວັດເລີຍ. ການເຮັດບຸນວັດສມັຍນັ້ນຈະຕ້ອງມີການປຸກພາມ ເພື່ອໄວ້ຕ້ອນຮັບແຂກຕ່າງບ້ານ. ແຂກຕ່າງບ້ານທີ່ຈະມານັ້ນ ຈະຕ້ອງໄດ້ຮັບໃບດີກາຂ່າວບຸນແຕ່ລະບ້ານ ຈະມາຕາມບັດເຊີນນັ້ນ. ພາມຈະຂັ້ນໄວ້ສຳລັບແຕ່ລະບ້ານແລ້ວແຕ່ງໃຫ້ສອງສາມຄອບຄົວ ຮັບຜິດຊອບການຢູ່ກິນ, ບ່ອນຢູ່ບ່ອນນອນເປັນຕົ້ນ. ພາມແຕ່ລະພາມຈະຢາຍໄປຕາມຕ້າຍວັດ ແລະ ມີຫລັງຄາມຸງຢ່າງດີ. ເວລາຈະຮອດບຸນວັດຊາວບ້ານຈະພາກັນ ເຮັດເຂົ້າປຸ້ນໄວ້ເຮືອນໃຜເຮືອນລາວ ເວົ້າໄດ້ວ່າແຕ່ລະເຮືອນແມ່ນຕຽມເຂົ້າປຸ້ນເຫລົ້າເດັດເຫລົ້າສາໂທ, ເຂົ້າປາດ, ແລະ ອື່ນໆ.

ນອກຈາກນີ້ຍັງມີການຫາຊີ້ນຫາປາໄວ້ ເພື່ອຕ້ອນຮັບຍາດພີ່ນ້ອງມາແຕ່ທາງໄກແລະສ່ຽວເຫີຍເຂີຍຮັກ. ການຊອກຫາຊີ້ນປາອາຫານນອກຈາກແຕ່ລະຄອບຄົວຈະຊອກມາໄວ້ເຮືອນຕົນເອງແລ້ວຍັງມີການຫາປາລວມອີກໂດຍແຕ່ງກັນອອກໄປຫາປາຕາມນໍ້າງື່ມ, ຕາມຫ້ວຍ, ຕາມ ໜອງ. ເມື່ອໄດ້ແລ້ວກໍເອົາມາຂັງໄວ້ເພື່ອເຮັດອາຫານຮັບແຂກ ແລະ ແຕ່ງຈັງຫັນ ແລະ ເພນ. ຊຸມຜູ້ບ່າວຜູ້ສາວແມ່ນໄປຊອກເອົາດອກໄມ້ປ່າມາເອ້ວັດເອ້ພາມໃຫ້ສວຍງາມ. ເຂົາເຈົ້າຈະຊອກເອົາດອກຈິກດອກຮັງທີ່ມີກິ່ນຫອມເພື່ອ ເຮັດໃຫ້ພາຍໃນວັດນັ້ນຫອມຮື່ນໄປດ້ວຍກິ່ນດອກໄມ້. ເວລາເກີງ

ຍາມບຸນ ຝຸງຜູ້ເກົ້າຈະຟັງເທດຟັງທັມບໍວລະບັດວັດວາອາຮາມ. ຟັງເທດມະຫາຊາດບຸນກໍມີການແຂ່ງຂັນແຫລ້ມະຫາຊີ່ງຄູບາ ແລະ ຈົວມາແຕ່ບ້ານອື່ນຈະເຂົ້າຮ່ວມປະຊຸມກັບບັນດາອາຈານໃຫຍ່ ຈະເປັນຜູ້ຕັດສິນໃຫ້ຜູ້ທີ່ໄດ້ທີນຶ່ງ ຫລື ສອງ ສາມ. ໃນເວລາແຫລ້ຢູ່ນັ້ນຝູງຜູ້ເກົ້າຈະມີບ້າງແກມສົມພານຍື່ນໃຫ້ຜູ້ທີ່ຕົນເອງເຫັນວ່າມ່ວນ ແລະ ກໍມັກຈົວຜູ້ນັ້ນແຫລ້ມະຫາ. ຈະເຮັດແບບນີ້ໄປຈົນເຖິງ 3 ວັນຈຶ່ງເປັນອັນວ່າບຸນແລ້ວ. ນອກຈາກເທດແລ້ວການຄົບງັນຍັງມີຂັບທຶ້ມ, ລຳກອນ, ລຳ ເລື່ອງ, ຫນັງຕະລຸງແຕ່ທີ່ນິຍົມກັນຫລາຍ ແມ່ນຂັບທຶ້ມເພາະຜູ້ບ່າວຈະມັກ ຂັບໃສ່ຜູ້ສາວບ້ານອື່ນສ່ວນຜູ້ສາວບ້ານອື່ນກໍຕອບເປັນພຍາມາ. ດ້ວຍເຫດນີ້ຄົນສມັຍນັ້ນຈຶ່ງມີຊູ້ມີແຟນຢູ່ບ້ານອື່ນ. ແຕ່ລະບ້ານຈະຕ້ອງເລືອກເອົາຜູ້ສາວຜູ້ບ່າວ ທີ່ມີຄວາມສາມາດທາງດ້ານຄຳພະຫຍາ, ສາມາດຂັບລຳໄດ້ມານຳໃນຂະບວນຂອງເຂົາເຈົ້າບໍ່ດັ່ງນັ້ນຈະຖືກບ້ານອື່ນເຍີ້ຍວ່າ ບ້ານນັ້ນບໍ່ມີຄົນ ມີຄວາມຮູ້ຄວາມສລາດ. ມັນແມ່ນປະເພນີທີ່ຫນ້າປະທັບໃຈແທ້ໆ ເພາະທຸກຢ່າງແມ່ນພູມປັນຍາຂອງຄົນທ້ອງກິ່ນເອງ. ແມ່ນແຕ່ ສຽງຂັບສຽງລຳກອນພຍາລ້ວນແລ້ວແຕ່ແມ່ນພູມປັນຍາຂອງເຂົາເຈົ້າລ້ວນໆ. ຜູ້ທີ່ສາມາດຂັບທຶ້ມໄດ້ດີໃນບ້ານໄຮ່ກໍມີຫລາຍຄົນເຊັ່ນ: ຕູ້ພຽນ, ຕູ້ເປື່ອງ, ຕູ້ທິດແພງສີ, ສ່ວນຕູ້ສິງ ຫລື ຕູ້ເກົ້ານັ້ນແມ່ນເວົ້າເປັນໂຄງ ເປັນກອນໄປບໍ່ແມ່ນຂັບ ຫລື ລຳແຕ່ຫາກມ່ວນເຊັ່ນກັນ. ຜູ້ຂັບໄດ້ດີແທ້ ແມ່ນຕູ້ພຽນເຊັ່ນກອນຂັບບາງກອນຂອງລາວດັ່ງນີ້:

ກອນຂັບກ້ຽວສາວຂອງຕູ້ພຽນ

ຟັງເດີແກ້ວ ຄຳພີທູນບຸນລື່ນ ອັນແມ່ນວ່າຄົນຢູ່ໃຕ້ແຜ່ນພື້ນ ສະອອນອື້ນຊື່ນກະໃຈ ໃຜມາເຫັນກໍຢາກໄດ້ ເນື້ອໄຫມ່ນວນລະອໍ ໃຜໆກໍຫາກເຊຊວນເລາະ ຊອກຊະແຫວງຫານ້ອງ ພໍປານພານມະໄນເກົ້ານໍາຫາອິງພຣະເຫວດ ເປັນດັ່ງຮ້ອຍຫມື່ນມື້ຍັງບໍ່ພໍ້ພົບພະນາງ ຄັນແມ່ນວ່າ

ມື້ນີ້ນັ້ນ ອ້າຍກໍມາພົບນ້ອງຍອດສະຫງ່າງາມຫວານ ເປັນແຕ່ບຸນສົມພານ ພີ່ຊາຍຫລາຍຈຶ່ງຄ່ອຍຈູງມາພໍ້ ພໍແຕ່ມາເຫັນແລ້ວ ຊິມາດາຍເມືອເປົ່າຊົ່ວບໍ ຕັ້ງແຕ່ພະພໍ່ອ້າຍກະຍັງເອີ້ນຊັ່ງພີ່ຊາຍ ຄັນແມ່ນວ່າຄົນຂາວ ກໍາພໍ່ອ້າຍວ່າບໍ່ໃຫ້ຈາ ກັບທັງຄົນຂາວກາ ພໍ່ພີ່ຊາຍ

ເພິ່ນກະບໍ່ໃຫ້ເວົ້າ ຄັນແມ່ນວ່າຄົນຄືນ້ອງ ຈວງຄຳເວົ້າແລ້ວບໍ່ວ່າຫຍັງ ຄັນແນນວ່າອ້າຍ ນີ້ຄັນບໍ່ໄດ້ກັບນ້ອງ ແມ່ນວ່າຄືນເມືອເຮືອນ ຫລັງກັບແສ້ ຕີຕໍ່ແຍກັນຢູ່ ຫິວກັບໄມ້ຄ້ອນ ຊິນອນກິ້ງກ່ອມກັນຄັນວ່າບໍ່ໄດ້ນ້ອງຊາດນີ້

ແມ່ນຕາຍໄປອ້າຍກະວ່າຊິບໍ່ໃຫ້ມັນເຫນົ່າ ຄັນວ່າເຜົາອ້າຍກະວ່າຊິບໍ່ໃຫ້ມັນໃຫມ້ໃຫ້ດໍາປີ້ດັ່ງກາ ຄັນວ່າຕາຍຈາກນ້ອງຊາດນີ້ ຊິໄປເກີດເປັນຜີ ຄັນວ່າສາທຸເດີ ຂໍໃຫ້ມີລິດທິແຮງ ເກົ່າພະອິນຢູ່ເທິງຟ້າ ອັນແມ່ນວ່າ ກະຊິນໍາເຂນຂ້າທາລຸນໄປແຍ່ງ

ເອົາສົມແພງຫມ່ອມຫລ້າ ນາງຟ້າຫນໍ່ພະຍາ ບໍ່ໄດ້ແກ້ວລອດຟ້າ ລູກປະເສີດດວງຫອມຊາຍກະຊິປອມຕົວເປັນຫມູ່ມະແລງວັນນ້ອຍ ກະສີໄປງອຍຮ້ອງ ກົ້ງດາດໍາໆ ສາວຈວງຄຳໃຫ້ນ້ອງໄດ້ ຫລືງລ່ຳຈວງຄຳເອີຍບໍ່ໄດ້ຄຳ ຕອບນ້ອງ ຄືນນີ້ພີ່ບໍ່ເມືອແທ້ ແລ້ວ.



ຕູ້ ບອນສີ (ຕູ້ພຽນ) ຜູ້ເປັນໝໍຂັບປະຈຳບ້ານ

ໃນເວລາມີການເຈັບການຕາຍເກີດຂຶ້ນໃນບ້ານ ຊາວບ້ານຈະເອົາໃຈໃສ່ກັນທີ່ສຸດຊັ່ນ: ມາເຝົ້າມາງັນ, ຊອກຢາມາໃຫ້, ເອົາຂອງກິນມາໃຫ້, ນັ່ງໂອ້ລົມການຂ່າວຄາວ, ເຮັດໃຫ້ຄອບຄົວຂອງຜູ້ເຈັບມີ ຄວາມອົບອຸ່ນ. ຫາກມີການເສັຍຊີວິດກໍຊ່ວຍ ມ້ຽນຄາບສົ່ງສະການໝົດບ້ານເລີຍ. ການມ້ຽນຄາບສົ່ງສະການຈະມີຢູ່ສອງແບບຄື: ແບບເຜົາສົບ ແລະແບບຝັງສົບ. ສົບທີ່ຈະເຜົາແມ່ນຜູ້ຕາຍເຈັບຕາຍໄຂ້, ຕາຍເຖົ້າຕາຍແກ່. ສ່ວນສົບທີ່ຈະຝັງແມ່ນຜູ້ຕາຍຫງຸຊັ່ນ: ຕາຍອຸບັດເຫດ, ຕາຍບໍ່ເຈັບບໍ່ໄຂ້, ຕົກຕົ້ນໄມ້, ງົວຊົນ, ງູຕອດ, ຕົກເຮືອນຕາຍ, ແລະ ອື່ນໆ ລ້ວນແຕ່ກໍກຝັງທັງນັ້ນ. ສ່ວນສົບເດັກ ນ້ອຍຈະມີແຕ່ຝັງທັງໝົດ.

ການລະຫລິ້ນຕ່າງໆຂອງຊາວບ້ານໄຮ່

ຊາວບ້ານໄຮ່ກໍມີການລະຫລິ້ນຕ່າງໆ ຊັ່ນກັນ ໃນຍາມມີບຸນສິນກິນທານ. ຊາວບ້ານໄຮ່ຈະປະຕິບັດຕາມຮີດສິບສອງຄອງສິບສີ່ຮີດຍີ່ ຄອງຈຽງເປັນວົງວຽນໄປແຕ່ລະປີ. ຜູ້ເຖົ້າຈະເປັນຜູ້ພາລູກຫລານເຮັດ ເພື່ອໃຫ້ລູກຫລານຮູ້ຈັກປະເພນີອັນດີງາມ ຂອງລາວເຮົາ. ບຸນໃຫຍ່ໆມີດັ່ງນີ້: ບຸນຄູນເຂົ້າ, ບຸນເຂົ້າຈີ່ເດືອນສາມເພັງ, ບຸນພະເວດ, ບຸນກຸດສົງການ,

ບຸນບັ້ງໄຟ, ບຸນເຂົ້າພັນສາ, ບຸນຫໍ່ເຂົ້າປະດັບດິນ, ບຸນຫໍ່ເຂົ້າສະຫລາກ, ບຸນອອກພັນສາ, ບຸນຊ່ວງ ເຮືອ, ແລະ ບຸນກະຖິນ ເປັນຕົ້ນ.

ບຸນຄູນເຂົ້າ:

ຈະເປັນບຸນທີ່ຈັດຂຶ້ນຫລັງຈາກຊາວບ້ານໄດ້ຂົນເຂົ້າຂຶ້ນເລົ້າຂຶ້ນເຍຍແລ້ວ.ຈະແມ່ນບຸນທີ່ຊາວບ້ານເອົາເຂົ້າຂອງຕົນເອງມາໂຮມກັນເຮັດເປັນກອງຢູ່ວັດ ຕາມແຕ່ລະສັດທາຂອງຕົນເອງ ຜູ້ມີຫລາຍກໍ່ຈະເອົາໄປຫລາຍຫມື່ນ ຜູ້ມີຫນ້ອຍກໍ່ເອົາໄປຫນ້ອຍ. ເມື່ອມາໂຮມກັນແລ້ວກໍ່ຄູນຂຶ້ນເປັນກອງ ໂດຍມີການເອົ້ໃຫ້ງານມີການໄຫວ້ພຣະຕັກບາດຢາດນ້ຳ ຮັບສິນຮັບພອນ. ເຂົ້າທີ່ເອົາໄປເຮັດບຸນຄູນເຂົ້າ ນັ້ນອາດຈະຖືກປະມູນຂາຍເພື່ອເອົາເງິນມາສ້າງວັດ ແລະ ໃຊ້ຈ່າຍໃນກິດຈະການຕ່າງໆຂອງວັດ. ຈະມີຄະນະກຳມະການຮັບຜິດຊອບປຶກສາກັນ ແລະ ນຳສເນີຊາວບ້ານກ້າເຫັນດີກໍ່ແມ່ນປະຕິບັດຕາມນັ້ນ.

ບຸນເດືອນສາມເພັງຫລືບຸນມາຄະບູຊາ:

ບຸນແມ່ນບຸນທີ່ເຮັດຕາມການເຊື່ອຖືຂອງສາສນາພຸດຊຶ່ງໃນສມັຍພຸທະການໄດ້ມີສາໂວກ ຂອງພຣະພຸດທະເຈົ້າໄດ້ມາພົບກັນ ໂດຍບໍ່ໄດ້ນັດຫມາຍກັນເຖິງ 3500 ອົງ. ໃນມື້ນີ້ຕາມຄວາມເຊື່ອແລ້ວຈະມີສິ່ງມະຫັສຈັນເກີດຂຶ້ນໃນຊົ່ວອຶດໃຈກັບບໍ່ມີປາກ ນາກບໍ່ມີຮູຂີ້ຫົວສີເຄອອກດອກພັກຫນອກເລືອຂຶ້ນຄັ້ງສຸດຊົ່ວລຳຕານ. ກ້າຜູ້ໃດເຫັນສິ່ງເລົ່ານີ້ ແລະ ໄດ້ມາຄອບຄອງຈະເປັນມົງຄຸນຍິ່ງ. ຊາວບ້ານຈະພາກັນ ເຮັດເຂົ້າຈີ່ທາໄຂ່. ໃນມື້ນັ້ນຊາວບ້ານຈະລຸກແຕ່ເດິກຫນຶ້ງເຂົ້າ ແລ້ວເອົາເຂົ້າຫນຽວມາເຮັດເຂົ້າຈີ່ຈະເອີ້ນລູກຫລານລຸກຂຶ້ນມາເພື່ອມາຊ່ອຍກັນເຮັດເຂົ້າຈີ່ ຈຳນວນເຂົ້າຈີ່ຈະຕ້ອງເຮັດຫລາຍ ເພື່ອວ່າເຫລືອຕັກບາດ ຈະໄດ້ກິນຊຸມກັນ.

ການເຮັດໃຫ້ມີລົດແຊບນັ້ນ ຈະຕ້ອງຫນ່ຽງເຂົ້າຫນຽວໃສ່ໄອ້ງມີພ້ອມທັງເອົາເກືອໂຮຍຈັກຫນ່ອຍນຶ່ງ ເມື່ອຄວາມຫນຽວພໍດີ ເມັດເຂົ້າຕິດກັນແຫນ້ນແລ້ວປັ້ນເປັນກ້ອນໃຫ້ພໍດີກຳປັ້ນ ແລ້ວຈຶ່ງເອົາໄມ້ໄຜ່ຜ່າເປັນປ່ຽງປຽງມາແທງເຂົ້າເຄິ່ງກາງແລ້ວກໍເອົາຂາງໄຟ. ກ້ອນເຂົ້າຈີ່ຈະເຮັດເປັນຮູບປ່ຽງປສ້ອຍແບບຮູບໄຂ່ຫລືກົມນ້ອຍໆກໍໄດ້. ເວລາຂາງໄຟຕ້ອງເຮັດໄຟບໍ່ໃຫ້ແຮງເກີນໄປ ເຮັດໃຫ້ໄຟອ່ອນໆ ເພື່ອເຂົ້າຈະສຸກເຂົ້າໄປເຖິງໃນແກນຂອງເຂົ້າຈີ່. ເມື່ອເຫັນວ່າເຂົ້າຈີ່ເປັນຄືຜິວຫນັງໄກ່ ກໍເອົານ້ຳປາແດກທາແດ່ກ້ຽງຜູ້ໃດມັກກິນປາແດກ. ຈາກນັ້ນຈຶ່ງເອົາໄຂ່ດິບ ທີ່ຕີໃຫ້ແຕກດີແລ້ວທາໂອບອີກອາດຈະທາຫລາຍເທື່ອແລ້ວແຕ່ຄວາມມັກຂອງໃຜມັນ. ເວລາກິນໄຂ່ປະສົມກັບປາແດກຈະສົ່ງກິ່ນຫອມໄປທົ່ວບໍລິເວນໃກ້ຄຽງ ແຕ່ລະເຮືອນກໍຈະແລກປ່ຽນກັນຊີມຂອງກັນ ແລະ ກັນ. ເວລານັ້ນທົ່ວບ້ານຈະຫອມ ໄປດ້ວຍກິ່ນຂອງເຂົ້າຈີ່ທາໄຂ່. ເວລາຈັງຫັນທັງຜູ້ເຖົ້າບ່າວສາວເດັກນ້ອຍກໍພາກັນໄປຕັກບາດຢູ່ວັດ ພ້ອມທັງຟັງທັມເທສນາ ຈາກນັ້ນກໍກິນເຂົ້າຢູ່ວັດນຳກັນ. ມັນເປັນໂອກາດນຶ່ງທີ່ຜູ້ເຖົ້າໃນບ້ານຈະ ໄດ້ພົບປະກັນເຊັ່ນດຽວກັບກັບບ່າວສາວ ແລະ ເດັກນ້ອຍ.

ບຸນພຣະເຫວດ:

ບຸນພຣະເວດແມ່ນບຸນເທດພຣະເຫວດ ໃຫ້ເຖົ້າແກ່ຍິງຊາຍນ້ອຍໃຫ່ຍຟັງເປັນກັນເປັນກັນໄປ ຄຳວ່າກັນກໍຄື : ຫົວເລື່ອງໜຶ່ງຂອງຊີວິດ ພຣະເຫວດເຊັ່ນ : ຊູສະກະແມ່ນເລືອງພາມມະໂນມາຂໍລູກເມຍນຳພຣະເຫວດ. ພຣະເຫວດ ແມ່ນຄົນຜູ້ໜຶ່ງທີ່ມີໃຈເສຍສະຫຼະ ເພື່ອບຸນກຸສົນທຸກຢ່າງ. ເຖິງຈະແມ່ນຄົນຮັ່ງມໂຫດສານານມາຂໍເອົາລູກ ແລະ ເມຍກໍຍອມສະລະໃຫ້. ຕອນແຫ່ພຣະເຫວດ ເຂົ້າຄອງເມືອງເປັງຈານນະຄອນ, ຕອນນາງມະທີແມ່ນຕອນ ນາງມະທີເມຍພຣະເຫວດ ແລະ ລູກຮ້ອງໃຫ້ສັ່ງລາຜົວເວລາ ພາມມະໂນຈະເອົາໜີໄປ, ແລະ ອີກຫຼາຍໆກັນ. ກັນເທດ

ພຣະເຫວດຈະເລີ່ມແຕ່ ຫລັງຈັ່ງທັບໄປເລື້ອຍໆແລະພັກຜ່ອນ ສະຫລັບກັບໄປຈົນເຖິງຕອນແລງຂອງມື້ໃໝ່ຈຶ່ງສຸດກໍນີ. ເປັນເລື່ອງຊີວິດຂອງ ພຣະເຫວດແຕ່ຕົ້ນເຖິງປາຍ ເມື່ອໄດ້ຟັງແລ້ວຜູ້ຟັງກໍຈະປ່ຽນໃຈ ຄິດຫາແຕ່ແນວດີ ເສຍສະລະທຸກຢ່າງ ເພື່ອບຸນກຸສົນເໝືອນດັ່ງ ພຣະເຫວດເປັນຕົວຢ່າງ. ຕລອດການເທດຢູ່ນັ້ນຈະມີກັນທອນຂອງຊາວບ້ານ ແຫ່ເຂົ້າມາວັດແລ້ວເພິ່ນກໍຕີກອງທ້ອງເອົາກ້າງກີກພຣະອົງໃດ ກໍາລັງເທດຢູ່ອົງນັ້ນກໍຈະໄດ້ຮັບກັນທອນ ພ້ອມທັງໄດ້ຮັບກັນເທດນໍາອີກດ້ວຍ ໃຫ້ທານປະເພດກັນຫລອນ, ກັນສົມໂພດ, ເຂົ້າຕອກດອກໄມ້, ເງິນໃສ່ບາດ ແລະອື່ນໆເປັນການໃຫ້ທານ ໂດຍອີງຕາມເລື່ອງຊາດົກການເກີດ ໃຊ້ຊາດຂອງພຣະພຸດທະເຈົ້າ. ໂດຍການທານເພື່ອໃຫ້ໄດ້ກຸສົນອັນແຮງກ້າ ເນື່ອງຈາກວ່າພຣະເວດສັນດອນເປັນຜູ້ໃຫ້ທານຈົນເຖິງທານຮອດ ລູກຕົນເອງໄປເປັນຂ້ອຍຂ້າຂອງຜູ້ອື່ນ. ບຸນຈະມີການຄົບງັນຂອງຊາວບ້ານ ເຊັ່ນການແຂ່ງກອງຍາວກັນ ໂດຍນັກແຂ່ງຂັນຈະມາຈາກຫລາຍບ້ານມີການຈັດເປັນວົງມາແຂ່ງກັນ. ມີຫມໍຂັບຫມໍລໍາ ໂດຍສະເພາະແມ່ນຂັບງື່ມຊຶ່ງເປັນທີ່ນິຍົມຂອງຊາວບ້ານທີ່ສຸດ. ບັນດາບ້ານທີ່ຢູ່ຕາມແຄມງື່ມ ຈະຕ້ອງມີສຽງຂັບງື່ມ ເປັນສິ່ງບອກເຖິງຄວາມເປັນລູກຫລານ ຂອງສາຍນໍ້າງື່ມແຫ່ງນີ້. ພາກສ່ວນຄຣູບາກໍຈະມີການແຂ່ງຂັນແຫລ່ມະຫາີໃນຕອນກາງຄືນ ແລະ ຕອນກາງເວນຈະມີການເທດມະຫາີໃຫ້ຜູ້ເຖົ້າຟັງ. ບຸນຈະມີການແຮ່ກັນຫລອນກັນສົມໂພດມາຈາກ ບ້ານໃຕ້ບ້ານເໜືອ ແລະ ບັນດາບ້ານທີ່ຢູ່ໃກ້ຄຽງກໍຈະມີການແຮ່ກອງຫລອນມາສົມທົບ ການແຮ່ກ່ອນຈະເຂົ້າມາໃນວັດເຂົາເຈົ້າພາກັນແຮ່ ໄປຕາມບ້ານເສັຽກ່ອນ ເພື່ອໃຫ້ຜູ້ທີ່ຢາກກິນທານນໍາໄດ້ສົມທົບປັດໃຈໃສ່ໃນກອງຫລອນ. ຜູ້ເຖົ້າຈະເປັນຜູ້ກີຂັນເງິນຫມາກເບັງອອກຫນ້າ ຜູ້ບ່າວຜູ້ສາວຈະຫາມກັນຫລອນຈໍານວນນຶ່ງແລະ ຈໍານວນນຶ່ງ ແມ່ນຍ່າງແຮ່ໄປນໍາກັນເປັນຂບວນ. ໃນຂບວນມີການຕີຄ້ອງຕີກອງປ່າວ ເອີ້ນໃຫ້ພີ່ນ້ອງມາກິນທານຮ່ວມກັນ. ຫລັງຈາກແຮ່

ອ້ອມບ້ານຮຽບຮ້ອຍແລ້ວກໍແຮ່ເຂົ້າວັດພາກັນແຮ່ອ້ອມສິມຫລືອາລາມ 3 ຮອບຈຶ່ງເອົາຂຶ້ນໄປເທິງອາລາມ ເພື່ອເຄນໃຫ້ຄູບາເປັນຂັ້ນຕອນຕໍ່ໄປ. ສ່ວນຫລາຍກອງຫລອນຈະແຮ່ມານີ້ສຸດທ້າຍຂອງບຸນ. ກອງຫລອນຈະເຮັດດ້ວຍກາບກ້ວຍມີດອກເຜິ້ງທີ່ເຮັດດ້ວຍຂີ້ເຜິ້ງເອ້ມີດອກໄມ້ທໍາມະດາ ມີຄົນເບັດເງິນ,ມີປຶ້ມສໍ,ທຽນໄຂ ແລະອື່ນໆທີ່ເປັນຂອງທານໄດ້ແຂນໄປນໍາ.

ບຸນກຸດສົງການປີໃຫມ່ລາວ

ບຸນນີ້ຈະຈັດຂຶ້ນລະຫວ່າງກາງເດືອນ 4 ສາກົນ ແຕ່ ເປັນເດືອນ 5 ຂອງຊາວລາວເຮົາ. ມັນຈະເລີ່ມແຕ່ວັນທີ່ 13 - 16 ຂອງເດືອນ ເມສາ ເຖົ້າແກ່ປະຈໍາບ້ານ ຈະນໍາພາລູກຫລານທ້າງຫາກະຕຽມເອົາ ພຣະລົງສົງນໍ້າຫອມ. ເຂົາເຈົ້າຈະເຮັດຮ້ານຂຶ້ນພຽງເອິກ ແລະ ເຮັດຮາວອ້ອມໄວ້ເພື່ອປ້ອງ ກັນບໍ່ໃຫ້ຄົນຈັບພຣະອອກໄປ. ຈະມີຮາງສົງນໍ້າໄຫລໄປຕົກໃສ່ພຣະພໍດີເພື່ອເປັນການສະດວກສະບາຍ ບໍ່ໃຫ້ຄົນແຍ້ເຂົ້າໄປສົງພຣະ. ຜູ້ເຖົ້າຈະຟັງເທສນາອັງເຊີນເອົາພຣະລົງມາສົງນໍ້າຢູ່ທີ່ບ່ອນກະຕຽມໄວ້ແລ້ວ. ຕອນເຊົ້າມີການຕັກບາດຢາດນໍ້າຕອນບ່າຍ ຕີກອງຫລວງແລ້ວຄຣູບານໍາພາອອກຕົນຍາດໂຍມ ສົງພຣະເປັນພິທີເປີດຢ່າງເປັນທາງການ. ມື້ນີ້ເອີ້ນວ່າມື້ສັງຂັນລົງ. ມື້ທີສອງແມ່ນ ມື້ສັງຂານເນົາຫລືມື້ເນົາ. ມື້ທີສາມແມ່ນ ມື້ສັງຂານຂຶ້ນຫລືສັງຂານລ່ວງ. ໃນເວລາສາມ ມື້ນີ້ບ່າວສາວກໍຄືຜູ້ເຖົ້າຈະເຂົ້າວັດຟັງທັມທົດສົງພຣະພຸທຮູບຊຶ່ງແມ່ນກິດຈະກໍາທີ່ຢູ່ໃນວັດ. ຢູ່ໃນບ້ານມີການແຫ່ກັນຕີກອງ ເປົ່າແຄນລໍາ ຫລື ຂັບງື່ມໄປຕາມບ້ານ. ແຫ່ໄປເຮືອນໃຜເຈົ້າຂອງບ້ານກໍເອົາເຫລົ້າ ແລະ ຂອງແກ້ມຕ້ອນຮັບແລະທົດສົງກັນພ້ອມທັງອ່ວຍພອນປີໃຫມ່ຊຶ່ງກັນ ແລະ ກັນ. ເດັກນ້ອຍ

ບຸນພຣະເວດ ທີ່ວັດ ບ້ານໄຮ່

ການເຊີ້ງບຸນບັ້ງໄຟ

ຈະຕັກນໍ້າມາໃຫ້ຜູ້ເຖົ້າອາບ ເພື່ອເປັນການສະແດງຄວາມຮູ້ບຸນຄຸນ ແລະ ຂໍອະໂຫສິກໍາໃນການກະທໍາຜິດ ຕໍ່ຜູ້ເຖົ້າໃນຫນຶ່ງປີຜ່ານມາ. ເວລາອາບນໍ້າຜູ້ເຖົ້າກໍ່ອວຍພອນໃຫ້ເດັກນ້ອຍໃຫ້ໃຫຍ່ສູງໄວໆ ແລະ ບໍ່ໃຫ້ມີພະຍາດບຽດບຽນ. ຢູ່ຕາມກາງບ້ານຈະມີການແຂ່ງຂັນດຶງເຊືອກກັນ, ຫລິ້ນຫມາກບ້າ, ຫມາກເສືອກິນຫມູ ແລະ ກິລາອື່ນໆ ຊຶ່ງແລ້ວແຕ່ຄວາມກຸນັດຂອງຊາວບ້ານ. ເລີ່ມແຕ່ແລງມື້ທີສາມຂອງບຸນປີໃຫມ່ ບາງເຮືອນຈະມີການພູກແຂນປີໃຫມ່ ແລະ ສົມມາພໍ່ແມ່ຕາມຮີດຄອງປະເພນີ. ເກືອບທຸກ

ເຮືອນໃນບ້ານໄຮ່ຈະເຮັດພາບາສີຫມົດ. ຜູ້ທີ່ເປັນຫມໍພອນຈະໄດ້ລົງເຮືອນ ບີ້ຂື້ນເຮືອນນັ້ນຕລອດຈົນ ເມື່ອຍທັງປຽກທັງເມົາພ້ອມກັນ. ມັນແມ່ນພາບ ຊີວິດທີ່ຊາວບ້ານໄຮ່ ເຄີຍປະຕິບັດກັນເປັນປະຈຳທຸກປີ. ເວລານັ້ນພວກ ມັກເມົາກໍຈະເມົາໄດ້ເຕັມອັດຕຣາ. ບຸນປີໃຫມ່ຈະສິ້ນສຸດກໍຕໍ່ ເມື່ອຄຣູບາ ເອົາພຣະພຸທຮູບຂື້ນໄວ້ບ່ອນເກົ່າ.

ບຸນບັ້ງໄຟ:

ບຸນບັ້ງໄຟແມ່ນບຸນທີ່ຊາວບ້ານໄຮ່ ໄດ້ປະຕິບັດກັນມາ ຕາມປະເພນີ. ຊາວບ້ານຈັດຕັ້ງບຸນບັ້ງໄຟ ເພື່ອເປັນການຂໍຝົນຈາກເທວະດາ ໃນຄວາມ ເຊື່ອຂອງຊາວບ້ານໃນສມັຍນັ້ນ. ບຸນບັ້ງໄຟຈະຈັດຕັ້ງຂື້ນໃນ ເດືອນຫົກ ເພັງຂອງທຸກປີຊຶ່ງ ແຕ່ລະບ້ານຈະແຕກຕ່າງກັນໄປ ແລະ ກໍເອົາບັ້ງໄຟ ແຕ່ລະບ້ານມາແຂ່ງຂັນກັນ. ຊາວບ້ານຈະມີການກະຕຽມ ເຫລົ້າສາໂທ ຊຶ່ງເປັນເຫລົ້າທີ່ເຮັດ ຈາກເຂົ້າຫນຽວເຊັ່ນກັນ ແຕ່ເປັນເຫລົ້າທີ່ຊາວ ບ້ານຈະເຮັດກິນ ແລະ ຕ້ອນຮັບພີ່ນ້ອງຫມູ່ຄູ່ໃນເວລາບຸນບັ້ງໄຟເທົ່ານັ້ນ. ແຕ່ລະບ້ານມີບັ້ງໄຟລວມຂອງບ້ານ ແລະ ບັ້ງໄຟຂອງແຕ່ລະກຸ່ມ ຫລືລາຍ ບຸກຄົນແລ້ວ ແຕ່ຄວາມມັກຂອງໃຜມັນ. ກ່ອນຈະຈູດບັ້ງໄຟກໍມີການແຫ່ ບັ້ງໄຟ ແລະ ເຊີ້ງກິນເຫລົ້າກ່ອນຈຶ່ງເອົາບັ້ງໄຟໄປໂຮມໄວ້ທີ່ວັດ ເພື່ອຕຽມ ຈູດໃນຂັ້ນຕໍ່ໄປ. ການແຂ່ງຂັນຈະເອົາຄວາມໄກ ເປັນການຕັດສິນກ້າບັ້ງ ໄຟໃຜໄປໄກກ່ວາຫມູ່ກໍຈະໄດ້ທີຫນຶ່ງ, ຫາກບັ້ງໄຟໃຜບໍ່ຂື້ນກໍຈະຖືກໂຍນລົງ ຕົມ. ຫລັງຈາກບຸນບັງໄຟແລ້ວຊາວບ້ານ ກໍຕຽມເຄື່ອງລົງນາ ເພື່ອໄປ ຕົກກ້າເຫມືອນກັບວ່າບຸນບັ້ງໄຟ ແມ່ນບຸນກ່ອນຫນ້ານາຂອງເຂົາເຈົ້າ. ທຸກຄົນເມື່ອມີບຸນບັງໄຟແລ້ວກໍຕ້ອງແມ່ນເຮັດວຽກຫນັກເພາະແມ່ນລະດູທຳ ນາຂອງຊາວລາວໃນທົ່ວປະເທດ.

ບຸນເຂົ້າພັນສາ:

ບຸນເຂົ້າພັນສາ ຫລື ບຸນຈຳພັນສາແມ່ນຄອງພຸທສາສນາຊຶ່ງພຣະສົງຈະຈຳພັນສາຢູ່ວັດຂອງໃຜມັນ ຈະບໍ່ອອກໄປນອນຢູ່ບ່ອນອື່ນເປັນເດັດຂາດ. ພຣະສົງຈະປະຕິບັດ ພິທີກຳທາງສາສນາຢ່າງເຄັ່ງຄັດ. ຕອນກາງຄືນຈະມີການນຳພາປະຊາຊົນ ໄຫວພຣະສູດສາລະພັນ, ເດັກນ້ອຍບ່າວສາວຈະພາກັນເສັຍຫຍ້າວັດ, ຜູ້ເຖົ້າຈະເຮັດສິ່ງຂອງຕ່າງໆ ເພື່ອເອົາວັດວາອາຣາມໃຫ້ງາມບາງຄືນມີການຟັງທັມເທສນາເລື່ອງຊາດົກຕ່າງໆ ໃຫ້ອອກຕົນຍາດໂຍມຟັງເຮັດທັງຫມູ່ບ້ານມີຄວາມອົບອຸ່ນຄຶກຄື້ນມ່ວນຊື່ນເມື່ອຄົນສ່ວນຫລາຍພາກັນໄປເຮັດກິດຈະກຳຢູ່ວັດ. ແຕ່ລະວັນສິນມີການວຽນທຽນ ເຮັດໃຫ້ບ່າວສາວມີເວລາໄດ້ພົບປະສັງສັນກັນ. ເວລາເຂົ້າພັນສາຍາດໂຍມຈະຖວາຍຜ້ານ້ຳຝົນ ຫລື ຜ້າຈຳພັນສາໃຫ້ແກ່ພຣະສົງເພື່ອໃຊ້ໃນເວລາຈຳພັນສາ. ໃນກາງພັນສາຈະມີບຸນຫໍ່ເຂົ້າປະດັບດິນ ແລະ ເຂົ້າສະຫລາກ ເພື່ອອຸທິດສ່ວນບຸນກຸສົນໄປເຖິງຜູ້ທີ່ໄດ້ລ່ວງລັບໄປແລ້ວ. ບຸນສອງບຸນນີ້ຈະມີແຕ່ທຳບຸນ ຢູ່ວັດຮັບສິນຮັບພອນຕັກບາດ ໃນມື້ບຸນບາງຄົນ ກໍມີກອງອັດຖະນ້ອຍຖວາຍໃຫ້ແກ່ພຣະສົງ. ບຸນເຂົ້າພັນສາຈະເລີ່ມແຕ່ເດືອນແປດເພັງຂອງລາວເດືອນເຈັດສາກົນບຸນອອກພັນຈະມີຂຶ້ນໃນເດືອນສິບເອດເພັງ. ແຕ່ລະບ້ານທີ່ຢູ່ແຄມນ້ຳ ຈະມີບຸນຊ່ວງເຮືອເພື່ອແຂ່ງຂັນກັນ ແລະ ເປັນສັນຍານຂອງການອອກພັນສາ. ຢູ່ບ້ານໄຮ່ກໍມີເຮືອຊ່ວງ ເຊັ່ນກັນແຕ່ລະປີບ້ານໄຮ່ກໍໄດ້ຈັດບຸນຊ່ວງເຮືອຂຶ້ນ ເພື່ອໃຫ້ຊາວບ້ານໄດ້ສະແດງພະລັງຄວາມສາມັກຄີ. ບຸນຊ່ວງເຮືອມັນມີຄວາມຫມາຍຫລາຍກ່ວາບຸນຊ່ວງເຮືອມັນເອງເພາະມັນຮຽກຮ້ອງເຖິງຄວາມສາມັກຄີ ແລະ ຮ່ວມແຮງຮ່ວມໃຈກັນພາຍໃນບ້ານຈຶ່ງສາມາດນຳເຮືອລົງແຂ່ງຂັນນຳບ້ານອື່ນໄດ້. ຕູ້ທອງ (ທິດແພງສີ) ເຄີຍເປັນນາຍທ້າຍເຮືອຊ່ວງຂອງບ້ານໄຮ່ຮ່ວມກັບຕູ້ພຽນ (ທິດນວນສີ) ສ່ວນສີພາຍນັ້ນແມ່ນອ້າຍມາຍ, ທ້າວສິງພໍ່ກາ ແລະ ທ້າວເພັງຊຶ່ງປ່ຽນກັນເປັນ

ແລ້ວແຕ່ການສະດວກຂອງເຂົາເຈົ້າແຕ່ທັງໝົດ ແມ່ນເບິ່ງແຍງຊ່ວຍ ກັນ. ສ່ວນຕູ້ເກດ, ຕູ້ຫວັດກໍໄດ້ໄປອັງເຊີນເອົາຍາພໍ່ ເຈົ້າບ້ານລົງຂີ່ເຮືອ ໄປນຳລູກບ້ານ ເພື່ອໄປສູ້ກັບບ້ານອື່ນ. ມີຫລາຍປີເຮືອບ້ານໄຮ່ໄດ້ເປັນທີ ໜຶ່ງໃນຂົງເຂດບ້ານແຖວອ້ອມແອ້ມນັບແຕ່ປາກກະຍຸງລົງມາເຖິງບ້ານ ປາກງື່ມ.

ບຸນກະຖິນ:

ຫລັງຈາກການອອກພັນສາ ກໍເປັນບຸນກະຖິນເລີ່ມຕົ້ນ ໄປເລີຍຊາວ ບ້ານຈະມີການກະຕຽມເປັນການໃຫ່ຍ ເພື່ອເຮັດບຸນກະຖິນ. ຫາກວັດໃດ ຈະມີກະຖິນມາທອດກໍຕ້ອງມີການປັກກະຖິນກ່ອນ. ວັດທີ່ຈະກຶກປັກກະຖິນ ຕ້ອງແມ່ນວັດທີ່ມີຄູບາໃຫຍ່ມີສີມ ແລະ ອາຮາມຢ່າງດີ. ແຕ່ລະວັດຈະຮັບ ກອງກະຖິນໄດ້ໜຶ່ງກອງຕໍ່ປີ. ຜູ້ຈະເຮັດກອງກະຖິນຕ້ອງເປັນຜູ້ມີສັດທາ ແຮງກ້າເພາະມັນເປັນບຸນໃຫຍ່ທີ່ສຸດໃນທາງສາສນາການລົງທຶນກໍສູງ. ກະຖິນຈະມີຫລາຍແບບເຊັ່ນ: ກະຖິນຂອງບ້ານເພື່ອທອດບ້ານຕົນເອງ ຫລື ບ້ານອື່ນ, ກະຖິນສາມັກຄີຊຶ່ງເປັນທີ່ນິຍົມກັນເຮັດ ເພື່ອໃຫ້ໄດ້ບຸນຮ່ວມກັນ. ການເຮັດແນວນີ້ກໍຍ້ອນວ່າມີຫລາຍຄົນ ຢາກຈະທອດກະຖິນ ໃນວັດດຽວ ກັນ ຫລື ບາງເທື່ອຜູ້ທີ່ຈະເຮັດກອງກະຖິນນັ້ນບໍ່ມີທຶນພຽງພໍຈຶ່ງຊວນ ໝູ່ມາເຮັດນຳກັນ. ມັນເປັນຮູບແບບຂອງຄວາມສາມັກຄີ ເກື້ອກູນກັນ ໃຫ້ໄດ້ຮັບບຸນນຳກັນ. ກອງກະຖິນບາງເທື່ອ ມີການແຫ່ດ້ວຍຟ້ອງຄົກ ຈາກບ້ານນຶ່ງໄປຫາບ້ານນຶ່ງ ດ້ວຍໄລຍະທາງທີ່ຍາວມີບາງເທື່ອ ຈາກ ແຂວງນຶ່ງໄປຫາແຂວງນຶ່ງ. ເຄື່ອງກອງກະຖິນຈະມີຫລາຍ ອັນຊຶ່ງຈະບັນ ຈຸເຂົ້າໄວ້ໃນກອງ. ການແຫ່ກໍຈະມີເກົ້າແກ່ບ່າວສາວ ແຕ່ງຕົວສວຍງາມ ແບກກອງກະຖິນອ້ອມສີມກ່ອນຈະເອົາ ເຂົ້າໄປເຄນໃຫ້ຄູບາ. ຕອນກາງ ຄືນກໍມີການຄົບງັນ ມ່ວນຊື່ນແບບມວນຊົນ. ທາງເຂົ້າວັດກໍມີການເອ້ ຍ້ອງດ້ວຍຕົ້ນກ້ວຍທັງສອງຂອບທາງເຂົ້າວັດ ແລະ ມີທຸງພຸທສາສນາ

ທ້ອຍໄປຕາມແລວທາງເຮັດໃຫ້ມີສີສັນຂຶ້ນຕື່ມ. ບຸນກະຖິນຈະຕ້ອງຈັດຂຶ້ນກ່ອນບຸນພຣະທາດ ຫລວງວຽງຈັນສເມີ.

ພາກ ທີ 7: ຊີວິດຂອງຊາວບ້ານກ່ອນສົງຄາມໂລກຄັ້ງ ທີສອງ

ກ່ອນສົງຄາມໂລກຄັ້ງທີສອງບ້ານໄຮ່ເປັນບ້ານທີ່ສະງົບດີເນື່ອງຈາກມີແຕ່ພີ່ນ້ອງໃກ້ຊິດກັນທັງນັ້ນ. ການຄົມມະນາຄົມ ຍັງບໍ່ທັນສະດວກສະບາຍບໍ່ມີລົກລາພາຫະນະອັນໃດນອກຈາກກວຽນ ລໍ້, ມ້າ, ຍ່າງ ແລະໃຊ້ເຮືອລ່ອງຕາມລຳນໍ້າງື່ມ. ຊາວບ້ານມີຄວາມເຫລື້ອມໃສ ໃນພຸທສາສນາທຸກຄົນລ້ວນແຕ່ ເປັນຊາວພຸດທັງນັ້ນ. ເຂົາເຈົ້າເອົາໃຈໃສ່ເຂົ້າວັດຟັງທັມມະເທສນາ ໃຊ້ຫລັກທັມມະໃນການສັ່ງສອນລູກຫລານ ຂອງເຂົາເຈົ້າໂດຍພາລູກຫລານ ເຂົ້າວັດຟັງທັມ. ເວລາຍັງນ້ອຍຈະສົ່ງລູກເຂົ້າບວດເປັນສຳມະເນນ (ອ້າຍຈົວ) ເວລາອາຍຸລູກໄດ້ 20 ປີ ພໍ່ ແມ່ຈະຈັດຫາເຄື່ອງກອງບວດເພື່ອຕັ້ງກອງບວດໃຫ້ລູກຊາຍບວດເປັນພຣະໂດຍຄວາມເຊື່ອວ່າຈະໄດ້ບຸນກຸສົນຫລາຍ. ນອກຈາກນີ້ຍັງເປັນທີ່ຮຽນຮູ້ດ້ານຫນັງສືພູກໃບລານຮຽນອານຮຽນຂຽນຫນັງສືພູກ. ຊາວບ້ານເຊື່ອວ່າການບວດຂອງຜູ້ຊາຍແມ່ນມາຕການນຶ່ງຂອງຄວາມເປັນລູກຜູ້ຊາຍໃນສມັຍນັ້ນ (ຜູ້ຊາຍຢ່າງນ້ອຍຄວນຈະມີຄົນແຫ່ສາມເທື່ອ 1 ແຫ່ໄປບວດ, 2 ແຫ່ໄປແຕ່ງງານ, 3 ແຫ່ເວລາເສັຽຊີວິດແລ້ວ). ນອກຈາກການນັບຖືສາສນາພຸດແລ້ວມີບາງຄົນຍັງນັບຖືຜີກໍມີ ແຕ່ເຂົາເຈົ້າເຫລົ່ານັ້ນກໍຍັງມາວັດຊຸ້ນກັນ. ໃນເວລານັ້ນກົດຫມາຍຍັງບໍ່ທັນ ເປັນທີ່ຮູ້ຈັກຂອງຊາວບ້ານໄຮ່, ການແກ້ໄຂບັນຫາຜິດຂ້ອງຕ້ອງກຽງກັນ ໃນບ້ານຈະອີງໃສ່ເຖົ້າແກ່ເຈົ້າໂຄດລຸງຕາເປັນຕົວກາງໄກ່ເກັ່ຽ ຫລື ຕັດສິນບັນຫາພາຍໃນບ້ານ. ດ້ວຍເຫດນັ້ນຄົນເຖົ້າຄົນແກ່ຈຶ່ງເປັນທີ່ນັບຖື ຂອງຊາວບ້ານ. ການຈ້າງກັນທຳງານແມ່ນມີນ້ອຍທີ່ສຸດ. ເຮືອນໃດມີວຽກຫນັກ, ຈະມັກຫາກັນໄປຊ່ວຍເທື່ອຊ່ວຍແຮງ ອັນນີ້ໄດ້ກາຍເປັນປະເພນີຢ່າງນຶ່ງ

ຂອງຊາວບ້ານຊຶ່ງແຕ່ລະຄົນແມ່ນເອົາໃຈໃສ່ດ້ານນີ້ທີ່ສຸດ. ຖືວ່າເປັນລະບຽບຂອງສັງຄົມນຶ່ງໃນສມັຍນັ້ນ. ໃນເວລາເຈັບໄຂ້ໄດ້ປ່ວຍຊາວບ້ານຈະໃຊ້ຢາພື້ນເມືອງຢາຮາກໄມ້ ໂດຍໝໍຢາພື້ນເມືອງຂອງບ້ານເອງເປັນຜູ້ວາງຢາຮາກໄມ້ໃຫ້ກິນເພື່ອປິ່ນປົວ. ການເປັນໝໍຢາກໍ່ແມ່ນສືບທອດມາຈາກພໍ່ແມ່ທີ່ໄດ້ສິດສອນ ໃຫ້ແກ່ຜູ້ເປັນລູກເຕົ້າ. ບາງກໍລະນີກໍນໍາໃຊ້ໝໍເຢົາໝໍພີເປັນວິທີໃຊ້ຄາຖາອາຄົມເປົ່າ ເພື່ອຂັບໄລ່ພະຍາດ, ພີສາງນາງຮ້າຍອອກໄປ. ບາງກໍລະນີກໍແມ່ນວິທີແກ້ບະ ແກ້ບົນຕາມໝໍພີແນະນໍາ. ພໍ່ຕູ້ຈານພົມກໍເປັນໜຶ່ງໃນໝໍຢາຮາກໄມ້ໃນບ້ານໄຮ່ເພິ່ນມີກົງຢາຮາກໄມ້ສີຫ້າກົງຢູ່ຮ້ານຢາເພິ່ນສເມີ, ລູກຫຼານບ້ານໄຮ່ເຈັບໄຂ້ໄດ້ປ່ວຍກໍແລ່ນຫາເພິ່ນໂລດເພາະເວລານັ້ນ ຢາຫຼວງຍັງບໍ່ທັນມີເທື່ອ. ຊາວບ້ານໄຮ່ໄດ້ມີກົດກ່ຽວກັບການນັບຖືສິ່ງສະການ ສໍາຫລັບຄົນຕາຍຫຼາ (ຕາຍແບບບໍ່ເຈັບບໍ່ໄຂ້) ແມ່ນຕ້ອງຝັງຢ່າງດຽວ, ເດັກນ້ອຍເວລາຕາຍກໍຈະຖືກຝັງ, ຕາຍຍ້ອນກໍາລູກກໍຖືກຝັງ, ຜູ້ໃຫຍ່ທີ່ຕາຍເຈັບຕາຍໄຂ້ຕາຍເຖົ້າຕາຍແກ່ແມ່ນຖືກເຜົາຢູ່ປ່າຊ້າ ຊຶ່ງແມ່ນບ່ອນຊາວບ້ານສະຫງວນໄວ້ ເພື່ອເປັນບ່ອນສິ່ງສະການ. ໃນປ່າຊ້ານັ້ນຈະບໍ່ອະນຸຍາດ ໃຫ້ຜູ້ໃດຕັດໄມ້ເອົາຟືນເດັດຂາດເພາະປະໄວ້ເຜົາສົບຄົນຕາຍນັ້ນເອງ. ຊາວບ້ານຢູ່ຮ່ວມກັນໂດຍອາໃສຄວາມຊື່ສັດ ເປັນຫລັກໃນການຢູ່ຮ່ວມກັນ. ຄົນບ້ານໄຮ່ໃນສມັຍນັ້ນ ເປັນຄົນຊື່ສັດສຸຈະລິດນັບຖືສັດຈະ. ຊາວບ້ານຖືວ່າຄົນຜູ້ຊື່ສັດຈະສາມາດຮຽນວິຊາອາຄົມໄດ້ໄວ ແລະ ເກັ່ງ. ການຈັດຕັ້ງໃນບ້ານຈະມີກວນບ້ານ (ນາຍບ້ານ), ສະໝຽນ ນາຍບ້ານ (ຜູ້ຊ່ວຍນາຍບ້ານ), ແລະ ສາລະວັດ (ຜູ້ຮັບຜິດຊອບ ກິດຈະກໍາຂອງວັດວາສາສນາ). ເວລາກ່ອນຈັດຕັ້ງບຸນສິນກິນທານຊາວບ້ານກໍມີກອງປະຊຸມປຶກສາຫາລືກັນຢູ່ທີ່ເຮືອນນາຍບ້ານ ຫລື ຢູ່ວັດ. ຈະມີນາຍບ້ານຫລືສາລະວັດເປັນປະທານ. ກົດນໍາໃຊ້ສຽງສ່ວນຫລາຍກໍໄດ້ນໍາໃຊ້ໃນກອງປະຊຸມຂອງຊາວບ້ານໄຮ່ໃນສມັຍນັ້ນເຊັ່ນກັນ. ແຕ່ຍັງມີກໍລະນີ ຍົກເວັ້ນເຊັ່ນ: ການຈັດ

ງານວັດອາດມອບສິດໃຫ້ສາລະວັດເປັນຜູ້ຄິດ ແລະ ຕັດສິນໃຈກໍມີເບື່ອງ ຈາກວ່າມີຄວາມເຊື່ອຫມັ້ນ ຕໍ່ສາລະວັດຫລາຍ. ໃນເວລາກ່ອນສົງຄາມ ໂລກຊາວບ້ານໄຮ່ມີຄວາມສາມັກຄີກັນດີທີ່ສຸດ. ສາເຫດນີ້ງອາດມາຈາກ ຄວາມເປັນເຊື້ອສາຍດຽວກັນ ແລະ ມີສິນທັມປະຈຳໃຈ ເພາະນັບຖື ສາສນາພຸດ. ເວລາມີເຫດການໃດເກີດຂື້ນເຂົາເຈົ້າມັກຊ່ວຍກັນ ຈົນສຸດ ກຳລັງເຊັ່ນເວລາ ເກີດໄຟໄຫມ້ເຮືອນເຂົາເຈົ້າຊ່ວຍກັນມອດ ແລ້ວກໍ ຊ່ວຍສ້ອມແຊມໃຫ້ສາມາດຢູ່ໄດ້ຊົ່ວຄາວມີເຄື່ອງຂອງທີ່ຈຳເປັນໃຊ້ແນວ ໃດກໍແບ່ງປັນໃຫ້ກັນເຊັ່ນ: ຫມໍ້ຫນື້ງເຂົ້າ, ກ້ວຍ, ບ່ວງ, ອຸປກອນຫາກິນ ທີ່ຈຳເປັນ, ແລະ ເມັດແນວພັນຕ່າງໆ. ຕົວຢ່າງ: ທີ່ເຫັນໄດ້ຊັດກໍຄືສມັຍ ຝຣັ່ງເສດປົກຄອງຝຣັ່ງເກນກຸລີ 15 ວັນ ເພື່ອແລກກັບການເສຍສ່ວຍມາ ສ້າງຂົວໄມ້ເຮັຍລອຍແພຂ້າມທ່າເຮືອບ້ານໄຮ່ ທ່າງ່ອນທຸກໆປີພໍນ້ຳລົດລົງ ເດືອນສິບເອັດ. ພໍຮອດເດືອນຫົກເດືອນເຈັດມາແລ້ວນ້ຳງື່ມຂື້ນແຮງ, ຂົວ ກໍຂາດໄຫຼໄປ, ແລ້ວປີໜ້າກໍເລີ້ມເຮັດໃໝ່. ມີຂົວຂ້າມແບບນັ້ນກໍອຳນວຍ ຄວາມສະດວກ ຂ້າມໄປຂ້າມມາແທ້ໆ. ເດັກນ້ອຍໄປຮຽນໂຮງຮຽນທ່າ ງ່ອນກໍແລ່ນຂ້າມເຄິ່ງໆໂລດ. ຍາມແລ້ງມາ ມີບາງຄົນໄປງອຍຂົວແກ່ງ ເຫຼືອມ ເພື່ອເອົາປາຫ້າງພ້ານມາປີ້ງກິນກັບສົ້ມຜັກກາດແຊບ ຈົນດຶງຫູບໍ່ ອອກ. ຂົວນີ້ໃຜຂ້າມໄປມາຕ້ອງໄດ້ເສັຍເງິນ. ຝຣັ່ງເອົາຫວຽດມາເປັນ ນາຍເກັບເງິນຢູ່ຫົວຂົວເບື້ອງທ່າງ່ອນ, ການເກັບເງິນກໍບໍ່ສມ່ຳສເມີ. ຢູ່ ທ່າງ່ອນເວລານັ້ນກໍມີຫວຽດຢູ່ຫຼາຍ ຝຣັ່ງເອົາເຂົາມາຢູ່ເມືອງລາວເຂົາ ວ່າລາວນີ້ບໍ່ມີຄວາມຮູ້ສລາດຄືຫວຽດ. ພວກນີ້ເຂົາຈອງຫອງອິດສາຄົນ ລາວ, ເດັກນ້ອຍລາວໄປໂຮງຮຽນກາຍບ້ານເຂົາໆ ກໍ ຍິງກັບກູນ ແລະ ອຸບ ໝາກັດ. ຫາກຄົນຫວຽດຂ້າມຂົວບາງຫວຽດ ມັນກໍຜ່ອນຜັນ ບໍ່ເກັບ ຫລື ເກັບບໍ່ເຕັມ. ມື້ນື່ງທ້າວ ນິນ ນ້ອງແມ່ ຫນູບ້ານໄຮ່ໄປ ທ່າງ່ອນມາ ແລ້ວເຫັນພວກພີ່ນ້ອງ ຫວຽດເຂົາຂ້າມ ມັນບໍ່ເກັບເງິນສ່ວນ ທ້າວ ນິນ ລາວບໍ່ເປັນຄົນຮັ່ງມີ ດ້ານການເງິນລາວກໍ ຂາດເຂີນລາວ

ຈຶ່ງບໍ່ມີເງິນເສັຍຄ່າຂ້າມເຂົວ ລາວຮ້ອງຂໍນຳຄົນຫວຽດຍາມເຂົວວ່າ (ກູຂໍຂ້າມລ້າງແດ່ມື້ນີ້ກູບໍ່ມີເງິນ. ບາງຫວຽດຕອບວ່າ ມຶງບໍ່ມີເງິນບໍ່ຕ້ອງ ຂ້າມ ທ້າວ ນິນເວົ້າວ່າ ພວກນັ້ນເດຍັງບໍ່ໄດ້ເສັຍມຶງຍັງບໍ່ເກັບເຂົາ ບາງຫວຽດບາມຕອບວ່າອັນນັ້ນພີ່ນ້ອງກູມຶງບໍ່ຕ້ອງເວົ້າ ທ້າວ ນິນ ຕອບວ່າເຂົາບໍ່ເສັຍກູກະບໍ່ເສັຍ) ທ້າວນິນແລ່ນລົງເຂົວເລີຍ ຈະຂ້າມມາບ້ານ ໄຮ່ ພວກຫວຽດບາມເຫັນກໍພາກັນແລ່ນ ຈັບທ້າວນິນໄວ້ທັງຕາະທັງຕີ ແລະ ມິດແທງ. ພໍ່ຕູ້ເກົ້າທິດດ່າງຢືນຢູ່ຕາຝັ່ງບ້ານ ເຫັນກໍຮ້ອງຊາວບ້ານໄຮ່ວ່າ: ສູເອີຍມາຊ່ວຍກັນ, ເຂົາຕີບັກນິນ. ຊາວບ້ານໄຮ່ ກໍແລ່ນຂ້າມໄປຕັ້ງສິບກວ່າຄົນຕູ້ທິດດ່າງຜູ້ກ້າຫານນຳໜ້າໄປຕີ ກັບຝູງຄົນຫວຽດບາມ. ນີ້ສະແດງເຖິງຄວາມກ້າຫານສາມັກຄີ ຂອງຊາວບ້ານໄຮ່ ເຫດນີ້ເກີດຂື້ນໃນປີ 1943. ຄວາມກ້າຫານເສັຍສະລະຂອງຕູ້ທິດດ່າງຕູ້ເອບນີ້ຍັງບໍ່ທັນພຽງເທົ່ານີ້, ມີມື້ໜື່ງນາຍຝຣັ່ງຂັບຣົຖ ມາແຕ່ບ້ານເກີນຍາມ ນັ້ນທາດຊາຍບ້ານໄຮ່ ກຳລັງສວຍງາມ ພ້ອມທັງອາກາດຊໍ້າພັດຮ້ອນ ທ່ານຝຣັ່ງອົດບໍ່ໄດ້ຈຶ່ງຈອດຣົຖ ແລ້ວໂດດລົງອາບນໍ້າທັນທີ. ທ່ານຝຣັ່ງລອຍນໍ້າບໍ່ເປັນພໍເຫັນທາດວ່າມັນຕື້ນກໍສະອອນແລ່ນອອກໄປໄລດບໍ່ຄ່າ ນື່ງເກີງພັຍອັນຕລາຍຈຶ່ງໄປຕົກບຸ່ງຢູ່ທາງໃຕ້ຂົວ. ພໍດີກຶກເວລາພໍ່ຕູ້ເກົ້າໄປນັ່ງເບີຍລົມຢູ່ແຄມທາງທ່າ ແລະ ເບິ່ງຄົນຍ່າງຂ້າມເຂົວ. ລາວເຫັນນາຍຝຣັ່ງກຳລັງໂຈມນໍ້າເຫັນນໍ້າຟອງ ແລະ ຫລຽວເຫັນແຕ່ມືລາວກໍເອີ້ນຊາວບ້ານໄຮ່ໄປຊ່ວຍ. ລາວແລ່ນລົງໄປກ່ອນ ແລະ ໂດດລົງນໍ້າທັນທີ. ລາວໜຸດລົງໄປແກ່ນາຍຝຣັ່ງ ທີ່ສະຫລົບໄປແລ້ວຂື້ນມາ. ພໍເອົາຂື້ນມາໂຄກ, ກໍເອົານອນຢຽດບີບເອົານໍ້າ ອອກຈາກປາກແລ້ວຈຶ່ງຟື້ນຄືນມາ (ການບອກເລົ່າຂອງທ່ານບຸນທຽມ). ດ້ວຍບຸນຄຸນຂອງພໍ່ຕູ້ເກົ້າເອົາຊີວິດມັນໄວ້ພໍຟື້ນຕົວມີແຮງທີ່ຈະຂັບຣົຖ ກັບວຽງຈັນໄດ້ແລ້ວມີເງິນຕິດກົງເທົ່າໃດມັນກໍຈົກໃຫ້ຕອບແທນບຸນຄຸນຕູ້ເກົ້າໝົດ. ເວລາມັນຫຽວໄປຫຽວມາມັນກໍມາແວ່ເອົາເຄື່ອງຂອງ ແລະ ເງິນມາແວ່ຕ້ອນເປັນປະ

ຈຳນີ້ແມ່ນນ້ຳໃຈອັນກ້າຫານ ເອົາຊີວິດໄປແລກກັບຄວາມຕາຍ ຂອງຄົນອື່ນຂອງຊາວບ້ານໄຮ່. ກ້າຫານສະໄໝນີ້ບ້ານເມືອງ ຈະເຣີນຄົງຈະຖືກຂນານນາມວ່າຜູ້ກ້າຫານພ້ອມທັງໄດ້ຮັບຫລຽນກາຄຳຊອບ ຫລື ຫລຽນກ້າຫານດ້ວຍ. ຫາດຊາຍຫນອງຫລວງກໍເປັນຫາດຊາຍທີ່ສວຍງາມຂອງບ້ານໄຮ່ບໍ່ແມ່ນແຕ່ຄົນສະອອນ ຢາກອາບນ້ຳສັດສາວາສິ່ງກໍຢາກອາບຫລິ້ນເຫມືອນກັນ. ຝຸງຄວາຍທີ່ກັບມາຈາກກິນຫຍ້າທົ່ງຫນອງຫລວງ. ທຸກແລງມັນກໍອົດທີ່ຈະແຫວ່ອາບນ້ຳຫາດຫນອງຫລວງບໍ່ໄດ້. ຕົວຢ່າງ, ມື້ນຶ່ງອາວປິ່ນທີ່ຍັງເປັນບ່າວນ້ອຍພາກັນໄປເອົາຄວາຍຢູ່ຫນອງຫລວງກັບຫມູ່ທ້າວ ບວນສີ ຫລືຕູ້ພຽນໄດ້ເອົານ້ອງຊາຍນ້ອຍ ອາຍຸ 5 ປີ ໄປນຳຄືອາວທຽມ. ພໍຮອດຫາດຫນອງຫລວງຝຸງຄວາຍ ກໍລົ່ງລົງໄປອາບນ້ຳຕາມເຄີຍ. ສາມພີ່ນ້ອງກໍລົງອາບນ້ຳຫລິ້ນຊຳຊາກ້າຄວາຍຂື້ນນ້ຳ. ອາວທຽມຍັງອາບລົງໄປໃຕ້ປະມານ 10 ແມດ ບັງເອີນໄປຕົກພັກບຸ່ງເລິກລອຍບໍ່ເປັນກໍເລີຍຕົ້ນ ***ຕຶກຕັກ ຕຶກຕັກ*** ຈົມລົງ. ທ້າວບວນສີ ຫລື ຕູ້ພຽນຫລຽວເຫັນກໍຟ້າວໄປດຶງເອົາຂື້ນມາອາວທຽມ ຈຶ່ງຮ້ອງໄຫ້ທັງຢ້ານທັງສັ່ນ. ສ່ວນອາວປິ່ນນັ້ນບໍ່ເຫັນນ້ອງຕາຍດຶກນ້ຳ ຫາກບໍ່ທີ່ຕູ້ພຽນອາວທຽມ ກໍອາດຈະບໍ່ມີຊີວິດມາເຖິງດຽວນີ້. ເວລາອາວທຽມໃຫຍ່ມາເຮັດວຽກເຮັດການແລ້ວ ເພິ່ນກໍສະແດງຄວາມຮູ້ສຶກບຸນຄຸນຕໍ່ທິດບວນສີ ຫລື ຕູ້ພຽນໄປຍາມໃດເພິ່ນກໍມີຂອງຕ້ອນຂອງຝາກສເມີ. ເພິ່ນວ່າຕາບໃດມີຊີວິດຢູ່ເພິ່ນຂໍຈົດຈຳຄິດເຖິງບຸນຄຸນນີ້ສເມີ ເຫດການນີ້ເກີດຂື້ນປີ 1940.

ການຫາກິນຂອງຊາວບ້ານໄຮ່ໃນສມັຍກ່ອນ

ການຫາຢູ່ຫາກິນຂອງຊາວບ້ານໄຮ່ໃນສມັຍນັ້ນບໍ່ມີບັນຫາຫຍຸ້ງຍາກອັນໃດ. ການດຳລົງຊີວິດແບບຊາວນາຊົນນະບົດສາມາດ ເຮັດໃຫ້ຊາວບ້ານໄຮ່ ມີຄວາມອີ່ມຫນຳສຳລານໄດ້. ບ້ານຫຸ້ມລ້ອມດ້ວຍທຳມະຊາດປ່າດົງພົງໄພອັນຕຶບຫນາ ສັດປ່າອຸດົມສົມບູນ ປູປານານ້ຳບໍ່ຂາດບໍ່ຢາກອຸດົມ

ສົມບູນດ້ວຍທຳມະຊາດທຸກໆຢ່າງ. ຢາກກິນກວາງກິນຟານກະອອກກະແຕບົກຫນູປູຈີ່ ພຽງແຕ່ອອກໄປນອກບ້ານ ກໍໄດ້ກິນໂລດບົກເປົ້າບົກມູນມາກິນຫມາກໄຮຫມາກສ້ຽນຢູ່ໃນວັດເກົ່າ ແລະ ທໍບ້ານຕິດສວນຍາພໍ່ນົບວ່າແຕ່ຢາກກິນຍາມໃດກໍໄດ້ໂລດ ຜັກນາງອ່າງຮ້າໄມ້ຫລົວໄມ້ຟືນຢູ່ຕິດກັບບ້ານ, ຕ້ອນປາ ຂອງປູ່ຈານພິມທີ່ນ້ຳໂຄນ ແລະ ຫ້ວຍອ້າຍເວັ້ນຂຶ້ນມາເປັນລຳເຮືອແຈກຢາຍກັນກິນທົ່ວບ້ານ. ຢາກກິນກະຕ່າຍກິນເຫງັນຄ່າແລ້ວກໍໄປຍິງເອົາຢູ່ເດີ່ນວັດເກົ່າຊຶ່ງເປັນວັດຮ້າງປາງສົງຄາມຍີ່ປຸ່ນມາເປັນຫລາຍປີ. ບາງຄັ້ງກໍອອກໄປນາຕາດີ ຫລື ຫນອງສະຊຶ່ງຢູ່ໃກ້ບ້ານທາງໄປຫນອງຫລວງພຽງເທົ່ານັ້ນກໍເອົາມາສອງສາມຕົວແລ້ວ. ປູ່ຈານພິມມີເຄື່ອງຫາປາຄົບຫມົດທຸກຢ່າງຢູ່ໃນເຮືອນຊຶ່ງເຮັດ ແລະ ສານດ້ວຍເພິ່ນເອງກ້າເຮັດແຫຫມອງກໍແມ່ນເລີ່ມແຕ່ປູກປ່ານຂຶ້ນມາເຂັນເປັນເສັ້ນແລ້ວຈຶ່ງໄດ້ສານ, ປູ່ຈານພິມນອກຈາກເປັນຜູ້ມີອຳນາດໃນການປົກຄອງແລ້ວ, ຍັງດຸຫມັ່ນຂຍັນຫມັ່ນພຽນຫມົດທຸກໆດ້ານຊຶ່ງເພິ່ນໄດ້ທ່າຍທອດໄວ້ໃຫ້ລູກໃຫ້ຫລານຂອງເພິ່ນທຸກໆຄົນກໍນຳຮອຍເອົາແບບຢ່າງດຸຫມັ່ນຂຍັນພຽນໄດ້ເພິ່ນຫມົດທຸກຄົນ. ຍາມປາຊວຍກໍ່, ນ້ຳເຕັມຝັ່ງປູ່ຈານພິມ ແລະ ລູກກໍເປັນນຶ່ງໃນການຕຶກປາຊວຍ, ພິ່ນມີເຮືອຕຶກປາຊວຍທີ່ຫມານທີ່ສຸດ. ເກືງລະດູຕຶກປາແຕ່ລະປີ ເພິ່ນຕ້ອງລ້ຽງຜີເຮືອດ້ວຍໄກ່ຕົ້ມ ແລະ ດອກໄມ້ທູບທຽນເຮືອລຳ ນັ້ນມັນມີຕາຫມານຢູ່ຈອກຫລອກຄໍເຮືອ, ມັນເປັນຈຸດສຳຄັນ ພາໃຫ້ມັນຫມານແຕ່ເສັຍດາຍດ້ວຍຊື່ສຽງໂດ່ງດັງຂອງເຮືອລຳນີ້ຈຶ່ງມີຄົນຢາກໄດ້ ແລະ ອິດສາມາລັກເອົາໄປຂາຍຝາກຂອງປະເທດໄທ. ການໄປຈັ້ງຊ້ອນ ຕາມປາກຫ້ວຍນ້ຳໂຄນ ແລະ ໄປຢູ່ໂຕ່ງນ້ຳໂຄນ, ນ້ຳຄັນ ແລະ ຫ້ວຍອ້າຍເວັ້ນກໍເປັນເລື່ອງຫນ້າສະອອນອີກເລື່ອງນຶ່ງ. ຍາມເດືອນເຈັດເດືອນແປດ ປາຂຶ້ນມາໄຂ່ເຂົ້າຫ້ວຍເຂົ້າຫນອງ ພໍດີກັບອ້າຍເອື້ອຍຜູ້ໃຫຍ່ອອກໄປເຮັດໄຮ່ເຮັດນາຍັງເຫລືອແຕ່ພໍ່ຕູ້ປູ່. ຕູ້ປູ່ຈຶ່ງເອົາອາວທຽມໄປເປັນຄູ່. ໄປເທື່ອ

ໃດກັບມາກໍໄດ້ປາເຕັນເຮືອ, ປາຫວ້າ, ປາແກງ, ປາຄ້າວ, ປາສູດ, ປາອີກ່າພໍແບ່ງໄວ້ກິນ ແລະ ສົ່ງໄປໃຫ້ລູກຢູ່ນາແລ້ວອາວທຽນກໍພາຍເຮືອຂ້າມໄປຂາຍໃຫ້ແມ່ຕູ້ຫນູແພງທ່າງ່ອນເພື່ອທ້ອນເງິນໄວ້ໄປຮຽນຫນັງສືທ່າງ່ອນ. ປູ່ຈານພິມມັກຕໍ່ນິກກະທາທີ່ໂຄກໄປຫາບ້ານນໍ້າກ້ຽງນາຄູນ. ເພິ່ນໃຫ້ອາວທຽນໄປເປັນຫມູ່ທຸກຄັ້ງ ໄປເທື່ອໃດກໍໄດ້ໂລດສີ່ຫ້າໂຕ. ມີເທື່ອນຶ່ງ ເຄືອກະທາດູດນີ້ວຕີນຈົນເລືອດອອກກໍຄິດວ່າ ເປັນທຳມະດາ ສອງສາມມື້ຕໍ່ມາເລີ້ມໄຂ່ ແລະ ແດງຂຶ້ນທັງປວດ, ນອນບໍ່ໄດ້ເລີ້ມເປັນບາດທະຍັກປົວບໍ່ໄດ້ຈົນພາໃຫ້ຕີນຊ້າຍນີ້ວໂປ້ຂອງເພິ່ນກູດຂາດອອກເພິ່ນຈຶ່ງມີຕີນເກົ້ານີ້ວເໝືອນຕູ້ເອບທິດດ່າງທີ່ເພິ່ນໄປເຕະເອົາງ່ຽງປາຍອນ. ຊາວບ້ານໄຮ່ມີຄວາມສາມັກຄີກັນດີມີມາລະຍາດອັນຈົບງາມເດັກນ້ອຍຮູ້ນັບຖືຜູ້ໃຫຍ່ຟັງຄວາມພໍ່ແມ່ ຮູ້ຊ່ວຍວຽກເຮືອນວຽກຊານພໍ່ແມ່. ຍາມມີບຸນສິນກິນທານຊາວບ້ານ ປຸ້ມລຸມກັນ ເຮັດໃຫ້ໄດ້ຫນ້າໄດ້ຕາຂອງບ້ານເຂົາເຈົ້າ. ບ້ານໄຮ່ແຕ່ໃດມາມີເຮືອຊ່ວງເປັນປະຈຳ ເພື່ອໄປແຂ່ງຂັນສ້າງຄວາມສາມັກຄີກັບບ້ານອື່ນ. ຈົນມາເຖິງຊຸມປີ 1990 ຈຶ່ງບໍ່ມີເຮືອຊ່ວງ. ການສ້າງ ແລະ ສ້ອມແປງສິ່ງຂອງທີ່ເປັນຂອງສ່ວນລວມຂອງບ້ານຊາວບ້ານ ທຸກຄົນຈະເອົາໃຈໃສ່ເປັນກໍລະນີພິເສດ. ດ້ວຍເຫດນັ້ນຈຶ່ງເຮັດໃຫ້ການພັທນາບ້ານໄຮ່ໃນສມັຍນັ້ນ ເປັນໄປຕາມການວາງແຜນຂອງເຂົາເຈົ້າ. ຊາວບ້ານໄຮ່ເປັນຄົນໃຈກ້ວາງຂວາງມັກຄວາມສາມັກຄີ ແລະຄວາມເປັນມິດກັບແຂກ ທີ່ໄປມາກາຍບ້ານຂອງເຂົາເຈົ້າ. ແຕ່ລະເຮືອນຈະມີໄຫນ້ຳຢູ່ຫນ້າບ້ານ ແລະ ບວຍຕັກນ້ຳກິນໄວ້ສຳຫລັບ ແຂກທີ່ເດີນທາງໄປມາຂໍກິນນ້ຳ. ເວລາແຂກມາຂໍແຫວ່ເຊົາເຮືອນ ຄ້າງຄືນກໍຈະຫາເຂົ້າປາ ອາຫານໃຫ້ກິນ ແລະ ຈັດບ່ອນຢູ່ບ່ອນນອນໃຫ້ພຽບພ້ອມ. ການກະທຳເຊັ່ນນີ້ ແມ່ນປະເພນີລາວອັນນຶ່ງຊຶ່ງຊາວບ້ານໄຮ່ ໄດ້ປະຕິບັດກາຍເປັນວັທນະທຳທີ່ດີງາມ ມາແຕ່ບັນພະບຸຣຸດຂອງເຂົາເຈົ້າ. ການໄປຢ້ຽມຢາມກັນຂອງຊາວບ້ານໄຮ່ ໃນສມັຍນັ້ນກັບພີ່ນ້ອງຊາວບ້ານໄກ້ ຫລື

ໄກເຂົາເຈົ້າມັກມີຂອງຕ້ອນຂອງຝາກໃຫ້ກັນ ແລະ ກັນ. ການໄປຢາມເພື່ອນຝູງສ່ຽວຮັກສ່ຽວແພງເປັນເລື່ອງ ທີ່ສະແດງເຖິງຄວາມຮັກແພງເກີງຂື້ນຕາຍຕາງກັນໄດ້ກໍແມ່ນ. ຄົນບ້ານໄຮ່ກໍຄືຄົນລາວໃນສມັຍນັ້ນສ່ວນຫລວງຫລາຍແມ່ນມີຄວາມຊື່ສັດສຸດຈະລິດ, ບໍ່ສໍ້ໂກງ, ບໍ່ຂີ້ໂລບ, ມີສິນທັມປະຈໍາໃຈ, ຮັກສາສັດຈະວາຈາ, ແລະ ມີຄວາມທ່ຽງທັມ. ການສູ່ຂັວນຜູກແຂວນແຮກສ່ຽວ ເປັນເລື່ອງທີ່ຄົນລາວ ໃນສມັຍນັ້ນນິຍົມປະຕິບັດ ເພາະວ່າໄປທາງໃດກໍໃຫ້ມີສ່ຽວເຫັຍເຂັຍຮັກໃຫ້ມີບ່ອນພັກ ບ່ອນເຊົາ. ຄໍາວ່າສ່ຽວແມ່ນຍິ່ງໃຫຍ່ໃນຈິດໃຈຂອງຄົນບ້ານໄຮ່. ສ່ຽວຈະຊ່ວຍເຫລືອກັນໃນຍາມລໍາບາກ, ຫຍຸ້ງຍາກ, ຍາມຂາດເຂີນ, ວຽກຫນັກວຽກເບົາຈະຊ່ວຍກັນສເມີ. ເວລາບຸນສິນກິນທານຕາມບ້ານ ກໍຕ້ອງໄດ້ໄປຢາມກັນມີຊີ້ນຕ່ອນຫນາປາຕ່ອນໃຫຍ່ກໍແບ່ງກັນກິນຫລືກິນຊຸມກັນ. ການໃຊ້ຊີວິດຢູ່ຮ່ວມກັນຂອງຊາວບ້ານໄຮ່ມີຄວາມອົບອຸ່ນມັນເປັນປະເພນີອັນດີງາມຂອງຊາວບ້ານໄຮ່ທີ່ການກະທໍາຂອງສັງຄົມຊາວບ້ານໄດ້ເອົາໃຈໃສ່ຕໍ່ ຄອບຄົວຂອງຜູ້ທີ່ມີ ພົວເມັຽດຽວລູກນ້ອຍ, ເຮືອນແມ່ຮ້າງແມ່ຫມ້າຍ, ເຮືອນເດັກນ້ອຍກໍາພ້າພໍ່ແມ່ຕາຍປະ, ແລະ ເຮືອນຂອງຄອບຄົວທີ່ອອກເຮືອນໃຫມ່. ຕໍ່ຄອບຄົວເຫລົ່ານີ້ຊາວບ້ານ ຜູ້ໃດກໍເອົາໃຈໃສ່ຊ່ວຍເຫລືອຍາມຈໍາເປັນ.

ພາກທີ8:ສັງຄົມຂອງຊາວບ້ານໄຮ່ຫລັງສົງຄາມໂລກຄັ້ງທີສອງ

ການປະກາດ ສິ້ນສຸດສົງຄາມໂລກຄັ້ງທີສອງ ດ້ວຍການຍອມຈໍານົນຂອງຟາສິດເຍຍລະມັນ ແລະ ຟາສິດຍີ່ປຸ່ນ ໃນປີ 1943 ແລະ1945 ຕາມລໍາດັບ, ປະເທດລາວໄດ້ສວຍໂອກາດປະກາດເອກະລາດ ບໍ່ຍອມເປັນຫົວເມືອງຂື້ນຂອງປະເທດໃດໃນທ້າຍປີ 1945. ກ່ອນນີ້ລາວເປັນຫົວເມືອງຂື້ນຂອງຝຣັ່ງເສດ. ແຕ່ເມື່ອເກີດສົງຄາມໂລກຄັ້ງທີ 2 ຍີ່ປຸ່ນໄດ້ແຜ່ອໍານາດ ມາທາງອາຊີຕາເວັນອອກສຽງໃຕ້ ຊຶ່ງກໍແມ່ນແຫລມອິນ

ໂດຈີນ (ລາວ, ຫວຽດນາມ, ແລະ ຂະເມນ). ຝຣັ່ງເສດບໍ່ສາມາດຕ້ານທານກັບການຂະຫຍາຍອຳນາດ ຂອງຍີ່ປຸ່ນຈຶ່ງໄດ້ຖອນອອກ ຈາກລາວກໍຄື ອິນໂດຈີນທັງຫມົດ. ເມື່ອຍີ່ປຸ່ນປາໄຊສົງຄາມໂລກຄັ້ງທີ່ 2 ເຊັ່ນດຽວກັບ ເຢຽລະມັນຈຶ່ງໄດ້ຖອນອອກຈາກ ອິນໂດຈີນກັບຄືນປະເທດ. ໃນເວລາທີ່ ຍີ່ປຸ່ນຖອນອອກໄປ ແລ້ວລັດຖະບານລາວທີ່ຈັດຕັ້ງ ໂດຍຄົນລາວເອງຈຶ່ງປະ ກາດເອກະລາດ ຂອງຕົນເອງຂຶ້ນພ້ອມໆ ກັບບັນດາປະເທດອິນໂດຈີນທັງ ຫມົດ. ຝຣັ່ງເມື່ອໄດ້ຮູ້ຂ່າວການຖອນທະຫານຍີ່ປຸ່ນ ອອກຈາກລາວຈຶ່ງໄດ້ ຫວນຄືນມາຄອບງຳ ອິນໂດຈີນອີກຄັ້ງໃຫມ່ເປັນຄັ້ງທີ 2. ການກັບມາ ເທື່ອນີ້ນັ້ນເພື່ອເປັນການຮັບປະກັນ ໃຫ້ແກ່ການບຸກໂຈມຕີຄືນຕໍ່ຍີ່ປຸ່ນ ແລະ ລັດຖະບານລາວອິດສະລະ. ການຕຽມການຂອງທະຫານຝຣັ່ງ ຈະເຂົ້າຍຶດ ເອົາວຽງຄືນນັ້ນຝຣັ່ງໄດ້ມາຈາກ ຫວຽດນາມໃຕ້ຜ່ານເຂດ ບ້ານຂ້າຫູ ເຕົ່າທີ່ເປັນທະຫານຮ່ວມກັບທະຫານຝຣັ່ງຂຶ້ນມາແຂວງວຽງຈັນຜ່ານ ພູເຂົາຄວາຍແລ້ວແບ່ງກັນເປັນສອງໝວດ. ຫມວດນຶ່ງໄປຕັ້ງຄ້າຍຢູ່ບ້ານ ເກີນ ແລະ ໝວດນຶ່ງລົງມາຕັ້ງຄ້າຍຢູ່ບ້ານໄຮ່ແລະປາກນ້ຳໂຄນເບື້ອງໃຕ້ ໃນປີ 1945 ເຂົາໄດ້ປະກາດເອົາຄົນລາວເຂົ້າເປັນທະຫານນຳເພື່ອເສີມ ສ້າງກຳລັງໃຫ້ຫຼາຍ ແລະ ແຂງແຮງຂຶ້ນບໍ່ນານເທົ່າໃດເດືອນທະຫານລາວ ອິດສະລະປະສົມຫວຽດນາມຢູ່ວຽງຈັນກໍໄດ້ອອກມາຕີຄ້າຍທ່າງ່ອນ ແລະ ບ້ານໄຮ່ສູ້ກັນແຕ່ສາມໂມງເຊົ້າຈົນເຖິງສິບເອັດໂມງສວຍ, ທະຫານລາວ ອິດສະລະສູ້ຝຣັ່ງບໍ່ໄດ້ຈຶ່ງແຕກກັບຄືນວຽງຈັນ ເວລາຍິງກັນຊາວບ້ານໄຮ່ຍັງ ຢູ່ປົນທະຫານຝຣັ່ງ ຢູ່ເຮືອນໃຜເຮືອນລາວຫຼັງຈາກນັ້ນ ຊາວບ້ານໄຮ່ເຫັນ ວ່າບໍ່ມີຄວາມປອດໄພ ຈຶ່ງແຕກໜີຈາກບ້ານເຮືອນໄປຊອກຫາລີ້ຢູ່ບ່ອນ ປອດໄພຕາມຄວາມມັກຂອງໃຜມັນ ບາງພວກກໍໜີໄປບຸກຕູບລີ້ຢູ່ປ່າ ແຊງ ຫ້ວຍໝອງຫຼວງເພາະຫ້ອງຫ້ວຍມັນເປັນທີ່ກຳບັງລູກປືນໄດ້ ບາງຄົນກໍໄປ ອອກລູກຢູ່ທີ່ນັ້ນ ຈຶ່ງໃສ່ຊື່ຕາມເຫດການວ່າ ຫ້ວຍເສິກບ້ານໄຮ່ມາເຖິງ ບັດນີ້. ບາງຄົນກໍແຕກໄປຢູ່ບ້ານທາດກັຽງ ແລະ ອື່ນໆ. ສວນປູ່ຈານພົມ

ພ້ອມລູກທັງໝົດ ແລະ ອ້າຍນ້ອງຜູ້ໃກ້ຊິດໄດ້ອອກໄປລີ້ຢູ່ບາງພິງໃກ້ບາງອ້ອຍ ຫນູທີ່ງນັ່ງປ້າສີດາເນຍລູງເກດ ກໍໄດ້ໄປເກີດລູກຊາຍຢູ່ທີ່ນັ້ນຈຶ່ງໄດ້ໃສ່ຊື່ວ່າ ທ້າວລີບມາເກີງທຸກວັນນີ້ເພາະໜີຈາກການລົບລາຂ້າຟັນໃນຄາວນັ້ນ.

ເວລາໄທບ້ານໜີຈາກບ້ານໝົດແລ້ວຝຣັ່ງຈຶ່ງໄດ້ເສລີເຮັດຕາມໃຈຊອບ ຝຣັ່ງໄດ້ສ້າງຄ້າຍຢູ່ຕົ້ນບໍລິເວນບ້ານໄຮ່ຢ່າງແໜ້ນໜາກາງວອນເຂົາສ້າງ ຮົ້ວຂັວກໜາມໄມ້ເຮັຍໄມ້ໄຜ່ ອ້ອມບ້ານທັງໝົດ ແຕ່ເໜືອວັດເກົ່າອ້ອມໄປ ນອກບ້ານກວມສວນຍາພໍ່ນິນ ກວມໄປເກີງວັດໄຕ້ສູງປະມານສອງແມດ ແລະ ກ້ວາງປະມານຫນຶ່ງແມດ ສັດຕູບໍ່ສາມາດຜ່ານໄດ້ເພາະມັນມີ ແຕ່ຫອກແຕ່ຫລິວຕັ້ງຊາບລາບ. ຊ້ຳບໍ່ພໍຍັງສ້າງຮົ້ວຊັ້ນທີສອງ ອີກຕ່ຳ ກ່ວາແກວຫນ້າ ຫນ່ອຍຫນຶ່ງ. ກອງທັບຝຣັ່ງຂຍາຍຕົວຂຶ້ນມີປະມານ 300 ຄົນທັງລາວ ແລະ ຂ້າ ເຂົາຂຸດຂຸມໃຫຍ່ປ້ອງກັນເສິກຕົ້ນຫມົດທັງບ້ານ ເຂົາຕ້ອງການ ໄມ້ແປ້ນໄມ້ເສົາໄມ້ຕົງສ້າງຂຸມເລົ່ານັ້ນ. ເຂົາຈຶ່ງມ້າງເອົາ ເຮືອນທັງບ້ານລົງ ເພື່ອເອົາໄມ້ເລົ່ານັ້ນສ້າງຂຸມ ບາງຫລັງກໍຍັງເຫລືອ ແຕ່ເສົາຕັ້ງຟ້າຄືເຮືອນຕູ້ທິດດ່າງສ່ວນຍັງເຫລືອດີຢູ່ກໍມີແຕ່ເຮືອນປູ່ ຈານພິມ ແລະ ເຮືອນປູ່ບົວເທົ່ານັ້ນພຽງສອງຫລັງ. ຕໍ່ມາເຂົາກໍໄດ້ສ້າງ ສະຫນາມບິນໃສ່ເດີ່ນຫນອງຫລວງ, ຕັດທາງກຸນິນນ້ອຍຫນອງຫລວງ ແຕ່ ສວນຍາພໍ່ນິນເກີງຫນອງຫລວງຊີທັບ. ເຂົາສ້າງແລ້ວ, ເຄື່ອງບິນຂນາດ ສາມເຄື່ອງຈັກ ແລະ ສອງຈັກຢູ່ປີກ ແລະ ຈັກຫນຶ່ງຢູ່ຫົວເຄື່ອງບິນ ມາລົງຈອດໄດ້, ຕັ້ງແຕ່ກຸນິນຕິດບ້ານນ້າລຸນຂ້າມງຶ່ມ ແກ້ງໄຄ້ເກີງຫນອງ ຂີ້ຄວາຍຝາກເບື້ອງນັ້ນ. ຕົ້ນໄມ້ໃຫຍ່ປ່ຳລົງຫມົດເຫມືອນ ກາງໄຮ່ກ້ວາງ ປະມານ 200 ແມດ ຍາວປະມານສອງຫລັກກິໂລ ເພື່ອໃຫ້ເຄື່ອງບິນ ລົງຈອດທີ່ງຫນອງຫລວງໄດ້ເຂົາໃຊ້ເງິນຈ້າງແຮງງານຊາວບ້ານໄຮ່,

ຫາດກ້ຽງ, ທ່າງ່ອນສ້າງສະຫນາມບິນນີ້ໂດຍໃຊ້ເງິນອັດກໍ ຄືເງິນສົດຕັດ ເປັນຫລີ້ມຊ່ຳຕ່ອນເຂົ້າຫນົມຫມາກກ້ວດິບ ເພາະເວລານັ້ນຝຣັ່ງ ບໍ່ມີສິດ ພິມເງິນເຈ້ຽ ເພາະເສັຽປະເທດໃຫ້ຍີ່ປຸ່ນໄປແລ້ວ. ຕໍ່ມາເຂົາກໍມີເງິນຈ້ຽ

ພາສາຊາວບ້ານເອີ້ນວ່າເງິນຫມາກນ້ຳເຕົ້າ, ສ່ວນທາງລາວອິດສະລະວຽງຈັນກໍພິມເງິນລາວອິດສະລະເຮັດດ້ວຍເຈັ້ຽປ່ານເພາະບໍ່ມີເຈັ້ຽດີ. ພາສາຊາວບ້ານ ຮ້ອງກັນວ່າເງິນກະຕ່າຍ ເພາະມີລາຍເຊັນຂອງທ່ານກະຕ່າຍດົນສະສໍຣິດຣັກມົນຕີການຄັງຂອງຣັຖບານລາວອິດສະລະ. ສະຫນາມບິນໃຊ້ໄວ້ເພື່ອການລຳລຽງພົນ, ອຸປກອນ, ອາຫານການກິນແຕ່ໄຊງ່ອນຂຶ້ນມາ ພ້ອມທັງເປັນບ່ອນຊ້ອມໂດດຈ້ອງ ຂອງທະຫານອາກາດ. ສອງສາມວັນເຂົາຂົນທະຫານຈາກໄຊງ່ອນ (ຫລືນະຄອນໂຮຈິມິນໃນປະຈຸບັນ) ຂຶ້ນມາໂດດເທື່ອນຶ່ງ. ເມື່ອກ່ອນໜອງຫຼວງເປັນໜອງທີ່ສວຍງາມອຸດົມສົມບຸນໄປດ້ວຍທຳມະຊາດ ໃນນັ້ນມີສອງໜອງຕິດກັນຄືໜອງບົວນ້ອຍ ແລະ ໜອງບົວໃຫ່ຍມີບົວຫຼວງບານສະພັງມັນມີປະໂຍດຄືຄົນສາມາດກິນທັງໝາກທັງຍອດທັງຫົວ.

ມີນົກນ້ອຍນາໆຊະນິດ ຫຼືອຄະນາບັບບໍ່ກ້ວນ, ເຊັ່ນນົກເປັດ, ນົກເຫບ, ນົກໄກ່ນາບໍ່ຈຳເປັນຕ້ອງໃຊ້ປືນທ້າງບ້ວງຫ້າງແຮ້ວເອົາກໍຫຼືເພື່ອ. ໄຂ່ນົກເປັດນົກເຫບ ຍຸທາງໄປກັບມາຕົ້ມກິນ ແໜ ຜັກຂີ້ຄວາຍບໍ່ອິດບໍ່ຢາກ ປູປານານ້ຳອຸດົມສົມບຸນ. ເກີງເດືອນສາມມາທັງບ້ານໂຮ່, ທາດກ້ຽງ, ເວີນຄຳ, ໜອງເຂັ້ງກໍປ່າວລູກບ້ານໄປຜ່າປາຫນອງຫລວງເປັນຂນາດໃຫຍ່ປານເຮັດບຸນທາດຫລວງ. ຫລັງຈາກຝຣັ່ງ ມາທຳລາຍສ້າງເດີ່ນບິນໃສ່ ແລະ ປະກອບດ້ວຍປະຊາຊົນ ຫລາຍຂຶ້ນຄວາມອຸດົມສົມບູນອັນນັ້ນກໍຄ່ອຍເຫືອດຫາຍໄປ. ຂອງທຳມະຊາດເກີດຂຶ້ນ ເປັນເງິນເປັນຄຳແລ້ວກໍຖືກທຳຮ້າຍສູນຫາຍໄປຫມົດ ເສັຽດາຍທີ່ພວກລູກຫລານລຸ້ນຫລັງບໍ່ໄດ້ເຫັນ, ຂໍໃຫ້ຫລັບຕາວາດພາບເບິ່ງຕາມບົດຂຽນນີ້ກໍແລ້ວກັນ. ຕໍ່ມາຫລັງຈາກຝຣັ່ງເຂົ້າເມືອງແລ້ວເຂົາກໍໄດ້ປະເຮືອບິນຮ້າງໄວ້ໃຫ້ຊາວບ້ານໂຮ່ເປັນອານຸສອນ. ເຮືອບິນລຳນີ້ເວລາເຈີດລົງມາທາງຫນອງຂີ້ຄວາຍບັງເອີນປີກຫລັງໄປຕາດເກາະເອົາຕົ້ນເປືອຍທາງຂາດອອກແປງບໍ່ໄດ້ເອົາແຕ່ຈັກຫນີ. ຊາວບ້ານກໍໄປຕັດເອົາທໍ່ທອງຂາວມາ

ເຮັດປີນເອົານ້ຳມັນມາໃສ່ກັບໄຟ ລົ້ນຮີ່ນເວລາໄປຫາປາລ້ຽງຄວາຍ. ໃນທີ່ສຸດກໍພາກັນ ຕັດເປັນເຫລັກເສດທອງຂາວຂາຍຂ້າມຟັ່ງໄທໄປຫມົດ. ເສັຍດາຍພວກເຮົາ ບໍ່ໄດ້ຮັກສາໄວ້ໃຫ້ລູກຫລານເບິ່ງເປັນອານຸສອນ. ນີ້ກໍເປັນຄວາມບໍ່ຈເຣີນເທັນການໄກຂອງພວກເຮົາເອງ ຈຶ່ງກີເປັນບົດຮຽນໃຫ້ລູກຫລານໃນສມັຍນີ້. ຫາກຜູ້ໃດເກີດຊຸມປີ1950 ແລະ ຕົ້ນຊຸມປີ 1960 ຍັງຄົງເຫັນຍົນຮ້າງ ຢູ່ເດີ່ນບິນຫນອງຫລວງ. ບ່ອນທີ່ຝຮັ່ງຈອດຍົນໃນເວລານັ້ນແມ່ນຢູ່ຫລັງສວນຕາແປະເກົ່າ, ສວນອ້າຍມາຍ,ອ້າຍ ບົນລູກຕູ້ຂານເອີ້ນຕາມຊື່ລູກຂອງລາວ ຜູ້ທີ່ໄປເຮັດການປະຕິວັດແຕ່ປີ 1960 ສົງຄາມກອງແລ ແລະ ເສັຍຊີວິດ ຢູ່ທີ່ເຂດປົດປ່ອຍຊຽງຂວາງ. ປະຈຸບັນ, ຊາວບ້ານໄຮ່ເອີ້ນ ບ່ອນຈອດຍົນວ່າເຫລົ່າເຮືອບິນ. ກ່ອນການເຮັດເດີ່ນບິນນັ້ນ ກໍເປັນຫນອງທຳມະຊາດຢູ່ແລ້ວຊາວບ້ານໄດ້ເອີ້ນວ່າຫນອງບົວໃຫຍ່ ແລະ ຫນອງບົວນ້ອຍ ເພາະມັນເປັນຮູບຫນອງຢູ່ສອງຫນອງ ແລະ ມີດອກບົວຫລວງເກີດຂື້ນເຕັມ. ຢູ່ຟາກຫນອງຫລວງໄປກໍມີຫນອງສອງຫ້ອງ ແລະ ຫນອງປາຄໍ່ຂາວທັງສາມຫນອງນີ້ເປັນຫນອງທີ່ມີຊື່ສຽງຂອງບ້ານໄຮ່ເພາະມີປາຈຳນວນຫລວງຫລາຍອາໃສຢູ່ຊື່ງ ຊາວບ້ານສາມາດຫາກິນໄດ້. ກືໄດ້ວ່າຫນອງເລົ່ານີ້ເປັນອູ່ປາ ຫລື ສາງອາຫານຂອງຊາວບ້ານ. ເມື່ອເວົ້າເກືງຫນອງຫລວງຄົບບ້ານໄຮ່ ລຸ້ນເກົ່າສາມາດວາດພາບເຫັນດອກບົວຫລວງເປັນເວີງຂະໜາດໃຫຍ່ຊື່ງຊາວບ້ານສາມາດ ເກັບຫມາກແກ່ຂອງມັນມາກິນໄດ້ ແລະ ເອົາດອກຂອງມັນມາບູຊາພຣະໃນຍາມວັນສິນ. ຕາມທົ່ງຫນອງຫລວງ ຈະມີຫຍ້າປ້ອງຫນາປະມານ 30 ລ້ງຕີແມດ, ມີຕົ້ນກະໂດນນ້ຳ ແລະ ກະໂດນໂຄກ ຢາຍໄປຕາມບ່ອນເປັນຄູຊື່ງ ຊາວບ້ານສາມາດເກັບກິນໄດ້. ອ້ອມໆຫນອງບ່ອນທີ່ຊາວບ້ານເຮັດນາຈະມີຫຍ້າຂຽວງາມດີ ໃນຍາມແລ້ງຈະມີຝູງງົວ ຝູງຄວາຍຂອງຊາວບ້ານ ເປັນຫມູ່ໃຫຍ່ຫາກິນຫຍ້າຕາມທົ່ງຫນອງຫລວງ. ຕາມຫລັງຄວາຍ ແລະ ງົວມັກຈະມີນົກຍາງ, ກາ, ນົກອ້ຽງ, ນົກຊີ້ກະເດືອນ

ຈັບຢູ່ເທິງຫລັງຂອງງົວຄວາຍຕາມທົ່ງ. ຍາມເຊົ້າ ຍາມແລງຈະສາມາດ ເຫັນຝູງນົກເປົ້າ, ນົກເປັດນໍ້າ ແລະ ນົກອ້ຽງ ເປັນໝູ່ບິນຈີດໄປຈີດ ມາຕາມທ້ອງຟ້າ ຂອງທົ່ງໜອງຫລວງ. ອ້ອມແຄມໜອງຈະມີປ່າໂຫ່ມ ປ່າຫູລີງ, ເຄືອໝາກບ້າ, ຫົວມັນກອຍ, ມັນໂຫ່ນ, ຜັກຕີນຮຸ້ງ, ຂ່າປ່າ, ຕົ້ນກະພຸກ, ຕົ້ນດຸກເດືອ, ປ່າໜາມກົນທາປະສົມປົນເປໄປກັບປ່າຫຍ້າ ແຝກ, ແລະ ຜັກປ່າບາງຊະນິດ. ຢູ່ຕາມທົ່ງໜອງຫລວງຈະເຫັນບວກ ຄວາຍນອນ ເປັນໜ່ອງເປັນໜອງນ້ອຍໆ. ບາງໜອງກໍມີບົວຂີ້ແບ້ ເກີດຂຶ້ນ ຊຶ່ງສາຍບົວນີ້ຊາວບ້ານສາມາດເອົາມາກິນກັບປົ່ນປາໄດ້. ນອກ ນີ້ຍັງມີຜັກບົ່ງຮຽນ, ຜັກໂຫບເຫບ, ຜັກລີ້ນຟານ, ແລະ ແໜຂາວແໜ ດໍາອີກດ້ວຍ. ລະຫວ່າງບ້ານ ແລະ ໜອງຈະມີປ່າຕືບໜາຂັ້ນລະຫວ່າງ ກາງຊຶ່ງປ່ານັ້ນສາມາດ ເປັນບ່ອນອາໃສຂອງສັດປ່າບາງຊະນິດ. ຊາວ ບ້ານມີຄວາມພູມໃຈທີ່ມີໜອງຫລວງເປັນແຫລ່ງອາຫານໃຫ້ແກ່ເຂົາເຈົ້າ. ຍາມແລ້ງຈະມີຂວາຍເບົ້າ ຕາມໂຄກໜອງຫລວງ ຊຶ່ງຊາວບ້ານ ສາມາດຂຸດມາເປັນອາຫານ. ເວລາຍ່າງຕາມໂຄກຕາມ ປ່າອາກາດກໍ ຈະເຢັນເພາະມີຮົ່ມໄມ້ໃຫຍ່ ເປັນບ່ອນພັກຜ່ອນ. ຫລັງສົງຄາມໂລກຄັ້ງທີ ສອງໄດ້ມີຄົນຈໍານວນນຶ່ງ ອົບພະຍົບເຂົ້າມາ ຮ່ວມຢູ່ກັບຊາວບ້ານໄຮ່ເຮັດ ໃຫ້ໂຄງສ້າງຂອງຊາວບ້ານຈາກການເປັນພີ່ນ້ອງຄອບຄົວດຽວກັນກໍມີ ຄົນຕ່າງກິ່ນມາປົນເປຢູ່ນໍາ. ຊາວບ້ານໄຮ່ ກໍໄດ້ແບ່ງປັນດິນໃຫ້ທໍາມາຫາ ກິນ. ຈໍານວນນຶ່ງແມ່ນມາເຝົ້າສວນໃຫ້ເຈົ້ານາຍເຊັ່ນ: ຕູ້ແຈ້ນ (ປູ່ຂອງ ນາງ ບຸນທະວີ), ຕູ້ເຊັງ(ພໍ່ເກົ້າພໍ່ກາງ), ຕູ້ໃສ, ຕູ້ວີໄລ, ຕູ້ທີ, ຕູ້ພໍ່ພັນ, ຄົນ ເຫລົ່ານີ້ອາໃສຢູ່ ຕາມແຄມແມ່ນໍ້າງື່ມໂດຍອາໃສຫາປາກິນ ແລະ ຂາຍ, ເຮັດໄຮ່ກິນເຂົ້າ, ແລະ ເຝົ້າສວນໝາກໄມ້ໃຫ້ແກ່ເຈົ້ານາຍເຊັ່ນ: ທ່ານ ອຸຕະມະ ຈຸລະມານີ, ຍາພໍ່ໄທ, ຍາພໍ່ຫລຸຍ, ທ່ານໂສ ຫວັດ, ທ່ານ ອຸ່ນໂຮງ, ທ່ານເຈົ້າສົມສະໜິດ, ທ່ານ ນາຍພົນສັງຜູ້ເຝົ້າສວນສ່ວນມາກແມ່ນອົບ ພະຍົບຈາກສົງຄາມດຽນບຽນຝູ ໂດຍສ່ວນໃຫຍ່ຈະເປັນເຜົ່າໄຕດໍາ ແລະ

ຈຳນວນນຶ່ງ ແມ່ນມາຈາກຝັ່ງ ຂອງເບື້ອງໄທເຊັ່ນ: ຕູ້ເຊັງ ແລະ ຕູ້ກຸນ, ຕູ້ວີໄລ (ສວນຂອງລາວຢູ່ບ່ອນພະນັກງານບຳນານ ເສັຍອິງຄະຂອງກະຊວງການເງິນຢູ່ໃນປະຈຸບັນ), ຕູ້ລຸນ (ບ້ານຕູ້ສອນ), ການເຂົ້າມາຢູ່ຂອງຄົນພວກນີ້ກໍມີວັທນະທຳ ຈຳນວນນຶ່ງມາພ້ອມລວມມີ (ການດຳລົງຊີວິດ, ວິທີຫາກິນ,ການນັບຖືຜີ, ການແຕ່ງດອງ, ການນຸ່ງຖື, ການເຮັດບຸນສິນກິນທານ) ຫລັງຈາກການເຂົ້າມາຢູ່ຮ່ວມກັນກັບຊາວບ້ານໄຣ່ ເຂົາເຈົ້າມີການປັບຕົວເຂົ້າກັນໄດ້. ໃນສມັຍນັ້ນເຂດບ້ານໄຣ່ຊາຍແດນ ເບື້ອງໃຕ້ຈະຕັດຊື່ລະຫວ່າງບ້ານທ່າສົມມໍໃຕ້ປາກຫ້ວຍຫນອງຫລວງ ລັດໄປທາງຫນອງອ້າຍເວັ້ນ,ຮ່ອງເມກ, ລັດອອກໄປຫານ້ຳງື່ມຊື່ບ້ານຫນອງເຊັງ ແຕ່ຮ່ອງເມກມາເປັນເຂດບ້ານໄຣ່. ປ່າດົງທີ່ກາຍທາງໂຄງສວນນາຍພົນ ສັງເກົ່າໄປຮອດນາພົມມະເທດຍາວໄປຫານ້ຳງື່ມນັ້ນຊາວບ້ານເອົາໄວ້ເປັນປ່າສະຫງວນໃຫ້ເປັນທີ່ອາໃສຂອງສັດໃຫຍ່ນາໆ ຊະນິດ. ປ່າດົງຕຶບຫນາມີໄມ້ໃຫຍ່ທີ່ມີຄ່າຫລາຍຊະນິດ.

ໃນເວລານີ້ການດຳລົງຊີວິດຂອງຊາວບ້ານໄຣ່ ເລີ່ມມີການປ່ຽນແປງຍ້ອນການສ້າງທາງຄົມມະນາຄົມສະດວກຂຶ້ນ (ທາງເລກ 10). ເຈົ້ານາຍທີ່ມີສວນໃນສມັຍນັ້ນໄດ້ນຳເອົາວິທີການເຮັດສວນມານຳໃຊ້ໃນການຜລິດ. ມີການຜລິດເພື່ອເປັນສິນຄ້າເກີດຂຶ້ນ, ການແລກປ່ຽນສິນຄ້າກາຍເປັນກິດຈະວັດປະຈຳວັນ. ແຕ່ການຄ້າຂາຍຂອງຊາວບ້ານໄຣ່ແທ້ບໍ່ທັນມີຫລາຍເພາະຍັງຖືວ່າການຄ້າເປັນວຽກທີ່ບໍ່ສຳຄັນເປັນການຄ້າຂາຍແບບເອົາເຄື່ອງສວນມາຂາຍເລັກໆນ້ອຍໆ. ວຽກສ່ວນໃຫຍ່ຂອງຊາວບ້ານ ແມ່ນວຽກໄຣ່ການນາຊຶ່ງຖືວ່າເປັນວຽກຫລັກ.

ການກັບມາບ້ານຫລັງຍີ່ປຸ່ນກັບຄືນປະເທດ

ເມື່ອຍີ່ປຸ່ນກັບຄືນປະເທດ ເນື່ອງຈາກປາໄຊໃນສົງຄາມໂລກ. ອັກ ບານລາວໄດ້ປະກາດເອກະລາດ ແຕ່ຝຣັ່ງບໍ່ຍອມຮັບ ຄວາມເປັນເອກະ ລາດຂອງລາວ. ໃນປີ 1946 ຝຣັ່ງເຂົ້າເມືອງວຽງຈັນໂດຍຍົກທັບຈາກ ຄ້າຍບ້ານໄຮ່ ແລະ ບ້ານເກີນທັງຫມົດ ເຂົ້າຕີເອົາວຽງຈັນທາງດິນ ແລະ ທາງອາກາດ. ເຂົາໂດດຈ້ອງລົງທີ່ດອນຫນູນບ້ານໄຊ ແລ້ວບຸກໂຈມຕີເອົາ ວຽງຈັນ. ພໍທະຫານຫນີຈາກບ້ານ ແລ້ວຊາວບ້ານໄຮ່ ກໍກັບມາບ້ານອີກ. ມາເທື່ອນີ້ ບໍ່ເຫັນເຮືອນຕົນເອງ ຈຳເປັນຕ້ອງປຸກຕູບຫລືເຮືອນຊ້ານ ຢູ່ ສ່ວນປູ່ຈານພິມ ແລະ ຍ່າສົມກໍໄດ້ກັບຄືນມາບ້ານເຊັ່ນກັນ. ສ່ວນລູກ ຜູ້ໃຫຍ່ນັ້ນຍັງຢູ່ນາພົງເພາະວ່າຍັງບໍ່ເຊື່ອຫມັ້ນຕໍ່ສະການະການ. ກັບມາ ຢູ່ບໍ່ນານກໍເລີຍມີເຫດການຮ້າຍແຮງເກີດຂຶ້ນຄືຊາວບ້ານທັງຫມົດທີ່ຢູ່ ຕາມແຄມນ້ຳງື່ມເກີດເປັນໂຣຄອະຫິວາຄືທັງກອກທ້ອງ ທັງຮາກແລ້ວ ຕາຍພາຍໃນມື້ຫນຶ່ງສອງມື້ບາງບ້ານກໍຕາຍກັນຫມົດບ້ານຈົນບ້ານຮ້າງ, ບາງເຮືອນກໍຕາຍຫມົດເຮືອນຈົນຈູດເຮືອນເຜົາ. ສ່ວນບ້ານໄຮ່ກໍດັ່ງດຽວ ກັນຈຶ່ງໄດ້ແຕກກັບຄືນ ບ່ອນມາຂອງຕົນເອງອີກ. ບາງຄອບຄົວກໍໄປຫລົ້ ຢູ່ໃນປ່າພາສາຊາວບ້ານຮ້ອງວ່າ (ຫ່າກິນຄົນ) ບາງຄົນກໍເຊື່ອວ່າແມ່ນຜີ ຮ້າຍ ຊາວບ້ານແກບລ່ອງງື່ມຈຶ່ງໄດ້ເຮັດຕາແຫຼວກັນພີປິດບ້ານຄົນໃນບໍ່ ໃຫ້ອອກຄົນນອກ ບໍ່ໃຫ້ເຂົ້າເພາະຢ້ານຜີຫ່າເຂົ້າບ້ານ, ປະຕູເຮືອນກໍພາ ກັນຂຽນຄາກາຕົວທັມຕິດໄວ້ ເພື່ອໃຫ້ຜີຢ້ານບໍ່ເຂົ້າເຮືອນ. ສ່ວນປູ່ຈານ ພິມຍ່າສົມ ແລະ ອາວທຽມກໍຫ້າງກວຽນແລ້ວລັກໜີຈາກບ້ານ ໃນຍາມ ກາງຄືນເພາະຢ້ານຜີ ເຫັນພໍຮອດນາພົງແລ້ວກໍສານຕາແຫຼວ ປິດທາງ ເຂົ້ານາອີກ. ວັນເວລາຜ່ານໄປພຍາດຮ້າຍແຮງ ອັນນັ້ນກໍຄ່ອຍໝົດໄປ ແລ້ວປູ່ຈານພິມ ຍ່າສົມຈຶ່ງພາລູກເຕົ້າພີ່ນ້ອງກັບຄືນບ້ານຄັ້ງທີ່ 2 ສ່ວນ ພໍ່ ທິດພັນຫລືລຸງກອງສີ ແລະ ລຸງເກດມີລູກຫຼາຍຄົນແລ້ວ ຈຶ່ງມາປຸກ ເຮືອນອອ້ມເຮືອນພໍ່ແມ່ຢູ່ໃກ້ກັນ ເຊິ່ງລູກຫຼານຈະເຫັນໄດ້ດຽວນີ້ວ່າ

ເຮືອນແມ່ດອນ, ລຸງເກດ, ລຸງກອງສີຈຶ່ງຢູ່ໃກ້ກັນ ມາເຖິງທຸກວັນນີ້ກໍ ເພາະວ່າປູ່ຈານພົມ ເພິ່ນໃຫ້ລູກປຸກເຮືອນ ຢູ່ດິນຕອນດຽວກັນກັບເພິ່ນ ສ່ວນແມ່ດອນຜູ້ເປັນລູກສາວ ຈຶ່ງໄດ້ຢູ່ແທນເຮືອນຮັບມໍລະດົກ ພໍ່ແມ່ມາ ເຖິງປະຈຸບັນນີ້. ຕອນນັ້ນເຮືອນນ້ອຍລຸງກອງສີປຸກຢູ່ຕໍ່ໜ້າ ເຮືອນພໍ່ຄື ລະຫວ່າງເຮືອນພໍ່ ກັບອ່າງແຊ່ປໍຝຮັ່ງ ທີ່ເປັນອ່າງໃຫຍ່ຍາວຊາວແມັດ ກວ້າງສິບແມັດ ເລິກແມັດຫ້າສິບເຮັດດ້ວຍແປ້ນໄມ້ແຄ້ນຢາດ້ວຍຂີ້ຊີ ເຊິ່ງຝຮັ່ງໄດ້ມາຕັດເອົາ ປໍທານ ຫຼື ປໍລົມປົມອັນອຸດົມສົມບູນ ຢູ່ທາງໄປ ໜອງຫຼວງມາແຊ່ຈ້າງຄົນຫາບນໍ້າໃສ່ຖຸຂຶ້ນມາໃສ່ ໃຫ້ຄິດວ່າຈັກຫາບຄຸ ຈຶ່ງຈະເຕັມນັ້ນ ແລ້ວຝຮັ່ງກໍສົ່ງອອກໄປຂາຍນອກປະເທດ. ເວລາຝຮັ່ງ ແຕກກັບຄືນປະເທດໂຄງການນີ້ກໍຫາຍໄປ ເວລາລຸງກອງສີມາປຸກເຮືອນ ນ້ອຍຫຼັງນັ້ນ ລາວຍັງໄດ້ໄປມ້າງເອົາແປ້ນໄມ້ແຄມອັນນັ້ນມາປູເຮືອນລາວ (ຄຳບອກເລົ່າຂອງທ່ານບຸນທຽມ). ອາວທຽມ ທີ່ຍັງຮັກບ້ານເກີດເມືອງ ນອນ ແລະ ເພື່ອຄວາມຊົງຈຳເພິ່ນ ຢາກຂໍຮ້ອງນຳພວກລູກຫລານບ້ານ ໄຮ່ຂໍໃຫ້ຮັກສາຕົ້ນຂາມໃຫຍ່ຊຶ່ງຕັ້ງຢູ່ແຄມນໍ້າງື່ມ ທາງໄປວັດສມັຍນັ້ນຂອງ ປູ່ບົວ ຫຼື ພໍ່ຂອງຕູ້ພຽນ (ທ້າວ ນວນສີ) ຜູ້ເປັນລູກຈຶ່ງໄດ້ພາກັນຮັກສາ ໄວ້ເພື່ອເປັນນິງຂວັນເປັນທີຣະລຶກເຖິງປູ່ຍ່າຕາຍາຍຂອງຕະກຸນບ້ານໄຮ່ ຂອງພວກເຮົາຕົ້ນຂ້າມຕົ້ນນີ້ອາວທຽມ ເພິ່ນເກີດມາເພິ່ນໄດ້ເຫັນ ແລະ ກິນໝາກໂລດເວລານັ້ນໃຫ່ຍໄດ້ປະມານສອງອູ້ມອາດຈະເປັນຕົ້ນໄມ້ ທີ່ເກີດພ້ອມກັບບ້ານໄຮ່ນັ້ນເອງ. ແຕ່ຄຳຂໍຮ້ອງຂອງອາວມາເຖິງຊ້າເກີນ ໄປຕົ້ນຂາມຕົ້ນນັ້ນ ໄດ້ຖືກຕັດອອກແລ້ວ ແລະ ຖືກປຸກເຮືອນໃສ່ແທນ. ຍັງເຫລືອ ແຕ່ຕົ້ນຂາມໃຫຍ່ລຸ້ນດຽວກັນທີ່ຢູ່ດິນທ້າວເພັງຫລານປູ່ບົວ ໃນປະຈຸບັນ. ມັນຢູ່ປາຍຊານເຮືອນພໍ່ທິດພັນໃນເມື່ອກ່ອນຊຶ່ງ ຂ້າພະເຈົ້າ ເອງຄ່ຳພັນກໍເຄີຍໄດ້ແຫມ້ນກິນ ຕອນຍັງນ້ອຍ. ຊາວບ້ານໄຮ່ຈະບໍ່ມີການ ເຄື່ອນໄຫວ ທາງດ້ານການເມືອງພໍປານໃດ. ເຂົາເຈົ້າບໍ່ມັກສົນໃຈນຳການ ເມືອງໃນ ເມື່ອມີການເລືອກຕັ້ງຜູ້ແທນຣາຊດອນໃນສມັຍນັ້ນ ຜູ້ໃດລົງໄປ

ທາງເຂົາເຈົ້າເຂົາເຈົ້າກໍຈະສົນໃຈ ແລະ ບ່ອນບັດໃຫ້. ໃນຊຸມປີ 1950 ແລະ 1960 ບ້ານໄຮ່ມີປະມານ 30 ຄອບຄົວ. ຄອບຄົວທີ່ມີການະກໍແມ່ນ ຕະກຸນລູກຫລານ ຂອງປູ່ຈານພົມ ແລະ ຍ່າສົມຊື່ງເຂົາເຈົ້າຈະອາໃສຢູ່ ແຄມນໍ້າບ່ອນສົ້ນຂົວປະຈຸບັນ. ການສຶກສາຂອງຊາວບ້ານໄຮ່ນັ້ນ ສ່ວນ ມາກແມ່ນອາໃສຮຽນນໍາວັດ ໂດຍການບວດເປັນຄູບາ. ປູ່ຈານພົມຕ້ອງ ບວດລູກຊາຍເກືອບຫມົດທຸກຄົນ ຍົກເວັ້ນແຕ່ ທ. ບົວລົບ ແລະ ທ່ານ ບຸນທຽມ. ແຕ່ປູ່ຈານພົມໄດ້ສົ່ງໄປຢູ່ນໍາແມ່ຕູ້ນຸ້ຍທີ່ບ້ານ ຫນອງບອນໃນ ວຽງຈັນ ເພື່ອຮຽນຫນັງສື. ດ້ວຍເຫດນັ້ນທ່ານບຸນທຽມ ຈື່ງມີໂອກາດ ຮໍ່າຮຽນ ແລະ ໄດ້ເຮັດການຢູ່ນໍາລັດຖະບານໃນສມັຍນັ້ນ. ຊາວບ້ານໄຮ່ ບໍ່ມີໂຮງຮຽນໃຫ້ລູກຫລານ ຂອງເຂົາເຈົ້າຍ້ອນວ່າ ເປັນບ້ານນ້ອຍ. ຈົນ ຕົກມາເຖິງ1963 - 64 ກະຊວງສຶກສາຈື່ງອະນຸມັດ ໃຫ້ບ້ານໄຮ່ມີໂຮງຮຽນ ມູນລະປະຖົມສຶກສາຂື້ນ ໂດຍແມ່ນນາຍຄູໝຸດປະດາວົງ ເປັນຄູຜູ້ທໍາອິດ ສອນເດັກນ້ອຍບ້ານໄຮ່. ຕໍ່ມານາຍຄູມຸດໄດ້ແຕ່ງງານກັບ ນາງ ບຸນມາ ລູກແມ່ຕູ້ພອຍ ລູກຫລານຂອງລາວຕັ້ງເຮືອນຢູ່ທາງເຂົ້າວັດ ໃນປະຈຸບັນ. ແຕ່ກ່ອນ ໂຮງຮຽນແມ່ນຢູ່ທາງອອກໄປຫນອງຫລວງ ແປະພີປ່າຊ້າ. ຕໍ່ ມາຊາວບ້ານຢາກຍ້າຍ ວັດອອກຈາກທີ່ຊີ້ກັບປາກນໍ້າໂຄນ. ພໍ່ລຸງ ກອງສີ ພົມສີປະສົມ (ທິດພັນ) ຈື່ງມອບດິນນື່ງຕອນທີ່ຍາພໍ່ນົນມອບໃຫ້ ເພິ່ນໃຫ້ ຊາວບ້ານ ເພື່ອສ້າງວັດໃນປະຈຸບັນ. ຈາກນັ້ນໂຮງຮຽນຈື່ງຍ້າຍມາແທນ ບ່ອນວັດເກົ່າແລ້ວຍ້າຍຈາກບ່ອນວັດເກົ່າ ໄປປຸກຢູ່ບ່ອນປະຈຸບັນ. ສ່ວນ ດິນວັດເກົ່ານັ້ນແມ່ນ ຊາວບ້ານຂາຍເອົາເງິນເຂົ້າສ່ວນຣວມ. ກ້າຜູ້ໃດ ຮຽນຈົບລະດັບປໍ 3 ແລ້ວໃນເວລານັ້ນຕ້ອງໄປຮຽນຕໍ່ປໍ4ຢູ່ບ້ານທ່າງ່ອນ. ເຫດນີ້ເອງ ເດັກນ້ອຍບ້ານໄຮ່ຈໍານວນຫລາຍ ໂດຍສະເພາະຜູ້ຍິງບໍ່ຢາກ ມາຮຽນຕໍ່ຢູ່ໂຮງຮຽນບ້ານທ່າງ່ອນ. ເຮັດໃຫ້ເປີເຊັນ ຂອງເດັກນ້ອຍ ບ້ານໄຮ່ຈະຮຽນໃຫ້ສູງນັ້ນມີຫນ້ອຍກ້າທຽບໃສ່ກັບບ້ານອື່ນໆທີ່ຢູ່ໃກ້ຄຽງ. ມີພຽງຜູ້ທີ່ຕັດສິນໃຈສູງເທົ່ານັ້ນ ຈື່ງສາມາດຮຽນຕໍ່ລະດັບສູງໄດ້. ກ້າຈະ

ຮຽນໃຫ້ສາມາດເຮັດວຽກ ນຳລັກບານກໍຕ້ອງຮຽນເກັ່ງ ແລະ ຂຍັນ ຮຽນເປັນພິເສດ ຈຶ່ງຈະປະສົບຜົນສຳເລັດໄດ້. ຜູ້ຈະຮຽນໃນລະດັບສູງບໍ່ພຽງແຕ່ຮຽນເກັ່ງ ແລະ ຂຍັນຮຽນແຕ່ຕ້ອງມີຄອບຄົວຊຸກຍູ້, ມີການະດ້ານເສດຖະກິດພໍສົ່ງເສີມໄດ້, ແລະ ກໍມີພີ່ນ້ອງຢູ່ໃນເມືອງວຽງຈັນນຳອີກດ້ວຍ. ຈາກການມີໂຮງຮຽນເດັກນ້ອຍ ເຮັດໃຫ້ລູກຫລານຂອງຊາວບ້ານຮູ້ອ່ານອອກຂຽນໄດ້ຮູ້ຄິດໄລ່ຮູ້ນັບ ແລະ ຮູ້ຄິດ. ຈາກນັ້ນ, ການທຳການຄ້າກໍຄ່ອຍຂຍາຍຕົວ ໃນຊຸມຊົນຂອງບ້ານໄຮ່. ໃນໄລຍະຫລັງສົງຄາມໂລກນີ້, ປະເພນີຮີດຄອງຂອງຊາວບ້ານ ຍັງບໍ່ມີການປ່ຽນແປງ ຫຍັງຫລາຍ ການສ້າງບຸນສິບກິນທານຍັງມີຢູ່ຄືເກົ່າການນຸ່ງກື່ຂອງຜູ້ຍິງຍັງຮັກສາ ການນຸ່ງສິ້ນເສື້ອພື້ນແພວາ ສ່ວນຜູ້ຊາຍໄດ້ມີການປ່ຽນແປງ ເລັກນ້ອຍ ເຊັ່ນການນຸ່ງຜ້າສະໂຫລ້ງ ກໍຄ່ອຍຫາຍໄປ ຈະນຸ່ງຢູ່ກໍມີແຕ່ຜູ້ສູງອາຍຸສ່ວນຄົນໜຸ່ມກໍຈະໃສ່ສົ້ງແບບທັນສມັຍແລ້ວ. ແຕ່ກ່ອນຈະໃສ່ສົ້ງຂາປ້າຍ ຫລືສົ້ງຫຍ່າມຜ້າຫມໍ້ນິນ ໂດຍຫຍິບດ້ວຍເຂັມມື. ການຫາກິນຂອງຊາວບ້ານກໍມີການປ່ຽນແປງ ເມື່ອມີໂຮງເລື່ອຍຂອງຍາພໍ່ສຸກກັບລະຍາ ມາຕັ້ງຢູ່ບ້ານທາດກ້ຽງ. ຊຶ່ງໃນປີ 2006 ນີ້ຍັງສາມາດເຫັນທໍ່ຄວັນ ຂອງເຄື່ອງຈັກອາຍນ້ຳ SteamEngine ທີ່ໃຊ້ເປັນຈັກເລື່ອຍໄມ້ ຕັ້ງຢູ່ແຄມນ້ຳງື່ມ ກ່ອນຈະຮອດບ້ານທາດກ້ຽງ. ເນື່ອງຈາກ, ມີໂຮງເລື່ອຍໄມ້ການຕັດໄມ້ຈຶ່ງກາຍເປັນອາຊີບນຶ່ງ ຂອງຊາວບ້ານໄຮ່. ຈາກແຕ່ກ່ອນເປັນປ່າດົກໜາ ແລະ ຊຸ່ມເຢັນກໍຄ່ອຍໆ ບາງອອກໃນແຕ່ລະປີ. ປ່າໄມ້ດົກໜາຂອງຊາວບ້ານທີ່ຢູ່ອ້ອມແອ້ມຮອບທັງບ້ານໄຮ່ໄດ້ຖືກນຳໄປຂາຍສ້າງຮັ່ງຄູນມີໃຫ້ແກ່ເກົ້າແກ່ຈີນໄທທີ່ນິຍົມທຳລາຍ ແຕ່ປ່າໄມ້ຂອງໂລກ ໂດຍບໍ່ມີການເອົາໃຈໃສ່ການປູກຄືນເລີຍ. ຍາພໍ່ສຸກກັບລະຍາກໍຮັ່ງມີດີໄດ້ ກໍຍ້ອນປ່າໄມ້ຂອງຊາວບ້ານ ອ້ອມແອ້ມເຂດນີ້. ການຕັດສ່ວນໃຫຍ່ແມ່ນຜິດກົດໝາຍຫລາຍກ່ວາ 50% ຈະເຫັນໄດ້ ຈາກການລັກຕັດໄມ້ຊະຊາຍ ແລະ ເລື່ອຍກາງຄືນ ເພື່ອບໍ່ໃຫ້ພະນັກງານປ່າໄມ້ເຫັນ (ອີງຕາມການບອກເລົ່າ

ຂອງຊາວບ້ານ ທາດກັງຽງ). ເສັ້ນທາງເລກ 10 ເປັນເສັ້ນທາງລໍາລຽງທັງໄມ້ແປຮູບ ແລະ ໄມ້ທ່ອນຂາຍຂ້າມຝັ່ງໄທ. ຊາວບ້ານເຂດນັ້ນມີພຽງຈໍານວນນ້ອຍດຽວ ທີ່ໄດ້ຊົມໃຊ້ໄມ້ທີ່ຢູ່ໃນເຂດບ້ານຕົນເອງ ປຸກເຮືອນຢູ່. ຈາກທີ່ມີແຕ່ກວຽນງົວແກ່ ເກືອກາຍມາເປັນລົດບັນທຸກແທນ. ນໍ້າງື່ມກໍມີເຮືອບັກຂ້າມແທນຂົວໄມ້ເຮັ້ຽ ແລະ ເຮືອພາຍໃນສມັຍກ່ອນ. ສິ່ງຂອງຕ່າງໆກໍຖືກຂົນສົ່ງໄດ້ໄວກ່ວາເກົ່າເຮັດໃຫ້ເປີເຊັນການທໍາລາຍໄວ ແລະສູງກ່ວາເກົ່າ. ວັດຖຸສິ່ງຂອງໄດ້ມີການຈໍລະຈອນ ຂາຍຕາມບ້ານຕ່າງໆຈາກຄົນຕ່າງກຸ່ມຈຶ່ງເປັນເຫດໃຫ້ຊາວບ້ານໄຮ່ມີແນວຄິດຄ້າຂາຍ.

ຄວາມນິຍົມວັດຖຸເລີ້ມຊຶ່ມແວວອອກນໍາຫມູ່ຊາວຫນຸ່ມຂອງບ້ານໃນເວລານັ້ນ. ສັງຄົມວັດຖຸນິຍົມ ເລີ້ມຂຍາຍຕົວໃນສັງຄົມຂອງຊາວບ້ານ. ການຫວງແຫນເຄື່ອງປູກຂອງຝັງເລີ້ມເກີດຂື້ນ ເນື່ອງຈາກວ່າ ເຈົ້າຂອງຢາກຮັກສາເອົາໄວ້ຂາຍເອົາເງິນ ຊື້ສິ່ງຂອງທີ່ຕ້ອງການອື່ນໆ. ວິທີການຫາເງິນຕ່າງໆກໍມີການຮຽງແບບຈາກຊາວຄ້າຂາຍຕ່າງກຸ່ມທີ່ມາຂາຍໃຫ້ຊາວບ້ານ. ຊາວບ້ານເລີ້ມປະຮິດເກົ່າຄອງເດີມ ຂອງເຂົາເຈົ້າ ແລະຫັນມາສົນໃຈ ເຄື່ອງຂອງສິນຄ້ານໍາເຂົ້າຈາກຕ່າງປະເທດ. ກີ່ຫູກ, ສວນມອນ, ຫລາເຂັນຝ້າຍ, ໄດ້ຖືກປົດປະຈໍາການ ເນື່ອງຈາກເຈົ້າຂອງໄດ້ໄປຫາອາຊີບໃຫມ່. ການລ້ຽງມ້ອນສາວໄຫມກໍຄ່ອຍຫາຍໄປ ຈາກຊຸມຊົນບ້ານໄຮ່. ການສຶກສາເລີ້ມມີບົດບາດຕໍ່ການປ່ຽນແປງ ຊີວິດຂອງຄົນບ້ານໄຮ່ລຸ້ນຕໍ່ມາ. ແຕ່ລະຄອບຄົວແມ່ນ ເຂົ້າໃຈເຖິງຄວາມສໍາຄັນ ຂອງການສຶກສາ ແລະ ມີຈຸດປະສົງຢາກສົ່ງລູກຫລານຂອງຕົນເອງເຂົ້າໂຮງຮຽນ. ແຕ່ການຮຽນໃນເວລານັ້ນ ແມ່ນມີການຄັດເລືອກຄັດຈ້ອນທີ່ສຸດ ເນື່ອງຈາກຫ້ອງຮຽນ ມີຫນ້ອຍການຮຽນຕໍ່ແຕ່ລະຊັ້ນຮຽນຕ້ອງ ຜ່ານການສອບເສັງຢ່າງຈິງຈັງ. ການຮຽນຕໍ່ໃນລະດັບມັທຍົມ ແມ່ນມີນ້ອຍ. ສ່ວນຫລາຍແມ່ນຈະມີແຕ່ຈົບປະຖົມແລ້ວກໍອອກຊອກວຽກເຮັດ ຫລື ບໍ່ກໍໄປປະກອບອາຊີບຕາມກະຫນັດ. ຕາມລໍານໍ້າງື່ມ ກໍຍັງມີປາພໍຫາກິນຫາຂາຍ

ໄດ້ ເນື່ອງຈາກວ່າຈຳນວນປະຊາກອນຂອງຊາວລ່ອງງື່ມ ຍັງບໍ່ທັນຫນາແຫນ້ນ. ແຕ່ລະປີຈະມີປາສ້ອຍຂຶ້ນຕາມລຳນ້ຳງື່ມ ຢູ່ຕາມປົກກະຕິຂຶ້ນກັບປີນ້ຳຫລາຍນ້ຳຫນ້ອຍ. ສະຫລຸບໄດ້ວ່າ, ຊີວິດການເປັນຢູ່ຂອງຊາວບ້ານໄດ້ເລີ່ມຫັນມາສົນໃຈວິທີຫາກິນແບບໃຫມ່ໆ ການແລກປ່ຽນຊື້ຂາຍເລີ່ມສົ່ງເຄົ້າອອກມານຳຫມູ່ຊາວບ້ານ ວິຖີການດຳລົງຊີບໄດ້ເລີ່ມມີການປ່ຽນແປງ ປະເພນີດັ່ງເດີມເລີ່ມກໍ່ກປ່ອຍປະລະເລີຍ.

ພາກທີ 9: ຊ່ວງເວລາສົງຄາມກາງເມືອງ

ສົງຄາມກາງເມືອງຫມາຍເຖິງສົງຄາມ ທີ່ມີການຕໍ່ສູ້ລະຫວ່າງພັກຝ່າຍການເມືອງ ພາຍໃນປະເທດດຽວກັນ ເພື່ອແຍ່ງຊີງອຳນາດດ້ານການເມືອງ. ຕາມການຮັບຮູ້ຂອງຊາວໂລກເອີ້ນວ່າ ສົງຄາມກາງເມືອງ. ສົງຄາມກາງເມືອງ ໃນລາວນັ້ນແມ່ນເລີ້ມ ຫລັງຈາກທີ່ລາວໄດ້ຮັບເອກະລາດຈາກຝຣັ່ງເສດໃນປີ 1957 ເປັນຕົ້ນມາ. ການຕໍ່ສູ້ດ້ວຍກຳລັງອາວຸດໃນລາວຫລັງຈາກການໄດ້ຮັບເອກະລາດກືວ່າແມ່ນສົງຄາມກາງເມືອງທັ້ງນັ້ນ. ແຕ່ຝ່າຍປະເທດລາວ ຫລື ແນວລາວຮັກຊາດ ກໍຄືພັກປະຊາຊົນປະຕິວັດລາວກືວ່າ ເປັນສົງຄາມຕ້ານຈັກກະພັດຝຣັ່ງເສດ ແລະ ຈັກກະພັດອາເມລິກາ. ເວົ້າອີກແບບນຶ່ງເອີ້ນວ່າຈັກກະພັດລ່າເມືອງຂຶ້ນແບບເກົ່າ ແລະ ຈັກກະພັດລ່າເມືອງຂຶ້ນ ແບບໃຫມ່. ໃນຊ່ວງໄລຍະເວລານີ້ຊາວບ້ານໄຮ່ກໍໄດ້ຮັບພົນກະທົບຢ່າງຫລີກລຽງບໍ່ໄດ້ເພາະສົງຄາມນີ້ແຜ່ລາມໄປທົ່ວປະເທດ. ຊາວບ້ານໄຮ່ໃນເມື່ອກ່ອນເຄີຍຊິນກັບການໄປອອກແຮງງານໃຫ້ຫລວງ 15 ວັນຕໍ່ປີກາຍມາ ເປັນການເກນທະຫານເຂົ້າປະຈຳການເພື່ອຕໍ່ສູ້ກັບຝ່າຍປະເທດລາວ. ການຄຸ້ມຄອງຂອງລັດຕໍ່ຊາວບ້ານກໍມີຫລາຍຂຶ້ນ. ມີການເລືອກຕັ້ງນາຍບ້ານ ໂດຍຜ່ານການບ່ອນບັດເລືອກຕັ້ງແບບປະຊາທິປະໄຕທົ່ວນິຍົມ. ມີການຮັບແຜນການ ຈາກຂັ້ນຕາແສງເພື່ອໄປເຜີຍແຜ່ ແລະ ຈັດຕັ້ງປະຕິບັດໃນຂັ້ນບ້ານ. ຊາວບ້ານມີພາ

ລະຫລາຍ ຂຶ້ນຕໍ່ອຳນາດການປົກຄອງໃນສມັຍນັ້ນ. ການເກັບເກນເຂົ້າປາອາຫານ ເພື່ອສຸກຍູ້ແນວຫນ້າກໍເກີດມີຂຶ້ນ. ຊາວບ້ານໄຮ່ ບໍ່ສາມາດດຳລົງຊີວິດ ແບບເດີມຂອງເຂົາເຈົ້າໄດ້ ເນື່ອງຈາກວ່າຕ້ອງໄດ້ປະກອບສ່ວນປະຕິບັດນະໂຍບາຍ ຂອງລັດຖະບານຕາມການມອບຫມາຍໃຫ້. ການເກັບກ່ຳຈຳນວນປະຊາຊົນໃນບ້ານກໍຊັດເຈນຂຶ້ນມີການບັນທຶກການເກີດການຕາຍຢ່າງຈະແຈ້ງ ເນື່ອງຈາກຕ້ອງມີໃບຢັ້ງຢືນການເກີດ ເພື່ອປະກອບເອກະສານທາງການ ຮວມທັງການເຂົ້າຮຽນໃນໂຮງຮຽນ. ໃນເວລານັ້ນການສື່ສານການຄົມມະນາຄົມ ຍັງບໍ່ທັນສະດວກວິທະຍຸກະຈາຍສຽງກໍຍັງບໍ່ທັນໂຄສະນາກ້ວາງຂວາງ ຊາວບ້ານກໍຍັງບໍ່ສາມາດຊື້ວິທະຍຸຟັງຢູ່ເຮືອນໄດ້. ດັ່ງນັ້ນຂ່າວສານຕ່າງໆ ແມ່ນຜ່ານປາກຕໍ່ປາກເປັນສ່ວນໃຫຍ່. ຜູ້ໃດມີວິທະຍຸຟັງ ກໍເປັນຜູ້ທີ່ເຜີຍແຜ່ສູ່ຜູ້ອື່ນຟັງໄປ. ໃນຊ່ວງເວລາແຕ່ປີ1957 ເປັນຕົ້ນມາການຂົນສົ່ງ ທາງລົດໄດ້ມີເພີ່ມຫລາຍຂຶ້ນເລື້ອຍໆ. ປະຊາຊົນຢູ່ເຂດຕາມລ່ອງນ້ຳງື່ມ ແລະ ຕາມເສັ້ນທາງ ເລກ 10 ວຽງຈັນ-ບ້ານເກີນ ກໍໄດ້ຊົມໃຊ້ພາຫະນະການຂົນສົ່ງທີ່ທັນສມັຍ. ນີ້ເຮັດໃຫ້ການ ແລກປ່ຽນສິນຄ້າວ່ອງໄວ ແລະ ຂ່າວສານກໍວ່ອງໄວກ່ວາເກົ່າຫລາຍ. ວິທີການທຳມາຫາກິນ ກໍມີການພັທນາຂຶ້ນຫລາຍແບບຫລາຍວິທີ. ຊາວບ້ານມີການຜລິດ ເພື່ອຂາຍຜລິດຕະພັນຂອງຕົນເອງ. ວັທນະທຳປະເພນີກໍມີການປະປົນກັບ ການຫາລາຍໄດ້ເຊັ່ນ: ການເຮັດບຸນວັດ, ບຸນໂຮງຮຽນ ເພື່ອຫາລາຍໄດ້ສ້າງວັດ ແລະ ສ້າງໂຮງຮຽນ. ມີການສ້າງຮ້ານລຳວົງມີການເຫມົາຮອບ ໂດຍກຳນົດຮອບທຳມະດາ ແລະ ຮອບພິເສດເປັນລາຍຮັບລວມຂອງຊາວບ້ານ. ນອກນັ້ນຍັງມີການ ແຈກໃບດີກາບຸນ ໃຫ້ບ້ານອື່ນໆ ມາຮ່ວມກິນທານແລະຮ່ວມຄົບງັນນຳດ້ວຍ. ໃນເວລານີ້ວົງດົນຕຣີກໍເກີດຂຶ້ນ ເພື່ອໃຫ້ບໍລິການດ້ານບັນເທີງຕາມງານວັດຕ່າງໆ. ຮ້ານລຳວົງໃນເວລານັ້ນ ແມ່ນເຮັດໃຫ້ສູງຈາກພື້ນດິນ ເອົາແປ້ນປູໃຫ້ພຽງໃຫ້ສົມກັບເປັນເວທີລຳວົງ ມີການເອ້ດອກໄມ້ປ່າ, ໃບໄມ້, ມີຮາວ

ອ້ອມ, ມີແປ້ນມ້ານັ່ງເພື່ອໃຫ້ສາວລຳວົງນັ່ງຢູ່ເທິງຮ້ານລຳວົງ, ແລະ ມີຂັ້ນໄດຂຶ້ນໄປຫາຮ້ານເພື່ອຮັບພວງມະໄລ. ເວລາຜູ້ຫນຸ່ມລຳວົງຂຶ້ນໄປ ຮັບເອົາພວງມະໄລຈາກນາງສາວ ຂອງຮອບລຳວົງທີ່ຖືກເລືອກ ເອົາຈາກ ຜູ້ຫນຸ່ມຮອບລຳວົງນາງສາວຈະມອບພວງມະໄລຄົບຕາມຈຳນວນນາງ ສາວທີ່ນັ່ງຢູ່ເທິງຮ້ານ ຫລື ຫລາຍກ່ວາ. ຈາກນັ້ນຜູ້ຫນຸ່ມຮອບຈຶ່ງເອົາໄປ ຢາຍໃຫ້ເພື່ອນຝູງຕົນເອງ. ເມື່ອດົນຕຣີບັນເລັງຂຶ້ນກໍຂຶ້ນເອົາພວງມະໄລ ໄປຄ້ອງຄໍເອົານາງສາວ ເທິງຮ້ານລຳວົງ. ຈາກນັ້ນກໍຟ້ອນລຳວົງກັນໄປ ເລີຍ. ຈະມີຜູ້ເຖົ້າຜູ້ຍິງ 1 ຄົນຮັບຜິດຊອບເກັບເອົາພວງມະໄລນຳນາງ ສາວຄືນ ໃນເວລາຟ້ອນລຳວົງຢູ່. ທາງດ້ານລ່າງອ້ອມໆ ຮ້ານລຳວົງກໍ ມີໂຕະຂາຍເຄື່ອງຂອງຜູ້ສາວພາຍໃນບ້ານເອງ ຫລື ຂອງສາວບ້ານອື່ນທີ່ ມານອນຂາຍເຄື່ອງຫາເງິນ ພິເສດໃນຍາມບຸນ. ເຂົາເຈົ້າຈະຂາຍເຫລົ້າ, ຂອງແກ້ມເຫລົ້າ, ເຂົ້າຫນົມ, ຂອງຫວານ, ແລະອື່ນໆ ແລ້ວແຕ່ມີໃນ ທ້ອງຖິ່ນນັ້ນ. ການມ່ວນຊື່ນແບບນີ້ນິຍົມກັນຫລາຍ ໃນເຂດຊົນນະບົດທີ່ມີ ການຄົມມະນາຄົມໄປເຖິງ. ງານບຸນນີ້ກໍເປັນໂອກາດໃຫ້ຊາວບ້ານ ໄດ້ເກັບ ເຄື່ອງຮົ້ວເຄື່ອງສວນ ຂອງຕົນເອງໄປຂາຍໃນງານ. ການທີ່ຊາວບ້ານ ເລີ່ມຮູ້ວິທີ ຂາຍສິນຄ້າກໍເປັນສາເຫດໃຫ້ເຂົາເຈົ້າ ຊອກຫາວິທີຜລິດໃຫ້ ຫລາຍຂຶ້ນ. ການຈັບປາກໍຕ້ອງ ຫາວິທີຈັບໃຫ້ຫລາຍຂຶ້ນ, ການລ່າເນື້ອ ກໍລ່າເພື່ອຂາຍເອົາເງິນ, ດ້ວຍເຫດນີ້ຈຶ່ງມີການນຳໃຊ້ ອຸປະກອນທີ່ທັນ ສມັຍກ່ວາເກົ່າ. ຈິດໃຈເອື້ອເຟື້ອອາລີຕໍ່ພີ່ນ້ອງ ແລະ ເພື່ອນຝູງຕ່າງໆ ກໍຄ່ອຍຈືດຈາງ ໄປກາຍເປັນການຄິດໄລ່ ດ້ານເສດຖະກິດທັ້ງນັ້ນໃນການພົວ ພັນຊຶ່ງກັນແລະກັນ. ການປະກອບສ້າງຂອງຊຸມຊົນຊາວບ້ານ ກໍມີການ ປ່ຽນແປງຂຍາຍຕົວອອກດ້ວຍສາມສາເຫດໃຫຍ່: ການເຕີບໃຫຍ່ໃນຕົວ ຂອງຊາວບ້ານເອງ ໂດຍການເກີດແມ່ແຜ່ລູກສ້າງຄອບຄົວໃນບ້ານເອງ ຄົນໃນບ້ານແຕ່ງງານກັບຄົນບ້ານອື່ນ ແລ້ວຍ້າຍມາຢູ່ໃນບ້ານ, ແລະ ການ ອົບພະຍົບເຂົ້າມາຢູ່ຮ່ວມຊາວບ້ານ ຍ້ອນແຕກຫນີຈາກສົງຄາມ ແລະ

ຊອກຫາບ່ອນທຳກິນທີ່ເຫມາະສົມ ກັບຄວາມກະນັດຂອງຕົນເອງ. ຈາກ ເຫດພົນນີ້ເຮັດໃຫ້ຊຸມຊົນບ້ານໄຮ່ ຂຍາຍຕົວໄວ. ຄວາມເປັນບ້ານຄອບ ຄົວດຽວກັນກໍແຄບເຂົ້າເຫລືອແຕ່ຄົນລຸ້ນເກົ່າທີ່ຈື່ຈຳກັນໄດ້. ອາຊີບຂອງ ຊາວບ້ານກໍມີຫລາກຫລາຍອາຊີບຢູ່ຮ່ວມກັນ ແຕ່ພື້ນຖານເສດຖະກິດ ຂອງ ບ້ານຍັງແມ່ນກະສິກຳຢູ່ຄືເກົ່າ. ໃນຊຸມປີ 1960 ການປະຕິວັດກອງແລ ເພື່ອຍຶດອຳນາດຢູ່ນະຄອນຫລວງວຽງຈັນ ໄດ້ລະເບີດຂຶ້ນໃນວັນທີ 09/08/ 1960. ບ້ານໄຮ່ທີ່ຍັງເປັນບ້ານງຽບສະຫງົບ ຢູ່ກໍໄດ້ເຫັນຣົຖ CMC ຂອງ ທະຫານແລ່ນ ຜ່ານຕັ້ງສອງມື້ສອງຄືນ. ບັນຍາກາດຂອງສົງຄາມໄດ້ເຂົ້າ ປົກຄຸມ. ຄວາມຢ້ານກົວກະສັ່ນກະສາຍແຕກຕື່ນຂອງ ຊາວບ້ານເລີ່ມ ເກີດມີຂຶ້ນ. ຊາວບ້ານໄດ້ຮັບຄຳສັ່ງ ໃຫ້ຂຸດຂຸມລີ້ໄພປະຈຳເຮືອນໃຜມັນ ແລະຫາທີ່ກຳບັງລູກປືນໃຫຍ່ 105 ມມ ທີ່ຈະຍິງຊ່ວຍ ເພື່ອຂັບໄລ່ທະ ຫານກອງແລອອກຈາກພື້ນທີ່. ຊາວບ້ານໄຮ່ໄດ້ປົບເສິກອີກເປັນຄັ້ງທີ່ສອງ ຫລັງຈາກ ການປົບເສິກຫນີໄປຢູ່ນາພົງ ບ້ານທົ່ງນັ່ງໃນສົງຄາມຝຣັ່ງ ຕໍ່ສູ້ກັບລັດຖບານລາວອິດສະລະ ໃນທ້າຍຊຸມປີ 1940. ແຕ່ການຫນີເທື່ອນີ້ ແມ່ນພາກັນຫນີ ໄປບັງຢູ່ເຂດປາກຫ້ວຍຫນອງຫລວງ, ຫ້ວຍອ້າຍເວັ້ນ, ດົງຈອງແຄມນ້ຳງື່ມຍາງບ້ອງພີ່, ແລະ ສະເພາະຜູ້ຊາຍແມ່ນໃຫ້ເຝົ້າບ້ານ. ການແຕກນີ້ ໃຊ້ເວລາປົ່ງມື້ປົ່ງຄືນ ໂດຍແຕ່ລະຄົນຈະຕ້ອງໄດ້ຕຽມເອົາ ຫານການກິນໄປໃຫ້ກຸ້ມ ກິນປະມານສອງສາມມື້. ເມື່ອປືນໃຫຍ່ສະຫງົບ ລົງແລ້ວຈຶ່ງມີພວກຜູ້ຊາຍໄປເອີ້ນ ເອົາອອກຈາກປ່າມາ. ແຕ່ນັ້ນມາຄຳ ວ່າສົງຄາມຍັງບໍ່ມີວັນ ສິ້ນສຸດການໂຈມຕີຕາມເສັ້ນທາງເລກທີ 10 ໄດ້ ເກີດມີຢູ່ເລື້ອຍໆ. ນອກນີ້ຍັງມີການປະທະກັນຂອງທະຫານ ຝ່າຍປະເທດ ລາວ ແລະ ກອງທັບແຫ່ງຊາດວຽງຈັນຕາມລຳນ້ຳງື່ມ, ຕີນພູເຂົາຄວາຍ, ຕາມຫົວໄຮ່ປາຍນາ, ແລະ ຕາມບ້ານຕ່າງໆ ທີ່ຢູ່ໃກ້ພູເຂົາຄວາຍ. ຢູ່ບ້ານ ໄຮ່ກໍມີການຍິງກັນລະຫວ່າງ ກອງຮ້ອຍຮັກສາບັກຂ້າມງື່ມ ແລະ ກອງ ທະຫານປະເທດລາວ ຍິງປືນຂ້າມນ້ຳງື່ມໃສ່ກັນ. ກອງທະຫານປະເທດ

ລາວເຂົ້າມາຝັ່ງບ້ານໄຮ່ ເກັບເກນເອົາເຂົ້ານຳ ຊາວບ້ານໄປກິນແລ້ວກໍ່ສັ່ງໃຫ້ນາຍບ້ານທິດເອບ (ຕູ້ຫມັ້ນ) ໃນສມັຍນັ້ນພາຍເຮືອເອົາຫນັງສືໄປສົ່ງໃຫ້ຈ່າສຸກ ເພື່ອແຈ້ງໃຫ້ຮູ້ວ່າຫລັງກິນເຂົ້າແລ້ວຈະໄປຕີກັບຈ່າສຸກ. ນາຍບ້ານໆໄຮ່ກໍ່ຈຳເປັນຕ້ອງ ໄດ້ປະຕິບັດນຳທັງສອງຝ່າຍ ຖ້າບໍ່ເຮັດກໍ່ເປັນໄປບໍ່ໄດ້. ຫລັງກິນເຂົ້າແລ້ວຝ່າຍປະເທດລາວ ກໍ່ຍ່າງລົງໄປທາງໃຕ້ບ້ານແລ້ວກໍ່ຍິງປືນປະມານ ປັ້ງສອງປັ້ງໃສ່ແຊງຫມາກພ້າວຕູ້ວິໄລແລ້ວກໍ່ ແລ່ນຫນີໄປທາງຫນອງຫລວງ. ຈາກນັ້ນຈ່າສຸກກໍ່ຍິງປືນຂ້າມມາໃສ່ ບ້ານໄຮ່ແກວເດີ່ນວັດໃນປະຈຸບັນ ແລະ ສວນ ທ່ານໂນລັງຊື່ງແມ່ນ ສວນແມ່ໂຮມໃນປະຈຸບັນ. ຈ່າສຸກຈະຍິງປະມານເຄິ່ງຊົ່ວໂມງ ເປັນຢ່າງຕ່ຳ. ແລ້ວກໍ່ເອີ້ນ ເອົານາຍບ້ານໄປສອບຖາມຕາມທຳນຽມ. ການປະທະກັນຈະມີທັງກາງວັນ ແລະ ກາງຄືນແລ້ວແຕ່ການມາເກີງຂອງຝ່າຍປະເທດລາວ. ມີບາງເທື່ອ ກອງທະຫານຂອງຝ່າຍເປັນກາງເຊັ່ນ ຕາກະແຕ, ຕາກະຕືກນຳເອົາທະຫານ ມາຍິງໂຈມເຮືອບັກຂ້າມນ້ຳງື່ມ ບາງເທື່ອກໍ່ເອົາດາບທີ່ ໂດງດັງຂອງກະຕືກຟັນລົງຫຼັກຫນາງ ຂອງເຮືອບັກເປັນຮອຍແພບັກໃຫຍ່ຄ່າສອກ. ບາງຄັ້ງກໍ່ຍິງແຕ່ຈັກແລ່ນເຮືອແຕ່ ບາງເທື່ອກໍ່ຍິງເຮືອບັກລົ້ມແລ້ວ ແຕ່ຫົວຫນ້າເປັນຜູ້ສັ່ງການ. ບ້ານໄຮ່ ໄດ້ຢູ່ໃຕ້ພາວະສຸກເສີນຕະຫລອດ. ກາງຄືນຫ້າມຄົນລົງເຮືອນແຕ່ ເວລາ 6:00 ໂມງເປັນຕົ້ນໄປ. ຖ້າມີສຽງຫມາເຫົ່າຈ່າສຸກຈະສັ່ງ ລູກນ້ອງຍິງປືນໄປໃສ່ບ່ອນຫມາເຫົ່າທັນທີ. ລູກປືນລອຍໄປຊ່ວງຫົວຊ່ວງຄີງຂອງຄົນພໍດີ ແຕ່ບໍ່ເຄີຍຖືກຫມາຕາຍຈັກເທື່ອ. ບາງເທື່ອເສົາເຮືອນຝາເຮືອນຂອງ ຊາວບ້ານກໍ່ຖືກລູກປືນຈ່າສຸກ ເປັນແຕ່ບຸນບໍ່ມີຜູ້ໃດເສັຍຊີວິດດ້ວຍເຫດ ການແບບນີ້. ໃນຊຸມປີ 1960 ນີ້ເຮັດໃຫ້ຊີວິດການເປັນຢູ່ຂອງຊາວບ້ານພົບກັບຄວາມຫຍຸ້ງຍາກຫລາຍ. ສັດລ້ຽງກໍ່ເສັຍເປັນປະຈຳນວນຫລາຍເນື່ອງຈາກທະຫານລັກຍິງເອົາໄປກິນບາງເທື່ອ ເຈົ້າຂອງງົວນຳໄປ ເກີງຮອດຄ້າຍທະຫານຫາດກ້ຽງ ແລະ ມີການຮ້ອງຮຽນຕໍ່ຜູ້ບັງຄັບບັນຊາ. ແຕ່ບໍ່

ມີການໃຊ້ແທນຄືນ ຢ່າງຫລາຍກໍມີແຕ່ທຳທ່າຈັບທະຫານ ບາງຄົນຂ້າງພໍ່ແກ້ຫນ້າ. ຊາວບ້ານໄຮ່ເຂົ້າໃຈດີວ່າເຂົາເຈົ້າ ກໍກລັງແກຢູ່ແບບນີ້ເປັນປະຈຳ. ເມື່ອທະຫານຝ່າຍປະເທດລາວ ຫນີໄປໄກແລ້ວຝ່າຍກອງທັບວຽງຈັນກໍມີການກວດກາທຸກມື້. ໃນຊຸມປີ 1960 ນີ້, ມີອົບພະຍົບຈາກເມືອງແທງດຽນບຽນພູຊຶ່ງສ່ວນໃຫຍ່ ແມ່ນເຜົ່າໄທດຳ ເຂົ້າມາຢູ່ຮ່ວມກັບຊາວບ້ານໄຮ່ຈຳນວນນຶ່ງທີ່ຍັງເຫລືອຢູ່ໃນປະຈຸບັນ ແມ່ນພໍ່ຕູ້ແຈ້ນ. ແຕ່ຈຳພວກນຶ່ງໄດ້ຍ້າຍຈາກບ້ານໄຮ່ ລົງໄປຢູ່ບ້ານທ່າກົກໄຮຕາມການຈັດຕັ້ງ ຂອງທາງການໃນເວລານັ້ນ. ໃນທ້າຍຊຸມປີ 1960 ໄດ້ມີອົພຍົບ ຈາກຊຽງຂວາງມາຕັ້ງບ້ານຊົ່ວຄາວຢູ່ຟາກເວີນຄຳ. ຈຳນວນນຶ່ງຍັງເຫລືອຢູ່ບ້ານເວີນຄຳເຖິງ ປັດຈຸບັນ. ບາງຈຳນວນ ແຕ່ງງານກັບຊາວບ້ານໄຮ່ ແລ້ວກໍຍ້າຍມາຢູ່ບ້ານໄຮ່. ຈຳນວນນຶ່ງແມ່ນຍ້າຍຈາກບ້ານຫນອງທາ ເຊັ່ນແມ່ຕູ້ນາລີ, ຈຳນວນນຶ່ງແມ່ນ ມາແຕ່ຟາກນ້ຳຂອງກົ້າໄຫມາເຜົ່າສວນໃຫ້ເຈົ້ານາຍ ແລ້ວກໍຢູ່ເລີຍເຊັ່ນ: ຕູ້ກຸນ, ຕູ້ແຕວ, ຕູ້ເຊັງ. ຈຳນວນນຶ່ງ ແມ່ນມາແຕ່ຕ່າງແຂວງ ຫລື ທ້ອງຖິ່ນອື່ນມາເຜົ່າສວນໃຫ້ເຈົ້ານາຍ ແລ້ວກໍຢູ່ເລີຍເຊັ່ນ: ຕູ້ໂຮມຢູ່ໃຕ້ວັດໃນປະຈຸບັນເປັນຕົ້ນ. ບ້ານໄຮ່ທີ່ເມື່ອ ກ່ອນມີ 30 ຄອບຄົວຂະຫຍາຍເປັນ 50, 60 ໄປເລື້ອຍໆຈົນເຖິງ ຫລາຍກວ່າ 300 ຄອບຄົວໃນປະຈຸບັນ.

ພາກທີ10: ຊຸມຊົນບ້ານໄຮ່ຫລັງຈາກປີ1975

ຫລັງຈາກການປົດປ່ອຍ, ບ້ານໄຮ່ໄດ້ມີການປ່ຽນແປງຫລາຍຢ່າງຊຶ່ງບໍ່ເຄີຍເກີດມີໃນອະດີດ. ຊຸມຊົນທີ່ເຄີຍຢູ່ຮ່ວມກັນເປັນເວລາຍາວນານກໍມີການແຍກຍ້າຍ ໄປຕາມອຸດົມການຂອງໃຜມັນ. ອ້າຍເອື້ອຍນ້ອງພໍ່ແມ່ຈຳນວນນຶ່ງໄດ້ແຍກຍ້າຍກັນໄປກາຍເປັນຊາວອົພຍົບຢູ່ຕ່າງປະເທດ ບາງຄົນກໍມີໂອກາດກັບຄືນມາຢາມບ້ານເກີດເມືອງນອນບ່ອນເຄີຍຢູ່ອາໃສແຕ່ຍັງນ້ອຍ, ບ່ອນເຄີຍຫາກິນ, ບ່ອນເຄີຍຫລິ້ນ, ແຕ່ບາງຄົນບໍ່ມີ

ໂອກາດໄດ້ກັບມາບ້ານເກີດຂອງຕົນເອງດ້ວຍເຫດຜົນຫລາຍປະການ ເຊັ່ນ: ເສັຍຊີວິດກ່ອນທີ່ຈະສາມາດກັບມາຢາມບ້ານເດີມໄດ້, ບາງຄົນເສັຍຊີວິດແຕ່ຕອນຂ້າມນ້ຳຂອງ, ບາງຄົນຍ້ອນເຫດຜົນ ດ້ານການເມືອງບໍ່ມີໂອກາດ ທີ່ຈະມາຢາມບ້ານເກີດຂອງຕົນເລີຍ. ການສ້າງຕັ້ງປະເທດເປັນ ສາທາລະນະລັດປະຊາທິປະໄຕປະຊາຊົນລາວ ເປັນການປ່ຽນແປງດ້ານການເມືອງ ອັນສຳຄັນພາຍໃນປະເທດ. ເປັນການຫັນປ່ຽນແນວຄິດເພື່ອຮັບເອົາແນວຄິດແບບໃຫມ່ ຄືແນວຄິດສັງຄົມນິຍົມ. ການປ່ຽນແປງນີ້ສຳລັບຊາວບ້ານໄຮ່ ແລ້ວຈະບໍ່ມີບັນຫາອັນໃດ. ແຕ່ສິ່ງທີ່ເສັ້າຂອງຊາວບ້ານໄຮ່ແທ້ນັ້ນແມ່ນຍາດຕິພີ່ນ້ອງ, ອ້າຍນ້ອງ, ຫມູ່ຄູ່ຂອງເຂົາເຈົ້າຈຳນວນນຶ່ງໄດ້ໂຕນຫນີຈາກປະເທດເພື່ອໄປຕັ້ງກິ່ນການຢູ່ປະເທດອື່ນຊຶ່ງບໍ່ແມ່ນບ້ານເກີດເມືອງນອນຂອງຕົນເອງ. ໃນເວລານັ້ນ ບໍ່ມີໃຜຮູ້ໄດ້ວ່າເຂົາເຈົ້າ ຈະໄປໄດ້ຢ່າງປອດ ຫລື ບໍ່, ຈະມີການເປັນຢູ່ຢ່າງໃດເມື່ອໄກບ້ານເກີດເມືອງນອນຂອງຕົນເອງ, ຈາກກັນໄປໃນວັນນັ້ນ ບໍ່ມີໃຜຮູ້ວ່າຈະມີໂອກາດ ໄດ້ກັບມາເຫັນຫນ້າກັນອີກ ຫລື ແມ່ນແຕ່ຂ່າວຄາວກໍບໍ່ສາມາດຮູ້ໄດ້ເລີຍ. ຊາວບ້ານຮູ້ສຶກຄືກັບວ່າ ຍາດພີ່ນ້ອງຂອງເຂົາເຈົ້າ ທີ່ຈາກໄປນັ້ນຊ່ຳກັບວ່າໄດ້ຕາຍຈາກກັນໄປ. ບໍ່ມີໃຜຄິດວ່າຈະມີ ໂອກາດໄດ້ເຫັນຫນ້າກັນອີກ. ມັນແມ່ນເວລາແຫ່ງຄວາມໂສກເສົ້າ ແລະ ງ່ວມເຫງົາທີ່ສຸດຂອງຊາວບ້ານໄຮ່ອ້າຍ ກ່ວາປາງສົງຄາມ. ແຕ່ລະມື້ແຕ່ລະວັນໄດ້ຍິນແຕ່ຂ່າວວ່າຜູ້ນັ້ນຜູ້ນີ້ໂຕນໄປແລ້ວ. ມັນເປັນຂ່າວທີ່ສ້າງຄວາມທົດທູ່ຢູ່ແກ່ໃຈຂອງຊາວບ້ານໄຮ່. ພາຍໃຕ້ລະບອບໃຫມ່ຊາວບ້ານໄຮ່ ຜູ້ທີ່ຍັງເຫລືອຢູ່ກໍໄດ້ປະຕິບັດຕາມການຊີ້ນຳຂອງສູນກາງ ໂດຍມີການຈັດຕັ້ງຊາວຫນຸ່ມ, ແມ່ຍິງ, ລະແນວໂຮມບ້ານພ້ອມນີ້ມີການຈັດຕັ້ງ ສະຫະກອນກະເສດບ້ານອີກດ້ວຍ. ມັນເປັນວິຖີຊີວິດແບບໃຫມ່ທີ່ຊາວບ້ານ ບໍ່ຄຸ້ນເຄີຍເຊັ່ນ ສະຫະກອນປູກສາລີ, ສະຫະກອນປູກຜັກ, ແລະ ອື່ນໆ. ແຕ່ສັງລວມເບິ່ງແລ້ວບໍ່ຄ່ອຍເດີນໄດ້ດີປານໃດ ຈຶ່ງມີການຍົກເລີກທົ່ວທັງປະເທດ ໂດຍທ່ານໄກ

ສອນພົມວິຫານ ໄດ້ປະກາດຢ່າງເປັນທາງການວ່າ ຫາກບ່ອນໃດບໍ່ມີປະສິດທິພົນແລ້ວແມ່ນໃຫ້ຍົກເລີກ. ການຜລິດກະສິກໍາ ຈຶ່ງກັບມາເປັນແບບເອກະຊົນຄືເກົ່າ. ການຄ້າຂອງພາກລັດ ແລະ ລວມໝູ່ໄດ້ຄ່ອຍສລາຍຕົວຍ້ອນບໍ່ມີປະສິດທິພາບ ໃນການບໍລິຫານ. ການຄ້າແບບເອກະຊົນໄດ້ຂະຫຍາຍຕົວສູງ ເມື່ອລັດຖບານເປີດປະເທດ ແລະ ອະນຸຍາດໃຫ້ມີການລົງທຶນຂອງເອກະຊົນທັງພາຍໃນ ແລະ ຕ່າງປະເທດ ຊຶ່ງເອີ້ນແບບນຶ່ງວ່າການເປີດປະເທດ ໂດຍເລີ່ມແຕ່ປີ 1986. ທ່ານໄກສອນ ເປັນຜູ້ນໍາທີ່ມີຄວາມສາມາດ ແລະ ກ້າຕັດສິນໃຈໃນບັນຫາໃຫຍ່ໆ ໄດ້ກ່ອນຜູ້ອື່ນ. ໃນບັນດາປະເທດສັງຄົມນິຍົມ ໃນສມັຍນັ້ນບໍ່ມີ ປະເທດໄດ້ກ້າລົບລ້າງສະຫະກອນ, ທຸລະກິດຂອງລັດ ແລະ ຣວມໝູ່ ແລະ ທັງເປີດປະເທດແລກປ່ຽນສິນຄ້າກັບທຶນນິຍົມ, ອະນຸຍາດໃຫ້ນັກລົງທຶນໃນປະເທດທຶນນິຍົມ ມາລົງທຶນໃນປະເທດ. ລຸງໄກສອນ ເປັນຜູ້ນໍາປະເທດ ສັງຄົມນິຍົມຜູ້ທໍາອິດທີ່ເປີດປະເທດ. ຈາກນັ້ນຈຶ່ງມີປະເທດອື່ນ ເປີດປະເທດຕາມຫລັງຈີນໃນທີ່ສຸດສະຫະພາບໂຊວຽດ ແລະ ບັນດາປະເທດສັງຄົມນິຍົມ ໃນພາກພື້ນເອີລົບຕາເວັນອອກ ກໍຫລົ້ມສະຫລາຍເລີ່ມແຕ່ປີ 1989 ເປັນຕົ້ນມາ ໂດຍນະໂຍບາຍເປເຣສຕະໂຣຍກາ ແລະ ກະລັສໂນສຂອງ ທ່ານມີກາອີນກໍບາຊອບ. ການຫລົ້ມສະຫລາຍບໍ່ແມ່ນ ຍ້ອນການເປີດປະເທດແຕ່ ແມ່ນຍ້ອນຄວາມຕ້ອງການຂອງປະຊາຊົນຂອງປະເທດເຫລົ່ານັ້ນເອງ. ຊາວບ້ານໄຮ່ໃນລະບອບໃໝ່ ໄດ້ຖືກປະປົນກັບຊາວບ້ານອື່ນ ແລະ ແຂວງອື່ນຫລາຍອາດຈະເຖິງ 50%. ດິນຂອງບ້ານໄຮ່ແຕ່ຫາກ ແມ່ນເຈົ້ານາຍໃນລະບອບເກົ່າມາເຮັດຮົ້ວສວນໃສ່ເວລາປົດປ່ອຽແລ້ວເຈົ້າຂອງໂຕນໜີອອກ

ຈາກບ້ານເກີດເມືອງນອນ ກໍໄດ້ຖືກລັດຍຶດເອົາໄປໃຊ້ເປັນຂອງຣວມໝູ່ໂດຍທີ່ບໍ່ມີການຈັດສັນໃຫ້ຊາວບ້ານໄຮ່ ແຕ່ຢ່າງໃດ. ຊາວບ້ານໄຮ່ຜູ້ເຝົ້າດິນຕອນນັ້ນ ມາຕັ້ງຫລາຍປີ ກໍບໍ່ສາມາດ ຈະສືບຕໍ່ທໍາມາຫາກິນ ບົນແຜ່ນດິນຕອນນັ້ນໄດ້. ຈາກນັ້ນ, ດິນຕອນທີ່ວ່າ ກໍໄດ້ຈັດສັນແບ່ງປັນໃຫ້

ບຸກຄົນທີ່ທາງການຈັດຕັ້ງ ກ່ຽວຂ້ອງເຫັນດີອະນຸມັດໃຫ້. ດິນບ້ານໄຮ່ທີ່ເຄີຍກ້ວາງຂວາງສໍາຫລັບຊາວບ້ານໄຮ່ ກໍໄດ້ແຄບເຂົ້າເກືອບັ້ນຍາດດິນຍາດດອນ ກັບລາວເປັນສູ່ມືເລື່ອງນີລາວກັບ. ຊາວບ້ານໄຮ່ທີ່ເຄີຍເປັນຄົນຊື່ສັດສາມັກຄີກິນກຽວກັບກິກ ການເຂົ້າມາມີສ່ວນ ຮ່ວມຂອງຄົນທ້ອງຖິ່ນອື່ນທີ່ມີນິດໃສໃຈຄໍ ແຕກຕ່າງຈາກຊາວບ້ານໄຮ່ເດີມ. ອໍານາດການປົກຄອງທີ່ບັນພະບຸຣຸດຂອງຊາວບ້ານໄຮ່ ທີ່ເຄີຍປະຕິບັດ ສືບທອດມາກໍຖືກເຂົ້າຮ່ວມແບ່ງອໍານາດການປົກຄອງຈາກຄົນມາແຕ່ທ້ອງຖິ່ນອື່ນ.

ພາກທີ່11:ເສຖກິດຂອງຊາວບ້ານໄຮ່ປະຈຸບັນ (1995-2005)

ເສຖກິດຂອງຊາວບ້ານໄຮ່ ໃນປະຈຸບັນໄດ້ມີການປ່ຽນແປງ ຢ່າງໃຫຍ່ຫລວງຈາກ 50 ປີ ກ່ອນຫນ້ານີ້. ແຕ່ກ່ອນຊາວບ້ານໄຮ່ ເຮັດໄຮ່, ເຮັດນາ, ເຮັດສວນ, ຫາປາ, ລ່າສັດ, ແລະ ຫາເຄື່ອງປ່າຂອງດົງ ເປັນການດໍາລົງຊີວິດ ຂອງເຂົາເຈົ້າ, ແຕ່ມາບັດນີ້ຊາວບ້ານບໍ່ສາມາດຈະໃຊ້ວາດດໍາລົງຊີວິດ ແບບນັ້ນອີກແລ້ວ ເນື່ອງຈາກທໍາມະຊາດໄດ້ກືກທໍາລາຍ ແລະ ຄວາມອຸດົມສົມບູນຂອງ ທໍາມະຊາດໄດ້ຫມົດໄປ. ເຄື່ອງມືໃນການຜລິດກະສິກໍາ ຂອງເຂົາເຈົ້າຕ້ອງໄດ້ປ່ຽນແປງ ໄປຕາມຍຸກສມັຍ. ປະຈຸບັນບໍ່ມີຄວາຍແກ່ໄຖແບບເດີມໆ ອີກແລ້ວ ຍ້ອນວ່າທົ່ງຫຍ້າລ້ຽງຄວາຍນັ້ນແຄບເຂົ້າການຮັກສາຄວາຍກໍຍາກຫລາຍ. ດ້ວຍເຫດນັ້ນບໍ່ມີຜູ້ໃດຢາກລ້ຽງງົວຄວາຍ ຄືແຕ່ເກົ່າ. ກ້າຫາກຕ້ອງການລ້ຽງກໍຕ້ອງໄດ້ໄປເຝົ້າຫມົດມື້ຊຶ່ງ ເປັນການຍາກລໍາບາກຫລາຍ. ສມັຍກ່ອນມີແຕ່ປ່ອຍອອກຄອກ ແລະ ຕອນແລງກໍຕ້ອນເຂົ້າຄອກເທົ່ານັ້ນ ໄຖໄມ້, ຄາດໄມ້, ແລະ ກະຊ້ວສະນໍ້າເຂົ້ານາແບບເກົ່ານັ້ນບໍ່ມີແລ້ວ. ຊາວບ້ານໄຮ່ໄດ້ມີການປັບຕົວໃຫມ່ ໃຫ້ສາມາດຢູ່ລອດໄດ້. ປະຈຸບັນຊາວບ້ານໄດ້ມີການຄ້າຂາຍຫລາຍຂຶ້ນກ່ວາເກົ່າ, ການຄ້າຂາຍຂອງເຂົາເຈົ້າ ຈະມີແຕ່

ເຄື່ອງຮົ້ວເຄື່ອງສວນໄປຈົນເຖິງເຄື່ອງອຸດສາຫະກຳ. ຕາມເສັ້ນທາງ ເລກ 10 ທີ່ຜ່ານບ້ານໄຮ່ຈະມີຕູບນ້ອຍແຄມທາງ ເພື່ອເປັນບ່ອນວາງ ສິນຄ້າຂອງຊາວບ້ານ ໄວ້ຂາຍໃຫ້ຜູ້ຄົນທີ່ເດີນທາງຜ່ານໄປມາ. ທາງ ເລກ10 ປະຈຸບັນ ມີຣົຖຫຼວງຜ່ານຫລາຍ ເມື່ອເວລາເຫັນສິນຄ້າເຄື່ອງຮົ້ວເຄື່ອງສວນວາງຕາມຕູບນ້ອຍກໍຈອດຣົຖ ເພື່ອຊື້ພືດຜັກຫມາກໄມ້ໄປກິນ ຫລື ຕ້ອນຫມູ່ຄູ່. ຜູ້ຊື້ເຂົ້າໃຈວ່າຕົນເອງ ໄດ້ຊື້ສິນຄ້າສົດຈາກຊາວສວນ ແລະຄິດວ່າຈະມີລາຄາຖືກກ່ວາ ຢູ່ໃນຕົວເມືອງ. ຊາວບ້ານກໍພາກັນ ປູກພືດເປັນສິນຄ້າທີ່ສາມາດຂາຍໄດ້ເຊັ່ນ: ຫມາກຮຸ່ງ, ຫມາກກ້ວຍ, ຫມາກແຕງຊີ້ໄກ່, ແລະ ເຄື່ອງຈັກສານອື່ນໆ. ຕາມແຄມງື່ມກໍມີການ ລ້ຽງປາກະຊັງຊຶ່ງແມ່ນປະກົດການໃຫມ່ ດ້ານເສຖກິດແຕ່ຫາກແມ່ນຄົນ ຜູ້ເຮັດນັ້ນບໍ່ແມ່ນຄົນບ້ານໄຮ່ໂດຍກົງ. ເຂົາເຈົ້າມາຈາກບ່ອນອື່ນມາ ເຊົ່າບ່ອນຂອງຊາວບ້ານ ເພື່ອດຳເນີນທຸລະກິດດ້ານນີ້. ການສ້າງຮ້ານ ອາຫານເຮືອແພຕາມແຄມນ້ຳງື່ມ, ການບໍລິການເຮືອທ່ອງທ່ຽວພ້ອມ ການບໍລິການອາຫານຕາມເຮືອ ເປັນສິ່ງທີ່ສາມາດດຶງດູດ ລູກຄ້າທັງພາຍໃນ ແລະຕ່າງປະເທດໄດ້ດີ. ໂດຍສະເພາະວັນເສົາວັນທິດ ຊຶ່ງເປັນວັນພັກການຂອງພະນັກງານຫລືອົງການຈັດຕັ້ງອື່ນໆ ຈຶ່ງມີຄົນມາພັກຜ່ອນຫລາຍຂື້ນ. ນ້ຳງື່ມຍັງ ແມ່ນສັບສົມບັດອັນຍາວນານຂອງ ຊາວບ້ານໄຮ່ ເປັນປັດໃຈໃຫ້ແກ່ການ ຂະຫຍາຍຕົວເສຖກິດຂອງບ້ານ. ຊາວບ້ານຈຳນວນນຶ່ງໄດ້ປ່ຽນຈາກການທຳນາ, ໄຮ່, ສວນ ມາເປັນການໃຫ້ບໍລິການດ້ານອາຫານເຄື່ອງດື່ມທ່ອງທ່ຽວຕາມ ລຳນ້ຳງື່ມ ແລະ ການບັນເທີງຕ່າງໆ. ການສຶກສາໄດ້ຂຫຍາຍຕົວສູງພາຍໃນປະເທດໄດ້ເຮັດໃຫ້ເດັກນ້ອຍໃນບ້ານໄດ້ມີໂອກາດ ເຂົ້າຮຽນຢ່າງທົ່ວເຖິງ. ຫລາຍຄົນຮຽນຈົບລະດັບສູງໃນຫລາກຫລາຍວິຊາ ແລະ ຫລາຍລະດັບແຕກຕ່າງກັນ. ເຮັດໃຫ້ມີສາຂາອາຊີບອື່ນເກີດຂື້ນ ໃນຊຸມຊົນບ້ານໄຮ່. ອາຊີບທີ່ເກີດຂື້ນມາໃຫມ່ມີປະເພດບໍລິການ, ການກໍ່ສ້າງ, ການຜລິດສິນຄ້າປະເພດເຟີນີເຈີ, ເຄື່ອງຈັກ

ສານ, ອາຫານ, ແລະ ການປະມົງ. ປະເພດບໍລິການ ຊາວບ້ານໄດ້ຕັ້ງຮ້ານອາຫານຊຶ່ງລູກຄ້າສາມາດສັ່ງອາຫານໄດ້ຕາມໃຈ ຊຶ່ງເອີ້ນວ່າອາຫານຕາມສັ່ງ. ຮ້ານອາຫານປະເພດນີ້ຜູ້ຄົວກິນຈະຕ້ອງມີການອົບຮົມຢ່າງດີຈຶ່ງສາມາດຕັ້ງຮ້ານຂຶ້ນໄດ້. ຮ້ານປະເພດນີ້ຈະມີການເສັຽພາສີ ໃຫ້ແກ່ລັດຖະບານ ແລະ ຕ້ອງມີໃບອະນຸຍາດດຳເນີນທຸລະກິດ. ປະຊາຊົນບ້ານໄຮ່ສ່ວນຫລາຍ ຈະບໍ່ມັກການຕັ້ງຮ້ານອາຫານປະເພດນີ້ແຕ່ພັດມັກຕັ້ງຮ້ານແຄມທາງ ແບບຕູບນ້ອຍຂອງຊາວບ້ານໂດຍທົ່ວໄປ. ເນື່ອງຈາກວ່າຮ້ານປະເພດນີ້ຈະບໍ່ໄດ້ເສັຍພາສີການອນເວລາມາຂາຍຈຶ່ງຈະເສັຍພາສີກໍ່ງບໍ່ມາຂາຍກໍບໍ່ຕ້ອງເກັບພາສີ. ຊາວບ້ານຈະບໍ່ຂາຍແຕ່ສິນຄ້າ ທີ່ເຂົາເຈົ້າຜລິດໄດ້ເທົ່ານັ້ນແຕ່ວ່າຊື້ເອົາພົນຜລິດຂອງທ້ອງຖິ່ນ ອື່ນມາຂາຍນຳແບບມີການແລກປ່ຽນສິນຄ້າ. ມັນເປັນການຫັນປ່ຽນໃຫມ່ ທາງດ້ານອາຊີບຂອງຊາວບ້ານ. ຄົນລຸ້ນໃຫມ່ຂອງຊາວບ້ານໄຮ່ ສ່ວນຫລາຍຫັນອາຊີບຂອງເຂົາເຈົ້າໄປທາງຄ້າຂາຍ. ໄຮ່ນາຮົ້ວສວນຈະມີແຕ່ຄົນລຸ້ນເກົ່າ ຫລືຜູ້ເຖົ້າເຮັດ ເນື່ອງຈາກວ່າຄົນເກົ່າເລົ່ານີ້ຈະບໍ່ສາມາດຫາວຽກ ປະເພດອື່ນໄດ້. ຄົນລຸ້ນໃຫມ່ຫັນເອົາດີທາງດ້ານຄ້າຂາຍ ບາງຄົນກໍສາມາດລ້ຽງຄອບຄົວໄດ້ແຕ່ບາງຄົນພັດກົງກັນຂ້າມບໍ່ສາມາດຫາລ້ຽງຄອບຄົວກຸ້ມແລ້ວຊ້ຳຍັງຫມົດມູນມັງທີ່ພໍ່ແມ່ປະໄວ້ໃຫ້ເລີຍກາຍເປັນຄົນທີ່ຂາດທີ່ພັກພາອາໃສຈົນໄດ້ໄປອາໃສຂາຍແຮງງານກິນ ຫລື ວ່າຮັບຈ້າງກິນ. ການຫັນປ່ຽນໄປສູ່ອາຊີບໃຫມ່ຂອງຊາວບ້ານໄຮ່ເຮັດໄປໂດຍຂາດວິຊາການແບບເຫັນຫມູ່ເຮັດໄດ້ຕົນເອງກໍເຮັດໄປເລີຍ ໂດຍບໍ່ມີການພິຈາລະນາໃຫ້ຄັກແນ່ວ່າ ຄວນໃຊ້ຄວາມຮູ້ຄວາມສາມາດດ້ານໃດແດ່ ເພື່ອຈະໃຫ້ສາມາດດຳເນີນທຸລະກິດດ້ານນັ້ນໄດ້ດີ. ມັນເປັນພາບທີ່ຫນ້າ ເສົ້າທີ່ເຫັນຄົນອື່ນມາເປັນເຈົ້າຂອງດິນ ດອນຕ່ອນຫຍ້າ ທີ່ບັນພະບຸຣຸດໄດ້ປະໄວ້ໃຫ້ຍ້ອນຕົນເອງ ເປັນຜູ້ຂາຍທອດຕໍ່ໃຫ້ເຂົາໄປ. ຜູ້ທີ່ຍັງຢູ່ບ້ານໄຮ່ປະຈຸບັນກໍຕ້ອງໄດ້ແລ່ນໄປນຳການຄ້າຂາຍ ຊຶ່ງອາຊີບນີ້ຕ້ອງອີງໃສ່ ຄວາມສາມາດຂອງ

ບຸກຄົນ. ຄວາມຕັ້ງໃຈເປັນຊາວນາເຕັມຕົວ ນັ້ນບໍ່ຄ່ອຍຈະມີອີກແລ້ວ. ຊາວບ້ານໄດ້ຫັນໄປສູ່ອາຊີບອື່ນເຊັ່ນ ການປະມົງ (ລ້ຽງປາກະຊັງ, ລ້ຽງປາໃນສະໃຫຍ່ໆເປັນເຮັກຕາ) ແລະ ມີການລ້ຽງສັດເຊັ່ນ ຫມູ, ກົບ, ນົກກະທາ, ແລະ ສັດປີກປະເພດອື່ນໆ. ການລ້ຽງນີ້ ເປັນການລ້ຽງເປັນສິນຄ້າ ບໍ່ແມ່ນລ້ຽງໄວ້ກິນກຸ້ມໃຜມັນ ຄືແຕ່ເກົ່າ. ປະເພນີທີ່ປູກຜັກຕາມແຄມຕາຝັ່ງງື່ມນັ້ນກໍບໍ່ມີຫລາຍ ແລ້ວເພາະເຂົາເຈົ້າ ບໍ່ມີເວລາຈະລົງມານ້ຳງື່ມ ຄືແຕ່ກ່ອນ. ຄວາມຈະເລີນໄດ້ມາເຖິງຄົນບ້ານໄຮ່ ໂດຍມີໄຟຟ້າໃຊ້ທຸກຫລັງຄາເຮືອນດ້ວຍເຫດນັ້ນເຂົາເຈົ້າບໍ່ຈຳເປັນຕ້ອງລົງອາບນ້ຳງື່ມ ເຫມືອນແຕ່ກ່ອນ. ເຂົາເຈົ້າຈະມີປ້ຳນ້ຳໄຟຟ້າດູດ ຂຶ້ນມາໃສ່ໃຫນ້ຳຢູ່ກັບບ້ານຂອງໃຜມັນ. ການສຶກສາ ແລະ ການພັທນາໄດ້ຫັນປ່ຽນແນວຄິດຂອງຊາວບ້ານໄຮ່ ໄປສູ່ການຜລິດສິນຄ້າ ແລະ ການບໍລິການອາຊີບເຮັດນາປະໃຫ້ຄົນອື່ນເຊົ່າ ເຮັດເອົາແຕ່ຄ່າເຊົ່ານຳເຂົາເຈົ້າ ເທົ່ານັ້ນ. ຄົນລຸ້ນໃຫມ່ຂອງຊາວບ້ານໄຮ່ກໍມີຄວາມກ້າຫານພຽງພໍ ທີ່ຈະຫັນໄປສູ່ອາຊີບໃຫມ່. ການວິວັທນາການຂອງເທັກໂນໂລຢີ ຂ່າວສານທີ່ທັນສມັຍເຮັດໃຫ້ຊາວບ້ານໄຮ່ກ້າວຕາມໄປຕາມກະແສໂລກາພິວັດ. ຊາວບ້ານໄຮ່ຕ້ອງໄດ້ອາໃສຄວາມຮູ້ຄວາມສາມາດໃນການປະກອບອາຊີບໃນຕໍ່ຫນ້າ ແລະ ແນວຄິດທີ່ຕ້ອງສືບມູນແທນພໍ່ນັ້ນບໍ່ສາມາດເອົາຕົວລອດໄດ້ໃນອະນາຄົດ. ຊາວບ້ານຈຶ່ງມີການລົງທຶນໃສ່ການສຶກສາ ຂອງລູກຕົນເອງຫລາຍ. ແຕ່ລະຄອບຄົວໄດ້ເອົາເງິນຈ້າງໃຫ້ລູກຮຽນພາສາອັງກິດ, ຄອມພິວເຕີ, ການບັນຊີ, ວິສະວະກອນດ້ານຕ່າງໆ ຕາມຄວາມສາມາດຂອງໃຜລາວ. ທັງນີ້ກໍເນື່ອງຈາກວ່າໃນອະນາຄົດມັນຕ້ອງໃຊ້ຄວາມຮູ້ຄວາມສາມາດໃນການຫາລ້ຽງຊີບ. ມັນເປັນການລົງທຶນໃຫ້ລູກເຕົ້າທີ່ຖືກຕ້ອງ. ຊາວບ້ານໄຮ່ເຫັນການສຶກສາເປັນສິ່ງທີ່ສຳຄັນ. ໃນອະນາຄົດບ້ານໄຮ່ຈະເປັນບ້ານທີ່ມີຫລາກຫລາຍອາຊີບປົນກັນຢູ່.

ພາກທີ: 12: ການພັດທະນາແບບຍືນຍົງຂອງບ້ານໄຮ່

ບ້ານໄຮ່ເປັນບ້ານທີ່ມີພື້ນທີ່ກ້ວາງ ແລະ ດິນອຸດົມສົມບູນດີສາມາດທຳການຜລິດກະສິກຳໄດ້ດີ. ຫາກຊາວບ້ານຮູ້ຮັກສາຄວາມສົມບູນຂອງດິນໄວ້ໄດ້ຕລອດໄປມັນກໍຈະເປັນຊັພຍາກອນທີ່ບໍ່ເຫືອດຫາຍໄປຈາກຊາວບ້ານໄຮ່ ແລະຈະເປັນທ່າແຮງອີກດ້ວຍ. ແຕ່ໃດໆມາກໍເປັນທີ່ຮູ້ກັນດີວ່າພື້ນແຜ່ນດິນຂອງຊາວບ້ານໄຮ່ ເປັນດິນທີ່ມີຄວາມສົມບູນດີປູກພືດປະເພດໃດກໍງາມດີຫລົດ.ໃນປະຈຸບັນກໍຍັງເປັນແນວນັ້ນຢູ່.ເຂົ້ານາຫນອງຫລວງກໍງາມດີຫາກປີໃດບໍ່ມີນ້ຳກ້ວມຊາວນາກໍຈະໄດ້ເຂົ້າຫລາຍ. ການປ້ອງກັນນ້ຳກ້ວມຫນອງຫລວງ ນັ້ນເປັນການກະທຳໄດ້ຫາກຊາວບ້ານມີຄວາມຕ້ອງການແຕ່ຕ້ອງມີງົບປະມານພຽງພໍບັນຫາມີວ່າຫາກບໍ່ມີນ້ຳກ້ວມດິນກໍຈະບໍ່ງາມນັ້ນເອງ. ເຖິງຢ່າງໃດກໍດີນ້ຳບໍ່ໄດ້ກ້ວມທຸກປີແຕ່ເຖິງວ່ານ້ຳກ້ວມຊາວບ້ານກໍສາມາດເຮັດການກະສິກຳໃນລະດູແລ້ງໄດ້ ເນື່ອງຈາກປະຈຸບັນໄດ້ມີລະບົບຊົນລະປະທານທົ່ວເຖິງ ການພັດທະນາຂອງປະເທດຊາດເຮັດໃຫ້ມີການຫັນປ່ຽນທາງດ້ານລະບົບນິເວດຂອງພື້ນແຜ່ນດິນບ້ານໄຮ່.ປະຈຸບັນປະຊາຊົນໃນບ້ານໄດ້ຂະຫຍາຍຕົວໄວ ການບຸກລຸກທຳມະຊາດເຊັ່ນ ການຕັດໄມ້ທຳລາຍປ່າ, ການດັດແປງທຳມະຊາດ ໂດຍການຕັນຫ້ວຍຫນອງຄອງບຶງ,ການຂຸດຫນອງປາການລ້ຽງສັດແບບໃຫມ່ ແລະ ການນຳໃຊ້ເຄື່ອງມືທາກິນແບບໃຫມ່ເປັນປັດໃຈເຮັດໃຫ້ຄວາມອຸດົມສົມບູນຂອງດິນ ແລະ ຫ້ວຍຮ່ອງຄອງບຶງຄ່ອຍລຸດນ້ອຍຖອຍລົງ ແລະ ຈະນຳໄປສູ່ສະພາບທີ່ບໍ່ມີສິ່ງທຳມະຊາດຫລົງເຫລືອໄວ້ເລີຍ.ທຸກຢ່າງຈະມີແຕ່ມະນຸດສ້າງເອງ. ບ້ານໄຮ່ຍັງມີທາງທີ່ຈະຮັກສາສິ່ງແວດລ້ອມຂອງເຂົາເຈົ້າໄວ້ໄດ້ຫາກມີການວາງແຜນຮອບຄອບ ແລະມີຈິດໃຈຮັກທຳມະຊາດ. ຄົນບ້ານ ໄຮ່ຫາກເກີດໃນຊຸມປີ 1960 ຫາຕົ້ນຊຸມປີ 1970 ຈະຍັງສາມາດເຫັນຄວາມອຸດົມສົມບູນຂອງທຳມະຊາດຂອງບ້ານໄຮ່ຫາກຜູ້ໃດທີ່ເຫັນພາບເກົ່າໆ ເລົ່ານັ້ນແລ້ວໄດ້ຈາກບ້ານໄປແລ້ວຈຶ່ງກັບມາ

ໃຫມ່ຈະຕົກໃຈເມື່ອເຫັນປ່າໄມ້ສູນຫາຍໄປ. ຕົ້ນໄມ້ໃຫຍ່ 4 - 5 ອຸ້ມບໍ່ມີອີກແລ້ວ. ລູກຫລານຜູ້ເກີດໃຫມ່ໃຫຍ່ລຸນບໍ່ມີໂອກາດໄດ້ເຫັນເລີຍ. ມາດຕາການທີ່ສາມາດນຳເອົາພາບເກົ່າໆນັ້ນມາໄດ້ ຕ້ອງໄດ້ສ້າງຄວາມສາມັກຄີເປັນອັນນຶ່ງອັນດຽວກັນຂອງຄົນໃນບ້ານຫມາຍຄວາມວ່າຕ້ອງຮູ້ແບ່ງເວລາເພື່ອເຮັດວຽກເພື່ອສ່ວນລວມ. ຜູ້ນຳບ້ານຕ້ອງມີວິໃສທັດດີສາມາດລະດົມປະຊາຊົນໄດ້ ແລະ ເປັນຜູ້ທີ່ປະຊາຊົນສາມາດ ອາໃສໄພເພິ່ງໄດ້ຫມາຍຄວາມວ່າເວລາຊາວບ້ານໄດ້ຮັບຄວາມເດືອດຮ້ອນຕ້ອງຮູ້ຈັກວິທີຊ່ວຍເຫລືອ. ເຫັນຊາວບ້ານແມ່ນພີ່ນ້ອງຕົນເອງ ມີຄວາມຊື່ສັດສຸດຈະລິດເຫມືອນດັ່ງ **ຕູ້ປູ່ຈານພິມ ພິມສີປະສົມ** ບໍ່ໃຫ້ລຳອຽງເຂົ້າຂ້າງຝ່າຍໃດ ເມື່ອມີບັນຫາເກີດຂື້ນນອກຈາກໄດ້ຮັບຄວາມເຊື່ອຫມັ້ນ ຈາກປະຊາຊົນແລ້ວຕ້ອງຮູ້ສ້າງອາຊີບ ແລະ ໃຫ້ການສຶກສາແກ່ຄົນ ລຸ້ນໃຫມ່ຫມາຍຄວາມວ່າຊັ່ງຊາຕີລາຄາທ່າແຮງດ້ານເຕັກນິກວິທະຍາສາດ ແລະ ວິຊາອາຊີບຂອງຊາວບ້ານ ວ່າສົມຄວນຈະເນັ້ນຫນັກໃສ່ຈຸດໃດ ໃຫ້ເຫມາະສົມກັບຄວາມສາມາດ ຂອງຊາວບ້ານ. ພ້ອມນີ້ກໍຕ້ອງໄດ້ເບິ່ງທ່າແຮງທາງດ້ານຊັພຍາກອນ ທຳມະຊາດຂອງບ້ານ. ເມື່ອເຫັນວ່າດ້ານຊັພຍາກອນມີຄວາມພ້ອມດ້ານເຕັກນິກສາມາດຮ້ອງຂໍໃຫ້ທາງການຈັດການອົບຮົມໃຫ້ຊາວບ້ານໄດ້. ດ້ານການສຶກສາ ຈະຕ້ອງໃຫ້ນັກຮຽນປະຖົມໃນບ້ານຮູ້ຮັກບ້ານເກີດຂອງຕົນເອງ ຫລາຍກ່ວາເກົ່າ, ຮູ້ຮັກຄວາມສະອາດ, ຮູ້ຮັກທຳມະຊາດ ທັງຮູ້ຈັກປົກປັກຮັກສາໃນເບື້ອງຕົ້ນ, ແລະ ຮູ້ຈັກການປູກປ່າຄືນໃຫມ່. ເສຖະກິດທີ່ເຫມາະສົມກັບບ້ານຈະມີຢູ່ສີ່ຢ່າງເຊັ່ນ: ການກະເສດ, ຫັດຖະກຳ, ການປະມົງລ້ຽງປາ ແລະ ການບໍລິການ. ການກະເສດຈະເປັນທ່າແຮງທີ່ສຸດຫາກມີການວາງແຜນແບບ 1 ບ້ານ 1 ຜລິຕພັນ. ຫມາຍຄວາມວ່າ ບ້ານຕ້ອງແບ່ງເຂດການຜລິດເຊັ່ນ ບ່ອນສາມາດເຮັດນາໄດ້ປະໄວ້ເຮັດນາ ບ່ອນທີ່ສາມາດປູກພືດປະເພດໃດ ກໍກຳນົດຈາກອຳນາດການປົກຄອງບ້ານ ໂດຍອີງໃສ່ຄຳເຫັນຂອງນັກວິຊາການ

ດ້ານກະເສດ. ເມື່ອກຳນົດແລ້ວຕ້ອງມີການລະດົມປະຊາຊົນໃຫ້ເຂົ້າໃຈເຖິງແຜນການຈົນນຳໄປສູ່ການຂາຍທອດຕລາດ ຫລື ການຊອກລູກຄ້າ ໃຫ້. ການກະເສດຕ້ອງແນໃສ່ບໍ່ໃຫ້ມີດິນເປົ່າວ່າງໂດຍບໍ່ມີການຜລິດ ແລະ ໃຫ້ມີການຜລິດຕຫລອດປີ. ສ່ວນດິນທີ່ບໍ່ສາມາດ ທຳການຜລິດ ຕ້ອງລະດົມໃຫ້ປະຊາຊົນປູກຕົ້ນໄມ້ທີ່ຢືນຕົ້ນໃສ່ອາດເປັນຕົ້ນໄມ້ທີ່ໃຫ້ຫມາກ, ໃຫ້ດອກ, ຫລື ໃຫ້ຮົ່ມເງົາ. ຕາມຮົ້ວແດນບາ ແດນສວນຫາກບໍ່ສາມາດປູກຕົ້ນໄມ້ທີ່ເປັນຮົ່ມໃຫຍ່ກໍໃຫ້ປູກຕົ້ນໄມ້ປ່າທີ່ໃຫ້ຫມາກເປັນອາຫານຂອງນົກເຊັ່ນຕົ້ນຫມາກຊົມຊື່ນ, ຫມາກໄຮນ້ອຍ, ຫມາກ ຫູລິງ, ຫມາກກ້າງປາ, ແລະອື່ນໆທີ່ເຫັນວ່າສັດປ່າສາມາດກິນເປັນອາຫານໄດ້. ຕາມແຄມຫນອງແຄມຫ້ວຍຕ່າງໆຕ້ອງປູກຕົ້ນໂຫ່ມ, ຕົ້ນໄຮໃຫຍ່, ຕົ້ນ ດອກຈານ, ແລະ ຕົ້ນໄຜ່ມັນຫມູ, ໄມ້ໄຜ່ບົງ, ໄມ້ໄຜ່ກະສະ, ແລະ ໄຜ່ ອື່ນໆ ທີ່ສາມາດເປັນອາຫານທັງຄົນ ແລະ ສັດໄດ້. ບ່ອນດິນທີ່ສູງເປັນ ໂພນຕ້ອງປູກຕົ້ນໄມ້ອຸດສາຫະກຳໃສ່ ເຊັ່ນ: ໄມ້ຍາງ, ໄມ້ດູ່, ໄມ້ແຕ້, ແລະ ອື່ນໆ ສຳຄັນແມ່ນບໍ່ໃຫ້ເອົາຕົ້ນໄມ້ວິກ ແລະ ອື່ນໆ ທີ່ບໍ່ແມ່ນຕົ້ນໄມ້ຂອງທ້ອງຖິ່ນມາປູກໃສ່ ເພາະວ່າມັນອາດທຳລາຍລະບົບນິເວດເດີມ ຂອງບ້ານໄຮ່ທີ່ແຄມຕາຝັ່ງຂອງນ້ຳງື່ມ ກໍແມ່ນບ່ອນນຶ່ງທີ່ສາມາດຜລິດໄດ້ ເປັນຕົ້ນປະເພດພືດລົ້ມລຸກຊຶ່ງແຕ່ໃດໆມາຊາວບ້ານກໍເຄີຍປູກຝັງມາແລ້ວມັນຈະບໍ່ເປັນການຍາກ ທີ່ຈະລະດົມຊາວບ້ານ ປູກພືດທີ່ສາມາດ ຂາຍໄດ້ໃນຕລາດທ້ອງຖິ່ນ ແລະ ຕລາດວຽງຈັນ. ຈາກການວາງແຜນທາງດ້ານການກະເສດ ແລ້ວນາຍບ້ານ ແລະ ຜູ້ນຳບ້ານຕ້ອງວາງແຜນດ້ານຫັດຖະກຳອີກ ເພື່ອໃຫ້ຊາວບ້ານໄດ້ມີວຽກເຮັດເມື່ອ ເວລາເສັດສິ້ນການເຮັດນາຫລືສວນ. ຫັດຖະກຳຕ້ອງແນໃສ່ເອົາຜົນຜລິດ ຈາກການກະສິກຳພາຍໃນບ້ານເປັນຕົ້ນຕໍມາເຮັດເປັນເຄື່ອງຫັດຖະກຳເຊັ່ນ: ເອົາຝ້າຍທີ່ສາມາດ ປູກພາຍໃນບ້ານມາຕ່ຳແຜ່ນ, ເອົາເສດເພືອງມາເຮັດປຸຍຫມັກຫລື ເຮັດເປັນເຄື່ອງເອ້,ເຮັດເປັນກະຕ່າໃສ່ຫມາກໄມ້, ແລະ ເອົາ

ໄມ້ໄຜ່ເຮັດ ຂອບຮູບເຫລົ່ານີ້ເປັນຕົ້ນ. ດ້ານການປະມົງລ້ຽງປາປະຈຸບັນກໍໄດ້ກໍ່ຕົວຢູ່ແລ້ວພຽງແຕ່ວາງແຜນຊ່ວຍເສີມຄວາມສະດວກໃຫ້ຊາວບ້ານຜູ້ທີ່ຢາກລ້ຽງປາເຊັ່ນ: ຈັດຫາກອງທຶນກູ້ຢືມດອກເບ້ຍຕ່ຳ, ຊ່ວຍການປະກອບເອກະສານ, ອົບຮົມເຕັກນິກໃນການລ້ຽງປາ, ແລະ ຊ່ວຍອົບຮົມການຈັດການບໍລິຫານການເງິນ ແລະ ລາຍຮັບ. ຈາກການຜລິດຈາກສາມຂແຫນງການນັ້ນຈຶ່ງນຳໄປສູ່ການບໍລິການ ປະເພດອາຫານຕາມຕູບແຄມທາງຊຶ່ງມັນອາດເປັນສັນຍາລັກຂອງບ້ານໃນເຂດຊານເມືອງໄປອີກດົນ. ການຜລິດອາຫານ ຈະຕ້ອງໄດ້ມີການອົບຮົມຊຶ່ງອາດຈະຕ້ອງໄດ້ອາໃສ ທາງພາກລັດເຂົ້າຊ່ວຍ ຫລື ຫາອົງການຈັດຕັ້ງສາກົນ ແລະອົງການຈັດຕັ້ງທີ່ບໍ່ຂຶ້ນກັບລັດຖະບານ. ເຮັດໃຫ້ຊາວບ້ານສາມາດ ຜລິດໄດ້ຫລາຍປະເພດອາຫານ ແລະ ຮູ້ຕົກແຕ່ງ ແລະ ເກັບຮັກສາອາຫານໃຫ້ເປັນທີ່ດຶງດູດແກ່ລູກຄ້າພ້ອມທັງໃຫ້ຮັບປະກັນຄຸນນະພາບ ແລະ ອານາໄມ. ການປຸກຕູບຂາຍເຄື່ອງ ກໍ່ອາດຈະຕ້ອງໄດ້ມີການອອກແບບໃຫ້ຊາວບ້ານ ເພື່ອໃຫ້ເປັນທີ່ສົນໃຈແກ່ແຂກທີ່ກາຍໄປມາ ໂດຍສ້າງໃຫ້ເປັນແບບມາຕຖານໄວ້ຫນຶ່ງຢ່າງ. ທັງນີ້ກໍ ເພື່ອສ້າງຄວາມສະດວກ ແລະ ຄວາມສົນໃຈແກ່ລູກຄ້າ. ການເຮັດຮ້ານອາຫານລອຍນ້ຳກໍແມ່ນ ເອກະລັກຂອງບ້ານເຊັ່ນກັນ ແຕ່ມັນມີເນື້ອທີ່ຈຳກັດ ສິ່ງທີ່ສາມາດເສີມຕື່ມໃສ່ໃນທຸລະກິດນີ້ກໍຄວນຈະມີການ ບໍລິການດ້ານອື່ນເຊັ່ນ: ຕັດຜົມ ເສີມສວຍ, ບີບເອັນ, ຮົມຢາ, ຂາຍຂອງທີ່ລະລຶກ, ແລະ ຫມາກໄມ້ຂອງບ້ານຜລິດໄດ້ຈະເປັນການດີຫລາຍ.

ຮ້ານອາຫານເຮືອນແພ ອາຊີບຍືນຍົງ



ຮ້ານອາຫານລ່ອງລຳນ້ຳ ຊົມວິວ ອາຊີບຍືນຍົງ

ການລ້ຽງປາກະຊັງ ອາຊີບຍືນຍົງ

ຄອງຊົນລະປະທານ ແລະ ນາແຊງ ອາຊີບຍືນຍົງ

ສວນທີ່ມູນວຽນປູກພືດ

ຟາມລ້ຽງກຸ້ງ ອາຊີບທີ່ຍືນຍົງ

ສາຂາອາຊີບທີ່ຢູ່ໃນພາບຂ້າງເທິງນີ້ ແມ່ນອາຊີບທີ່ຍືນຍົງສາມາດ ເຮັດໄດ້ຕລອດໄປ ຊຶ່ງພາກລັດຄວນໃຫ້ຄວາມສົນໃຈ ແລະ ໃຫ້ການສົ່ງເສີມ. ອຳນາດການປົກຄອງບ້ານໄຮ່ຄວນເອົາໃຈໃສ່ສົ່ງເສີມເຊັ່ນກັນ. ຈັດຫາວິທະຍາກອນມາອົບຮົມໃຫ້ຮູ້ວິທີແລ້ວຊອກຫາແຫລ່ງເງິນກູ້ຢືມໃຫ້ເຂົາເຈົ້າພ້ອມທັງເບິ່ງດ້ານການຕະຫລາດຊ່ວຍ ເພື່ອໃຫ້ກາຍເປັນອາຊີບຍືນຍົງ.

ພາກທີ່ 13 ບົດຮຽນທີ່ຄວນສືບທອດຈາກຄົນລຸ້ນເກົ່າ

ຈາກປະຫວັດຂອງບ້ານໄຮ່ ທີ່ກຳເນີດມາຈາກຄອບຄົວພີ່ນ້ອງດຽວກັນ ຄວາມຮັກແພງລະຫວ່າງກັນນັ້ນສູງສະມາຊິກໃນບ້ານກໍເອົາຄວາມສາມັກຄີຮັກແພງເປັນສຳຄັນໃນການພົວພັນ. ເກົ່າແກ່ຊາວບ້ານໄຮ່ ໄດ້ນຳພາລູກຫລານຂອງເຂົາເຈົ້າປະຕິບັດຕາມຮີດຄອງປະເພນີອັນດີງາມຂອງລາວທີ່ເຄີຍສືບທອດ ກັນມາແຕ່ໂບຮານນະການ. ເຂົາເຈົ້າບໍ່ລະຮີດໃຫ້ຫມອງບໍ່ລະຄອງໃຫ້ເສົ້າ ເປັນຕົ້ນຮີດສິບສອງຄອງສິບສີ່ຮີດຍີ່ຄອງຈຽງ. ເຂົາເຈົ້າຈະພາລູກຫລານໃນບ້ານປະຕິບັດຕາມປະເພນີຢູ່ບໍ່ຂາດພ້ອມນັ້ນກໍມີການຝຶກແອບໃຫ້ລູກຫລານຮຽນຮູ້ ແລະ ສືບທອດຕໍ່ໄປ. ເຂົາເຈົ້າໄດ້ນຳຫນ້າພາທາງໃນການເຄື່ອນໄຫວດ້ານສັງຄົມພາຍໃນບ້ານ, ລະຫວ່າງບ້ານ, ແລະ ການຮ່ວມມືກັບອຳນາດການປົກຄອງ. ການຝຶກອາຊີບທ້ອງຖິ່ນເປັນເລື່ອງສຳຄັນ ເຂົາເຈົ້າສອນລູກຫລານໃຫ້ຮູ້ວິທີຫາກິນຕາມຊົນນະບົດ, ການຫາກິນນຳທຳມະຊາດ, ການໃຊ້ເຄື່ອງມືຫາກິນແບບດັ້ງເດີມໂດຍໃຊ້ວັດຖຸທີ່ມີຕາມທຳມະຊາດຂອງບ້ານໄຮ່ຫາກຢູ່ໂດຍບໍ່ມີການພົວພັນກັບບ້ານອື່ນກໍອາດ ສາມາດຮັກສາຮີດຄອງແບບນີ້ໄວ້ໄດ້ຢ່າງຍາວນານ ແຕ່ມັນເປັນເລື່ອງທີ່ເປັນໄປບໍ່ໄດ້ບ້ານໄຮ່ ຕ້ອງມີຄວາມຈຳເປັນພົວພັນກັບພາກສ່ວນອື່ນ. ດ້ວຍເຫດນັ້ນການປ່ຽນແປງ ຈຶ່ງເກີດມີຂຶ້ນໃນທຸກດ້ານ.ດ້ານສັງຄົມໄດ້ມີການປ່ຽນແປງໄວໂດຍອ່ຽງໄປຫາວັທນາທຳຕາເວັນຕົກ, ດ້ານການພັທນາໄດ້ນຳໃຊ້ເຄື່ອງມືທີ່ທັນສມັຍ ຊຶ່ງ

ນຳໃຊ້ຊັພຍາກອນແບບຟູມເຟືອຍ, ການສຶກສາຂະຫຍາຍຕົວສູງແຕ່ບໍ່ສາມາດເຮັດໃຫ້ຄຸນນະພາບສູງຂຶ້ນ ເທົ່າທຽມກັບມາດຕະຖານສາກົນໄດ້. ໃນບ້ານໄຮ່ເອງຄົນຮຽນສູງຍັງມີຈຳນວນໜ້ອຍ. ພົນກະທົບເລົ່ານີ້ແມ່ນມາຈາກການພັທນາ ດ້ານເຕັກນິກວິທຍາສາດຂອງໂລກ ແລະ ການໂອນເຕັກໂນໂລຍີຂ້າມຊາດ ເພື່ອນຳໄປສູ່ໂລກບໍ່ມີພົມແດນ. ຄົນບ້ານໄຮ່ລຸ້ນປະຈຸບັນສົມຄວນ ສຶກສາປະຫວັດບ້ານໄຮ່ ແລະ ຮີດຄອງຂອງຊາວບ້ານໄຮ່ລຸ້ນກ່ອນໃຫ້ເຂົ້າໃຈດີ ແລ້ວນຳມາໝູນໃຊ້ນຳພາລູກຫລານໃນບ້ານສືບທອດປະເພນີເລົ່ານັ້ນເຊັ່ນ: ການໃຫ້ການຊ່ວຍເຫລືອເອື້ອແຮງ ເຮັດວຽກໜັກຊ່ວຍກັນ, ການຮັກສາສິ່ງຂອງ ທີ່ເປັນຂອງລວມຂອງບ້ານຊ່ວຍກັນເປັນຕົ້ນ(ໂຮງຮຽນ, ວັດວາອາຮາມ, ທ່ານ້ຳ, ກຸບົນ, ປ່າຊ້າ ແລະ ປ່າໄມ້ໃນປ່າຊ້າ). ບຸນປະເພນີຊ່ວງເຮືອຊິງ ແມ່ນງານໜຶ່ງທີ່ສະທ້ອນເກີງຄວາມສາມັກຄີພາຍໃນບ້ານ. ດັ່ງນັ້ນ, ຄວນມີເຮືອຊ່ວງເປັນຂອງຕົນເອງ ແລະ ຈັດງານແຂ່ງຂັນເຮືອຊ່ວງປະຈຳປີຂອງບ້ານ ເພື່ອສ້າງຄວາມສາມັກຄີລະຫວ່າງຄົນໃນບ້ານ ແລະ ຄົນໃນບ້ານກັບບ້ານອື່ນໆ. ສມັຍກ່ອນບ້ານໄຮ່ເປັນບ້ານນ້ອຍຈຳນວນຄົນມີໜ້ອຍແຕ່ມີເຮືອຊ່ວງໄວ້ພາລູກຫລານຫລິ້ນມ່ວນຊື່ນ ປະຈຳປີ. ເຊັ່ນດຽວກັບບຸນບັ້ງໄຟ, ບຸນໄຫລເຮືອໄຟ, ບຸນເຂົ້າພັນສາ ແລະ ອອກພັນສາ, ແລະ ວຽນທຽນຄວນສືບສານໄວ້ຕລອດໄປ. ການເອົາແຮງງານແບບເອົາກັນໄປ ເຮັດວຽກງານໜັກ ຫລື ເຫລືອບ່າກ່ວາແຮງໂດຍບໍ່ມີການຈ່າຍຄ່າແຮງນັ້ນແມ່ນສິ່ງທີ່ຄວນສົ່ງເສີມ ແລະ ຂະຫຍາຍທົ່ວສັງຄົມ ເນື່ອງຈາກວ່າມັນເປັນສິ່ງທີ່ຊ່ວຍໃຫ້ເກີດ ຄວາມສາມັກຄີພາຍໃນບ້ານ ສ້າງໃຫ້ຄົນມີນ້ຳໃຈເພື່ອແຜ່ຊຶ່ງກັນ ແລະ ກັນ ແລະ ຢູ່ຮ່ວມກັນໂດຍສັນຕິຕລອດໄປມັນຈະກາຍເປັນສັງຄົມທີ່ບໍ່ເຫັນແກ່ຕົວແຕ່ເປັນສັງຄົມທີ່ເອື້ອຍອາລີຕໍ່ກັນ. ຄວາມຮູ້ສຶກຕໍ່ກັນ ຈະເປັນເໝືອນພີ່ນ້ອງຮ່ວມອຸທອນດຽວກັນ. ຍ້ອນປະເພນີແບບທີ່ກ່າວມາຂ້າງເທິງນັ້ນຄົນບ້ານໄຮ່ໃນເມື່ອກ່ອນເຂົາເຈົ້າ

ມີການປຸ້ມ ລຸມກັນດີ, ມີຄວາມເຄົາລົບນັບຖືກັນ, ຮູ້ຢຳເກງຜູ້ຫລັກຜູ້ໃຫຍ່, ເດັກນ້ອຍກາຍເປັນເດັກດີຮູ້ກະຕະຍູກະຕະເວທີ, ຮູ້ບຸນຄຸນພໍ່ແມ່, ແລະ ກາຍເປັນຄົນຂຍັນດຸໝັ່ນ, ແລະ ຮູ້ເພື່ອແຜ່ແກ່ຜູ້ອື່ນ. ຫາກຢາກ ໄດ້ພາບພົດຂອງສັງຄົມທີ່ກ່າວມານັ້ນຜູ້ນຳຊຸມຊົນຫລືຜູ້ນຳບ້ານຄວນສ້າງແຜນການໂດຍມີຈຸດປະສົງ ແລະ ເປົ້າໝາຍຊັດເຈນຈາກນັ້ນຄວນມີການປຶກສາຫາລືກັບຊາວບ້ານ ເພື່ອເປັນການລະດົມສມອງ ແລະ ການສນັບສນູນຈາກຊາວບ້ານ. ທຸກການເຄື່ອນໄຫວຄວນໃຫ້ມີທຸກເພດໄວ ເຂົ້າຮ່ວມປະກອບສ່ວນດ້ວຍ. ຢາກໃຫ້ທຸກເພດໄວມີການປະກອບສ່ວນສະກາບັນຄອບຄົວຈຳ ຕ້ອງເປັນຕົວກຸນແຈລະດົມຊຸກຍູ້ສະມາຊິກ ໃນຄອບຄົວໃຫ້ມີຄວາມກະຕືລືລົ້ນເຂົ້າປະກອບສ່ວນ. ການລະດົມແບບນີ້ມັນອາດ ເປັນວຽກທີ່ຍາກຫາກຜູ້ທີ່ຖືກລະດົມບໍ່ເຂົ້າໃຈຄວາມໝາຍຄວາມສຳຄັນຂອງແຜນການເລົ່ານັ້ນ. ດ້ວຍເຫດນັ້ນ ມັນມີຄວາມຈຳເປັນຕ້ອງສ້າງຄວາມເຂົ້າໃຈໃຫ້ແກ່ສະມາຊິກ ພາຍໃນບ້ານໃຫ້ທົ່ວເຖິງກັນ ແລະ ລະອຽດຈະແຈ້ງເຮັດໃຫ້ແຕ່ລະຄົນ ພາຍໃນບ້ານສາມາດຮູ້ຜົນ ທີ່ຈະໄດ້ຮັບຈາກການປະກອບສ່ວນຂອງເຂົາເຈົ້າ. ຈາກນັ້ນ, ຈຶ່ງນຳໄປສູ່ການ ຈັດຕັ້ງປະຕິບັດ ແຜນໃຫ້ເປັນຮູບປະທຳນຳມາຊຶ່ງຄວາມພໍໃຈ ແລະ ພູມໃຈຂອງຊາວບ້ານ. ຈາກຄວາມພູມໃຈຊາວບ້ານຈະກະຕືລືລົ້ນ ໃນການປະກອບສ່ວນ ແລະ ການປົກປັກຮັກສາສິ່ງທີ່ເຂົາເຈົ້າ ໄດ້ມີສ່ວນຮ່ວມໃນການສ້າງຂຶ້ນມາ. ບ້ານໄຮ່ຈະກາຍເປັນສັງຄົມທີ່ໜ້າຢູ່ຕະຫລອດໄປ. ທຸກຄົນທີ່ເຂົ້າມາເພິ່ງພາອາໃສພື້ນແຜ່ນດິນຂອງບ້ານໄຮ່ລ້ວນແຕ່ມີສ່ວນປະກອບໃນການສ້າງໃຫ້ບ້ານໄຮ່ ຈະເລີນຮຸ່ງເຮືອງຂຶ້ນໄປ. ສະມາຊິກໃຫມ່ຂອງຊາວບ້ານໄຮ່ກໍຄວນສຶກສາຮີດຄອງປະເພນີຂອງຊາວບ້ານໄຮ່ ແລະ ປັບຕົວເອງເຂົ້າໃຫ້ສາມາດດຳລົງຊີວິດຮ່ວມກັບຊາວບ້ານໄຮ່ດັ່ງເດີມໄດ້ມັນບໍ່ ແມ່ນເລື່ອງຍາກຫຍັງເພາະທຸກຄົນ ແມ່ນຄົນລາວດ້ວຍກັນເວົ້າໃຫ້ເຂົ້າໃຈກັນແມ່ນເລື່ອງທີ່ກະທຳໄດ້ໂດຍບໍ່ມີຄວາມຫຍຸ້ງຍາກ.

ອຳນາດການປົກຄອງທ້ອງຖິ່ນກໍ່ຕ້ອງຮູ້ ແລະ ເຂົ້າໃຈເຖິງຮີດຄອງປະເພນີອັນດີງາມຂອງຊາວບ້ານໄຮ່ ແລະ ຄວນສະໜັບສະໜູນໃຫ້ເຂົາເຈົ້າເອົາໃຈໃສ່ຮັກສາຮີດຄອງນັ້ນໄວ້ຊ່ວຍເຫລືອ ແລະ ໃຫ້ຄວາມສະດວກໃນການເຄື່ອນໄຫວ ເພື່ອສົ່ງເສີມຮີດຄອງປະເພນີອັນດີງາມ ຂອງຊາວບ້ານແນ່ໃສ່ສ້າງໃຫ້ເປັນບ້ານ ທີ່ມີຄວາມອຸດົມສົມບູນທັ້ງ ທາງດ້ານເສຖກິດ ແລະ ວັທນະທຳຢູ່ຮ່ວມກັນ ໂດຍສັນຕິ ແລະ ເບີກບານມ່ວນຊື່ນ ນັບແຕ່ເດັກນ້ອຍຈົນເຖິງຜູ້ສູງອາຍຸໃຫ້ທັງໝົດທຸກຄົນໃນສັງຄົມບ້ານໄຮ່ພູມໃຈໃນຕົວເອງ ແລະ ເຫັນສັງຄົມຂອງເຂົາເຈົ້າ ເປັນສັງຄົມທີ່ເຂົາເຈົ້າຕ້ອງການ ແລະ ພໍໃຈຕລອດໄປ.



ອາຊີບທີ່ບໍ່ຍືນຍົງ ແລະ ບໍ່ຄວນສືບຕໍ່ ຄືອາຊີບຕັດໄມ້



ຮູບການຫາປາດ້ວຍມອງເອັນ ຊຶ່ງຊາວບ້ານໄຮ່ໃຊ້



ເຮືອຈັກນ້ອຍຂົນສົ່ງຜູ້ໂດຍສານຂ້າມນ້ຳງື່ມທີ່ບ້ານໄຮ່

ພາກທີ14: ບຸກຄົນແບບຢ່າງໃນການພັທນາຕົນເອງ

ແບບຢ່າງການພັທນາຕົນເອງ ໃນຕະກຸນພິມສີປະສົມ. ຕະກຸນພິມສີປະສົມ ໄດ້ມີຫລາຍທ່ານທີ່ໄດ້ສ້າງຄວາມກ້າວຫນ້າທາງດ້ານການສຶກສາ ແລະ ເສກກິດເພື່ອໃຫ້ສາມາດນຳຕົນເອງໄປສູ່ຄວາມຈເລີນໃນຊີວິດ. ໃນນີ້ບຸກຄົນທີ່ເຫັນເປັນແບບຢ່າງໃຫ້ແກ່ລູກຫລານທີ່ເດັ່ນກວ່າຫມູ່ກໍ
ມີທ່ານບຸນທຽມພິມສີປະສົມ ເພິ່ນເປັນຄົນທີ່ມີຄວາມຂະຫຍັນ ໃນທຸກດ້ານ ເພິ່ນເປັນຄົນແບບຄຳໂບຮານ "ເວົ້າວ່າເຮັດອັນໃດໃສ່ໃຈອັນນັ້ນ". ທ່ານບຸນທຽມ ເປັນລູກຊາຍຜູ້ທີ 7 ຂອງປູ່ຈານພິມ ແລະ ຍ່າສົມ ຈະວ່າເປັນຜູ້ສຸດທ້ອງກໍໄດ້. ທ່ານ ບຸນທຽມ ເກີດເມື່ອປີ 1935 ກົງກັບວັນຈັນເດືອນເຈັດຂຶ້ນເຈັດຄ່ຳ. ຫລັງຈາກເພິ່ນເກີດມາໄດ້ສອງຂວບ (ສອງປີ) ນ້າບ່າວທິດດວງ ຜູ້ເປັນນ້ອງຊາຍຂອງແມ່ ແຕ່ງດອງເທື່ອທີສອງກັບສາວພັນ ຊຶ່ງເປັນແມ່ຫມ້າຍບໍ່ມີລູກ ໄດ້ມາຂໍເອົາໄປລ້ຽງເປັນລູກ. ແຕ່ເມື່ອອາຍຸເພິ່ນໄດ້ 5 ຂວບເພິ່ນກໍກັບຄືນມາຢູ່ນຳພໍ່ແມ່ຄືນ. ພໍອາຍຸໄດ້ 8 ຂວບກໍໄດ້ເຂົ້າໂຮງຮຽນຢູ່ບ້ານ ທ່າງ່ອນໃນຊັ້ນປໍ 1 ຊຶ່ງເວລານັ້ນແມ່ນ

ນາຍຄູ ຄໍາບໍ່ເປັນຜູ້ສອນ.

ຫມູ່ຄູ່ລູກສິດບ້ານໄຮ່ຮຽນນໍາກັນກໍມີສາວບິດ ແມ່ຕູ້ບັນໃນປະຈຸບັນ, ທິດຫນີດ, ທ້າວ ໂຄມຄິດ ລູກແມ່ຕູ້ກາບ ແລະ ອື່ນໆອີກຫລາຍຄົນ. ຜູ້ຮັບຂ້າມເຮືອສົ່ງນັກຮຽນ ເພື່ອຍົກເວັ້ນການອອກແຮງງານ ສິບຫ້າວັນກໍແມ່ນພໍ່ຕູ້ເກົ້າ, ທິດດ່າງ, ນ. ບຸນມີ ແລະ ທິດ ແພງສີ ລູກຍ່າເອບ. ແຕ່ເມື່ອຮຽນຮອດປີທີສອງ ຍີ່ປຸ່ນເຂົ້າເມືອງກໍເກີດບ້ານ ແຕກສະແຫລກ ຂາດໂຮງຮຽນ ກໍຖືກປິດລົງໃນເວລາສົງຄາມ ການຮຽນກໍຂາດເປັນປັ້ນເປັນຕອນໄປ. ພໍແຕກເສິກໄປຢູ່ນາພົງໂຮງຮຽນກໍເລີຍເລີ້ມ ເປີດຄືນໃຫມ່ແຕ່ອາວຍັງບໍ່ໄດ້ກັບບ້ານໄຮ່ ເພື່ອໄປເຂົ້າໂຮງຮຽນເທື່ອ. ສ່ວນບ້ານຫາດກ້ຽງຢູ່ໃກ້ນັ້ນກໍມີ ໂຮງຮຽນພໍ່ແມ່ຈຶ່ງໄດ້ນໍາເອົາ ເພິ່ນມາຝາກຢູ່ນໍາພີ່ນ້ອງ ຊຶ່ງເປັນເຊື້ອສາຍຂອງເພິ່ນເອງ. ຕາມພາສາເດັກນ້ອຍຢູ່ບ່ອນໃດກໍບໍ່ແກ່ນຈຶ່ງໄດ້ຍ້າຍໄປເລື້ອຍໆ. ຕອນທໍາອິດເພິ່ນໄດ້ຢູ່ນໍາ ປູ່ທິບຜູ້ເປັນນ້ອງຊາຍຂອງພໍ່, ຕໍ່ມາຍ້າຍໄປຢູ່ນໍາແມ່ເປື່ອງພີ່ນ້ອງຂອງແມ່ເພິ່ນ, ແລ້ວຍ້າຍໄປຢູ່ນໍາພໍ່ສຽວສີຍາ, ສຸດທ້າຍກໍຍ້າຍມາຢູ່ນໍາແມ່ດາວ ຊຶ່ງເປັນບ່ອນທີ່ເພິ່ນອຸ່ນອ່ຽນ ທີ່ສຸດເພາະແມ່ດາວກໍ່ ເພິ່ນຄືກັບກັບລູກ. ພໍສົງຄາມສະຫງົບລົງ ເພິ່ນຈຶ່ງໄດ້ກັບຄືນມາຮຽນຢູ່ທ່າງ່ອນ ເມື່ອພໍ່ແມ່ຂອງເພິ່ນໄດ້ຍ້າຍຄືນມາບ້ານ. ໃນເວລານັ້ນເພິ່ນຮຽນຢູ່ປີ 3 ທີ່ສອນ ໂດຍນາຍຄູໄຂ ຊຶ່ງຫ້ອງຮຽນແມ່ນສິມວັດທ່າງ່ອນ. ຕໍ່ມາເພິ່ນໄດ້ເສັງຜ່ານຂື້ນຮຽນຊັ້ນປີ 4 ໃນລະບົບຂອງຝຣັ່ງເສດ. ໃນເວລານັ້ນການຮຽນຕໍ່ແມ່ນເປັນບັນຫາຍາກທີ່ສຸດ ເພາະບ່ອນຮຽນຈໍາກັດ. ກ້າຜູ້ໃດບໍ່ເກັ່ງແທ້ໆນັ້ນຈະບໍ່ໄດ້ຜ່ານເດັດຂາດ. ອາວທຽມເປັນຜູ້ທີ່ຮຽນເກັ່ງເປັນພິເສດ ຈຶ່ງສາມາດຜ່ານຂື້ນ ຮຽນຊັ້ນປໍ 4 ໄດ້. ອາວ ທຽມ ໄດ້ເຂົ້າໄປເສັງຢູ່ໂຮງຮຽນຕາບໄຟແຮງ ຊຶ່ງປະຈຸບັນແມ່ນສູນຄົ້ນຄ້ວາການສຶກສາ ພາຍໃຕ້ກະຊວງສຶກສາທິການ. ການໄປເສັງຂອງເພິ່ນ ແມ່ນຍ່າງແຕ່ບ້ານໄຮ່ຈົນເຖິງບ້ານສວນມອນໄປນອນພັກຢູ່ບ້ານ ນາຍຄູຈໍາພອນ ຕື່ນເຊົ້າ

ມາຈຶ່ງພາກັນຍ່າງໄປເສັງ ຢູ່ຕາບໄຟແຮງ. ພໍເສັງຈົບກໍລໍຖ້າຜົນຂອງການສອບເສັງ. ລາຍຊື່ຜູ້ເສັງຜ່ານຈະຖືກປະກາດທັນທີໃນຕອນບ່າຍ. ຊື່ຂອງ ອາວທຽມກໍໄດ້ຖືກປະກາດເປັນຜູ້ທີ 1 ເລີຍ. ເມື່ອຮູ້ຜົນແລ້ວກໍດີໃຈຫລາຍພ້ອມນັ້ນກໍວາງແຜນໃນການຮຽນຕໍ່ໄປຈຶ່ງໄດ້ຍ່າງໄປຫາຕູ້ບຸ້ຍຮ້ອງຕາມຊື່ລູກເພິ່ນ ແຕ່ຊື່ເພິ່ນແທ້ນັ້ນແມ່ນ ນ. ດວງຕາຫຼວງລາຊ ເພິ່ນເປັນແມ່ຫມ້າຍ. ຕູ້ບຸ້ຍເປັນຮັກເປັນແພງກັນໃນເວລາ ທີ່ຕູ້ບຸ້ຍໄປປົວຢ່າສິນກ່ອນເພິ່ນເສັຍຊີວິດໃນເດືອນ 7 ປີ 1947 ຊຶ່ງອາວທຽມເອງກໍມີອາຍຸແຕ່ 12 ປີ. ອາວທຽມເຂົ້າມາເສັງໃນວຽງຈັນເປັນຄັ້ງທຳອິດໃນຊີວິດຍັງບໍ່ທັນຮູ້ໃສເປັນໃສ. ຊອກຫາທາງມາບ້ານຕູ້ບຸ້ຍນັ້ນກໍແມ່ນເດົາໄປຕາມຄວາມເຂົ້າໃຈວ່າເຮືອນຕູ້ບຸ້ຍນັ້ນຢູ່ທາງເຂົ້າວັດຫນອງບອນມີຕົ້ນຝາງໃຫຍ່ ເປັນເຮືອນມຸງດິນຂໍສອງຫລັງ. ອາວທຽມຈຶ່ງມຸ່ງຫນ້າໄປຫາວັດຫນອງບອນທັນທີ ແລະ ກໍຊອກຫາບ່ອນທີ່ວ່ານັ້ນ. ເມື່ອເຫັນເຮືອນອາວທຽມກໍໄດ້ຍ່າງເຂົ້າໄປທັນທີແລ້ວກໍເຫັນເພິ່ນໂລດ. ອາວທຽມນອນນຳເພິ່ນສອງສາມຄືນ ແລ້ວເພິ່ນກໍແຕ່ງເອື້ອຍບຸນຈັນ ຫລານສາວຜູ້ຢູ່ນຳເພິ່ນຍືມເອົາລົດຖີບຊ້ອນໄປສົ່ງທີ່ບ້ານໄຮ່. ຫລັງຈາກນັ້ນ 3 ເດືອນປູ່ຈານພົມຈຶ່ງໄດ້ເອົາກວຽນໃສ່ເຂົ້າເປືອກ, ປາແດກ, ຊີ້ນແຫ້ງປາຕາຍພາມາຝາກຢູ່ນຳແມ່ຕູ້ບຸ້ຍ ເພື່ອຮຽນຫນັງສືຕໍ່ຫ້ອງ ປໍ 4 ຢູ່ໂຮງຮຽນທາດຫລວງຊຶ່ງ ແມ່ນໂຮງຮຽນມັດທະຍົມທາດຫລວງໃນປະຈຸບັນແຕ່ສມັຍອາວຮຽນແມ່ນຫລັງນ້ອຍຢູ່ເຄິ່ງກາງຂອງສອງຕຶກໃນປະຈຸບັນ. ນາຍຄູຂອງອາວຢູ່ຊັ້ນ ປໍ 4 ແມ່ນ ນາຍຄູ ຄຳພົງ ສອນ, ປໍ 5 ແມ່ນຄູແກ້ວ, ແລະ ປໍ 6 ແມ່ນ ນາຍຄູ ອຸໄທ. ອາວເປັນຄົນຮຽນເກ່ງຈຶ່ງ ໄດ້ຮັບຄວາມຮັກແພງ ຈາກນາຍຄູທັງຫລາຍ. ນາຍຄູມັກຈະເອົາອາວໄປນອນນຳ ແລະ ໃຫ້ເພິ່ນຊ່ວຍວຽກເລັກໆ ນ້ອຍໆ. ເມື່ອເວລາພັກຮຽນສາມເດືອນອາວທຽມ ກໍກັບຄືນບ້ານໄປຊ່ວຍພໍ່ ແລະ ເອື້ອຍເຮັດນາຊ່ວຍອາວພໍ່ດອນ ຢູ່ຫນອງປາຄໍ່ຂາວ, ຊ່ວຍອາວປິ່ນຢູ່ບ້ານພະທາວ,

ຊ່ວຍອາວພໍ່ທູຢູ່ບ້ານດົງບັງເພື່ອຈະຂໍເຂົ້າເປືອກສ່ວນແບ່ງນໍາເພິ່ນໄປເປັນປັດໃຈລ້ຽງຊີບໃນການຮຽນປີຕໍ່ໄປເມື່ອຮັດນາແລ້ວກໍກັບມາຫາລຸງເກດ ແລະ ລຸງກອງສີຂອງເພິ່ນອີກເພື່ອຫາປາໃສ່ໄຫງຕຶກກະດຸ້ງຕຶກປາຊວຽນນໍາເພິ່ນຫາກໄດ້ປາຂາຍເທື່ອໃດເພິ່ນກໍແບ່ງເງິນໃຫ້ແລ້ວທ້ອນໄວ້ໄປຮຽນຫນັງສືບາງຄັ້ງກໍໄປຊອກລີ້ປານໍາທ້າວນວນສີທ້າວແພງສີເກີງບ້ານປາກກະຍຸງ ແລ້ວລ່ອງແພລີ້ປາລົງມາຈົນເຖິງ ບ້ານເອົາໃສ່ລົດກີບໄປຂາຍຕລາດວຽງຈັນແຕ່ສາມໂມງເຊົ້າຜ່ານຜົນຕົກຟ້າຄື້ມໄປດ້ວຍຄວາມລໍາບາກ. ຫາກຂາຍບໍ່ຫມົດຈໍາຕ້ອງໄດ້ໄປເລາະຂາຍ ເຖິງບ້ານນໍ້າກ້ຽງນາຄູນພຸ້ນກໍມີ. ນີ້ແມ່ນຄວາມສູ້ຊົນຂອງເພິ່ນ ເພື່ອຫາເງິນໄປຊື້ສິ່ງເສື້ອປື້ມສໍຫາກບໍ່ພໍກໍເປັນແຕ່ບຸນແມ່ຕູ້ນຸ້ຍເປັນຜູ້ຊ່ວຍເຫລືອອູ້ມຊູທັງຫມົດ. ອາວທຽມເພິ່ນຈະຮັດຢ່າງນີ້ສເມີຈົນຮອດ ສົກສຶກສາປີ 1950 - 51 ເພິ່ນເສັງເຂົ້າ ຮຽນທີ່ Lycee A. Pavie. ການເສັງຕໍ່ນີ້ແມ່ນຈຸດຫັນປ່ຽນຊີວິດ ທີ່ສໍາຄັນຂອງການເປັນນັກຮຽນ ກ້າວ່າເສັງໄດ້ກໍຈະໄດ້ຮຽນຕໍ່, ແຕ່ກ້າເສັງບໍ່ໄດ້ກໍຈະໄດ້ອອກໄປຮັດວຽກ ອັນໃດກໍບໍ່ຮູ້. ການສອບເສັງເຂົ້າຊັ້ນມັທຍົມ ຕ້ອງປະກອບເອກະສານຄົບຊຸດຮວມ ທັງໃບຊາຕາລະຕ້ອງມີນາມສະກຸນ ອີກດ້ວຍ. ຕອນນັ້ນນາມສະກຸນພົມສີປະສົມຍັງບໍ່ທັນມີເທື່ອ. ອາວ ບຸນທຽມເອງເປັນຜູ້ຕັ້ງນາມສະກຸນພົມສີປະສົມແຕ່ນັ້ນມາຈົນເຖິງລູກຫລານ ໄດ້ນໍາໃຊ້ນາມສະກຸນນີ້ໃນປະຈຸບັນ. ຕອນຕັ້ງນາມສະກຸນເພິ່ນກໍຄິດເຖິງບຸນຄຸນບິດາມາດາຈຶ່ງເອົາຊື່ຂອງເພິ່ນປະສົມເຂົ້າກັນຄືປູ່ຈານພົມ ແລະ ຍ່າສົມ. ໃນການປະກອບເອກະສານອາວບຸນທຽມກໍມີບັນຫາ ເພາະອາຍຸເພິ່ນກາຍເກນກໍານົດ ຂອງລະບົບການສຶກສາຝຣັ່ງ. ອາຍຸຂອງເພິ່ນເວລານັ້ນ 15 ປີ ກາຍໄປສາມປີຈຶ່ງຕ້ອງໄດ້ຫຍໍ້ອາຍຸໃຫມ່. ການສອບເສັງທົ່ວປະເທດ ເອົາພຽງແຕ່ 90 ຄົນເຂົ້າຮຽນ ໃນນັ້ນກໍມີຊື່ອາວບຸນທຽມຜູ້ນຶ່ງເຂົ້າຮຽນໃນໂຮງຮຽນທີ່ມີຊື່ສຽງຈົນເຖິງທຸກວັນນີ້ເຊັ່ນກັນ. ແຕ່ສິ່ງທີ່ຍິ່ງກວ່າໃນປະຈຸບັນ ແມ່ນການ

ສອບເສັງໃນເວລານັ້ນ ແມ່ນໃຊ້ພາສາຝຣັ່ງທັງຫມົດ ເພາະລາວໃຊ້ການຮຽນການສອບເປັນລະບົບຝຣັ່ງ ແລະ ພາສາຝຣັ່ງເປັນພາສາ ສື່ໃນການສອບເປັນສ່ວນໃຫຍ່. ນັບວ່າອາວບຸນທຽມເປັນແບບ ຢ່າງອັນດີໃຫ້ແກ່ລູກຫລານລຸ້ນສອງລຸ້ນສາມຕໍ່ມາ. ໃນປະຈຸບັນຢູ່ບ້ານໄຮ່ ນັ້ນກໍແມ່ນຕະກຸນພົມສີປະສົມ ທີ່ມີການສຶກສາສູງກວ່າຫມູ່. ລຸ້ນອາວກໍຄືລຸ້ນຫຼານຂອງເພິ່ນ ເມື່ອເສັງເຂົ້າຮຽນຕໍ່ມັທຍົມ ໄດ້ກໍຈະເປັນທີ່ນັບຖືຂອງຍາດພີ່ນ້ອງ ແລະ ຫມູ່ຄູ່ທັງຫລາຍ ແລະ ແກຸມຍັງມີສາວໆ ສົນໃຈເປັນພິເສດອີກດ້ວຍ. ເມື່ອເສັງໄດ້ອາວບຸນທຽມ ດີໃຈຫາອັນປຽບບໍ່ໄດ້ກໍຟ້າວ ເມືອເວົ້າສູ່ຕູ້ນຸ້ຍຟັງທັນທີ ແລະ ຕູ້ນຸ້ຍກໍດີໃຈຫລາຍຈຶ່ງ ເວົ້າວ່າ "ແມ່ດີໃຈຫລາຍທີ່ລ້ຽງເຈົ້າບໍ່ເສັຽເຂົ້າເສັຽປາ". ໃນຂົງເຂດບ້ານຫນອງບອນ, ທາດຫລວງ, ນາໄຊ, ໂພນສະອາດ, ໂພນໄຊ, ແລະ ໂພນພະເນົາຊື່ຂອງອາວບຸນທຽມກໍເປັນທີ່ຮູ້ຈັກດີໃນບານຜູ້ສາມາດເສັງເຂົ້າຮຽນທີ່ Lycee A. Pavie ໄດ້. ນາຍຄູ ອຸໄທ ແລະ ຫມູ່ເພື່ອນກໍໄດ້ ຈັດງານລ້ຽງສົ່ງເຂົ້າໄປຮຽນຕໍ່ໃຫ້ຢ່າງມ່ວນຊື່ນ. ໃນປີດຽວກັນເພິ່ນກໍເສັງເອົາໃບປະກາດປະກົມສົມບູນອີກດ້ວຍ "Certificat Enseignement Primaire". ກ້າເພິ່ນຢາກເຮັດ ການກໍສາມາດເຮັດໄດ້ແຕ່ອາວຕ້ອງການ ຮຽນຕໍ່ຫລາຍກວ່າ ຈຶ່ງໄດ້ຕັດສິນໃຈຮຽນຕໍ່ລີເຊປາວີ. ໃນການເຂົ້າຮຽນກໍມີການໃຊ້ຈ່າຍສູງສົມຄວນດ້ານເຄື່ອງນຸ່ງເຄື່ອງແບບສໍາຄັນ ອີກອັນນຶ່ງກໍແມ່ນຕ້ອງໄດ້ມີລົດກີບທຽວໂຮງຮຽນຍ້ອນວ່າມັນໄກ ແລະ ຕ້ອງໄດ້ມາກິນເຂົ້າເຮືອນແລ້ວຈຶ່ງ ກັບໄປໂຮງຮຽນອີກ. ດ້ວຍບຸນຄຸນຂອງຕູ້ນຸ້ຍທີ່ໄດ້ເຂາະຂອດເງິນທີ່ມີ ແລະ ຊອກໃສ່ຕື່ມຊື້ໃຫ້ອາວຈຶ່ງໄດ້ມີລົບໄປໂຮງຮຽນ. ຕູ້ນຸ້ຍເປັນຫມໍ່ປົບເອັນ ແລະ ບໍ່ມີໄຮ່ນາອັນໃດ. ແຕ່ຕູ້ສາມາດລ້ຽງລູກຫລານໃຫ້ມີການສຶກສາຈົບມັທຍົມຕອນຕົ້ນ ໄດ້ໃນເວລານັ້ນ. ທັງນີ້ກໍຍ້ອນຕູ້ບໍ່ຍອມຈໍານົນນັ້ນເອງ ນອກຈາກປົບເອັນແລ້ວຕູ້ຍັງ ຕ້ອງໄປຂາຍເຄື່ອງນໍາບຸນວັດຕ່າງໆ ໄປເລື້ອຍໆ ບາງຄັ້ງກໍຕ້ອງປະອາວທຽມຢູ່ຜູ້ດຽວ

ຊຶ່ງເປັນບັນຫາທີ່ຕ້ອງໄດ້ຮັບຜິດຊອບຕົນເອງ ທຸກດ້ານເຊັ່ນ: ກັບມາຈາກໂຮງຮຽນ ຕ້ອງຊອກເຮັດກິນເອງຕອນແລງຕ້ອງຮູ້ຊອກຫາປາ ໂດຍໃສ່ເບັດຕາມຫນອງບອນ ຫລື ບຶງທາດຫລວງ. ຊີວິດໃນເວລານັ້ນຕ້ອງໄດ້ຕໍ່ສູ້ຢ່າງຫນັກ. ໃນວັນເສົາອາທິດອາວຕ້ອງຟ້າວເມືອບ້ານ ເພື່ອຊອກອາຫານການກິນ ເພື່ອເອົາມາຊ່ວຍຄອບຄົວທີ່ຕົນອາໃສຢູ່. ຜູ້ທີ່ຊ່ວຍເພິ່ນຫລາຍກວ່າຫມູ່ກໍແມ່ນຕູ້ອາແມ່ດອນ ແລະ ຄອບຄົວ ຂອງເພິ່ນເພາະເພິ່ນຢູ່ເຮືອນແທນມູນ. ຕໍ່ມາປູ່ຈານພິມ ເຫັນຄວາມດີຂອງຕູ້ນຸ້ຍຈຶ່ງໄດ້ຂໍແຕ່ງງານກັບຕູ້ນຸ້ຍແຕ່ນັ້ນມາ. ແຕ່ບັນຫາກໍຍັງບໍ່ດີຂຶ້ນ ເທື່ອເມື່ອລູກເຂີຍລູກສາວຄືຕາແສງພັນ ແລະ ປ້າໄຕຕ້ອງການເອົາ ເຮືອນທີ່ເຄີຍໃຫ້ຢູ່ນັ້ນໄປໃຫ້ຄົນອື່ນເຊົ່າ. ແມ່ຕູ້ນຸ້ຍບໍ່ຮູ້ຈະເຮັດແນວໃດຈຶ່ງ ໄປຊອກຊື້ເຮືອນເກົ່າຢູ່ບ້ານບອກ ແລະ ຈ້າງກວຽນແກ່ ມາປຸກໃສ່ບ້ານຂອງລູກສາວກົກຄື ສາວນ້ອຍຢູ່ຕິດກັບເຮືອນປ້າໄຕ. ສ່ວນປູ່ຈານພິມໃນການະຜົວເມັຽກັນແຕ່ເພິ່ນກໍເຮັດເປັນເຮືອນນ້ຳເຮືອນບົກຄືຢູ່ບ້ານໄຮ່ແດ່ຢູ່ຫນອງບອນແດ່. ຈຶ່ງໄດ້ເອົາກວຽນແກ່ໄມ້, ຫຍ້າຄາມຸງ, ໄມ້ເຮັ້ຽສຳຫລັບມາສານຝາມາຊ່ວຍປຸກເຮືອນຫລັງນີ້ ໃຫ້ໄດ້ມີບ່ອນພາກັນຢູ່. ຍິ່ງກວ່ານີ້ປູ່ຈານພິມໄດ້ມາເສັ້ຽຊີວິດໃນວັນທີ 21/02/1952 ກົງກັບວັນສຸກເດືອນສາມແຮມສິບສາມຄ່ຳ ຍ້ອນເປັນບາດທະຍັກ ໃສ່ກົ້ນເກີງວ່າໄດ້ເອົາໃຈໃສ່ປິ່ນປົວປານໃດກໍບໍ່ສາມາດຢຽວຢາໃຫ້ຫາຍໄດ້ໃນທີ່ສຸດຕູ້ປູ່ຈານພິມກໍຈາກໄປທ່າມກາງຄວາມໂສກເສົ້າ ຂອງຜູ້ເປັນເມັຽ ແລະ ລູກເຕົ້າ. ເກີງຢ່າງໃດກໍຕາມອາວບຸນທຽມ ຍັງຕ້ອງການສືບຕໍ່ຮຽນໃຫ້ຈົບມັດທະຍົມໃຫ້ໄດ້. ຍ້ອນການຮ່ຳຮຽນດີໃນຊັ້ນມັທຍົມ ປີທີສອງອາວຈຶ່ງສາມາດຂໍເບັ້ຽລ້ຽງຂອງນັກສຶກສາໄດ້ຫລືເງິນ "Bourse"ໃນຈຳນວນເງິນ 2500 ຕໍ່ສາມເດືອນ. ແຕ່ນັ້ນມາການ ເງິນຈຶ່ງຄ່ອຍດີຂຶ້ນເຮັດໃຫ້ອາວສາມາດທ້ອນເງິນຊື້ລົດກົບໃຫມ່ໄດ້. ລົດກົບຄັນນີ້ເພິ່ນຂີ່ຈົນຮອດມື້ເຮັດການ ແລະ ຊື້ລົດໃຫຍ່ຈຶ່ງມອບໃຫ້ ທ້າວ ລົບ ຫລານຊາຍ ລູກລຸງເກດ

ຜູ້ເປັນອ້າຍທີ່ມາເອົາໃສ່ຮຽນຫນັງສືຢູ່ນຳ. ຕໍ່ມາອີກຫລາຍປີດົນສາວນຸ້ຍຕອນປຸກເຮືອນໃສ່ກໍກຶກໄລ່ທີ່ເພື່ອເພິ່ນຈະໄດ້ປຸກຫ້ອງແກວໃຫ້ຄົນເຊົ່າ. ນີ້ແມ່ນບັນຫາໃຫຍ່ເທື່ອທີສອງ ຕອນນີ້ເອື້ອຍບຸນຈັນກໍເອົາຜົວ ໄປແລ້ວຍັງເຫລືອແຕ່ອາວທຽມ ກັບແມ່ຕູ້ນຸ້ຍຢູ່ນຳກັນສອງຄົນ. ເວລາມ້າງເຮືອນອອກແລ້ວສອງແມ່ລູກກໍບໍ່ມີບ່ອນຢູ່ ແມ່ຕູ້ນຸ້ຍຈຶ່ງໄປປຸກຕູບນ້ອຍຢູ່ ແຄມທາງຢູ່ຜູ້ດຽວ ແລ້ວຂາຍເຫລົ້າຂາຍກາເຟນຳ. ສ່ວນອາວທຽມກໍໄດ້ຊັດເຊພະເນຈອນໄປຂໍຢູ່ນຳຜູ້ນັ້ນຜູ້ນີ້ໄປເຊັ່ນ ລຸງພວງພັນປ້າບົວ ແລະ ໄປອາໃສຢູ່ລະບຽງເຮືອນປ້າລົດແລ້ວທຽວໄປກິນເຂົ້ານຳແມ່ຕູ້ນຸ້ຍຢູ່ຕູບນ້ອຍນຳເພິ່ນ. ຕອນນີ້ກໍແມ່ນຕອນອາວບຸນທຽມກຳລັງ ຈະເສັງຈົບຊັ້ນມັດທະຍົມຕົ້ນໃນສົກຮຽນ 1954 - 55 ໃນສະພາບທີ່ມີຄວາມຫຍຸ້ງຍາກຄືແນວນີ້ອາວກໍຕໍ່ສູ້ໄປເລື້ອຍໆ ຈົນອ້າຍເອື້ອຍນ້ອງຢູ່ບ້ານໄຮ່ ແລະ ພີ່ນ້ອງຫມົດບ້ານໄຮ່ ໂດຍການນຳພາຂອງຜູ້ເປັນ ລຸງຂອງເພິ່ນຄື ລຸງເກດ, ລຸງກອງສີ ແລະ ອາວພໍ່ດອນໄດ້ປຸ້ມລຸມສາມັກຄີພ້ອມພຽງກັນ ໄປຕັດຕົ້ນໄມ້ເປັນຂອນ ແກ່ມາກອງໄວ້ຝາກທາງ ຕໍ່ຫນ້າເຮືອນລຸງກອງສີຕັ້ງຫລາຍສິບຂອນບໍ່ຈັກວ່າໄມ້ແດງໄວ້ເຮັດເສົາ, ໄມ້ເປືອຍເພື່ອເປັນແປ້ນ, ໄມ້ຍາງເພື່ອເຮັດເຄື່ອງເທິງ, ໄມ້ເຮັ້ຽ ເພື່ອເຮັດຝາ ແລະ ອື່ນໆ. ແລ້ວຫາເອົາພີ່ນ້ອງບ້ານໄຮ່ຫມົດບ້ານມາຊ່ວຍການເສົາເລື່ອຍແປ້ນເລື່ອຍຂື່,ຕົງ, ຂາງ, ສີຍົວ ແລະ ອື່ນໆ ຈົນຄົບກ້ວນແລ້ວກໍອອກແບບ ຕັດສິ່ວທັງຫມົດໃຫ້ພ້ອມພຽງ ເມື່ອຕຽມແລ້ວດັ່ງນີ້ແມ່ຕູ້ນຸ້ຍ ກໍຂໍໃຫ້ລຸງເສືອຜູ້ເປັນຫລານເຂີຍຊື້ງມີຣົຖແກ່ໄມ້ໄປແກ່ມາໃຫ້ຕັ້ງຫລາຍກ້ຽວ ພ້ອມທັງເອົາພີ່ນ້ອງບ້ານໄຮ່ມານຳຫມົດບ້ານແລ້ວປຸກເຮືອນຂຶ້ນຢູ່ຕິດເຮືອນປ້າໄຕເບື້ອງລຸ່ມ. ການປຸກເຮືອນໃຊ້ເວລາພຽງສາມວັນກໍສຳເລັດ ແລະ ສາມາດຢູ່ໄດ້ເລີຍ. ການປຸກເຮືອນຄັ້ງນີ້ສະແດງໃຫ້ເຫັນເຖິງຄວາມສາມັກຄີຂອງຊາວບ້ານໄຮ່ ແລະ ຄວາມຮັກແພງຂອງຊາວບ້ານຕໍ່ອາວບຸນທຽມ. ຊຶ່ງທັງຫມົດເກືອບແມ່ນສາຍເລືອດດຽວກັນທັງນັ້ນ. ເມື່ອມີເຮືອນໃຫມ່

ແລ້ວຕູ້ນຸ້ຍແລະອາວບຸນທຽມກໍມີເຮືອນຢູ່ຢ່າງອົບອຸ່ນຈົນເກີງອາວທຽມ ໄດ້ເຮັດການແຕ່ງງານ

ເຮືອນຫລັງພີ່ນ້ອງບ້ານໄຮ່ປຸກໃຫ້ອາວບຸນທຽມ

ແລະ ຫນີໄປຢູ່ຕ່າງປະເທດເຮືອນຫລັງນີ້ ກໍຍັງຢູ່. ແຕ່ຕອນນີ້ປ້າໄຕເຈົ້າຂອງດິນກໍໄດ້ຂາຍ ໃຫ້ເຂົານ້າງອອກໄປຫມົດແລ້ວ. ຫລັງຈາກອາວບຸນທຽມເສັງຈົບມັທຍົມຕົ້ນ ແລ້ວກໍຮຽນຕໍ່ມັທຍົມຕອນປາຍ ໄດ້ຫນຶ່ງປີກໍໄດ້ອອກເຮັດວຽກຍ້ອນວ່າມີລູກຫລານຫລາຍຄົນ ມາອາໃສຢູ່ນໍາ ເພື່ອຮຽນຫນັງສື. ໃນເວລານັ້ນໄດ້ມີ ທ້າວ ລົບ ແລະ ທ້າວ ກອງສີ ມາຮຽນຢູ່ປ໋ 4 ໂຮງຮຽນຫາດຫລວງ ອີກດ້ານນຶ່ງກໍຍ້ອນວ່າຕູ້ນຸ້ຍກໍເກົ້າແກ່ຫລາຍແລ້ວບໍ່ສາມາດຈະທຸງຫາອາຫານ ໄດ້ຄືແຕ່ເກົ່າ. ອາວບຸນທຽມໄດ້ເຂົ້າເຮັດການໃນວັນທີ່ 1 / 8 / 1956 ເປັນພະນັກງານພາສີອາກອນດ້ວຍຄວາມສາມາດຂອງເພິ່ນເອງ ໂດຍບໍ່ໄດ້ອາໃສບາລະມີຂອງຜູ້ໃດທັງນັ້ນ ກໍຄືລູກຫລານຂອງ ເພິ່ນຫລາຍຄົນໃນປະຈຸບັນລ້ວນແຕ່ຄວາມສາມາດ ລ້ວນໆ ໃນການໄຕ່ເຕົ້າຂຶ້ນໄປແຕ່ລະຂັ້ນ ໃນຫນ້າທີ່ວຽກງານ. ພາຍໃນສອງປີ ອາວບຸນທຽມ ກໍສາມາດທ້ອນເງິນຊື້ລົດເກງຂີ່ຢ່າງສົມກຽດ ແລະ ສະຫງ່າຜ່າເຜີຍ. ສ່ວນລົດກີບກໍໄດ້ມອບໃຫ້ທ້າວລົບ ຂີ່ໄປໂຮງຮຽນມັທຍົມວຽງຈັນຕໍ່ໄປ. ໃນປີດຽວກັນແມ່ຕູ້ນຸ້ຍກໍໄດ້ເຮັດກອງບວດໃຫ້ ເພື່ອເປັນ

ການຕອບບຸນແທນຄຸນບິດາມາດາ. ອາວບຸນທຽມ ເວລາເພິ່ນແຕ່ງງານກັບອາຄໍາຄູນແລ້ວ ຍ້າຍໄປຢູ່ເຮືອນບ້ານໜອງບອນໂພນສະອາດ ເພິ່ນໄດ້ເອົາລູກຫຼານທັງສອງຝ່າຍມາຢູ່ນໍາ ຮຽນໜັງສືຄື: ນາງ ສຸວັນນາລີ, ທ້າວ ອຸດາໄລ, ທ້າວ ນວນຈັນ, ທ້າວ ບຸນປັນ ແລະ ອີກຫຼາຍໆຄົນ. ອາວບຸນທຽມເປັນຄົນຂະຫຍັນໝັ່ນພຽນໝົດທຸກໆດ້ານຈະເປັນການຮ່ຳຮຽນການສ້າງສາພັທນາດັ່ງດຽວກັນ. ຕອນຍັງເປັນໂສດເພິ່ນມີເຮືອນມີສວນ, ມີສະປາໄວ້ຫຼາຍບ່ອນສະໜຶ່ງກໍແມ່ນຢູ່ໜອງຫຼວງຕິດກັບສະອ້າຍເພິ່ນພໍ່ທິດພັນເປັນຜູ້ເບິ່ງແຍງໃຫ້, ສະທີ່ສອງກໍຢູ່ບຶງສາລະຄໍາ ຝາກໄວ້ນໍາຜູ້ຮັກແພງ. ຍາມສະປາຄັ້ງໃດເອົາມາບໍ່ໄຫວ ມີປາຄໍ່ໃຫ່ຍ, ປາດຸກ, ປາເຂັງ. ເລື່ອງສວນກໍມີສວນຫຼັກຫັກກທີ່ອາວພໍ່ທູເພິ່ນຢູ່ປະຈຸບັນນີ້ ສວນໜຶ່ງຢູ່ທາງຫຼັກຫັກກທາງມະຫາວິທະຍາໄລດົງໂດກ, ສວນໜຶ່ງຢູ່ຕິດວັດເກົ່າ, ບ່ອນຄອບຄົວທ້າວຄອນສະຫວັນ ຢູ່ປະຈຸບັນນີ້ ດິນຕອນໜຶ່ງຊາວບ້ານແບ່ງດົງຈອງໃຫ້ຕິດກັບພໍ່ທິດພັນ ຢູ່ທາງໂນນນາພິມມະເທດ. ສ່ວນສວນຢູ່ໃກ້ພໍເລີກການແລ້ວກໍພາລູກຫຼານໄປຂຶນເອົາໝາກມ່ວງ, ໝາກກ້ວຍ, ຫນໍ່ສ້າງໄພມາກິນ. ບາງຄັ້ງກໍປູກເຂົ້າໄຮ່ໃສ່. ນາງນາລີ, ທ້າວ ອຸດາໄລ, ທ້າວ ນວນຈັນເປັນຜູ້ກ່ຽວ ແລະ ຝາດ. ຕອນຍັງບ່າວຫ້າງປຸກເຮືອນບ້ານໜອງບອນໂພນສະອາດກໍແມ່ນ ຕອນໜຶ່ງທີ່ໄດ້ບຸກວຽກໜັກພວກຫຼານທ້າວ ລົບ, ທ້າວ ກອງສີ ເລີກໂຮງຮຽນມາ ແລ້ວກໍພາຫຼານ ໄປປັ້ນດິນບ່ອກເພື່ອເຮັດຕ້າຍບ້ານນີ້ສະແດງເຖິງການປະຢັດອັນໃດເຮັດໄດ້ກໍເຮັດເອົາ. ດ້ວຍຄວາມບາກບັ່ນຂະຫຍັນໝັ່ນພຽນສູ້ທົນຂອງ ອາວບຸນທຽມເພິ່ນຈິ່ງພາລູກເມຍ ແລະ ລູກຫຼານຈະເລີນກ້າວໜ້າ ດັ່ງພວກເຮົາໄດ້ເຫັນເພິ່ນ ແລະ ເອົາເປັນຕົວຢ່າງ ຢູ່ໃນປະຈຸບັນນີ້. ເພິ່ນບໍ່ໄດ້ອາໄສກິນນໍາແຕ່ເງິນເດືອນ ເພິ່ນຢ່າງດຽວ. ກ່ຽວກັບເລື່ອງການຫາປາເພິ່ນມີເຮືອຈັກຫາງຍາວທາສີຢ່າງສວຍງາມຈອດໄວ້ສວນເພິ່ນທ່າດິນແດງບ່ອນບ້ານຕູ້ເກດ, ຕູ້ຈານສົມຢູ່ດ່ຽວນີ້ ຝາກໄວ້ນໍາຕູ້ອາແມ່ວົງ

ເປັນຜູ້ຮັກສາພໍເກີງລະດູກ້ານປານາເພິ່ນກໍເອົາທ້າວອຸດາໄລ, ທ້າວ ນວນ ຈັບຂື້ນລົດໄປຍາມວັນເສົາວັນທິດ ເກີງທ່າດິນແດງ, ແລ້ວພໍຄ່ຳມາກໍພາກັນລ່ອງເຮືອກ້ານປາແຕ່ທ່າດິນແດງ ຈົນເກີງເວີນກະເບົາ ຫຼື ປາກງື່ມ ຊຶ່ງເປັນບ່ອນທີ່ມີປາຫຼາຍທີ່ສຸດໃນລຳນ້ຳງື່ມ ແຕ່ລະຄັ້ງໄດ້ເປັນເຄິ່ງລຳເຮືອ ແລ້ວກໍພາກັນຕິດຈັກແລ່ນກັບຄືນທ່າດິນແດງ ດ້ວຍຄວາມອອນຊອນໃຈເພາະໄດ້ປາຫຼາຍ. ເວລາອາວທຽມ ລ່ອງເຮືອກ້ານປາລົງໄປນັ້ນ ເພິ່ນເຮັດວຽກອັນດຽວໄດ້ພົນສອງຢ່າງຄືເພິ່ນເອົາປືນແຝດໄປນຳ, ເບືອງກ້ານປາແນ່ ແລະ ກໍເບືອງຂື້ນເລາະຕາຝັ່ງແດ່ບາງທີ່ກໍໄດ້ເຫັນໄດ້ຟານໃສ່ເຮືອມາພ້ອມ

ຄວາມຮັກຂອງຕູ້ນຸ້ຍຕໍ່ອາວບຸນທຽມ

ຕູ້ນຸ້ຍເກີງບໍ່ແມ່ນ ແມ່ບັງເກີດເກົ້າຂອງອາວບຸນທຽມ ແຕ່ມີຄວາມຮັກແພງເໝືອນດັ່ງລູກໃນໄສ້ ຂອງເພິ່ນເອງ. ເຫດນີ້ເອງເຮັດໃຫ້ລູກຄືງຂອງຕູ້ຕ້ອງອິດສາອາວບຸນທຽມ ໂດຍການສະແດງອອກທາງດ້ານ ວາຈາສຽດສີຕ່າງໆ ແຕ່ອາວບຸນທຽມ ແລະ ຕູ້ນຸ້ຍກໍບໍ່ຫວັ່ນໄຫວທັງສອງ ເໝືອນມີອຸດົມການອັນດຽວກັນຄືຊ່ວຍອາວທຽມ ໃຫ້ຮຽນຈົບ ແລະ ໄດ້ເຮັດການລຸດພົ້ນອອກຈາກຄວາມທຸກຍາກ ແລະ ເປັນທີ່ເພິ່ງພາອາໃສຂອງຕູ້ນຸ້ຍໃນເວລາແກ່ເກົ້າ. ແມ່ຕູ້ນຸ້ຍບໍ່ມີຄວາມຮ້າຍຄວາມດ່າ ຕໍ່ອາວຈັກເທື່ອມີແຕ່ຄຳເວົ້າຫລ້າໆຄ່າໆ ສະເໝີ. ເມື່ອອາວໄດ້ເຮັດການແລ້ວມີລົດໃຫຍ່ຂີ່ຕູ້ນຸ້ຍ ກໍດີໃຈຫລາຍ ໄປໃສມາໃສກໍມີລົດໃຫຍ່ໄປສົ່ງໄປຮັບ. ເຮັດໃຫ້ຍາດຕິພີ່ນ້ອງ ທີ່ເຄີຍເວົ້າສຽດສີຕູ້ນຸ້ຍ ໄດ້ກັບຄືນມາເວົ້າດີນຳ ແລະ ສ້າງຄວາມສາມັກຄີດີຂື້ນ. ຜູ້ທີ່ເຄີຍເຫັນຕູ້ນຸ້ຍ ເອົາລູກເພິ່ນມາລ້ຽງເອົາຫມ້ຽງເພິ່ນມາອົມມັນຈະຄືລູກຫລານໂຕແນວໃດ. ໃນທີ່ສຸດເຂົາກໍປ່ອຍປະໄປ ບໍ່ສາມາດອາໃສໄດ້. ແຕ່ຄຳເວົ້າເລົ່ານັ້ນ ໃຊ້ບໍ່ໄດ້ໃນຕຳນານຂອງຕູ້ນຸ້ຍ ແລະ ອາວບຸນທຽມ ເພາະອາວໄດ້ຄືນຄວາມສຸກໃຫ້ແກ່

ຕູ້ນຸ້ຍທຸກຢ່າງເທົ່າທີ່ຕູ້ນຸ້ຍຕ້ອງການ. ຄວາມດີໃຈທີ່ອາວບຸນທຽມສາມາດ ສ້າງເນື້ອສ້າງໂຕໄດ້ຈົນເປັນທີ່ເພິ່ງຂອງພີ່ນ້ອງ ຈຶ່ງມີຂື້ນໃນຊຸມຊົນບ້ານ ໄຮ່ຊຶ່ງມີຄວາມເອກອ້າງວ່າລູກຫລານບ້ານໄຮ່ກໍມີຄົນເປັນເຈົ້າເປັນ ນາຍໃນເວລານັ້ນ. ຄວາມຮັກແພງຂອງອາວທຽມ ແລະ ຕູ້ນຸ້ຍໄດ້ເຮັດ ໃຫ້ພີ່ນ້ອງບ້ານໄຮ່ທັງຫມົດມີຄວາມຮັກແພງກັບຕູ້ນຸ້ຍເປັນພິເສດໃຜໆ ກໍຮູ້ຊື່ເພິ່ນດີ ແລະ ໃຫ້ຄວາມເຄົາລົບນັບຖື. ຕູ້ນຸ້ຍເປັນຫ່ວງອາວທຽມ ສະເຫມີ ແມ່ນແຕ່ການໄປຫລິ້ນໄປທ່ຽວ ກໍມີການສັງເກດການລົມສາວ ຜູ້ໃດຄວນລົມ ແລະ ບໍ່ຄວນລົມຫາກເພິ່ນບໍ່ມັກເພິ່ນກໍບອກ ອາວທຽມ ບໍ່ໃຫ້ຈິງຈັງກັບຄົນນັ້ນ. ດ້ວຍການອົບຮົມຂອງຕູ້ນຸ້ຍອາວທຽມ ຈຶ່ງພຍາ ຍາມຊອກຫາຄົນຜູ້ທີ່ຕູ້ນຸ້ຍຈະຮັບໄດ້. ສ່ວນອາວເອງກໍມີຫລັກ ຫມັ້ນດີບໍ່ ຫລົງສະເຫນ່ຄວາມງາມຈົນເກີນໄປແຕ່ອີງຕາມມາຕການທີ່ຕູ້ນຸ້ຍໄດ້ ໃຫ້ຄໍາແນະນໍາ. ອາວທຽມເປັນບ່າວທີ່ສາວໆສົນໃຈຫລາຍຜູ້ໃດກໍຢາກໄດ້ ເພິ່ນເປັນຊູ້ເປັນແຟນ ແລະ ຢາກແຕ່ງງານດ້ວຍ. ເມືອງວຽງຈັນໃນ ເວລານັ້ນມັນກໍບໍ່ກ້ວາງປານໃດສາວໆງາມໆ ຢູ່ບ່ອນໃດອາວກໍຮູ້ດີ. ເມື່ອ ມາພົບອາຄໍາຄູນຊຶ່ງ ແມ່ນລູກສາວຂອງ ທ່ານອຸ່ພົນ ສຸວັນນະວົງ ຫລານຂອງເຈົ້າພຣະຍາຫລວງ ເມືອງຈັນ ສຸວັນນະວົງ ຜູ້ເປັນຕົ້ນເຫງົ້າ ຂອງຕະກຸນ ສຸວັນນະວົງ ປົກຄອງເມືອງວຽງຈັນມາແຕ່ດຶກດໍາບັນແລ້ວກໍ ຄືດວ່າແມ່ນ ມາຕການຂອງຕູ້ນຸ້ຍແນ່ນອນຈຶ່ງໄດ້ຫາວິທີທາງເຂົ້າຫາເພື່ອ ຫວັງຈະຂໍແຕ່ງງານ. ງານນີ້ບໍ່ແມ່ນງານງ່າຍສໍາຫລັບອາວເຊັ່ນກັນຈໍາ ເປັນຕ້ອງໄດ້ອາໄສບາລະມີຂອງແມ່ຕູ້ນຸ້ຍ ມາຊ່ວຍນັບວ່າຕູ້ນຸ້ຍ ແມ່ນບຸກ ຄົນສໍາຄັນທີ່ສຸດຂອງອາວບຸນທຽມສົມແລ້ວທີ່ອາວບຸນທຽມເທີດທູນ ເພິ່ນໄວ້ໃນໃຈຕລອດການ. ຕູ້ນຸ້ຍໄດ້ຊ່ວຍອາວທຽມ ໄດ້ແຕ່ງງານກັບອາ ຄໍາຄູນ ໃນວັນທີ 23/11/1966. ອາວທຽມ ແລະ ອາຄໍາຄູນມີລູກນໍາກັນ 4 ຄົນ ສອງຍິງ ແລະ ສອງຊາຍ ດັ່ງມີຊື່ໃນຄອບຄົວຂອງອາວບຸນທຽມ ທີ່ໄດ້ກ່າວ ກ່ອນຫນ້ານີ້. ຫລັງແຕ່ງງານອາວກໍ

ຮູບແຕ່ງງານອາວບຸນທຽມແລະອາຄຳຄູນ / ຮູບຄອບຄົວຂອງເພິ່ນຢູ່ອົສຕຣາລີ

ໄດ້ຍ້າຍໄປຢູ່ບ້ານເພິ່ນ ສ້າງເອງຢູ່ທົ່ງທນອງບອນ ພ້ອມດ້ວຍຕູ້ນຸ້ຍນ້ອງ ແລະ ຫລານຢູ່ນຳຊຶ່ງມີດັ່ງນີ້: ທ. ອຸດາໄລ, ນ. ສຸວັນນາລີ, ທ. ນວນຈັນ, ທ. ບຸນປັນ, ທ. ອຸດອນ, ທ. ທູ, ທ. ຄຳພັນ ແລະ ຜູ້ອື່ນໆ ໃນເວລາແຕກຕ່າງກັນໄປ. ອາວໄດ້ເອົາໃຈໃສ່ຊ່ວຍເຫລືອທັງພີ່ນ້ອງບ້ານ ໄຮ່ ແລະ ພີ່ນ້ອງອາຄຳຄູນນຳດ້ວຍ. ໃນດ້ານສັງຄົມອາວກໍໄດ້ຊ່ວຍ ບໍລິຈາກໃນການສ້າງໂຮງຮຽນບ້ານໄຮ່, ວັດວາສາສນາ ແລະ ອື່ນໆ. ເພິ່ນກາຍເປັນທີ່ນັບຖືຂອງປະຊາຊົນບ້ານໄຮ່ເພາະຍາມໃດເພິ່ນກໍໄດ້ເຂົ້າຊ່ວຍເຫລືອ ໃນຍາມມີວຽກງານຕ່າງໆ. ມັນເປັນຫນ້າເສັຽດາຍ ທີ່ເພິ່ນບໍ່ມີໂອກາດຢູ່ນຳພວກເຮົາໃນປະຈຸບັນ ເພື່ອຊ່ວຍພັທນາບ້ານໄຮ່ ໃຫ້ມີຊີວິດຊີວາ ແລະ ມີອາຊີບຄົງທີ່ແບບຍືນຍົງ. ເກືອງຢ່າງໃດເພິ່ນກໍເປັນບຸກຄົນຕົວແບບຂອງບ້ານໄຮ່ຊຶ່ງ ລູກຫລານຄົນລຸ້ນໃຫມ່ຄວນສຶກສາການບຸກບືນຂອງ ເພິ່ນກ່ອນທີ່ເພິ່ນຈະສາມາດມາຢືນຢູ່ຈຸດນີ້ໄດ້. ອາວ ບຸນທຽມເປັນຄົນຍອດກະຕັນຍູ ແລະ ດຸຫມັ່ນ. ຊຶ່ງຄຳວ່າດຸຫມັ່ນນີ້ ເປັນທີ່ຍອມຮັບໃນວົງຕະກຸນ. ລູກຫລານທຸກຄົນຮັບຮູ້ຄຸນສົມບັດອັນນີ້ຂອງ ເພິ່ນສະເຫມີແຕ່ວ່າບໍ່ທັນມີຜູ້ໃດຈະມີຄວາມອົດທົນ ແລະ ດຸຫມັ່ນເທົ່າເພິ່ນໄດ້

ເທື່ອ. ຜູ້ຂຽນເອງບໍ່ສາມາດທີ່ຈະລົງລາຍລະອຽດຊີວິດຂອງເພິ່ນແຕ່ຂໍ ໃຫ້ທ່ານຜູ້ອ່ານວາດມະໂນພາບເອົາເອງເກິງຊີວິດຕົວຈິງ. ດ້ວຍເຫດນີ້ຄົນລຸ້ນຫລັງສົມແລ້ວທີ່ຈະຮຽນຮູ້ປະຫວັດຂອງເພິ່ນ ເພື່ອຫມູນໃຊ້ໃນຊີວິດຕົວຈິງຂອງຕົນເອງໃຫ້ມີຄວາມກ້າວຫນ້າໄປເລື້ອຍໆ.

ຄຳອ້າງອີງ

- ກ່ານບອກເລົ່າຂອງ ລຸງບົວເກດ ພິມສີປະສົມ ລູກຊາຍກົກຂອງ ທິດບວນ(ລຸງເກດ) ທີ່ບ້ານໂນນທ່າງ່ອນ
- ການບອກເລົ່າຂອງຕູ້ ອານແມ່ດອນ ພິມສີປະສົມ ລູກສາວຂອງ ປູ່ຈານພິມ ທີ່ບ້ານໄຮ່
- ການບອກເລົ່າຂອງຕູ້ອາວ ພໍ່ພຽນ ທິດບວນສີ ທີ່ບ້ານໄຮ່
- ການບອກເລົ່າຂອງຕູ້ເພື່ອງ ທີ່ບ້ານໂນນທ່າງ່ອນ
- ຄຳແນະນຳຈາກ ທ່ານ ບຸນທຽມ ພິມສີປະສົມ ທີ່ປະເທດອົດສະ ຕາລີ
- ການບອກເລົ່າຂອງລຸງສາຄອນ (ລຸງແອ້) ທີ່ບ້ານນ້ອຍບາໄຊ
- ການບອກເລົ່າຂອງຕູ້ເປື່ອງ ທີ່ບ້ານໄຮ່
- ການໃຫ້ການຊ່ວຍເຫລືອປະຕິດປະຕໍ່ຂອງ ນາງບຸນທະວີ ແລະ ທ້າວ ຄູນສີ ພິມສີປະສົມ ກ່ຽວກັບລູກຫລານ ຂອງປູ່ທິບທາດກ້ຽງ ທີ່ບ້ານໄຮ່
- ການບອກເລົ່າຂອງທ້າວ ຊ່ວງ ມ້າວປະເສີດ ທີ່ບ້ານໄຮ່
- ການຊ່ວຍເກັບກຳຂໍ້ມູນຂອງ ທ້າວ ທຽນໄຊ ທີ່ບ້ານໄຮ່

ຄວາມຕ່າງກັນຂອງການຂຽນຢູ່ໃນປື້ມຫົວນີ້ປະຈຸບັນ

ຂຽນໃນປື້ມຂຽນ

ສະໄຫມ	ສມັຍ
ຕະຫລາດ	ຕລາດ
ພຸດທະສາດສະຫນາ	ພຸທສາສນາ
ລົດ	ຣົຖ
ສິນທຳ	ສີລທັມ

ບ້ານເກີດຂອງຂ້ອຍ

ຮຽນນີ້ ເກີດຢູ່ບ້ານ   ໄຮ່ທ່າງ່ອນດິນອຸດົມ
ປູ່ຈານພິມກັບຍ່າສົມ   ແຕ່ງແປງປຸນໄວ້
ເປັນຫລານໃສ້   ສືບສະກຸນຂອງປູ່
ຊຸມຢູ່ ປະເທດຕ່າງນັ້ນ   ນານນີ້ຈຶ່ງມາ ປູ່ເອີຍ

ຫລານຈຶ່ງ ຂຽນຂີດໄວ້   ເກີງເລື່ອງຄວາມຫັລງ
ບ້ານໄຮ່ເຮົາ   ປູ່ສ້າງມາຄາວນັ້ນ
ເກັບກຳໄດ້   ປະຫັວດໃດຂຽນໃສ່
ກືກທີ່ກ້ອນ   ດີແລ້ວຈຶ່ງຂຽນປູ່ເອີຍ

ຫາກຍັງ ມີບ່ອນພັ້ງ   ຫລານເລົ່າຜິດໄປ
ຂໍອະໄພສີກັນ   ແດ່ຫລານຄົນນີ້
ຄົນຜູ້ພໍການໄດ້   ຕາຍເສຍໄປກ່ອນ
ຫລານຈຶ່ງ ເອົາບ່ອນນັ້ນບ່ອນນີ້ ມາຊ້ອນໃສ່ກັນ ນີ້ແລ້ວ

ຄົນບ້ານໄຮ່ ໄດ້ອ່ານແລ້ວ   ຮູ້ຮ່ວມແຮງໃຈ ກັນເນີ
ຫວນຄິດຄືນຄວາມຫລັງ   ເຜົ່າພັນເຮົາໄວ້
ຈິດໃຈໃຫ້   ບໍລິສຸດຄືປູ່
ຢູ່ກັນ ເຫມືອນພີ່ນ້ອງ   ໃນທ້ອງແມ່ດຽວ ນັ້ນກ້ອນ

ກອງສີ ແລະ ພັນລະຍາ

ທ່ານ ຄູນສີ ແລະ ບຸນທະວີ
ລູກທິດນວນ ຫລານຈານພິມ



ທ່ານ ແກ້ວອຸດອນ

ທົ່ງໜອງຫຼວງໃນປະຈຸບັນ

ຮູບໜອງບົວທີ່ໜອງຫຼວງປະຈຸບັນ
ທີ່ນະຄອນຫຼວງວຽງຈັນ
2007